ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກອງທຶນປົກປັກຮັກສາສິ່ງແວດລ້ອມ

# ບົດສະຫຼຸບ ການຈັດຕັ້ງປະຕິບັດ ວຽກງານ 5 ປີ (2016-2020) ແລະ ທິດທາງແຜນການ 5 ປີ (2021-2025) ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ

ນະຄອນຫຼວງວຽງຈັນ, ມິຖຸນາ 2021

# ຄຳນຳ

ແຜນການ 5 ປີ (2021-2025) ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ສ້າງຂຶ້ນເພື່ອຈັດຕັ້ງຜັນຂະຫຍາຍ ວິໄສທັດ 2030, ຍຸດທະສາດ 2016-2025 ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປະກອບສ່ວນຢ່າງຕັ້ງໜ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ແລະ ແຜນການ 5 ປີ (2021-2025) ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແນໃສ່ເສີມຂະຫຍາຍດ້ານດີ, ແກ້ໄຂຈຸດອ່ອນຂໍ້ຄົງຄ້າງ ແລະ ຖອດຖອນບົດຮຽນການຈັດຕັ້ງປະຕິບັດວຽກງານ ໃນ 5 ປີ ຜ່ານມາ ພ້ອມທັງກຳນົດທິດທາງແຜນການເຄື່ອນໄຫວໃນ 5 ປີ ຕໍ່ໜ້າ.

ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ໄດ້ຮັບທຶນສະໜັບສະໜູນຈາກທະນາຄານໂລກ ໃນການຈັດຕັ້ງປະຕິບັດໂຄງການສິ່ງແວດລ້ອມ ແລະ ສັງຄົມໄລຍະ 2 (ຄສລ 2) ແຕ່ປີ 2014-2021. ແຕ່ເນື່ອງຈາກມີການລະບາດຂອງເຊື້ອພະຍາດ COVID 19 ເຮັດໃຫ້ກິດຈະກຳໂຄງການຈຳນວນໜຶ່ງບໍ່ສາມາດຈັດຕັ້ງປະຕິບັດໄປຕາມແຜນການ ຈຶ່ງມີການຕໍ່ອາຍຸໂຄງການຮອດກາງປີ 2022. ໂຄງການ ຄສລ2 ເປັນໂຄງການທີ່ມີບົດບາດສຳຄັນໃນການສະໜັບສະໜູນການເຄື່ອນໄຫວວຽກງານ ຂອງ ກປສ ເພື່ອຕອບສະໜອງທຶນໃຫ້ແກ່ພາກສ່ວນຕ່າງໆໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ. ເນື່ອງຈາກໂຄງການດັ່ງກ່າວຈະສິ້ນສຸດໃນປີ 2022, ສະນັ້ນ ກປສ ຈະຕ້ອງໄດ້ສ້າງແຜນການລະດົມທຶນຈາກແຫຼ່ງທຶນຕ່າງໆໃຫ້ຫຼາຍຂຶ້ນໂດຍສຸມໃສ່ສ້າງຄວາມເຂັ້ມແຂງເພື່ອເຊື່ອມໂຍງກັບຄູ່ຮ່ວມພັດທະນາຕ່າງໆ ໃນການກະກຽມໂຄງການໃໝ່ທີ່ຈະຈັດຕັ້ງປະຕິບັດຜ່ານ ກປສ. ເພື່ອສາມາດລະດົມທຶນຈາກສາກົນໄດ້ຫຼາຍຂຶ້ນ, ກປສ ໄດ້ສ້າງຕັ້ງຮ່ວງທຶນໃໝ່ຄື ຮ່ວງທຶນການປ່ຽນແປງດິນຟ້າອາກາດ ແລະ ສະໝັກເປັນອົງກອນແຫ່ງຊາດທີ່ສາມາດເຂົ້າຫາແຫຼ່ງທຶນໄດ້ໂດຍກົງ (National Accreditted Entity) ສຳລັບໂຄງການຂະໜາດນ້ອຍ ເພື່ອຂໍທຶນຈາກກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດສາກົນ (GCF) ມາຈັດຕັ້ງປະຕິບັດໂຄງການ ແລະ ກິດຈະກຳໃນຂົງເຂດບູລິມະສິດຂອງ ກປສ. ນອກນັ້ນ ກປສ ຍັງໄດ້ຮ່ວມມືກັບອົງການ GIZ, UNEP ແລະ ທະນາຄານໂລກ ເພື່ອກະກຽມແຜນງານ ແລະ ໂຄງການໃໝ່ ໂດຍອີງໃສ່ເງື່ອນໄຂຂອງຜູ້ໃຫ້ທຶນ ແລະ ຄວາມຮຽກຮ້ອງຕ້ອງການຂອງຂະແໜງການທີ່ກ່ຽວຂ້ອງ ເພື່ອປະກອບສ່ວນເຂົ້າໃນວຽກງານຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ໄປຕາມທິດສີຂຽວ ແລະ ຍືນຍົງ.

ເພື່ອໃຫ້ການຈັດຕັ້ງປະຕິບັດແຜນການ 5 ປີ (2021-2025) ມີປະສິດທິຜົນ, ກປສ ຈະສືບຕໍ່ພັດທະນາ ແລະ ປັບປຸງກົນໄກການຄຸ້ມຄອງ ກປສ ໃຫ້ເຂັ້ມແຂງ ແລະ ໄດ້ລະດັບມາດຕະຖານສາກົນ. ພ້ອມນີ້ ກໍເສີມສ້າງຄວາມເຂັ້ມແຂງໃຫ້ ກປສ ໃນການຮ່ວມມື ແລະ ເປັນຄູ່ຮ່ວມງານກັບທຸກຂະແໜງການທີ່ກ່ຽວຂ້ອງ ແລະ ອົງການຈັດຕັ້ງຂັ້ນທ້ອງຖິ່ນ ພ້ອມທັງເພີ່ມທະວີການຮ່ວມມື ກັບຜູ້ໃຫ້ທຶນທັງພາຍໃນ ແລະ ຕ່າງປະເທດ ເພື່ອໃຫ້ການຄຸ້ມຄອງ-ບໍລິຫານ ກປສ ມີປະສິດທິພາບ, ປະສິດທິຜົນ ແລະ ມີຄວາມຍືນຍົງ.

ກປສ ຂໍສະແດງຄວາມຂອບໃຈ ມາຍັງສະມາຊິກສະພາບໍລິຫານ, ຄະນະວິຊາການ, ຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ທີ່ໄດ້ປະກອບສ່ວນທັງສະຕິປັນຍາ, ເຫື່ອແຮງ ແລະ ໃຫ້ການສະໜັບສະໜູນຢ່າງຕໍ່ເນື່ອງໃນການເຄື່ອນໄຫວວຽກງານຂອງ ກປສ. ຂໍຂອບໃຈຄູ່ຮ່ວມພັດທະນາຕ່າງໆ ໂດຍສະເພາະ ທະນາຄານໂລກ, ອົງການ GIZ ແລະ UNEP ທີ່ໄດ້ສະໜອງທຶນ ໃຫ້ແກ່ ກອງທຶນປົກປັກຮັກສາສິ່ງແວດລ້ອມ ກໍຄື

ປະເທດລາວ ເພື່ອນຳໃຊ້ເຂົ້າໃນວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ປະກອບ ສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃຫ້ໄປຕາມທິດສີຂຽວ ແລະ ຍືນຍົງ ແລະ ຂໍຊົມເຊີຍຄວາມພະຍາຍາມຂອງທຸກພາກສ່ວນທີ່ເຂົ້າຮ່ວມໃນການຈັດຕັ້ງປະຕິບັດແຜນການ 5 ປີ ຜ່ານມາ ຂອງ ກປສ ເປັນຢ່າງດີ ແລະ ຫວັງວ່າຈະໄດ້ຮັບການສືບຕໍ່ຮ່ວມມືຈາກທຸກພາກສ່ວນ ເພື່ອເຮັດໃຫ້ ການຈັດຕັ້ງປະຕິບັດ ວິໄສທັດ 2030, ຍຸດທະສາດ 2025 ແລະ ແຜນການ 5 ປີ ຕໍ່ໜ້າ (2021-2025) ຂອງ ກປສ ໄດ້ຮັບຜົນສຳເລັດຕາມຈຸດປະສົງ ແລະ ຄາດໝາຍ.

**ສະພາບໍລິຫານ ກອງທຶນປົກປັກຮັກສາສິ່ງແວດລ້ອມ**

**ປະທານ**

ທ.ບຸນຄຳ ວໍລະຈິດ

# ສາລະບານ


ພາກສະເໜີ........................................................................................................................1
ພາກທີ I..........................................................................................................................3
1.1 ສະພາບລວມ...............................................................................................................3
1.2 ທົບທວນຄືນຄາດໝາຍສູ້ຊົນ ແລະ ແຜນການລົງທຶນ .......................................................3
1.3 ຜົນການຈັດຕັ້ງປະຕິບັດ ວຽກງານໃນ 5 ປີ ຜ່ານມາ (2016 – 2020) ....................................4
1.4 ຈຸດດີ, ຈຸດອ່ອນ, ຂໍ້ຄົງຄ້າງ, ສິ່ງທ້າທາຍ, ບົດຮຽນທີ່ຖອດຖອນໄດ້ ແລະ ມາດຕະການແກ້ໄຂ.............23
1.4.1 ຈຸດດີ ແລະ ສາຍເຫດທີ່ພາໃຫ້ມີຈຸດດີ..............................................................................23
1.4.2 ຈຸດອ່ອນ, ຂໍ້ຄົງຄ້າງ ແລະ ສາຍເຫດທີ່ພາໃຫ້ມີຈຸດອ່ອນ ...............................................24
1.4.4 ມາດຕະການຈັດຕັ້ງປະຕິບັດ ແລະ ທິດທາງໃນຕໍ່ໜ້າ ......................................................28
ພາກທີ II........................................................................................................................30
2.1 ທິດທາງລວມ ແລະ ເປົ້າໝາຍ ........................................................................................31
2.2 ຄາດໝາຍສູ້ຊົນ..........................................................................................................32
2.2.1 ດ້ານການຈັດຕັ້ງ........................................................................................................33
2.2.2 ດ້ານການຄຸ້ມຄອງ ບໍລິຫານ ........................................................................................33
2.2.3 ດ້ານບຸກຄະລາກອນ....................................................................................................33
2.2.4 ດ້ານການລະດົມທຶນ ...................................................................................................33
2.2.5 ດ້ານການສະໜອງທຶນ..................................................................................................33
2.2.6 ດ້ານການຮ່ວມມື.........................................................................................................34
2.2.7 ດ້ານການສື່ສານ..........................................................................................................34
2.3 ແຜນວຽກຈຸດສຸມ (2021-2025) ......................................................................................37
ພາກທີ III.......................................................................................................................61
3.1 ມາດຕະການ ..............................................................................................................61
3.2 ກົນໄກການຈັດຕັ້ງປະຕິບັດແຜນ 5 ປີ (2021-2025) ..........................................................61
3.2.1 ການຊີ້ນຳດ້ານນະໂຍບາຍ ແລະ ວິຊາການ ....................................................................61
3.2.2 ໜ້າທີ່ຮັບຜິດຊອບ ຫກປສ ..........................................................................................62
3.2.3 ປັບປຸງການຈັດຕັ້ງປະຕິບັດ ຫກປສ ແລະ ດັດສະນີຄວາມອາດສາມາດ ຫກປສ ......................62
3.2.4 ການກະກຽມການຈັດຕັ້ງປະຕິບັດ...................................................................................63
3.2.5 ການຕອບໂຕ້ພະຍາດລະບາດໂຄວິດ 19 ຂອງ ຫກປສ.......................................................64
3.2.6 ການລະດົມທຶນ ແລະ ການຈັດຕັ້ງປະຕິບັດໂຄງການຕ່າງໆ...............................................65

# ຄຳຫຍໍ້ ແລະ ຊື່ຫຍໍ້

| | |
|---|---|
| ກຊສ | ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ |
| ກປສ | ກອງທຶນປົກປັກຮັກສາສິ່ງແວດລ້ອມ |
| ຄສລ2 | ໂຄງການສິ່ງແວດລ້ອມ ແລະ ສັງຄົມ ຢູ່ ສປປລາວ ໄລຍະ 2 |
| ຫກປສ | ຫ້ອງການ ກອງທຶນປົກປັກຮັກສາສິ່ງແວດລ້ອມ |
| ຊສ | ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ |
| ພຊສ | ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ |
| ຫຊສ | ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ |
| ມຊ | ມະຫາວິທະຍາໄລແຫ່ງຊາດ |
| AE | ອົງກອນທີ່ສາມາດເຂົ້າຫາແຫຼ່ງທຶນໄດ້ໂດຍກົງ |
| BFW | ຮ່ວງທຶນຊີວະນາໆພັນ ແລະ ການພັດທະນາຊຸມຊົນ (ຊື່ເກົ່າແມ່ນ CBI ) |
| C&P | ການຮ່ວມມື ແລະ ການຫັນເປັນຄູ່ຮ່ວມງານ |
| CCAF | ກອງທຶນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດສາກົນ |
| DRM | ການຄຸ້ມຄອງການຫຼຸດຜ່ອນໄພພິບັດທາງທຳມະຊາດ |
| EFW | ຮ່ວງທຶນສິ່ງແວດລ້ອມ (ຊື່ເກົ່າແມ່ນ EPC) |
| EWMP | ໂຄງການຄຸ້ມຄອງສິ່ງແວດລ້ອມ ແລະ ສິ່ງເສດເຫຼືອ |
| FCI | ດັດສະນີຄວາມອາດສາມາດ |
| GCB | ເຄືອຄ່າຍລະດັບຊາດຕາມແນວທາງ “ຂຽວ, ສະອາດ ແລະ ງາມຕາ |
| GCF | ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດສາກົນ |
| GEF | ກອງທຶນສິ່ງແວດລ້ອມໂລກ |
| GGGI | ສະຖາບັນເຕີບໂຕສີຂຽວ |
| GIZ | ອົງການ GIZ |
| IFO | ອົງການໃຫ້ທຶນສາກົນ |
| ICTC | ສູນການຮ່ວມມືສາກົນ ແລະ ການອົບຮົມ |
| I-GFLL | ໂຄງການຈັດຕັ້ງປະຕິບັດແຜນງານສ້າງຄວາມເຂັ້ມແຂງໃນວຽກງານປ່າໄມ້, ຄຸ້ມຄອງປ່າໄມ້ແບບພູມມີທັດ ແລະ ສິ່ງເສີມຊີວິດການເປັນຢູ່ |
| IEE | ການສຶກສາເບື້ອງຕົ້ນຜົນກະທົບຕໍ່ສິ່ງແວດລ້ອມ |
| JICA | ອົງການຮ່ວມມືສາກົນແຫ່ງປະເທດຍີ່ປຸ່ນ |
| Lao-WEN | ກຸ່ມບັງຄັບໃຊ້ກົດໝາຍກ່ຽວກັບການຄ້າສັດປ່າ |

| | |
|---|---|
| LENS2 | ໂຄງການສິ່ງແວດລ້ອມ ແລະ ສັງຄົມໄລຍະ 2 |
| LFW | ຮ່ວງທຶນຄຸ້ມຄອງທີ່ດິນ (ຊື່ເກົ່າ SLM) |
| LLL | ໂຄງການພູມີທັດ ແລະ ປັບປຸງຊີວິດການເປັນຢູ່ |
| M&E | ການຕິດຕາມ ແລະ ປະເມີນຜົນ |
| MOU | ບົດບັນທຶກຄວາມເຂົ້າໃຈ |
| NEC | ຄະນະກຳມະການສິ່ງແວດລ້ອມແຫ່ງຊາດ |
| PAM | ກຸ່ມຄຸ້ມຄອງປ່າສະຫງວນ |
| PFW | ຮ່ວງທຶນ ນະໂຍບາຍ (ຊື່ເກົ່າ PICE) |
| RNRC | ສູນຊັບພະຍາ ກອນທຳມະຊາດ ແລະ ສິ່ງແວດລ້ອມ ປະຈຳພາກ |
| SEA | ການປະເມີນສິ່ງ ແວດລ້ອມ ແບບຍຸດທະສາດ |
| TA | ຊ່ຽວຊານສະເພາະດ້ານ |
| TC | ຄະນະວິຊາການ |
| UNDP | ອົງການ ສະຫະປະຊາຊາດ ເພື່ອການພັດທະນາ |
| UNEP | ອົງການ ສະຫະປະຊາຊາດ ເພື່ອສິ່ງແວດລ້ອມ |
| WB | ທະນາຄານໂລກ |
| WRFW | ຮ່ວງທຶນຄຸ້ມຄອງຊັບພະຍາກອນນ້ຳ (WRM) |

# ພາກສະເໜີ

ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານ 5 ປີ ຜ່ານມາ (2016-2020) ແລະ ທິດທາງແຜນການ 5 ປີ (2021-2025) ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ແມ່ນມີເປົ້າໝາຍ ເພື່ອປະເມີນຄືນການຈັດຕັ້ງປະຕິບັດບັນດາຄາດໝາຍສູ້ຊົນ ແລະ ວຽກງານຈຸດສຸມ ໃນ 5 ປີ ຜ່ານມາ (2016-2020) ໂດຍສະເພາະແຜນການ 3 ປີ (2018-2020) ຂອງ ກປສ ກໍຄືແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ VIII (2016-2020) ພ້ອມທັງ ຖອດຖອນບົດຮຽນ ແລະ ກຳນົດທິດທາງ, ນະໂຍບາຍ ແລະ ແຜນວຽກຈຸດສຸມ ຂອງ ກປສ ໃນ 5 ປີ ຕໍ່ໜ້າ (2021-2025) ແນໃສ່ເຮັດໃຫ້ການ ຈັດຕັ້ງປະຕິບັດວິໄສທັດ 2030 ແລະ ຍຸດທະສາດ 2025 ຂອງ ກປສ ບັນລຸຕາມຈຸດປະສົງຄາດໝາຍໂດຍສອດຄ່ອງຕາມພາລະບົດບາດ ທີ່ກຳນົດໄວ້ໃນດຳລັດ ເລກທີ 94/ລບ, ລົງວັນທີ 08/03/2017 ບົນພື້ນຖານ ການຕີລາຄາປະເມີນຜົນ ແລະ ບົດຮຽນທີ່ຖອດຖອນໄດ້ ຈາກການຈັດຕັ້ງປະຕິບັດວຽກງານໃນ 5 ປີ ຜ່ານມາ (2016-2020) ຂອງ ກປສ.

ກປສ ແມ່ນອົງກອນແຫ່ງຊາດທີ່ຢູ່ພາຍໃຕ້ການຊີ້ນຳຂອງສະພາບໍລິຫານ ແລະ ມີໜ້າທີ່ຮັບຜິດຊອບໃນການລະດົມທຶນຈາກແຫຼ່ງທຶນຕ່າງໆ ແລະ ສະໜອງທຶນເພື່ອສະໜັບສະໜູນກິດຈະກຳທີ່ກ່ຽວຂ້ອງກັບການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ. ປະຈຸບັນ ປະທານສະພາບໍລິຫານ ກປສ ແມ່ນທ່ານ ລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຊຶ່ງເຮັດໃຫ້ ກປສ ມີການພົວພັນຮ່ວມມືທີ່ດີ ກັບ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ເຮັດໃຫ້ການສະໜອງທຶນກ່ຽວກັບການປົກປັກຮັກສາສິ່ງແວດລ້ອມສອດຄ່ອງກັບ ນະໂຍບາຍການປົກປັກຮັກສາສິ່ງແວດລ້ອມແຫ່ງຊາດ.

ໃນການຈັດຕັ້ງປະຕິບັດວຽກງານ 5 ປີ (2016-2020) ຜ່ານມາ, ກປສ ມີຜົນສຳເລັດອັນພົ້ນເດັ່ນຫຼາຍດ້ານ ເຊັ່ນ: (i) ໄດ້ສ້າງເອກະສານສຳຄັນເພື່ອເປັນເຄື່ອງມື ແລະ ທິດທາງໃນການເຄື່ອນໄຫວວຽກງານ ຂອງ ກປສ ເປັນຕົ້ນ ວິໄສທັດຮອດປີ 2030, ຍຸດທະສາດ ຮອດປີ 2025, ແຜນດຳເນີນງານ 3 ປີ (2018-2020), ຍຸດທະສາດການລະດົມທຶນ ແລະ ການສື່ສານ ແລະ ຄູ່ມືການຄຸ້ມຄອງພະນັກງານ; (ii) ປັບປຸງນິຕິກຳ ຂອງ ກປສ ໃຫ້ກະທັດຮັດຈະແຈ້ງ ແລະ ສອດຄ່ອງກັບເງື່ອນໄຂຂອງຜູ້ໃຫ້ທຶນເປັນຕົ້ນ ປັບປຸງ ດຳລັດ ວ່າດ້ວຍ ກອງທຶນປົກປັກຮັກສາສິ່ງແວດລອ້ມ ປີ 2005 ຊຶ່ງໄດ້ມີການທົບທວນ ແລະ ປັບປຸງໃນປີ 2017 (ດຳລັດ ວ່າດ້ວຍ ກປສ ເລກທີ 94/ລບ, ລົງວັນທີ 8 ມີນາ 2017) ແລະ ປັບປຸງລະບຽບການຄຸ້ມຄອງ ກປສ ໃນປີ 2018 ແລະ 2019; (iii) ປັບປຸງໂຄງຮ່າງການຈັດຕັ້ງ ແລະ ເສີມສ້າງຂີດຄວາມສາມາດຂອງ ກປສ ຕາມທິດ « ໜຶ່ງ ກປສ ໜຶ່ງ ລະບົບ » ພ້ອມນັ້ນ ກໍໄດ້ສ້າງຕັ້ງຄະນະວິຊາການ ກປສ ທີ່ປະກອບດ້ວຍຜູ້ຕາງໜ້າຈາກພາກສ່ວນທີ່ກ່ຽວຂ້ອງ ເພື່ອເຂົ້າຮ່ວມຂະບວນການພິຈາລະນາຮັບຮອງເອົາໂຄງການທີ່ສະເໜີຂໍນຳໃຊ້ທຶນຈາກ ກປສ; (iv) ສາມາດລະດົມທຶນທັງພາຍໃນ ແລະ ສາກົນໄດ້ທັງໝົດ 37.41 ລ້ານໂດລາສະຫະລັດ (ສາມສິບເຈັດລ້ານສີ່ແສນສິບພັນ ໂດລາສະຫະລັດ) ແລະ ສະໜອງທຶນໃຫ້ແກ່ພາກສ່ວນຕ່າງໆໃນການຈັດຕັ້ງປະຕິບັດໂຄງການທີ່ຕິດພັນກັບການການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ຈຳນວນ 137 ໂຄງການ (ທຶນພາຍໃນ 89 ໂຄງການ,ທຶນ ຄສລ2 ມີ 47 ໂຄງການ ແລະ UNDP 1 ໂຄງການ) ລວມມູນຄ່າທັງໝົດ 36.71 ລ້ານໂດລາສະຫະລັດ (ສາມສິບຫົກລ້ານເຈັດແສນສິບພັນ ໂດລາສະຫະລັດ).

ແຜນການ 5 ປີ (2021-2025) ຂອງ ກປສ ຄັ້ງນີ້ ແມ່ນເປັນການຈັດຕັ້ງປະຕິບັດໄລຍະສຸດທ້າຍຂອງຍຸດທະສາດຮອດປີ 2025 ຂອງ ກປສ ຊຶ່ງຕ້ອງຮັບປະກັນວ່າເປົ້າໝາຍ, ແຜນຍຸດທະສາດ ແລະ ຜົນໄດ້ຮັບທີ່ກຳນົດໄວ້ ຈະສາມາດບັນລຸຕາມຄາດໝາຍຢ່າງມີປະສິດທິຜົນ. ໄປຄຽງຄູ່ກັນນັ້ນ, ກປສ ຈະສູ້ຊົນສ້າງຄວາມເຂັ້ມແຂງໃນວຽກງານການຈັດຕັ້ງ, ບຸກຄະລາກອນ ແລະ ກົນໄກການເງິນທີ່ມີຄຸນນະພາບ ເພື່ອຈັດຕັ້ງປະຕິບັດວຽກງານການລະດົມທຶນ ແລະ ສະໜອງທຶນຢ່າງມີປະສິດທິພາບ ພ້ອມທັງ ສ້າງຄວາມເຊື່ອຖື ແລະ ສ້າງເງື່ອນໄຂໃຫ້ກາຍເປັນອົງກອນແຫ່ງຊາດທີ່ສາມາດເຂົ້າຫາແຫຼ່ງທຶນສາກົນໂດຍກົງ ແລະ ກາຍເປັນກອງທຶນທີ່ມີກົນໄກການເງິນຍືນຍົງ.

ແຜນການ 5 ປີ (2021-2025) ຂອງ ກປສ ປະກອບມີ 3 ພາກຄື: <u>ພາກທີ I</u> ສະຫຼຸບຄວາມຄືບໜ້າ ແລະ ຜົນສຳເລັດການຈັດຕັ້ງປະຕິບັດ ຂອງແຜນດຳເນີນງານ 3 ປີ ຜ່ານມາ (2018-2020) ລວມທັງການຕີລາຄາ ຈຸດດີ, ຈຸດອ່ອນ, ບັນຫາຄົງຄ້າງ, ແລະ ບົດຮຽນທີ່ຖອດຖອນໄດ້. <u>ພາກທີ II</u> ສະເໜີແຜນການ 5 ປີ ຕໍ່ໜ້າ (2021-2025); <u>ພາກທີ III</u> ສະເໜີມາດຕະການ ແລະ ກົນໄກຈັດຕັ້ງປະຕິບັດຂອງແຜນດັ່ງກ່າວ. ພ້ອມດຽວກັນນັ້ນ, ກໍໄດ້ກຳນົດແຜນດຳເນີນງານລະອຽດໃນແຕ່ລະປີ (ແຕປີ 2021-2025) ປະກອບໃນເອກະສານຊ້ອນທ້າຍຂອງແຜນການ 5 ປີນີ້.

.

# ພາກທີ I

## ການຈັດຕັ້ງປະຕິບັດວຽກງານ 5 ປີ ຜ່ານມາ (2016-2020)

### 1.1 ສະພາບລວມ

ໃນ 5 ປີ ຜ່ານມາ (2016-2020) ກປສ ໄດ້ສຸມໃສ່ຈັດຕັ້ງປະຕິບັດບັນດາຄາດໝາຍສູ້ຊົນ ແລະ ແຜນວຽກຈຸດສຸມຢ່າງຕັ້ງໜ້າ ໂດຍສະເພາະ ແຜນດຳເນີນງານ 3 ປີ (2018-2020) ພ້ອມທັງ ຈັດຕັ້ງປະຕິບັດວິໄສທັດຮອດປີ 2030, ຍຸດທະສາດ 10 ປີ (2016-2025) ແລະ ປະກອບສ່ວນເຂົ້າໃນການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020) ໄປຕາມທິດສີຂຽວ ແລະ ຍືນຍົງ ຊຶ່ງສາມາດສ້າງໄດ້ຜົນງານພົ້ນເດັ່ນຫຼາຍດ້ານດັ່ງນີ້: (i) ໄດ້ສ້າງເອກະສານສຳຄັນເພື່ອເປັນເຄື່ອງມື ແລະ ທິດທາງໃນການເຄື່ອນໄຫວວຽກງານຂອງ ກປສ ເປັນຕົ້ນ ວິໄສທັດຮອດປີ 2030, ຍຸດທະຍາດ ຮອດປີ 2025, ແຜນດຳເນີນງານ 3 ປີ (2018-2020), ຍຸດທະສາດການລະດົມທຶນ ແລະ ການສື່ສານ ແລະ ຄູ່ມືຄຸ້ມຄອງພະນັກງານ; (ii) ປັບປຸງນິຕິກຳ ຂອງ ກປສ ໃຫ້ກະທັດຮັດຈະແຈ້ງ ແລະ ສອດຄ່ອງກັບເງື່ອນໄຂຂອງຜູ້ໃຫ້ທຶນເປັນຕົ້ນ ດຳລັດ ວ່າດ້ວຍ ກອງທຶນປົກປັກຮັກສາສິ່ງແວດລ້ອມ ປີ 2005 ຊຶ່ງໄດ້ມີການທົບທວນ ແລະ ປັບປຸງໃນປີ 2017 (ດຳລັດວ່າດ້ວຍ ກປສ ເລກທີ 94/ລບ, ລົງວັນທີ 8 ມີນາ 2017) ແລະ ປັບປຸງລະບຽບການຄຸ້ມຄອງ ກປສ ໃນປີ 2018 ແລະ 2019; (iii) ປັບປຸງໂຄງຮ່າງການຈັດຕັ້ງ ແລະ ເສີມສ້າງຂີດຄວາມສາມາດຂອງ ກປສ ຕາມທິດ « ໜຶ່ງ ກປສ ໜຶ່ງ ລະບົບ » ພ້ອມນັ້ນ ກໍໄດ້ສ້າງຕັ້ງຄະນະວິຊາການ ກປສ ທີ່ປະກອບດ້ວຍຜູ້ຕາງໜ້າຈາກພາກສ່ວນທີ່ກ່ຽວຂ້ອງ ເພື່ອເຂົ້າຮ່ວມຂະບວນການພິຈາລະນາຮັບຮອງເອົາໂຄງການທີ່ສະເໜີຂໍນຳໃຊ້ທຶນຈາກ ກປສ; (iv) ສາມາດລະດົມທຶນທັງພາຍໃນ ແລະ ສາກົນໄດ້ທັງໝົດ 37.41 ລ້ານ (ສາມສິບເຈັດລ້ານສີ່ແສນສິບພັນ) ໂດລາສະຫະລັດ ແລະ ສະໜອງທຶນໃຫ້ແກ່ພາກ ສ່ວນຕ່າງໆໃນການຈັດຕັ້ງປະຕິບັດໂຄງການທີ່ຕິດພັນກັບການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ຈຳນວນ 137 ໂຄງການ (ທຶນພາຍໃນ 89 ໂຄງການ, ທຶນ ຄສລ2 ມີ 47 ໂຄງການ ແລະ UNDP 1 ໂຄງການ) ລວມມູນຄ່າທັງໝົດ 36.71 ລ້ານ (ສາມສິບຫົກລ້ານເຈັດແສນສິບພັນ) ໂດລາສະຫະລັດ. ໃນພາກທີ I ນີ້ ໄດ້ນຳສະເໜີ ຄວາມຄືບໜ້າ ແລະ ຜົນສຳເລັດຂອງການຈັດຕັ້ງປະຕິບັດເປົ້າໝາຍ ແລະ ແຜນບູລິມະສິດ ຂອງ ກປສ, ການຈັດຕັ້ງປະຕິບັດໂຄງການທີ່ໄດ້ຮັບທຶນ ຄສລ 2 ແລະ ທຶນພາຍໃນ ກປສ ເອງ ພ້ອມນັ້ນ ຍັງໄດ້ຕີລາຄາຈຸດດີ, ຈຸດອ່ອນ, ສິ່ງທ້າທາຍ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ໃນການຈັດຕັ້ງວຽກງານໃນ 5 ປີ ຜ່ານມາ.

### 1.2 ທົບທວນຄືນຄາດໝາຍສູ້ຊົນ ແລະ ແຜນການລົງທຶນ

#### 1.2.1 ການຈັດຕັ້ງປະຕິບັດຄາດໝາຍສູ້ຊົນ ຂອງ ກປສ

ແຜນດຳເນີນງານ 3 ປີ (2018-2020) ຂອງ ກປສ ໄດ້ກຳນົດຄາດໝາຍສູ້ຊົນ ໃນ 6 ຂົງເຂດບູລິມະສິດດັ່ງນີ້:

1. *ດ້ານການຈັດຕັ້ງ* - ສ້າງຄວາມເຂັ້ມແຂງ ໃຫ້ ກປສ ກ້າວໄປສູ່ "*ໜຶ່ງ ກປສ ໜຶ່ງ ລະບົບ*" ໃຫ້ສົມບູນແບບ ໃນປີ 2020;

2. *ດ້ານການຄຸ້ມຄອງ* - ຍົກຂີດຄວາມສາມາດ ຕາມ 8 ດັດສະນີຄວາມສາມາດ ກປສ ໃຫ້ບັນລຸ 58% ໃນປີ 2020 ຈາກ 28% ໃນປີ 2016;
3. *ດ້ານບຸກຄະລາກອນ* - ມີຄວາມພ້ອມດ້ານພະນັກງານ ທີ່ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ ພາຍໃນປີ 2020;
4. *ດ້ານການລະດົມທຶນ ແລະ ການສື່ສານ* - ທຶນຈາກພາກລັດ ໃຫ້ບັນລຸມູນຄ່າ **1.5** ລ້ານ (ໜຶ່ງລ້ານຫ້າແສນ) ໂດລາສະຫະລັດ, ຈາກພາກສ່ວນເອກະຊົນ ຫຼື ໂຄງການລົງທຶນ ໃຫ້ບັນລຸມູນຄ່າ **6.78** ລ້ານ (ຫົກລ້ານເຈັດແສນແປດສິບພັນ) ໂດລາສະຫະລັດ, ທຶນ ການຊ່ວຍເຫຼືອໂດຍກົງ ຈາກພາຍໃນ ແລະ ຕ່າງປະເທດ ໃຫ້ບັນລຸມູນຄ່າ 38.83 ລ້ານ (ສາມສິບແປດລ້ານແປດແສນສາມສິບພັນ) ໂດລາສະຫະລັດ ແລະ ຈາກການປະຕິບັດພັນທະຕາມສັນຍາສຳປະທານຕ່າງໆ ລວມທັງໝົດໃຫ້ບັນລຸມູນຄ່າ 47.1 ລ້ານ (ສີ່ສິບເຈັດລ້ານໜຶ່ງແສນ) ໂດລາສະຫະລັດ ໃນປີ 2020;
5. *ດ້ານການສະໜອງທຶນ* - ໃນການຈັດຕັ້ງປະຕິບັດ ແຜນການສະໜອງທຶນ 2018-2020 ຂອງ ກປສ ຕ້ອງຮັບປະກັນ ການປ່ອຍທຶນໄປຕາມທິດທາງແຜນການທີ່ວາງໄວ້ ແລະ ບັນລຸຄາດໝາຍປະມານ **391** ຕື້ກີບ **(47,1** ລ້ານໂດລາສະຫະລັດ);
6. *ດ້ານການຮ່ວມມື* - ສ້າງໜໍ່ແໜ້ນເປີດກວ້າງການຮ່ວມມື, ການເຊື່ອມໂຍງ ແລະ ການຫັນເປັນຄູ່ຮ່ວມງານ ກັບຂະແໜງການທີ່ກ່ຽວຂ້ອງ ທັງພາກລັດ ແລະ ເອກະຊົນ ທັງພາຍໃນ, ອະນຸພາກພື້ນ, ພາກພື້ນ ແລະ ສາກົນ.

### 1.2.2 ແຜນການສະໜອງທຶນ

ກປສ ໄດ້ສ້າງແຜນການສະໜອງທຶນ ສຳລັບສອງແຫຼ່ງທຶນຄື: (1) ແຫຼ່ງທຶນຈາກທະນາຄານໂລກ ໃນການຈັດຕັ້ງປະຕິບັດ ຄສລ 2 ແລະ (2) ແຫຼ່ງທຶນພາຍໃນ ປະກອບມີ ທຶນຂອງ ກປສ ເອງ (ດອກເບ້ຍເງິນຝາກ ແລະ ດອກເບ້ຍປ່ອຍກູ້), ການປະກອບສ່ວນພັນທະຈາກໂຄງການລົງທຶນ ແລະ ແຫຼ່ງທຶນອື່ນໆ. ຄສລ 2 ໄດ້ສະໜອງທຶນຜ່ານ 2 ຮ່ອງທຶນຄື: ຮ່ອງທຶນນະໂຍບາຍ ແລະ ສ້າງຄວາມເຂັ້ມແຂງ (PWF) ແລະ ຮ່ອງທຶນຊີວະນາໆພັນ ແລະ ການພັດທະນາຊຸມຊົນ (BFW), ນອກນັ້ນ ກໍມີງົບປະມານສຳລັບການບໍລິຫານ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ ຫກປສ. ສຳລັບທຶນພາຍໃນແມ່ນ ໄດ້ສະໜອງທຶນໃຫ້ໂຄງການຂະໜາດນ້ອຍ ແລະ ກາງ ຜ່ານ 6 ຮ່ອງທຶນ (ດ້ານນະໂຍບາຍ ແລະ ການສ້າງຄວາມເຂັ້ມແຂງດ້ານສິ່ງແວດລ້ອມ, ດ້ານອະນຸລັກຊີວະນາໆພັນ ແລະ ພັດທະນາຊຸມຊົນ, ດ້ານສິ່ງແວດລ້ອມ, ດ້ານການຄຸ້ມຄອງຊັບພະຍາກອນນ້ຳແບບຍືນຍົງ, ດ້ານການຄຸ້ມຄອງທີ່ດິນແບບຍືນຍົງ ແລະ ດ້ານການປັບຕົວກັບການປ່ຽນແປງດິນຟ້າອາກາດ) ໂດຍສອດຄ່ອງກັບແຜນບູລິມະສິດແຫ່ງຊາດ ໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ.

## 1.3 ຜົນການຈັດຕັ້ງປະຕິບັດ ວຽກງານໃນ 5 ປີ ຜ່ານມາ (2016 – 2020)

ຄວາມຄືບໜ້າ ແລະ ຜົນໄດ້ຮັບໃນການຈັດຕັ້ງປະຕິບັດວຽກງານໃນ 5 ປີ ຜ່ານມາ ໂດຍສະເພາະຄາດໝາຍສູ້ຊົນ ແລະ ແຜນວຽກຈຸມສຸມ ຂອງແຜນດຳເນີນງານ 3 ປີ (2018-2020) ໃນແຕ່ລະດ້ານ ມີລາຍລະອຽດດັ່ງນີ້:

### 1.3.1 ດ້ານການຈັດຕັ້ງ

ແຜນການດໍາເນີນງານ 3 ປີ (2018-2020) ໄດ້ກໍານົດຈຸດປະສົງ ເພື່ອປັບປຸງໂຄງຮ່າງການຈັດຕັ້ງ ແລະ ເສີມສ້າງຂີດຄວາມສາມາດຂອງ ກປສ ໃຫ້ກາຍເປັນ « ໜຶ່ງ ກປສ ໜຶ່ງ ລະບົບ » ຊຶ່ງຄາດວ່າ ຮອດກາງປີ 2020 ປະມານ 70% ຂອງແຜນທີ່ວາງໄວ້ຈະສໍາເລັດ ແລະ ໜ້າວຽກທີ່ຄົງຄ້າງຈະສໍາເລັດພາຍໃນທ້າຍປີ 2020. ຜ່ານການຈັດຕັ້ງປະຕິບັດຕົວຈິງສາມາດບັນລຸໄດ້ຕາມຄາດໝາຍທີ່ກໍານົດໄວ້, ໜຶ່ງໃນຜົນສໍາເລັດທີ່ສໍາຄັນແມ່ນດໍາລັດວ່າດ້ວຍ ກອງທຶນປົກປັກຮັກສາສິ່ງແວດລ້ອມ ສະບັບປັບປຸງ ໄດ້ຖືກຮັບຮອງໃນຕົ້ນປີ 2017 ຊຶ່ງດໍາລັດດັ່ງກ່າວໄດ້ເຮັດໃຫ້ ກປສ ມີແບບແຜນການດໍາເນີນງານແບບໃໝ່. ປະຈຸບັນ ກປສ ແມ່ນອົງການຈັດຕັ້ງໜຶ່ງ ຢູ່ພາຍໃຕ້ການຊີ້ນໍາຂອງສະພາບໍລິຫານ ຊຶ່ງມີໜ້າທີ່ຮັບຜິດຊອບໃນການລະດົມທຶນຈາກແຫຼ່ງທຶນຕ່າງໆ ພ້ອມທັງສະໜອງທຶນໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານປົກປັກຮັກສາຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ. ໂຄງປະກອບການຈັດຕັ້ງ ຂອງ ກປສ ປະກອບມີ ສະພາບໍລິຫານ, ຄະນະວິຊາການ ແລະ ຫກປສ. ສະພາບໍລິຫານ ຂອງ ກປສ ມີໜ້າທີ່ຊີ້ນໍາ-ນໍາພາ ຫກປສ ແລະ ກໍານົດທິດທາງ, ນະໂຍບາຍການເຄື່ອນໄຫວວຽກງານຂອງ ກປສ ພ້ອມທັງ ພິຈາລະນາຮັບຮອງການອະນຸມັດໂຄງການຕ່າງໆ, ຊຶ່ງປະກອບມີສະມາຊິກ 11 ທ່ານ ແລະ ມີປະທານ ແມ່ນ ທ່ານ ລັດຖະມົນຕີ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ບັນດາທ່ານຮອງລັດຖະມົນຕີຈາກກະຊວງກ່ຽວຂ້ອງ ເປັນກໍາມະການ. ຄະນະວິຊາການ ກປສ ມີໜ້າທີ່ ຄົ້ນຄ້ວາປະກອບຄໍາເຫັນຕໍ່ວິໄສທັດ, ຍຸດທະສາດ, ແຜນການ ແລະ ພິຈາລະນາໂຄງການຕ່າງໆທີ່ສະເໜີຂໍນໍາໃຊ້ທຶນ ຈາກ ກປສ ຊຶ່ງປະກອບມີສະມາຊິກ 10 ທ່ານ ທີ່ມາຈາກຂະແໜງການທີ່ກ່ຽວຂ້ອງຕ່າງໆ ແລະ ມີ ທ່ານ ຫົວໜ້າກົມແຜນການ ແລະ ການເງິນ ຂອງ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ທ່ານ ຫົວໜ້າກົມແຜນການ ແລະ ການເງິນ ຂອງ ກະຊວງກະສິກໍາ ແລະ ປ່າໄມ້ ຜັດປ່ຽນກັນເປັນຫົວໜ້າ. ຫກປສ ມີໜ້າທີ່ຮັບຜິດຊອບ ໃນການຄຸ້ມຄອງຈັດຕັ້ງປະຕິບັດກິດຈະກໍາປະຈໍາວັນ ຂອງ ກປສ ພາຍໃຕ້ການຊີ້ນໍາຂອງຫົວໜ້າຫ້ອງການ ກປສ. ເພື່ອຈັດຕັ້ງປະຕິບັດດໍາລັດ ກປສ ປີ 2017, ຫກປສ ໄດ້ສ້າງລະບຽບການຄຸ້ມຄອງ ກປສ ແລະ ຄູ່ມືການຄຸ້ມຄອງບໍລິຫານ ກປສ ຈໍານວນໜຶ່ງສໍາເລັດ (ຄູ່ມືການຄຸ້ມຄອງບໍລິຫານ ກປສ).

ຜົນງານທີ່ພົ້ນເດັ່ນດ້ານການຈັດຕັ້ງ ຂອງ ກປສ ໃນໄລຍະ 5 ປີ ຜ່ານມາ (2016-2020) ປະກອບມີ:

- ສໍາເລັດກອງປະຊຸມສະພາບໍລິຫານ 7 ຄັ້ງ ແລະ ກອງປະຊຸມຄະນະວິຊາການ 12 ຄັ້ງ;
- ສໍາເລັດການປັບປຸງບຸກຄະລາກອນສະພາບໍລິຫານ ກປສ ຈໍານວນ 2 ຄັ້ງ: ຄັ້ງທໍາອິດໃນປີ 2017 ປ່ຽນປະທານສະພາບໍລິຫານ ກປສ ແລະ ກໍາມະການຈໍານວນໜຶ່ງ ໃນລະດັບກະຊວງ ເພື່ອໃຫ້ບັນດາກະຊວງທີ່ກ່ຽວຂ້ອງ ສາມາດໃຫ້ທິດຊີ້ນໍາກ່ຽວກັບວຽກບູລິມະສິດ ຂອງ ກປສ ໃຫ້ສອດຄ່ອງກັບນະໂຍບາຍ ແລະ ທິດທາງຂອງກະຊວງ ແລະ ຄັ້ງທີ 2 ໄດ້ປັບປຸງໃນປີ 2019 ປ່ຽນແທນ ກໍາມະການສະພາບໍລິຫານຜູ້ທີ່ອອກກິນເບ້ຍບໍານານ ແລະ ຍົກຍ້າຍໄປຮັບໜ້າທີ່ໃໝ່;
- ສໍາເລັດການປັບປຸງສະມາຊິກຂອງຄະນະວິຊາການ ຈໍານວນ 2 ຄັ້ງ: ຄັ້ງທີ 1 ໃນປີ 2018 ໄດ້ປ່ຽນແປງສະມາຊິກ ຈໍານວນໜຶ່ງທີ່ຖືກຍົກຍ້າຍໄປຮັບໜ້າທີ່ໃໝ່ ແລະ ຄັ້ງທີ 2 ໃນຕົ້ນປີ 2020 ໄດ້ປ່ຽນແປງໂຄງປະກອບການຈັດຕັ້ງ ຂອງບາງກະຊວງທີ່ກ່ຽວຂ້ອງ;
- ຫກປສ ໄດ້ມີການປັບປຸງການຈັດຕັ້ງ ໃນກາງປີ 2016, 2019 ແລະ ຕົ້ນປີ 2020 ໂດຍໄດ້ແຕ່ງຕັ້ງ ຫົວໜ້າຫ້ອງການ ກປສ ມາແລ້ວ 3 ທ່ານ, ໄດ້ປັບປຸງປະສິດທິພາບ ແລະ ປະສິດທິຜົນໃນການປະຕິບັດໜ້າທີ່ວຽກງານ ຂອງ ຫກປສ ໂດຍໄດ້ມີການໂຮມພະແນກທີ່ມີໜ້າວຽກຄ້າຍຄືກັນ ແລະ ຕິດພັນກັນເຂົ້າກັນເຊັ່ນ: ວຽກງານວາງແຜນ, ລະດົມທຶນ ແລະ ການຮ່ວມມື.

### *1.3.2 ດ້ານການຄຸ້ມຄອງບໍລິຫານ*

ອີງຕາມ 8 ດັດຊະນີຄວາມອາດສາມາດ (FCI) ທີ່ວາງໄວ້ໃນປີ 2015 ຊຶ່ງເປັນສ່ວນໜຶ່ງຂອງການສະໜັບສະໜູນວຽກງານ ຂອງ ຄສລ 2, ແຜນດຳເນີນງານ 3 ປີ (2018-2020) ໄດ້ກຳນົດຄາດໝາຍ ໃຫ້ບັນລຸ 58 ຄະແນນ ພາຍໃນປີ 2020 ຫຼື ເທົ່າກັບ 100% ຂອງຄາດໝາຍທີ່ກຳນົດໄວ້. ເປົ້າໝາຍດັ່ງກ່າວ ໄດ້ບັນລຸຜົນສຳເລັດກ່ອນປີ 2020 ຊຶ່ງເຫັນໄດ້ວ່າໃນການຈັດຕັ້ງປະຕິບັດຕົວຈິງ ຕົວເລກດັດສະນີແມ່ນເພີ່ມຂຶ້ນທຸກໆປີ ແລະ ລື່ນຄາດໝາຍໃນປີ 2019 ດັ່ງນີ້: ໃນປີ 2016 ບັນລຸໄດ້ 28 ຄະແນນ ຫຼື ເທົ່າກັບ 35% ຂອງຄາດໝາຍ, ປີ 2017 ບັນລຸໄດ້ 33 ຄະແນນ ຫຼື ເທົ່າກັບ 41% ຂອງຄາດໝາຍ, ປີ 2018 ບັນລຸໄດ້ 52 ຄະແນນ ຫຼື ເທົ່າກັບ 65% ຂອງຄາດໝາຍ ແລະ ປີ 2019 ບັນລຸໄດ້ 67 ຄະແນນ ຫຼື ເທົ່າກັບ 145% ຂອງຄາດໝາຍ. ເນື່ອງຈາກວ່າ ໂຄງການ ຄສລ 2 ຈະສິ້ນສຸດໃນປີ 2022 ຈຶ່ງເຫັນວ່າຄາດໝາຍດັດຊະນີຄວາມສາມາດຈະຕ້ອງໄດ້ມີການປັບປຸງ ໃຫ້ແທດເໝາະກັບສະພາບຕົວຈິງ ແລະ ຄວາມຕ້ອງການ ຂອງ ກປສ ເພື່ອຮອງຮັບການຈັດຕັ້ງປະຕິບັດໂຄງການໃໝ່.

ຜົນສຳເລັດທີ່ສຳຄັນດ້ານການຄຸ້ມຄອງບໍລິຫານມີດັ່ງນີ້: (i) ການປັບປຸງ ດຳລັດ ວ່າດ້ວຍ ກອງທຶນປົກປັກຮັກສາສິ່ງແວດລ້ອມ ຊຶ່ງໄດ້ຮັບຮອງໃນຕົ້ນປີ 2017; (ii) ຂໍ້ຕົກລົງວ່າດ້ວຍລະບຽບການຄຸ້ມຄອງ ກປສ ໄດ້ຮັບຮອງໃນຕົ້ນປີ 2018 ແລະ ມີການປັບປຸງບາງມາດຕາເພີ່ມເຕີມໃນປີ 2019; (iii) ວິໄສທັດ 2030 ແລະ ຍຸດທະສາດ 2025 ຂອງ ກປສ, ແຜນດຳເນີນງານ 2018-2020, ແຜນການລະດົມທຶນ ແລະ ສື່ສານ ແລະ ຄູ່ມືຄຸ້ມຄອງພະນັກງານ ໄດ້ຖືກຮັບຮອງໃນທ້າຍປີ 2018; ແລະ (iv) ໄດ້ສ້າງຄູ່ມືຄຸ້ມຄອງໂຄງການ 5 ເຫຼັ້ມ ລວມທັງ ຄູ່ມືການປ້ອງກັນສິ່ງແວດລ້ອມ ແລະ ສັງຄົມ ເພື່ອອຳນວຍຄວາມສະດວກໃນການດຳເນີນງານຂອງ ກປສ. ປະຈຸບັນ ຫກປສ ກຳລັງປັບປຸງຄູ່ມືຕ່າງໆ ເພື່ອໃຫ້ສອດຄ່ອງກັບນະໂຍບາຍ « ໜຶ່ງ ກປສ ໜຶ່ງ ລະບົບ ». ຄາດວ່າ ຄູ່ມືສະບັບປັບປຸງ ຈະໄດ້ສະເໜີຕໍ່ສະພາບໍລິຫານ ເພື່ອພິຈາລະນາຮັບຮອງ ໃນທ້າຍປີ 2021. ນອກນັ້ນ, ກປສ ຍັງຕ້ອງໄດ້ສືບຕໍ່ປັບປຸງລະບົບການຄຸ້ມຄອງການເງິນໃຫ້ມີປະສິດທິພາບ, ສ້າງຄວາມເຂັ້ມແຂງ ໃຫ້ແກ່ພະນັກງານ, ຮັບປະກັນຄຸນນະພາບ ແລະ ເປັນທີ່ຍອມຮັບໃນລະດັບຊາດ ແລະ ສາກົນ.

### *1.3.3 ດ້ານບຸກຄະລາກອນ*

ແຜນດຳເນີນງານ 3 ປີ ຂອງ ກປສ ໄດ້ກຳນົດຄາດໝາຍດ້ານບຸກຄະລາກອນໂດຍແນໃສ່ໃຫ້ມີພະນັກງານຄົບທຸກຕຳແໜ່ງງານ ແລະ ຮັບປະກັນດ້ານຄຸນນະພາບ (ໂຄງຮ່າງການຈັດຕັ້ງທີ່ໄດ້ຖືກຮັບຮອງປະກອບມີ 45 ຕຳແໜ່ງງານ). ໃນການຈັດຕັ້ງປະຕິບັດຕົວຈິງ ຫກປສ ໄດ້ຄົ້ນຄ້ວາ ແລະ ປະກອບຕຳແໜ່ງງານຕາມທີ່ກຳນົດໄວ້ໃນແຜນການດັ່ງນີ້: ໄດ້ປະກອບ 35 ຕຳແໜ່ງງານໃນປີ 2016, ປະກອບ 39 ຕຳແໜ່ງງານໃນປີ 2017, ປະກອບ 41 ຕຳແໜ່ງງານໃນປີ 2018 ແລະ 40 ຕຳແໜ່ງງານໃນປີ 2019. ສະຫຼຸບໄດ້ວ່າໃນ 5 ປີຜ່ານມາ ກປສ ໄດ້ປະກອບຕຳແໜ່ງງານທີ່ສຳຄັນຈຳນວນໜຶ່ງຕາມແຜນທີ່ວາງໄວ້ ແຕ່ຕຳແໜ່ງຈຳນວນໜຶ່ງທີ່ຍັງບໍ່ໄດ້ປະກອບ ໂດຍສະເພາະແມ່ນພະນັກງານໂຄງການ ເນື່ອງຈາກໄດ້ມີແຜນການຫຼຸດຈຳນວນພະນັກງານໃຫ້ແທດເໝາະກັບຄວາມຕ້ອງການຕົວຈິງ ໃນເວລາໃກ້ທີ່ຈະສິ້ນສຸດໂຄງການ, ແຕ່ເຖິງຢ່າງໃດກໍ່ຕາມ ຫກປສ ຍັງພົບຄວາມທ້າທາຍໃນການຮັບປະກັນປະສິດທິພາບໃນການເຮັດວຽກຂອງພະນັກງານ ໂດຍສະເພາະການສ້າງຂີດຄວາມສາມາດໃຫ້ພະນັກງານຫຼັກແຫຼ່ງເພື່ອຮັບປະກັນຄຸນນະພາບ ແລະ ໃຫ້ໄດ້ລະດັບສາກົນຕາມຄາດໝາຍຂອງອົງກອນຜູ້ໃຫ້ທຶນ. ຍິ່ງໄປກ່ວານັ້ນ, ອັດຕາການເຂົ້າ-ອອກຂອງພະນັກງານໂຄງການສູງ (ປະມານ 50%) ເນື່ອງຈາກສັນຍາການວ່າຈ້າງ

ງານແມ່ນເຮັດເປັນແຕ່ລະປີ ຊຶ່ງພະນັກງານມີສິດບໍ່ຕໍ່ສັນຍາ ແລະ ຊອກວຽກໃໝ່ ພ້ອມນັ້ນ ກໍມີການແຂ່ງຂັນສູງສຳລັບການວ່າຈ້າງທີ່ປຶກສາພາຍໃນ ແລະ ສາກົນ. ເພື່ອແກ້ໄຂບັນຫາດັ່ງກ່າວ, ໂດຍປະຕິບັດໃຫ້ສອດຄ່ອງກັບຄູ່ມືຄຸ້ມຄອງພະນັກງານ ກປສ ແລະ ທິດທາງຂອງສະພາບໍລິຫານ, ໃນທ້າຍປີ 2019 ຫກປສ ໄດ້ດຳເນີນການດັ່ງນີ້: (ກ) ປັບເງິນເດືອນພື້ນຖານ ຂອງພະນັກງານຖາວອນ; (ຂ) ສ້າງກອງທຶນສະຫວັດດີການເພື່ອຊ່ວຍເຫຼືອເຊິ່ງກັນ ແລະ ກັນ; (ຄ) ມີປະກັນສຸຂະພາບ ແລະ ປະກັນຊີວິດໃຫ້ພະນັກງານທັງໝົດ ( ຫຼັງຈາກຜ່ານການທົດລອງ 3 ເດືອນ); ແລະ (ງ) ໄດ້ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ ກ່ຽວກັບການບໍລິຫານ ແລະ ຄຸ້ມຄອງຂັ້ນພື້ນຖານ ໂດຍການສະໜອງຫຼັກສູດໄລຍະສັ້ນໃນຫຼາຍດ້ານເຊັ່ນ: ການພັດທະນາການບໍລິຫານ, ການຄຸ້ມຄອງໂຄງການ, ການຄຸ້ມຄອງບຸກຄະລາກອນ, ການຈັດຊື້-ຈັດຈ້າງ, ການລະດົມທຶນ ແລະ ສື່ສານ. ເຖິງຢ່າງໃດກໍ່ຕາມ, ການປັບປຸງອັດຕາເງິນເດືອນ ເມື່ອທຽບໃສ່ ລາຄາຕະຫຼາດແມ່ນຍັງຕ່ຳຢູ່ ຍ້ອນວ່າ ຫກປສ ມີງົບປະມານຈຳກັດ ແລະ ບໍ່ມີແຫຼ່ງທຶນທີ່ຍືນຍົງ. ໃນແຜນ 5 ປີ 2021–2025 ກປສ ຈະເອົາໃຈໃສ່ສືບຕໍ່ແກ້ໄຂບັນຫາດັ່ງກ່າວ ໂດຍປັບປຸງປະສິດທິພາບ, ປະສິດທິຜົນ ແລະ ນະໂຍບາຍໃນການຄຸ້ມຄອງບຸກຄະລາກອນ ຂອງ ຫກປສ.

### *1.3.4 ການລະດົມທຶນ ແລະ ການສື່ສານ*

ແຜນດຳເນີນງານ ປີ 2018-2020 ໄດ້ກຳນົດຄາດໝາຍລະດົມທຶນໃຫ້ໄດ້ 47.11 ລ້ານ (ສີ່ສິບເຈັດລ້ານໜຶ່ງແສນສິບພັນ) ໂດລາສະຫະລັດ. ໃນການຈັດຕັ້ງປະຕິບັດຕົວຈິງສາມາດລະດົມທຶນໄດ້ 38.22 ລ້ານ (ສາມສິບແປດລ້ານສອງແສນຊາວພັນ) ໂດລາສະຫະລັດ, ໃນນີ້ ທຶນພາຍໃນ 5.57 ລ້ານ (ຫ້າລ້ານຫ້າແສນເຈັດສິບພັນ) ໂດລາສະຫະລັດ ແລະ ທຶນສາກົນ 32.65 ລ້ານ (ສາມສິບສອງລ້ານຫົກແສນຫ້າສິບພັນ) ໂດລາສະຫະລັດ ເທົ່າກັບ 81.13% ຂອງແຜນການ.

ຕາຕະລາງ 1.1 ແຜນການລະດົມທຶນ ແລະ ການຈັດຕັ້ງປະຕິບັດຕົວຈິງ ຈາກແຫຼ່ງທຶນພາຍໃນ ແລະ ສາກົນ (ລ້ານໂດລາສະຫະລັດ) ໃນປີ 2016-2020

| ປີ | ແຜນການ ($M) | | | ປະຕິບັດຕົວຈິງ ($M) | | | ໝາຍເຫດ |
|---|---|---|---|---|---|---|---|
| | ລວມ | ພາຍໃນ | ສາກົນ.(1) | ລວມ | ພາຍໃນ | ສາກົນ.(2) | |
| **ລວມ** | **47.11** | **8.28** | **38.83** | **38.22** | **5.57** | **32.65** | **81.13%** |
| 2016 | 7.83 | 1.50 | 6.33 | 5.89 | 1.03 | 4.86 | |
| 2017 | 9.18 | 1.85 | 7.33 | 6.41 | 1.04 | 5.37 | |
| 2018 | 9.99 | 1.72 | 8.27 | 7.12 | 0.87 | 6.25 | |
| 2019 | 8.04 | 1.91 | 6.13 | 10.89 | 1.64 | 9.25 | |
| 2020 | 12.07 | 1.30 | 10.77 | 7.91 | 0.99 | 6.92 | |

ໝາຍເຫດ: (1) ແຜນການ ທັງໝົດ 47.11 ໂດລາສະຫະລັດ. ໃນນີ້ 8.28 ລ້ານໂດລາສະຫະລັດ ຈາກແຫຼ່ງທຶນພາຍໃນ ແລະ 38.83 ລ້ານໂດລາສະຫະລັດ ຈາກທະນາຄານໂລກ;

(2) ປະຕິບັດຕົວຈິງໄດ້ທັງໝົດ 38.22 ໂດລາສະຫະລັດ. ໃນນີ້ 5.57 ໂດລາສະຫະລັດ ຈາກແຫຼ່ງທຶນພາຍໃນ ແລະ 32.65 ໂດລາສະຫະລັດ ຈາກແຫຼ່ງທຶນສາກົນ.

ກປສ ໄດ້ສ້າງແຜນລະດົມທຶນ ແລະ ການສື່ສານ ຂອງ ກປສ ຮອດປີ 2020 ຊຶ່ງໄດ້ຖືກຮັບຮອງຈາກສະພາບໍລິຫານໃນປີ 2018. ແຜນດັ່ງກ່າວໄດ້ກຳນົດຄາດໝາຍສູ້ຊົນ 3 ດ້ານຄື: (1) ດ້ານການລະດົມທຶນໃຫ້ບັນລຸມູນຄ່າ 391 ຕື້ກີບ (47.11 ລ້ານໂດລາສະຫາລັດ); (2) ດ້ານການສື່ສານໃຫ້ມີລະບົບການສື່ສານສະໜອງຂໍ້ມູນຂ່າວສານ ຜ່ານສື່ຕ່າງໆ ຢ່າງມີປະສິດທິຜົນ; ແລະ (3) ດ້ານການຮ່ວມມືມີການປັບປຸງການຮ່ວມມື ແລະ ຫັນເປັນຄູ່ຮ່ວມງານ ກັບຂະແໜງການທີ່ກ່ຽວຂ້ອງ. ໃນການຈັດຕັ້ງປະຕິບັດຕົວຈິງ, ສາມາດປະຕິບັດໄດ້ດັ່ງນີ້:

*ດ້ານການລະດົມທຶນ*: ການຈັດຕັ້ງປະຕິບັດແຜນລະດົມທຶນພາຍໃນ ແລະ ຕ່າງປະເທດ (2016 – 2020) ມີດັ່ງນີ້: ໃນປີ 2016 ແຜນລະດົມທຶນແມ່ນ 7.83 ລ້ານໂດລາສະຫະລັດ, ຜົນສຳເລັດຕົວຈິງລະດົມທຶນໄດ້ 5.89 ລ້ານໂດລາສະຫະລັດ ຫຼື 75% ຂອງເປົ້າໝາຍ (ໃນນີ້ 1.03 ລ້ານໂດລາສະຫະລັດ ແມ່ນທຶນພາຍໃນ ແລະ 4.86 ລ້ານໂດລາສະຫະລັດ ແມ່ນທຶນສາກົນ). ໃນປີ 2017 ແຜນລະດົມທຶນແມ່ນ 9.18 ລ້ານໂດລາສະຫະລັດ, ຜົນສຳເລັດຕົວຈິງລະດົມທຶນໄດ້ 6.41 ລ້ານໂດລາສະຫະລັດ ຫຼື 70% ຂອງເປົ້າໝາຍ (ໃນນີ້ 1.04 ລ້ານໂດລາສະຫະລັດແມ່ນທຶນພາຍໃນ ແລະ 5.37 ລ້ານໂດລາສະຫະລັດແມ່ນທຶນສາກົນ).ໃນປີ 2018 ແຜນລະດົມທຶນແມ່ນ 9.99 ລ້ານໂດລາສະຫະລັດ, ຜົນສຳເລັດຕົວຈິງແມ່ນ 7.12 ລ້ານໂດລາສະຫະລັດ ຫຼື 71% ຂອງເປົ້າໝາຍ (ໃນນີ້ 0.87 ລ້ານໂດລາສະຫະລັດແມ່ນທຶນພາຍໃນ ແລະ 6.25 ລ້ານໂດລາສະຫະລັດແມ່ນທຶນສາກົນ). ໃນປີ 2019 ແຜນລະດົມທຶນແມ່ນ 8.04 ລ້ານໂດລາສະຫະລັດ, ຜົນສຳເລັດຕົວຈິງລະດົມທຶນໄດ້ 10.89 ລ້ານໂດລາສະຫະລັດ ຫຼື 135% ຂອງເປົ້າໝາຍ (ໃນນີ້ 1.64 ລ້ານໂດລາສະຫະລັດແມ່ນທຶນພາຍໃນ ແລະ 9.25 ລ້ານໂດລາສະຫະລັດແມ່ນທຶນສາກົນ) ແລະ ໃນປີ 2020 ແຜນລະດົມທຶນແມ່ນ 12.07 ລ້ານໂດລາສະຫະລັດ, ຜົນສຳເລັດຕົວຈິງລະດົມທຶນໄດ້ 7.91 ລ້ານໂດລາສະຫະລັດ ຫຼື 66% ຂອງເປົ້າໝາຍ (ໃນນີ້ 0.99 ລ້ານໂດລາສະຫະລັດແມ່ນທຶນພາຍໃນ ແລະ 6.92 ລ້ານໂດລາສະຫະລັດແມ່ນທຶນຮັບສາກົນ). ລວມກັນລະດົມທຶນແຕ່ປີ 2016-2020 ສາມາດປະຕິບັດໄດ້ 38.22 ລ້ານໂດລາສະຫະລັດ ຫຼື ເທົ່າກັບ 81.13%.

*ດ້ານການສື່ສານ:* ໄດ້ຈັດຕັ້ງປະຕິບັດການໂຄສະນາເຜີຍແຜ່, ການສະໜອງຂໍ້ມູນ-ຂ່າວສານ ແລະ ປູກຈິດສຳນຶກ ໃຫ້ແກ່ສັງຄົມ ທັງພາກລັດ ແລະ ເອກະຊົນ ໄດ້ຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບ ວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ລວມທັງຜົນສຳເລັດໃນການເຄື່ອນໄຫວຂອງ ກປສ ໂດຍຜ່ານສື່ໂຄສະນາຕ່າງໆ ເຊັ່ນ: ສື່ສິ່ງພິມ, ໂທລະພາບ, ວິທະຍຸ ແລະ ຮູບແບບອື່ນໆ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ.

*ດ້ານການຮ່ວມມື:* ຫກປສ ໄດ້ເອົາໃຈໃສ່ປະສານງານ ແລະ ຮ່ວມມືກັບພາກສ່ວນຕ່າງໆເພື່ອເຮັດໃຫ້ການຈັດຕັ້ງປະຕິບັດໂຄງການ, ໂຄງການຍ່ອຍ ບັນລຸຜົນສຳເລັດ ແລະ ມີປະສິດທິຜົນ. ພາຍໃຕ້ ຄສລ 2, ຫກປສ ໄດ້ປະກອບພະນັກງານ ຕຳແໜ່ງຜູ້ປະສານງານໂຄງການ, ວິຊາການ ແລະ ຜູ້ຊ່ວຍຕິດຕາມ ແລະ ປະເມີນຜົນ ຊຶ່ງມີບົດບາດສຳຄັນໃນການປະສານງານຢ່າງມີປະສິດທິຜົນ ແລະ ອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດວຽກງານຂອງໂຄງການຍ່ອຍ ລວມທັງ ການປະເມີນ ແລະ ຊຸກຍູ້ຕິດຕາມການຈັດຕັ້ງປະຕິບັດຂອງໂຄງການຍ່ອຍ ແລະ ລາຍງານຄວາມຄືບໜ້າຂອງໂຄງການ. ໃນທ້າຍປີ 2017, ຫກປສ (ໂດຍການເຫັນດີຈາກທະນາຄານໂລກ) ໄດ້ສົ່ງເສີມການຮ່ວມມື ແລະ ແລກປ່ຽນປະສົບການໃນການຈັດຕັ້ງປະຕິບັດໂຄງການ ຊຶ່ງໄດ້ປັບປຸງກົນໄກການປະສານງານ ແລະ ການຮ່ວມມືກັບພາກສ່ວນກ່ຽວຂ້ອງ ໂດຍການຈັດກຸ່ມໂຄງການຍ່ອຍ ຄສລ 2 ເປັນ 4 ກຸ່ມຄື: ກຸ່ມຄຸ້ມຄອງປ່າສະ

ຫງວນ (PAM), ກຸ່ມບັງຄັບໃຊ້ກົດໝາຍກ່ຽວກັບການຄ້າສັດປ່າ (Lao-WEN), ກຸ່ມຄຸ້ມຄອງສິ່ງແວດລ້ອມ ແລະ ການວາງແຜນ (ENV/ Planning) ແລະ ກຸ່ມພັດທະນາຊັບພະຍາກອນມະນຸດ (HRD). ໄດ້ຫັນການຮ່ວມມືໄປສູ່ການເປັນຄູ່ຮ່ວມງານ ລະຫວ່າງ ຫກປສ ແລະ ຂະແໜງການກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ແລະ ອົງການຈັດຕັ້ງສາກົນ (ທະນາຄານໂລກ, ທະນາຄານພັດທະນາອາຊີ, GIZ, UNEP, UNDP, GGGI ແລະ ອື່ນໆ). ພິເສດ ໄດ້ປະສານສົມທົບ ກັບອົງການ GIZ ເພື່ອສ້າງຄວາມເຂັ້ມແຂງໃຫ້ ກປສ ໃຫ້ກາຍເປັນອົງກອນທີ່ສາມາດເຂົ້າຫາແຫຼ່ງທຶນໄດ້ໂດຍກົງ ຂອງກອງທຶນ GCF.

### *1.3.5 ດ້ານການສະໜອງທຶນ (2016-2020)*

ແຜນການທີ່ຜ່ານມາ ແມ່ນແນໃສ່ຮັບປະກັນງົບປະມານ 47,11 ລ້ານໂດລາສະຫະລັດ (ເທົ່າກັບ 391 ຕື້ກີບ) ເພື່ອຈັດສັນໃຫ້ຜູ້ໄດ້ຮັບທຶນ. ໃນການຈັດຕັ້ງປະຕິບັດຕົວຈິງ, ໄລຍະປີ 2016-2020 ໄດ້ສະໜອງທຶນຈຳນວນ 38.22 ລ້ານໂດລາສະຫະລັດ ໃຫ້ 137 ໂຄງການ ( 5.57 ລ້ານໂດລາສະຫະລັດ ທຶນພາຍໃນ ໄດ້ສະໜອງໃຫ້ 89 ໂຄງການ ແລະ 32.65 ລ້ານໂດລາສະຫະລັດ ທຶນສາກົນ ໄດ້ຈັດສັນໃຫ້ ຄສລ2 ຈຳນວນ 47 ໂຄງການ, 1 ໂຄງການ ຂອງ UNDP). ງົບປະມານທີ່ຈັດສັນ ແລະ ການສະໜອງທຶນ ຂອງ ກປສ ທັງໝົດໄດ້ສະຫຼຸບໃນຕາຕະລາງ 1.1 ແລະ 1.2. ສຳລັບ ງົບປະມານຈັດສັນ ແລະ ການເບີກຈ່າຍ ຂອງ ຄສລ2 ລະບຸໃນຕາຕະລາງ 1.3 ແລະ 1.4. ສຳລັບງົບປະມານ ຂອງໂຄງການ ຈາກອົງການສະຫະປະຊາຊາດເພື່ອການພັດທະນາ UNDP/GEF ທີ່ຈັດຕັ້ງປະຕິບັດ ຢູ່ແຂວງສະຫວັນນະເຂດ ລະບຸໃນ ຕາຕະລາງ 1.5.

***ກ.) ສະຫຼຸບຜົນສຳເລັດການຈັດຕັ້ງປະຕິບັດແຜນການການສະໜອງທຶນ ຂອງ ກປສ ຕາມແຕ່ລະຮ່ວງທຶນ***

ການສະໜອງທຶນ ຂອງ ກປສ ກວມເອົາ 6 ຮ່ວງທຶນ ໂດຍສຸມໃສ່ການສ້າງຄວາມເຂັ້ມແຂງໃຫ້ພາກສ່ວນຕ່າງໆໃນຂັ້ນສູນກາງ ແລະ ທ້ອງຖິ່ນ ເຊັ່ນ: ກຊສ, ພຊສ, ຫຊສ, ມະຫາວິທະຍາໄລແຫ່ງຊາດ, ສະຖາບັນການເມືອງ-ການປົກຄອງ, ກົມປ່າໄມ້, ກົມກວດກາປ່າໄມ້ ແລະ ພະແນກກະສິກຳ ແລະ ປ່າໄມ້ແຂວງ ເພື່ອຈັດຕັ້ງປະຕິບັດວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ລວມທັງການຄຸ້ມຄອງປ່າສະຫງວນ, ປ່າປ້ອງກັນ ແລະ ຊີວະນາໆພັນ. ພ້ອມກັນນັ້ນ, ກໍ່ໄດ້ສຸມໃສ່ການຄຸ້ມຄອງ ແລະ ປົກປັກຮັກສາສິ່ງແວດລ້ອມໃນໂຄງການພັດທະນາຕ່າງໆ ເປັນຕົ້ນ ການຄຸ້ມຄອງທີ່ດິນ, ຊັບພະຍາກອນນ້ຳ, ສານເຄມີ ແລະ ສິ່ງເສດເຫຼືອ.

**1/ ຮ່ວງທຶນ ດ້ານນະໂຍບາຍ ແລະ ສ້າງຄວາມເຂັ້ມແຂງ (PICE)**

ການສະໜອງທຶນ ໃນຮ່ວງທຶນ PICE ແມ່ນໄດ້ໃຫ້ການສະໜັບສະໜູນພາກສ່ວນຕ່າງໆ ໃນຂັ້ນສູນກາງ, ແຂວງ ແລະ ເມືອງ ຈຳນວນ 30 ໂຄງການ ເປັນມູນຄ່າທັງໝົດ 8.78 ຕື້ກີບ (ແປດຕື້ເຈັດຮ້ອຍແປດສິບລ້ານກີບ) ເພື່ອສ້າງຄວາມເຂັ້ມແຂງໃຫ້ການຈັດຕັ້ງ ແລະ ພະນັກງານໃນການສ້າງ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ, ແຜນດຳເນີນງານ ແລະ ນິຕິກຳດ້ານສິ່ງແວດລ້ອມ, ການຈັດຕັ້ງປະຕິບັດວຽກງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ສ້າງຈິດສຳນຶກດ້ານສິ່ງແວດລ້ອມ ແລະ ປັບປຸງສະຖານທີ່ເຮັດວຽກຢູ່ໃນຂັ້ນທ້ອງຖິ່ນ ຊຶ່ງໄດ້ສະໜອງທຶນໃນການຈັດຕັ້ງປະຕິບັດວຽກງານ ດັ່ງນີ້:

(i) ສ້າງຄວາມເຂັ້ມແຂງໃຫ້ ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມແຂວງ ດ້ານການຄຸ້ມຄອງການສຶກສາເບື້ອງຕົ້ນຜົນກະທົບຕໍ່ສິ່ງແວດລ້ອມ (IEE) ໃນ 9 ແຂວງ ( ແຂວງ ບໍ່ແກ້ວ, ຫຼວງນໍ້າທາ, ໄຊຍະບູລີ, ອຸດົມໄຊ, ຜົ້ງສາລີ, ສາລະວັນ, ຈໍາປາສັກ, ເຊກອງ ແລະ ອັດຕະປື ).ນອກນັ້ນ, ກໍ່ໄດ້ສະໜອງທຶນ ດ້ານການຄວບຄຸມ ແລະ ຕິດຕາມກວດກາ ການນໍາໃຊ້ສານເຄມີ (ຢາຂ້າຫຍ້າ, ຢາປາບສັດຕູພືດ) ໃນ 6 ແຂວງ (ແຂວງ ບໍ່ແກ້ວ, ຫຼວງນໍ້າທາ, ໄຊຍະບູລີ, ອຸດົມໄຊ, ຜົ້ງສາລີ ແລະ ຄໍາມ່ວນ);

(ii) ສະໜອງທຶນໃຫ້ມະຫາວິທະຍາໄລແຫ່ງຊາດ (ຄະນະວິທະຍາສາດທໍາມະຊາດ, ຄະນະວິທະຍາສາດສິ່ງແວດລ້ອມ) ໃນການສ້າງຄູ່ມືການຄຸ້ມຄອງ ແລະ ນໍາໃຊ້ສານເຄມີອັນຕະລາຍ ລວມທັງການສ້າງຖານຂໍ້ມູນຕິດຕາມດ້ານການນໍາໃຊ້ສານເຄມີ ເພື່ອໃຫ້ ພຊສ ແລະ ຫຊສ ນໍາໃຊ້ໃນການເຜີຍແຜ່ ແລະ ຝຶກອົບຮົມໃຫ້ຜູ້ປະກອບການ ແລະ ປະຊາຊົນ ພ້ອມທັງ ຍົກລະດັບຄວາມສາມາດ ໃນການວາງແຜນ ແລະ ຄຸ້ມຄອງສິ່ງແວດລ້ອມເມືອງເຟືອງ ແຂວງ ວຽງຈັນ;

(iii) ສະໜອງທຶນໃຫ້ ແນວລາວສ້າງຊາດ ເພື່ອສ້າງຄວາມເຂັ້ມແຂງ ໃນການສົ່ງເສີມ, ປົກປ້ອງສິດຜົນປະໂຫຍດປະຊາຊົນບັນດາເຜົ່າດ້ານສິ່ງແວດລ້ອມ ຢູ່ນະຄອນຫຼວງວຽງຈັນ, ແຂວງ ອຸດົມໄຊ ແລະ ແຂວງ ອັດຕະປື;

(iv) ສ້າງຄວາມເຂັ້ມແຂງ ໃຫ້ ກົມກອງພາຍໃນ ກຊສ ໃນການຈັດຕັ້ງປະຕິບັດວຽກງານກ່ຽວກັບການຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມເຊັ່ນ: ການສ້າງຄວາມເຂັ້ມແຂງດ້ານບຸກຄະລາກອນໃຫ້ ຂະແໜງ ຊສ, ສ້າງຄວາມເຂັ້ມແຂງໃຫ້ພະນັກງານກວດກາດ້ານສິ່ງແວດລ້ອມ, ພັດທະນາລະບົບບັນຊີງົບປະມານແຫ່ງລັດໃຫ້ ຂະແໜງ ຊສ ທົ່ວປະເທດ ແລະ ສະໜັບສະໜູນການສ້າງສວນ ພຶກສາສາດເພື່ອໃຫ້ມີຄວາມຍືນຍົງທາງດ້ານສິ່ງແວດລ້ອມ;

(v) ສະໜອງທຶນໃຫ້ສະຖາບັນຄົ້ນຄ້ວາວິທະຍາສາດ ແລະ ເຕັກໂນໂລຊີ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ໃນການສຶກສາການປູກມອນລ້ຽງມ້ອນ ຢູ່ນະຄອນຫຼວງວຽງຈັນ;

(vi) ສ້າງຄວາມເຂັ້ມແຂງໃຫ້ ຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ 4 ແຫ່ງ (ສ້ອມແປງຫ້ອງການ ເມືອງບໍ່ແຕນ ແຂວງໄຊຍະບູລີ, ເມືອງວຽງພູຄາ ແຂວງຫຼວງນໍ້າທາ, ເມືອງຂວາ ແຂວງຜົ້ງສາລີ ແລະ ເມືອງທ່າແຂກ ແຂວງຄໍາມ່ວນ);

### 2/ ຮ່ວງທຶນດ້ານຊີວະນາໆພັນ (CBI)

ການສະໜອງທຶນ ໃນຮ່ວງທຶນ CBI ແມ່ນໄດ້ໃຫ້ການສະໜັບສະໜູນພາກສ່ວນຕ່າງໆ ໃນຂັ້ນສູນກາງ, ແຂວງ ແລະ ເມືອງ ຈໍານວນ 19 ໂຄງການ ເປັນມູນຄ່າທັງໝົດ 10.13 ຕື້ກີບ (ສິບຕື້ໜຶ່ງຮ້ອຍສິບສາມລ້ານກີບ) ເພື່ອສ້າງຄວາມເຂັ້ມແຂງ ໃນການຄຸ້ມຄອງປ່າສະຫງວນ, ປ່າປ້ອງກັນ ແລະ ສວນພຶກສາສາດ, ການອານຸລັກຊ້າງປ່າ ແລະ ການຫຼຸດຜ່ອນຂໍ້ຂັດແຍ່ງລະຫວ່າງຄົນກັບຊ້າງ ຊຶ່ງໄດ້ສະໜອງທຶນໃນການຈັດຕັ້ງປະຕິບັດວຽກງານ ດັ່ງນີ້:

(i) ໄດ້ສະໜອງທຶນ ໃຫ້ແກ່ ພະແນກ ກະສິກໍາ ແລະ ປ່າໄມ້ ແຂວງ ໃນການຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ ຈໍານວນ 11 ແຫ່ງ ໃນ 10 ແຂວງ ຄື: ປ່າສະຫງວນ ພູຫີຜີ ແຂວງອຸດົມໄຊ, ປ່າສະຫງວນ ນໍ້າຍາວ-ນໍ້າຍອງ ແລະ ປ່າປ້ອງກັນຫ້ວຍຕາບ ແຂວງບໍ່ແກ້ວ, ປ່າສະຫງວນນໍ້າລານ

ແຂວງຜົ້ງສາລີ, ປ່າສະຫງວນໄມ້ໂລ່ງເລ່ງ ແຂວງໄຊສົມບູນ, ປ່າປ້ອງກັນພູນາກ ແຂວງສາລະວັນ, ປ່າປ້ອງກັນພູພຽງບໍລິເວນ ແຂວງຈຳປາສັກ, ປ່າປ້ອງກັນຫ້ວຍໂທນ ແຂວງເຊກອງ, ປ່າປ້ອງກັນພູພຽງບໍລິເວນ ແຂວງ ອັດຕະປື, ປ່າປ້ອງກັນນ້ຳຮຸ່ງ-ນ້ຳແມດ ແຂວງໄຊຍະບູລີ ແລະ ປ່າປ້ອງກັນຍອດນ້ຳງຽບ ແຂວງຊຽງຂວາງ;

(ii) ໄດ້ສະໜອງທຶນ ໃຫ້ແກ່ ກົມປ່າໄມ້, ກະຊວງ ກະສິກຳ ແລະ ປ່າໄມ້ ເພື່ອຟື້ນຟູ ແລະ ຄຸ້ມຄອງສວນພຶກສາສາດ ຫ້ວຍຍາງ-ດົງໝາກຄາຍ ນະຄອນຫຼວງວຽງຈັນ ໂດຍການສະໜອງເບ້ຍໄມ້ ແລະ ອ້ອມຮົ້ວຂອບເຂດ ສວນພຶກສາສາດ;

(iii) ໄດ້ສະໜອງທຶນ ໃຫ້ແກ່ ພະແນກ ກະສິກຳ ແລະ ປ່າໄມ້ ເພື່ອອານຸລັກຊ້າງປ່າ ແລະ ຫຼຸດຜ່ອນຂໍ້ຂັດແຍ່ງລະຫວ່າງຄົນ ກັບຊ້າງປ່າ ຢູ່ ແຂວງ ວຽງຈັນ ແລະ ອຸດົມໄຊ.

**3/ ຮ່ວງທຶນ ດ້ານການຄຸ້ມຄອງມົນລະພິດ (PC)**

ການສະໜອງທຶນ ໃນຮ່ວງທຶນ PC ແມ່ນໄດ້ໃຫ້ການສະໜັບສະໜູນພາກສ່ວນຕ່າງໆ ໃນຂັ້ນສູນກາງ, ແຂວງ ແລະ ເມືອງ ຈຳນວນ 24 ໂຄງການ ເປັນມູນຄ່າທັງໝົດ 3.13 ຕື້ກີບ (ສາມຕື້ໜຶ່ງຮ້ອຍສິບສາມລ້ານກີບ) ເພື່ອປັບປຸງວຽກງານການສຶກສາສິ່ງແວດລ້ອມ, ການປຸກຈິດສຳນຶກ ແລະ ສົ່ງເສີມຄຸນນະພາບສິ່ງແວດລ້ອມຕົວເມືອງ "ຂຽວ ສະອາດ ງາມຕາ", ສ້າງຕົວແບບການເຕີບໂຕສີຂຽວ, ສ້າງສະໜາມຂີ້ເຫຍື້ອຂັ້ນເມືອງໃນຂອບເຂດທົ່ວປະເທດ ຊຶ່ງໄດ້ສະໜອງທຶນໃນການຈັດຕັ້ງປະຕິບັດວຽກງານ ດັ່ງນີ້:

(i) ສະໜອງທຶນໃຫ້ແກ່ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອສ້າງສະໜາມຂີ້ເຫຍື້ອເມືອງ ຈຳນວນ 23 ແຫ່ງ (ເມືອງນາໝໍ້, ພິນ, ພຽງ, ຕົ້ນເຜີ້ງ, ຄູນ, ສາມັກຄີໄຊ, ປາກທາ, ສຳພັນ, ດັກຈຶງ, ມະຫາໄຊ, ບາຈຽງ, ອາດສະພັງທອງ, ໄຊຍະບູລີ, ຊົນບູລີ, ຊຽງເງິນ, ວັງວຽງ, ພູກູດ, ສຳພັນ, ແອດ, ທ່າປາງທອງ, ເລົ່າງາມ, ທ່າແຕງ, ຄອກ) ໃນ 18 ແຂວງທົ່ວປະເທດ;

(ii) ສະໜອງທຶນໃຫ້ແກ່ ກົມສິ່ງແວດລ້ອມ, ກຊສ ແລະ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງສະຫວັນນະເຂດ ໃນການທົດລອງສ້າງໂຮງຮຽນ ຂຽວ ສະອາດ ແລະ ງາມຕາ ຢູ່ໂຮງຮຽນປະຖົມສົມບູນ ຮ່ອງໄກ່ແກ້ວ ນະຄອນຫຼວງວຽງຈັນ ແລະ ໂຮງຮຽນປະຖົມສົມບູນ 3 ສ້າງ ແຂວງສະຫວັນນະເຂດ ແລະ ສ້າງຕົວເມືອງໃຫ້ເປັນເມືອງ ຂຽວ ສະອາດ ແລະ ງາມຕາ ຢູ່ເມືອງໄກສອນ ແຂວງສະຫວັນນະເຂດ;

(iii) ສະໜອງທຶນໃຫ້ ຫ້ອງການພັດທະນາ ແລະ ຄຸ້ມຄອງຕົວເມືອງ ໃນການລອງຄອງລະບາຍນ້ຳ (ຮ່ອງແຊງ ແລະ ບຶງທາດຫຼວງ) ຢູ່ເມືອງຈັນທະບູລີ ແລະ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ;

**4/ ຮ່ວງທຶນ ດ້ານການຄຸ້ມຄອງ ຊັບພະຍາກອນນ້ຳ (WRM)**

ການສະໜອງທຶນ ໃນຮ່ວງທຶນ WRM ແມ່ນໄດ້ໃຫ້ການສະໜັບສະໜູນພາກສ່ວນຕ່າງໆ ໃນຂັ້ນສູນກາງ, ແຂວງ ແລະ ເມືອງ ຈຳນວນ 10 ໂຄງການ ເປັນມູນຄ່າທັງໝົດ 5.73 ຕື້ ກີບ (ຫ້າຕື້ເຈັດຮ້ອຍສາມສິບລ້ານກີບ) ເພື່ອສ້າງແຜນຄຸ້ມຄອງອ່າງຮັບນ້ຳ, ຕິດຕາມກວດກາປະລິມານນ້ຳ, ຄຸນນະພາບນ້ຳ ແລະ ການເຊາະເຈື່ອນຂອງດິນໃນເຂດອ່າງຮັບນ້ຳ, ການສຳຫຼວດສະພາບຊັບພະຍາກອນນ້ຳ ແລະ ສ້າງລະບົບຂໍ້ມູນພື້ນຖານດ້ານຊັບພະຍາກອນນ້ຳ

ພ້ອມທັງສິ່ງເສີມການພັດທະນາຫຼັກສູດການສຶກສາດ້ານຊັບພະຍາກອນນ້ຳ ຊຶ່ງໄດ້ສະໜອງທຶນໃນການຈັດຕັ້ງປະຕິບັດວຽກງານ ດັ່ງນີ້:

(i) ສະໜອງທຶນໃຫ້ແກ່ກົມຊັບພະຍາກອນນ້ຳ, ກຊສ ໃນການເກັບກຳຂໍ້ມູນກ່ຽວກັບສະພາບການຄຸ້ມຄອງ ແລະ ການນຳໃຊ້ນ້ຳ ເພື່ອເປັນພື້ນຖານໃຫ້ແກ່ການປັບປຸງກົດໝາຍນ້ຳ;

(ii) ສະໜອງທຶນໃຫ້ແກ່ ພຊສ ເພື່ອສ້າງແຜນຄຸ້ມຄອງອ່າງຮັບນ້ຳ (ນ້ຳເທີນຫີນບູນ, ນ້ຳເທີນ-ນ້ຳກະດິງ ແຂວງບໍລິຄຳໄຊ ແລະ ແຂວງຄຳມ່ວນ; ນ້ຳຊຳ ແຂວງ ຫົວພັນ, ນ້ຳທາດ ແຂວງບໍ່ແກ້ວ, ສຶກສາ ແລະ ເກັບກຳຂໍ້ມູນເພື່ອສຶກສາອ່າງຮັບນ້ຳ ເຊທະມວກ ແຂວງ ສະຫວັນນະເຂດ), ສຳຫຼວດ ແລະ ເກັບກຳຂໍ້ມູນທີ່ດິນບໍລິເວນນ້ຳ ຢູ່ແຂວງຊຽງຂວາງ, ວຽງຈັນ ແລະ ອັດຕະປື, ຈັດກອງປະຊຸມແລກປ່ຽນບົດຮຽນກ່ຽວກັບການຄຸ້ມຄອງອ່າງຮັບນ້ຳ ແລະ ທີ່ດິນບໍລິເວນນ້ຳ ທົ່ວປະເທດ;

(iii) ສະໜອງທຶນໃຫ້ແກ່ ພຊສ ເພື່ອຍົກຂີດຄວາມສາມາດ ແລະ ຊຸກຍູ້ ເຄືອຄ່າຍຕິດຕາມກວດກາປະລິມານ ແລະ ຄຸນນະພາບນ້ຳ, ການເຊາະເຈື່ອນຂອງດິນ ໃນເຂດອ່າງຮັບນ້ຳ ລວມທັງ ການຈັດຕັ້ງປະຕິບັດ ແລະ ບັງຄັບໃຊ້ບັນດານິຕິກຳທີ່ກ່ຽວຂ້ອງກັບການຄຸ້ມຄອງຊັບພະຍາກອນນ້ຳ ໃນແຕ່ລະອ່າງຮັບນ້ຳ;

(iv) ສະໜອງທຶນໃຫ້ແກ່ ພຊສ ໃນການສຳຫຼວດ, ປະເມີນ ແລະ ຕິດຕາມກວດກາ ສະພາບຊັບພະຍາກອນນ້ຳ ໃນອ່າງແມ່ນ້ຳຕ່າງໆ ທັງດ້ານຄຸນນະພາບ ແລະ ປະລິມານຂອງນ້ຳໜ້າດິນ. ທັງນີ້ກໍ່ເພື່ອມີຂໍ້ມູນ ແລະ ຮັບປະກັນກ່ຽວກັບ ຄຸນນະພາບນ້ຳຂອງອ່າງຮັບນ້ຳ ແລະ ປະລິມານນ້ຳ ເພື່ອພຽງພໍຕໍ່ການນຳໃຊ້ສຳລັບຊຸມຊົນ ແລະ ຂະແໜງການຕ່າງໆທີ່ກ່ຽວຂ້ອງ;

(v) ສະໜອງທຶນໃຫ້ແກ່ ພຊສ ໃນການສ້າງລະບົບຂໍ້ມູນພື້ນຖານ ດ້ານຊັບພະຍາກອນນ້ຳ ເພື່ອຮັບໃຊ້ການພັດທະນາ, ວາງແຜນ ແລະ ຄຸ້ມຄອງອ່າງຮັບນ້ຳຕ່າງໆ. ພ້ອມກັນນັ້ນ, ກໍສ້າງຕັ້ງເຄືອຄ່າຍ ເຊື່ອມຕໍ່ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ໂດຍຜ່ານກອງປະຊຸມແລກປ່ຽນບົດຮຽນປະຈຳປີ;

(vi) ສະໜອງທຶນໃຫ້ແກ່ ພຊສ ໃນການພັດທະນາ ແລະ ປັບປຸງ ຫຼັກສູດ ການສຶກສາ ແລະ ປຸກຈິດສຳນຶກໃຫ້ມວນຊົນ ກ່ຽວກັບຊັບພະຍາ ກອນນ້ຳ.

### 5/ ຮ່ວງທຶນດ້ານການຄຸ້ມຄອງທີ່ດິນແບບຍືນຍົງ (SLM)

ການສະໜອງທຶນ ໃນຮ່ວງທຶນ SLM ແມ່ນໄດ້ໃຫ້ການສະໜັບສະໜູນພາກສ່ວນຕ່າງໆ ໃນຂັ້ນສູນກາງ, ແຂວງ ແລະ ເມືອງ ຈຳນວນ 11 ໂຄງການ ເປັນມູນຄ່າທັງໝົດ 6.31 ຕື້ ກີບ (ຫົກຕື້ສາມຮ້ອຍສິບລ້ານກີບ) ເພື່ອຍົກຂີດຄວາມສາມາດ ໃນການຄຸ້ມຄອງການນຳໃຊ້ທີ່ດິນຕາມແຜນຄຸ້ມຄອງທີ່ດິນແບບຮອບດ້ານ ໂດຍສອດຄ່ອງກັບ ແຜນຄຸ້ມຄອງສິ່ງແວດລ້ອມແບບຮອບດ້ານ ແລະ ເຊື່ອມສານກັບ ແຜນຄຸ້ມຄອງອ່າງນ້ຳ, ແຜນຄຸ້ມຄອງປ່າຍອດນ້ຳ ຊຶ່ງໄດ້ສະໜອງທຶນໃນການຈັດຕັ້ງປະຕິບັດວຽກງານ ດັ່ງນີ້:

(i) ສະໜອງທຶນໃຫ້ແກ່ ກົມທີ່ດິນ, ກຊສ ເພື່ອຊຸກຍູ້ການອອກໃບຕາດິນ ແລະ ການຂຶ້ນສຳມະໂນທີ່ດິນແຫ່ງຊາດຄື: ໄດ້ສ້າງລະບົບທີ່ທັນສະໄໝ ເພື່ອກຳນົດແຜນທີ່ຈັດສັນການນຳໃຊ້ທີ່ດິນ ຕາມ 8 ປະເພດທີ່ດິນ, ການຂຶ້ນສຳມະໂນທີ່ດິນ ໃນຂອບເຂດທົ່ວປະເທດ ລວມທັງ ການຈ່າຍພາສີນຳໃຊ້ທີ່ດິນແບບອອນລາຍ ແລະ ໄດ້ຈັດຝຶກອົບຮົມ ກ່ຽວກັບ ການຂຶ້ນທະບຽນອອກໃບຕາດິນ ແລະ ຈົດທະບຽນນິຕິກຳກ່ຽວກັບທີ່ດິນ ດ້ວຍລະບົບທີ່ທັນສະໄໝຮູບແບບໃໝ່ (Lao Land

Reg) ໃຫ້ທີມງານຂຶ້ນທະບຽນທີ່ດິນເຄື່ອນທີ່ ຂັ້ນເມືອງ ໃນ 9 ແຂວງເປົ້າໝາຍ ຊຶ່ງສຳເລັດ 2 ແຂວງຄື: ບໍລິຄຳໄຊ ແລະ ໄຊສົມບູນ ແລະ ກຳລັງດຳເນີນຢູ່ 7 ແຂວງ: ຄຳມ່ວນ, ສາລະວັນ, ຈຳປາສັກ, ອັດຕະປື, ຫຼວງພະບາງ, ອຸດົມໄຊ ແລະ ບໍ່ແກ້ວ ພ້ອມທັງ ສ້າງຖານຂໍ້ມູນການນຳໃຊ້ທີ່ດິນ, ການສຳປະທານທີ່ດິນ ແລະ ການອອກໃບຕາດິນໃນຂອບເຂດທົ່ວປະເທດ;

(ii) ສະໜອງທຶນໃຫ້ແກ່ ກົມທີ່ດິນ, ກຊສ ເພື່ອຊຸກຍູ້ ແລະ ຕິດຕາມກວດກາການວາງແຜນນຳໃຊ້ທີ່ດິນ ໄປຕາມພື້ນຖານການຄຸ້ມຄອງ 5 ປະເພດ ອ່າງນ້ຳ ແລະ ຈັດຕັ້ງປະຕິບັດ ແຜນຄຸ້ມຄອງທີ່ດິນແບບປະສົມປະສານ ໄປພ້ອມກັບການຂຶ້ນບັນຊີ ສຳມະໂນທີ່ດິນໃນທົ່ວປະເທດ ໂດຍໄດ້ສ້າງຄວາມເຂັ້ມແຂງໃຫ້ທ້ອງຖິ່ນໃນການຄຸ້ມຄອງ ແລະ ບໍລິຫານທີ່ດິນ, ສຳຫຼວດຈັດສັນກຳນົດເຂດ ແລະ ສ້າງແຜນທີ່ຕອນດິນ, ສ້າງຖານຂໍ້ມູນ ເພື່ອຕິດຕາມການນຳໃຊ້ທີ່ດິນຂອງປະຊາຊົນ ແລະ ສ້າງຄູ່ມືວິຊາການກ່ຽວກັບວຽກງານຈັດສັນທີ່ດິນໃຫ້ແກ່ພະນັກງານ ແລະ ການຈັດຕັ້ງທຸກພາກສ່ວນທີ່ກ່ຽວຂ້ອງກັບການຄຸ້ມຄອງ ແລະ ນຳໃຊ້ທີ່ດິນ;

(iii) ສະໜອງທຶນໃຫ້ແກ່ ພຊສ ໃນການສຳຫຼວດສະຖິຕິປ່າປູກ ແລະ ການນຳໃຊ້ດິນ ຕິດພັນກັບການສັງລວມ ແລະ ຂຶ້ນບັນຊີຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຊຶ່ງສຳເລັດການສຳຫຼວດຈັດສັນ, ກຳນົດເຂດ ແລະ ສ້າງແຜ່ນທີ່ຕອນດິນ ແລະ ແຜນຈັດສັນທີ່ດິນ ເພື່ອນຳໃຊ້ໃນເປົ້າໝາຍຕ່າງໆ ໃຫ້ເໝາະສົມກັບເງື່ອນໄຂ ແລະ ທ່າແຮງຂອງພື້ນທີ່ ໃນ 10 ບ້ານ, ເມືອງສິງ ແຂວງຫລວງນ້ຳທາ, ເມືອງ ປາກທາ ແຂວງ ບໍ່ແກ້ວ, ປັບປຸງຄຳແນະນຳວ່າດ້ວຍການສຳຫຼວດວັດແທກ ແລະ ສ້າງແຜນທີ່ຕາດິນ ສະບັບ6035/ກຊສ, ສ້າງປື້ມຄູ່ມືການປະເມີນລາຄາທີ່ດິນ ແລະ ຄູ່ມືຈັດພິມສຳເນົາເອກະສານນິຕິກຳ ກ່ຽວກັບ ວຽກງານສ້າງເຂດປະເມີນລາຄາທີ່ດິນ;

(iv) ສະໜອງທຶນໃຫ້ແກ່ ພຊສ ເພື່ອສ້າງລະບົບສະໜອງຂໍ້ມູນທີ່ເໝາະສົມ ເພື່ອສະໜອງຂ່າວສານກ່ຽວກັບການຈັດຕັ້ງປະຕິບັດແຜນຄຸ້ມຄອງທີ່ດິນ ຊຶ່ງໄດ້ສ້າງຖານຂໍ້ມູນເພື່ອຕິດຕາມການນຳໃຊ້ທີ່ດິນຂອງປະຊາຊົນ ຢູ່ ພຊສ ແຂວງບໍ່ແກ້ວ ແລະ ຫລວງນ້ຳທາ, ຝຶກອົບຮົມ ແລະ ຕິດຕັ້ງລະບົບເຄືອຂ່າຍ ການສ້າງຖານຂໍ້ມູນທະບຽນທີ່ດິນ ແລະ ການຄຸ້ມຄອງຖານຂໍ້ມູນທີ່ດິນ ຢູ່ 9 ແຂວງເປົ້າໝາຍ, ປັບປຸງຂໍ້ມູນທີ່ດິນເຂົ້າໃນຖານຂໍ້ມູນ, ສ້າງຄູ່ມືການຖ່າຍໂອນຂໍ້ມູນ, ການນຳໃຊ້ເຄືອຂ່າຍຄອມພິວເຕີ, ການຫັນປ່ຽນຂໍ້ມູນທີ່ດິນຈາກລະບົບເຈ້ຍໃຫ້ເປັນດີຈີຕອນ ແລະ ຄູ່ມືການນຳໃຊ້ລະບົບຖານຂໍ້ມູນທະບຽນທີ່ດິນ (Lao Land Reg), ສ້າງສະຖານີ CORS ຢູ່ແຂວງຊຽງຂວາງ ແລະ ໄຊສົມບູນ, ຈັດພິມແຜນທີ່ພາບຖ່າຍທາງອາກາດເພື່ອເປັນພື້ນຖານການກຳນົດເຂດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ 15 ເມືອງ ຈຳນວນ 30 ແຜ່ນ ໃຫ້ເມືອງລະ 2 ແຜ່ນ.

**6/ ຮ່ວງທຶນດ້ານການປ່ຽນແປງດິນຟ້າອາກາດ (CC)**

ກປສ ໄດ້ກຳນົດເປົ້າໝາຍ ການສະໜອງທຶນໃນ ຮ່ວງທຶນ ດ້ານການປ່ຽນແປງດິນຟ້າອາກາດ ເພື່ອປະກອບສ່ວນໃນການຈັດຕັ້ງປະຕິບັດ ແຜນງານແຫ່ງຊາດ SDG-13 Climate Action, ແຜນການຮັບມືກັບການປ່ຽນແປງດິນຟ້າອາກາດ ເພື່ອແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດຢູ່ ສປປລາວ. ແຕ່ວ່າມາຮອດປະຈຸບັນຍັງບໍ່ທັນໄດ້ສະໜອງທຶນໃນຮ່ວງດັ່ງກ່າວໃຫ້ພາກສ່ວນຕ່າງໆເທື່ອ.

| ຕາຕະລາງ 1.1 ການຈັດສັນງົບປະມານສຳລັບໂຄງການ ກປສ ແຜນ 2016-2020 (ລ້ານໂດລາສະຫະລັດ) | | | | | | |
|---|---|---|---|---|---|---|
| ຮ່ວງທຶນ | ຈຳນວນໂຄງການຍ່ອຍ | 2016-2017 | 2018 | 2019 | 2020 | Total USD |
| ນະໂຍບາຍ | 25 | 0.52 | 0.49 | 0.57 | 0.35 | 0.49 |
| ຊີວະນາໆພັນ | 16 | 0.84 | 0.34 | 0.38 | 0.25 | 0.34 |
| ຄວບຄຸມມົນລະພິດ | 6 | 0.47 | 0.35 | 0.20 | 0.25 | 0.35 |
| ຄຸ້ມຄອງຊັບພະຍາກອນນ້ຳ | 8 | 0.54 | 0.25 | 0.38 | 0.20 | 0.25 |
| ຄຸ້ມຄອງການນຳໃຊ້ທີ່ດິນ | 9 | 0.98 | 0.28 | 0.38 | 0.15 | 0.28 |
| ການປ່ຽນແປງດິນຟ້າອາກາດ | | | | | 0.10 | |
| ລວມທັງໝົດ | 64 | 3.35 | 1.72 | 1.92 | 1.30 | 8.28 |

| ຕາຕະລາງ 1.2 ລາຍຈ່າຍ ສຳລັບ ໂຄງການ ຂອງ ກປສ (ໂດລາສະຫະລັດ) | | | | | | |
|---|---|---|---|---|---|---|
| ຮ່ວງທຶນ | ຈຳນວນໂຄງການຍ່ອຍ | 2016-2017 | 2018 | 2019 | 2020 | Total USD |
| ນະໂຍບາຍ | 24 | 0.31 | 0.16 | 0.46 | 0.25 | 1.18 |
| ຊີວະນາໆພັນ | 16 | 0.56 | 0.20 | 0.31 | 0.23 | 1.30 |
| ຄວບຄຸມມົນລະພິດ | 6 | 0.27 | 0.03 | 0.03 | 0.06 | 0.39 |
| ຄຸ້ມຄອງຊັບພະຍາກອນນ້ຳ | 8 | 0.37 | 0.11 | 0.16 | 0.08 | 0.72 |
| ຄຸ້ມຄອງການນຳໃຊ້ທີ່ດິນ | 9 | 0.07 | 0.08 | 0.47 | 0.17 | 0.79 |
| ການປ່ຽນແປງດິນຟ້າອາກາດ | | 0 | 0 | 0 | 0 | 0 |
| ລວມທັງໝົດ | 63 | 1.58 | 0.59 | 1.43 | 0.79 | 4.39 |

*ຂ.) ສະຫຼຸບຜົນສຳເລັດການຈັດຕັ້ງປະຕິບັດແຜນການການສະໜອງທຶນ ຂອງ ຄສລ2 ໃນ 2 ຮ່ວງທຶນ*

**1/ ຮ່ວງທຶນ ດ້ານນະໂຍບາຍ ແລະ ສ້າງຄວາມເຂັ້ມແຂງ (PICE)**

ການສະໜອງທຶນ ໃນຮ່ວງທຶນ PICE ແມ່ນໄດ້ໃຫ້ການສະໜັບສະໜູນພາກສ່ວນຕ່າງໆ ຂັ້ນສູນກາງ, ແຂວງ ແລະ ເມືອງ ຈຳນວນ 28 ໂຄງການ ເປັນມູນຄ່າທັງໝົດ 19 ລ້ານໂດລາສະຫະລັດ ຫຼື 153 ຕື້ກີບ ( ໜຶ່ງຮ້ອຍຫ້າສິບສາມຕື້ກີບ) ເພື່ອຍົກຂີດຄວາມສາມາດຂອງການຈັດຕັ້ງ ແລະ ພະນັກງານໃຫ້ສອດຄ່ອງຕາມນະໂຍບາຍ ແລະ ຍຸດທະສາດແຫ່ງຊາດກ່ຽວກັບການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຊຶ່ງໄດ້ສົ່ງເສີມການສ້າງ ແລະ ຈັດຕັ້ງປະຕິບັດ ບັນດານະໂຍບາຍ, ຍຸດທະສາດ ແລະ ນິຕິກຳ ກ່ຽວກັບ ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ແບບຍືນຍົງ ລວມທັງການເຊື່ອມສານວຽກງານການເຕີບໂຕສີຂຽວ ເຂົ້າໃນແຜນພັດທະນາ ເສດຖະກິດ-ສັງຄົມ ແຫ່ງຊາດ, ແຜນພັດທະນາ ຂະແໜງການ ຊຶ່ງໄດ້ສະໜອງທຶນໃນການຈັດຕັ້ງປະຕິບັດວຽກງານ ດັ່ງນີ້:

(i) ສະໜອງທຶນໃຫ້ແກ່ ກົມແຜນການ ແລະ ການເງິນ ແລະ ກົມສິ່ງແວດລ້ອມ, ກຊສ ເພື່ອໜັບສະໜູນການເຄື່ອນໄຫວວຽກງານຂອງຄະນະກຳມະການສິ່ງແວດລ້ອມແຫ່ງຊາດ (NEC) ໃນການຊີ້ນຳ-ນຳພາການຈັດຕັ້ງປະຕິບັດຄາດໝາຍໃຫຍ່ ທີ 3 ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 8 ໄປພ້ອມກັບການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມແບບຍືນຍົງ ລວມທັງ ການພັດທະນາເສດຖະກິດສີຂຽວ/ການເຕີບໂຕສີຂຽວແຫ່ງຊາດ ນຳໄປສູ່ການບັນລຸການພັດທະນາແບບຍືນຍົງ ແລະ ລຶບລ້າງຄວາມທຸກຍາກ ໂດຍມີຄວາມສອດຄ່ອງກັນ ລະຫວ່າງ 3 ເສົາຄ້ຳ ດ້ານເສດຖະກິດ, ສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມ. ນອກນັ້ນ, ກໍ່ໄດ້ສະໜັບສະໜູນການເຊື່ອມສານແຜນຈັດສັນທີ່ດິນ, ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ, ແຜນຄຸ້ມຄອງອ່າງຮັບນ້ຳ ແລະ ແຜນຄຸ້ມຄອງ 3 ປະເພດປ່າ ລວມທັງການຫຼຸດຜ່ອນໄພພິບັດທຳມະຊາດ ແລະ ສ້າງຄວາມກຽມພ້ອມໃນການຮັບມືກັບການປ່ຽນແປງດິນຟ້າອາກາດ ເຂົ້າເປັນລະບົບດຽວກັນ;

(ii) ສະໜອງທຶນໃຫ້ແກ່ ກົມສິ່ງແວດລ້ອມ, ກຊສ ເພື່ອສ້າງຄວາມເຂັ້ມແຂງໃນວຽກງານການປະເມີນສິ່ງແວດລ້ອມ ແບບຍຸດທະສາດ (SEA) ໃຫ້ກາຍເປັນຫຼັກການທີ່ດນຳ ສຳລັບການວາງນະໂຍບາຍ, ຍຸດທະສາດ, ແຜນງານແຫ່ງຊາດ, ຂະແໜງການ, ແຂວງ ແລະ ເມືອງ ເພື່ອເຊື່ອມສານວຽກງານຄຸ້ມຄອງສິ່ງແວດລ້ອມແບບຍືນຍົງ, ການເຕີບໂຕສີຂຽວ, ການປ່ຽນແປງດິນຟ້າອາກາດ ແລະ ການຄຸ້ມຄອງຄວາມສ່ຽງຕໍ່ໄພພິບັດ ເຂົ້າໃນຂະບວນການອອກແບບໂຄງການ ຊຶ່ງໄດ້ສ້າງດຳລັດວ່າດ້ວຍການປະເມີນສິ່ງແວດລ້ອມ ແບບຍຸດທະສາດ (SEA) ພ້ອມທັງຊຸກຍູ້ໃຫ້ຂະແໜງການກ່ຽວຂ້ອງດຳເນີນການປະເມີນສິ່ງແວດລ້ອມແບບຍຸດທະສາດສຳລັບຂະແໜງພະລັງງານ ແລະ ບໍ່ແຮ່; ສ້າງຕັ້ງສູນຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະຈຳພາກ (RNRC) ເພື່ອເຮັດໜ້າທີ່ໂຄສະນາເຜີຍແຜ່ຂໍ້ມູນ-ຂ່າວສານ ແລະ ສົ່ງເສີມການມີສ່ວນຮ່ວມຂອງມວນຊົນ ໃນວຽກງານການປະເມີນສິ່ງແວດລ້ອມແບບຍຸດທະສາດ ແລະ ສ້າງລະບົບຂຶ້ນບັນຊີທ່າແຮງດ້ານຊັບພະຍາກອນທຳມະຊາດ;

(iii) ສະໜອງທຶນໃຫ້ແກ່ ກົມສິ່ງແວດລ້ອມ ແລະ ກົມຄວບຄຸມ ແລະ ຕິດຕາມມົນລະພິດ, ກຊສ ເພື່ອສ້າງຄວາມເຂັ້ມແຂງ ໃນວຽກງານການກັ່ນກອງ, ການວາງກອບ, ການມີສ່ວນຮ່ວມຂອງມວນຊົນ,

ການຕີລາຄາ ແລະ ການເຜີຍແຜ່ ຂໍ້ມູນ-ຂ່າວສານ ໃນຂະບວນການການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ການຊຸກຍູ້ການບັງຄັບໃຊ້ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຢ່າງເຂັ້ມງວດ ເພື່ອເພີ່ມທະວີການຈັດຕັ້ງປະຕິບັດຕາມລະບຽບການດ້ານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ຮັບປະກັນໃຫ້ໂຄງການລົງທຶນ ແລະ ກິດຈະການຕ່າງໆມີການຄຸ້ມຄອງສິ່ງແວດລ້ອມທີ່ດີ ຊຶ່ງໄດ້ສະໜັບສະໜູນການສ້າງດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ດຳລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ຈັດສັນຍົກຍ້າຍປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາ ພ້ອມທັງສ້າງຄູ່ມືວິຊາການໃນການຈັດຕັ້ງປະຕິບັດດຳລັດດັ່ງກ່າວ; ສ້າງຂໍ້ຕົກລົງ ວ່າດ້ວຍ ມາດຕະຖານສິ່ງແວດລ້ອມແຫ່ງຊາດ ແລະ ການຄວບຄຸມມົນລະພິດ ໃຫ້ເປັນເຄື່ອງມື ສຳລັບການຄວບຄຸມມົນລະພິດທີ່ຈະເກີດຈາກກິດຈະກຳຕ່າງໆ; ສ້າງຄວາມເຂັ້ມແຂງໃຫ້ພະນັກງານຂັ້ນສູນກາງ ແລະ ທ້ອງຖິ່ນເພື່ອປ້ອງການ ແລະ ຄວບຄຸມມົນລະພິດ ເປັນຕົ້ນຂີ້ເຫຍື້ອຈາກຄົວເຮືອນ, ນໍ້າເປື້ອນ ແລະ ສິ່ງເສດເຫຼືອຈາກອຸດສາຫະກຳ ໂດຍໂຄສະນາເຜີຍແຜ່ວິທີການຄຸ້ມຄອງຂີ້ເຫຍື້ອຄົວເຮືອນ ແລະ ສ້າງຄວາມສາມາດດ້ານເຕັກນິກໃຫ້ພະນັກງານຫຼັກແຫຼ່ງຢູ່ຂັ້ນສູນກາງ ແລະ ແຂວງ, ດຳເນີນການຝຶກອົບຮົມໃຫ້ປະຊາ ຊົນກ່ຽວກັບການຖິ້ມຂີ້ເຫຍື້ອ, ການກຳຈັດຂີ້ເຫຍື້ອ; ສະໜັບສະໜູນການຕິດຕາມກວດກາການຈັດ ຕັ້ງປະຕິບັດແຜນຄຸ້ມຄອງສິ່ງແວດລ້ອມຂອງໂຄງການຕ່າງໆ ພ້ອມທັງສ້າງຖານຂໍ້ມູນກ່ຽວກັບການອອກໃບຢັ້ງຢືນດ້ານສິ່ງແວດລ້ອມ ແລະ ການຕິດຕາມກວດກາດ້ານສິ່ງແວດ້ລອມ;

(iv) ສະໜອງທຶນໃຫ້ແກ່ ສະຖາບັນຄົ້ນຄ້ວາ ແລະ ສະຖິຕິ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ສຄຊສ) ເພື່ອສ້າງຄວາມເຂັ້ມແຂງໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນການຕິດຕາມວິໄຈຄຸນນະພາບອາກາດ ແລະ ສຽງ, ການນຳໃຊ້ຊັບພະຍາກອນທີ່ມີປະສິດທິຜົນ ແລະ ການຖ່າຍທອດເຕັກໂນໂລຊີທີ່ເໝາະສົມໃນການຄຸ້ມຄອງສິ່ງເສດເຫລືອ ສຳລັບ ວິສາຫະກິດຂະໜາດກາງ ແລະ ຂະໜາດນ້ອຍ ໂດຍສະເພາະແມ່ນໄດ້ຕິດຕັ້ງສະຖານີການວັດແທດຄຸນນະພາບອາກາດໃນ 04 ແຂວງພາກເໜືອ ແລະ ພາກກາງ. ນອກນັ້ນ ກໍ່ສືບຕໍ່ເກັບກຳຂໍ້ມູນແລະເຜີຍແຜ່ບົດລາຍງານຄຸນນະພາບອາກາດ ແລະ ນໍ້າ ໃນເວັບໄຊຂອງ ສຄຊສ ແລະ ລົງຊຸກຍູ້ຕິດຕາມແນະນຳບັນດາວິສະຫະກິດ ຕາມແຜນດຳເນີນງານຂອງ ສຄຊສ;

(v) ສ້າງຄວາມເຂັ້ມແຂງໃຫ້ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ດ້ານການຄຸ້ມຄອງການສຶກສາເບື້ອງຕົ້ນຜົນກະທົບຕໍ່ສິ່ງແວດລ້ອມ (IEE) ແລະ ການຕິດຕາມຜົນຂອງກະທົບຂອງກິດຈະການ ການພັດທະນາທ້ອງຖິ່ນ ໃນ 7 ແຂວງ ( ແຂວງ ຫລວງພະບາງ, ຊຽງຂວາງ, ຫົວພັນ, ວຽງຈັນ, ບໍລິຄຳໄຊ, ຄຳມ່ວນ ແລະ ສະຫວັນນະເຂດ);

(vi) ສະໜັບສະໜູນການຈັດຕັ້ງປະຕິບັດ ຄຳຂວັນ “ສປປ ລາວ ຂຽວ ສະອາດ ງາມຕາ” ໂດຍສ້າງມາດຕະຖານແຫ່ງຊາດ ສຳລັບການສົ່ງເສີມການພັດທະນາຕົວເມືອງທີ່ມີຄວາມຍືນຍົງທາງດ້ານສິ່ງແວດລ້ອມ (ການສົ່ງເສີມຄຸນນະພາບສິ່ງແວດລ້ອມຕົວເມືອງ); ສະໜັບສະໜູນທຶນໃຫ້ ກົມສິ່ງແວດລ້ອມ, ກຊສ ໃນການສ້າງ ແລະ ປັບປຸງຫຼັກສູດການສຶກສາສິ່ງແວດລ້ອມແຫ່ງຊາດ ເລີ່ມແຕ່ ອະນຸບານ 3 ແລະ ປະຖົມ ພ້ອມທັງປຸກຈິດສຳນຶກ ດ້ານສິ່ງແວດລ້ອມໂດຍຜ່ານກິດຈະກຳສາທິດໃຫ້ບາງໂຮງຮຽນຢູ່ນະຄອນຫຼວງວຽງຈັນກ່ຽວກັບການຈັດການຂີ້ເຫຍື້ອຢ່າງຖືກຕ້ອງ. ນອກນັ້ນ, ຍັງໄດ້ສົ່ງເສີມກິດຈະກຳການສະເຫຼີມສະຫຼອງວັນສິ່ງແວດລ້ອມ, ວັນປູກຕົ້ນໄມ້ແຫ່ງຊາດ ແລະ ສ້າງເຄື່ອງມືໂຄສະນາ ແລະ ສື່ສິ່ງພິມຕ່າງໆ ພ້ອມທັງໂຄສະນາຜ່ານສື່ຕ່າງໆ;

(vii) ສະໜອງທຶນໃຫ້ ມະຫາວິທະຍາໄລແຫ່ງຊາດ ໃນການພັດທະນາຫຼັກສູດການສຶກສາດ້ານສິ່ງແວດລ້ອມ ແລະ ການຈັດສັນຍົກຍ້າຍປະຊາຊົນ ຂັ້ນປະລິນຍາຕີ ແລະ ປະລິນຍາໂທ ພ້ອມທັງໃຫ້ທຶນການສຶກສາແກ່ນັກສຶກສາ ແລະ ພະນັກງານເພື່ອຍົກລະດັບດ້ານສິ່ງແວດລ້ອມ ແລະ ປ່າໄມ້ ໃນຂັ້ນປະລິນຍາຕີ ແລະ ປະລິນຍາເອກ; ໃຫ້ທຶນແກ່ຄູ ແລະ ອາຈານ ແລະ ນັກສຶກສາ ເພື່ອຄົ້ນຄ້ວາສຶກສາວັດຕະນະກຳໃໝ່ ລວມທັງການປະເມີນການຈ່າຍຄ່າບໍລິການລະບົບນິເວດ ແລະ ການຂຶ້ນທະບຽນຊັບພະຍາກອນທຳມະຊາດທີ່ໄດ້ທົດລອງຢູ່ປ່າສະຫງວນພູຈອມວອຍ ແຂວງບໍລິຄຳໄຊ;

(viii) ສະໜອງທຶນໃຫ້ແກ່ ກົມປ່າໄມ້ ແລະ ພະແນກກະສິກຳ ແລະ ປ່າໄມ້ ໃນແຂວງເປົ້າໝາຍ ເພື່ອປັບປຸງນະໂຍບາຍ, ຍຸດທະສາດ ແລະ ນິຕິກຳ ດ້ານປ່າໄມ້ ໂດຍສະເພາະ ຍຸດທະສາດ ດ້ານປ່າໄມ້ ຮອດປີ 2020 ເພື່ອເພີ່ມທະວີການເອົາໃຈໃສ່ ກ່ຽວກັບ ກົນໄກທີ່ເໝາະສົມ ໃນການຄຸ້ມຄອງປ່າໄມ້ຊຸມຊົນ, ການຍືນຍົງ ແລະ ການກວດກາປ່າໄມ້, ອຳນວຍຄວາມສະດວກ ແລະ ຮັບປະກັນການຈັດຕັ້ງປະຕິບັດນະໂຍບາຍ ດ້ານປ່າໄມ້, ນະໂຍບາຍ ແລະ ຍຸດທະສາດອື່ນໆ ທີ່ກ່ຽວຂ້ອງໃຫ້ມີປະສິດທິຜົນ ແນໃສ່ເຮັດໃຫ້ການພັດທະນາ ໄປຕາມທິດສີຂຽວ ແລະ ຍືນຍົງ;

(ix) ສະໜອງທຶນໃຫ້ແກ່ ກົມປ່າໄມ້ ແລະ ກົມກວດກາປ່າໄມ້ ເພື່ອພັດທະນາຖານຂໍ້ມູນ, ສ້າງລະບົບສະຖິຕິ, ຂຶ້ນລະຫັດຂໍ້ມູນ, ວິໄຈ ແລະ ສ້າງເຄືອຄ່າຍ ໃນການເຜີຍ ແຜ່ຂ່າວສານ ເພື່ອສະໜອງຂໍ້ມູນ ກ່ຽວກັບບັນຫາສິ່ງແວດລ້ອມ ແລະ ສັງຄົມ, ຊີວະນາໆພັນ, ປ່າໄມ້, ອ່າງນ້ຳ, ເຂດປ້ອງກັນ ແລະ ການຄ້າຂາຍສັດປ່າ ຜິດກົດໝາຍ;

(x) ສະໜອງທຶນໃຫ້ແກ່ ກົມປ່າໄມ້ ເພື່ອສ້າງຖານຂໍ້ມູນ “ໂຄງການລົງທຶນ” ທີ່ມີຜົນກະທົບຕໍ່ປ່າສະຫງວນເພື່ອຕິດຕາມ (1) ຊອກຫາທາງເລືອກດ້ານການຈັດຕັ້ງ ເພື່ອປັບປຸງການຄຸ້ມຄອງປ່າສະຫງວນໃນທົ່ວໄປເທດ, (2) ສ້າງແຜນແມ່ບົດສຳລັບປ່າສະຫງວນຂອງປະເທດ, (3) ອຳນວຍຄວາມສະດວກໃນການແຮກສ່ຽວກັບປ່າສະຫງວນແຫ່ງຊາດອິນເດຍ ຫຼື ເນປານ, (4) ຟື້ນຟູການຈັດຕັ້ງປະຕິບັດບົດບັນທຶກຊ່ວຍຈຳກັບ ສສ ຫວຽດນາມ ກ່ຽວກັບປ່າສະຫງວນຂ້າມຊາຍແດນ ແລະ ກະກຽມບົດແນະນຳສຳລັບການຮ່ວມມືຂອງລາວ ກັບອົງການປ່າສະຫງວນ ສສ ຫວຽດນາມ, (5) ສ້າງບົດແນະນຳກ່ຽວກັບການມີສ່ວນຮ່ວມຂອງຊຸມຊົນ ອ້ອມແອ້ມປ່າສະຫງວນ, ປັບປຸງພື້ນຖານໂຄງລ່າງໃນປ່າສະຫງວນ, ຕິດຕາມແບບຊີວະສາດ ແລະ ກຳນົດມາດຕະຖານໃນການສ້າງແຜນທີ່, ແລະ (6) ສະໜັບສະໜູນແຜນຄຸ້ມຄອງ ເສືອໂຄ່ງ ຢູ່ ສປປລາວ.

### 2/ ຮ່ວງທຶນດ້ານຊີວະນາໆພັນ (CBI)

ການສະໜອງທຶນ ໃນຮ່ວງທຶນ CBI ແມ່ນໄດ້ໃຫ້ການສະໜັບສະໜູນພາກສ່ວນຕ່າງໆ ຂັ້ນສູນກາງ, ແຂວງ ແລະ ເມືອງ ຈຳນວນ 19 ໂຄງການ ເປັນມູນຄ່າທັງໝົດ 12 ລ້ານໂດລາສະຫະລັດ ຫຼື 96.6 ຕື້ກີບ (ເກົ້າສິບຫົກຕື້ຫົກຮ້ອຍລ້ານກີບ) ເພື່ອສ້າງຄວາມເຂັ້ມແຂງ ໃນການຄຸ້ມຄອງປ່າໄມ້ ແບບມີປະສິດທິຜົນ ໂດຍຕິດພັນກັບການວາງແຜນການນຳໃຊ້ທີ່ດິນ ທີ່ເປັນມິດກັບສິ່ງແວດລ້ອມ ໄປຕາມບູລິມະສິດແຫ່ງຊາດ ດ້ານອ່າງແມ່ນ້ຳ/ອ່າງນ້ຳ ທີ່ສຳຄັນຕົ້ນຕໍ ສຳລັບ ການພັດທະນາໄຟຟ້ານ້ຳຕົກແບບຍືນຍົງ ແລະ ການພັດທະນາກະສິກຳແບບອຸດສະຫະກຳ; ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງແບບມີປະສິດທິຜົນ ແລະ ຍົກຂີດຄວາມສາມາດ ໃຫ້ແກ່ປ່າສະຫງວນທີ່ຖືກຄັດເລືອກຕາມເງື່ອນໄຂທີ່ມີຖິ່ນຢູ່ອາໄສອັນອຸດົມສົມບູນຂອງແຫຼ່ງຊີວະນາໆພັນທີ່ມີຄຸນຄ່າສຳຄັນ ແລະ ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງ-ບໍລິຫານ, ການບັງຄັບໃຊ້ກົດໝາຍ ແລະ ຊຸກຍູ້ຂະບວນການ ຕ້ານການຂຸດຄົ້ນ

ໄມ້ ແລະ ຄ້າຂາຍສັດປ່າ ແບບຜິດກົດໝາຍ. ຮ່ວງທຶນ CBI ໄດ້ສະໜອງທຶນໃນການຈັດຕັ້ງປະຕິບັດວຽກງານດັ່ງນີ້:

(i) ສະໜອງທຶນໃຫ້ແກ່ ພະແນກກະສິກຳ ແລະ ປ່າໄມ້ ໃນການຄຸ້ມຄອງປ່າສະຫງວນແຫ່ງຊາດ, ອຸທິຍານແຫ່ງຊາດນາກາຍ-ນ້ຳເທີນ, ອຸທິຍານແຫ່ງຊາດນ້ຳແອດ-ພູເລີຍ ແລະ ວຽກງານບັງຄັບໃຊ້ກົດໝາຍສັດນ້ຳ-ສັດປ່າໃນແຂວງທີ່ເຂົ້າຮ່ວມໂຄງການ ຄສລ2 (ແຂວງວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ຫລວງພະບາງ, ຊຽງຂວາງ ແລະ ຫົວພັນ), ສ້າງ ແລະ ຈັດຕັ້ງປະຕິບັດກົນໄກລາດຕະເວນ, ການຕິດຕາມຊີວະນາໆພັນ, ການແບ່ງເຂດຄຸ້ມຄອງ, ການສ້າງຈິດສຳນຶກ, ການເຂົ້າຮ່ວມຂອງຊຸມຊົນ, ການປັບປຸງຊີວິດການເປັນຢູ່, ການຈັດຕັ້ງປະຕິບັດການຮ່ວມມືຂ້າມຊາຍແດນ ຜ່ານກົນໄກການແຮກສ່ຽວ ແລະ ສ້າງຄວາມເຂັ້ມແຂງໃຫ້ອົງການປົກຄອງແຂວງ, ເມືອງ ແລະ ຄູ່ຮ່ວມງານອື່ນໆ ເພື່ອປະສານງານ ແລະ ສະໜັບສະໜູນ ການຄຸ້ມຄອງປ່າສະຫງວນ ແລະ ການຄວບຄຸມການຄ້າສັດປ່າ ແລະ ໄມ້ຜິດກົດໝາຍ;

(ii) ສະໜອງທຶນໃຫ້ແກ່ ກົມກວດກາປ່າໄມ້, ກົມຕຳຫລວດສິ່ງແວດລ້ອມ ແລະ ກົມພາສີ ເພື່ອສ້າງຄວາມສາມາດໃນລະດັບຊາດໃນການບັງຄັບໃຊ້ກົດໝາຍສັດປ່າ: (i) ສ້າງ ແລະ ຈັດຕັ້ງປະຕິບັດຂັ້ນຕອນຕອບໂຕ້ການຄ້າສັດປ່າຜິດກົດໝາຍ; (ii) ຝຶກອົບຮົມ ແລະ ປະກອບອຸປະກອນໃຫ້ເຄືອຂ່າຍບັງຄັບໃຊ້ກົດໝາຍໃນການເຄື່ອນໄຫວວຽກງານ; (iii) ຟື້ນຟູສາຍພົວພັນລະຫວ່າງເຄືອຂ່າຍບັງຄັບໃຊ້ກົດໝາຍ-ອາຊຽນ ແລະ ເຄືອຂ່າຍບັງຄັບໃຊ້ກົດໝາຍລາວ ລວມທັງ ອົງການສາກົນອື່ນໆທີ່ຫ້າວຫັນໃນການຄວບຄຸມການລັກລອບຄ້າສັດປ່າ; ແລະ (iv) ຮ່ວມມືກັບ ມະຫາວິທະຍາໄລແຫ່ງຊາດ ເພື່ອຝຶກອົບຮົມພະນັກງານກົມກວດກາປ່າໄມ້, ຂະແໜງກວດກາປ່າໄມ້ ແລະ ຄູ່ຮ່ວມງານໃນການສືບສວນ, ຕັດສິນ, ຈັດການສັດປ່າ, ສາຍພົວພັນກັບສື່, ຕິດຕາມແລະບັງຄັບໃຊ້ຢູ່ເດີ່ນບິນ, ສິນທິສັນຍາວ່າດ້ວຍການຄ້າຂາຍຊະນິດພັນທີ່ຖືກໄພຂົ່ມຂູ່ໃນສາກົນ ແລະ ຂັ້ນຕອນພາສີ.

(iii) ສະໜອງທຶນໃຫ້ແກ່ ມະຫາວິທະຍາໄລແຫ່ງຊາດ ເພື່ອ: (i) ຂະຫຍາຍການຈັດຕັ້ງປະຕິບັດຫຼັກສູດການບັງຄັບໃຊ້ກົດໝາຍສັດນ້ຳ-ສັດປ່າ, (ii) ໃຫ້ທຶນສຶກສາຂັ້ນປະລິນຍາໂທໃນການຄຸ້ມຄອງປ່າສະຫງວນຫຼືວິທະຍາສາດສັດປ່າ, (iii) ສ້າງສາຍພົວພັນກັບສະຖາບັນສັດປ່າອິນເດຍ, (iv) ສ້າງຫຼັກສູດປະລິນຍາຕີໃນເລື່ອງປ່າສະຫງວນ ແລະ ວິທະຍາສາດສັດປ່າ, (v) ໃຫ້ທຶນສຶກສາສຳລັບ "ການອະນຸລັກ" ຢູ່ມະຫາວິທະຍາໄລໃນອາຊີໃຕ້ ແລະ ອາຊີຕາເວັນອອກສ່ຽງໃຕ້, (vi) ຊອກຫາອາຈານຈາກຫວຽດນາມ ແລະ ປະເທດອື່ນໆໃນພາກພື້ນມາສິດສອນເປັນຄັ້ງຄາວ.

| ຕາຕະລາງ 1.3 ການຈັດສັນງົບປະມານສຳລັບ ຄສລ 2 ແຜນປີ 2016-2020 (ລ້ານໂດລາສະຫະລັດ) | | | | | | | | |
|---|---|---|---|---|---|---|---|---|
| ຮ່ວງທຶນ | ຈຳນວນໂຄງການຍ່ອຍ | 2014-2017 | 2018 | 2019 | 2020 | 2021 | 2022 | Total |
| ອົງປະກອບ 1 | 28 | 9.91 | 4.21 | 2.54 | 0.57 | 0.57 | 0.29 | **18.09** |

| | | | | | | | | |
|---|---|---|---|---|---|---|---|---|
| (ນະໂຍບາຍ) | | | | | | | | |
| ອົງປະກອບ 2 (ຊີວະນາໆພັນ) | 20 | 4.18 | 3.18 | 2.99 | 1.18 | 1.18 | 0.59 | 13.30 |
| ອົງປະກອບ 3 (ບໍລິຫານ) | | 2.22 | 0.88 | 0.60 | 0.46 | 0.35 | 0.17 | 4.68 |
| ງົບປະມານ ກະກຽມ ໂຄງການ | | 0.77 | | | | | | 0.77 |
| ຂາດດຸນອັດຕາ ແລກປ່ຽນ | | | | | 1.60 | 0.39 | | 1.99 |
| **ລວມທັງໝົດ** | | 7.08 | 8.27 | 6.13 | 3.81 | 2.49 | 1.05 | 38.83 |

| ຕາຕະລາງ 1.4 ລາຍຈ່າຍ ສໍາລັບ ຄສລ2 (ໂດລາສະຫະລັດ, * ປະມານ) | | | | | | | | |
|---|---|---|---|---|---|---|---|---|
| ຮ່ວງທຶນ | ຈໍານວນໂຄງ ການ | 2014-2017 | 2018 | 2019 | 2020 | 2021* | 2022* | Total |
| ອົງປະກອບ 1 (ນະໂຍບາຍ) | 28 | 5.72 | 3.69 | 3.8 | 3.28 | 2.62 | | 19.11 |
| ອົງປະກອບ 2 (ຊີວະນາໆ ພັນ) | 20 | 2.09 | 2.11 | 4.32 | 2.94 | 0.69 | | 12.15 |
| ອົງປະກອບ 3 (ບໍລິຫານ) | | 1.67 | 0.45 | 0.55 | 0.4 | 1.59 | 0.48 | 5.14 |
| ງົບປະມານ ກະກຽມ ໂຄງການ | | 0.75 | | | | | | 0.75 |
| ຂາດດຸນອັດຕາ ແລກປ່ຽນ | | | | | 1.31 | 0.31 | 0.06 | 1.68 |
| **ລວມທັງໝົດ** | | 10.23 | 6.25 | 8.67 | 7.93 | 5.21 | 0.54 | 38.83 |

| ຕາຕະລາງ 1.5 ການຈັດສັນງົບປະມານ ແລະ ການເບີກຈ່າຍສຳລັບໂຄງການ UNDP/GEF | | | | | |
|---|---|---|---|---|---|
| | 2018 | 2019 | 2020 | 2021 | ໝາຍເຫດ |
| ການຈັດສັນ | 0.1 | 0.5 | 0.3 | 0.3 | |
| ລາຍຈ່າຍ | - | 0.58 | 0.26 | 0.64 | |

### *1.3.6 ການຮ່ວມມື ແລະ ຫຸ້ນສ່ວນຄູ່ຮ່ວມງານ*

ແຜນດຳເນີນງານ 2018-2020 ແນໃສ່ສ້າງຄວາມເຂັ້ມແຂງ ແລະ ເປີດກ້ວາງການຮ່ວມມື, ການສ້າງເຄືອຂ່າຍ ແລະ ຫຸ້ນສ່ວນຄູ່ຮ່ວມງານກັບຂະແໜງການຕ່າງໆ ລວມທັງພາກລັດ ແລະ ເອກະຊົນພາຍໃນປະເທດ, ອະນຸພາກພື້ນ, ພາກພື້ນ ແລະ ສາກົນ. ນັບແຕ່ປີ 2016 ເປັນຕົ້ນມາ ການຈັດຕັ້ງປະຕິບັດໂຄງການທີ່ໄດ້ຮັບທຶນ ຈາກ ກປສ, ຄສລ 2 ແລະ ແຫຼ່ງທຶນອື່ນໆ ໄດ້ສ້າງສາຍພົວພັນ ລະຫວ່າງ ຫກປສ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງໃນຂັ້ນສູນກາງ ແລະ ທ້ອງຖິ່ນ, ອົງການຈັດຕັ້ງມະຫາຊົນ, ສະຖາບັນຄົ້ນຄ້ວາ ແລະ ຄະນະພາກວິຊາຕ່າງໆ ຂອງມະຫາວິທະຍາໄລແຫ່ງຊາດ. ໃນໄລຍະການຈັດຕັ້ງປະຕິບັດ ຄສລ2 ພາຍຫຼັງການປະເມີນໄລຍະກາງ ໃນປີ 2017, ຫກປສ ໄດ້ເຫັນດີເປັນເອກະພາບກັບທະນາຄານໂລກ ຊຸກຍູ້ການແລກປ່ຽນປະສົບການໃນການຈັດຕັ້ງປະຕິບັດໂຄງການ ແລະ ປັບປຸງການປະສານງານ, ການຮ່ວມມື ກັບ ບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງ ໂດຍຈັດແບ່ງກຸ່ມໂຄງການທີ່ໄດ້ຮັບທຶນຈາກ ຄສລ 2 ອອກເປັນ 4 ກຸ່ມຄື: ກຸ່ມການຄຸ້ມຄອງປ່າສະຫງວນ, ກຸ່ມການບັງຄັບໃຊ້ກົດໝາຍສັດປ່າ, ກຸ່ມການວາງແຜນສິ່ງແວດລ້ອມ ແລະ ກຸ່ມການສ້າງຄວາມເຂັ້ມແຂງຝຶກອົບຮົມໃຫ້ພະນັກງານ. ນອກນັ້ນ, ຫກປສ ໄດ້ເຮັດບົດບາດຢ່າງຕັ້ງໜ້າໃນການຮ່ວມມື ແລະ ຫຸ້ນສ່ວນຄູ່ຮ່ວມງານ ກັບ ຂະແໜງການກ່ຽວຂ້ອງຂອງພາກລັດ ແລະ ຍັງໄດ້ເພີ່ມທະວີການຮ່ວມມືກັບອົງການຈັດຕັ້ງສາກົນເຊັ່ນ: WB, UNDP, GIZ, UNEP, GEF, GCF ແລະ ອື່ນໆ ໂດຍສະເພາະ ໄດ້ເພີ້ມການຮ່ວມມືກັບກອງທຶນ GEF ແລະ ອົງການ GIZ ເພື່ອສ້າງຄວາມເຂັ້ມແຂວງໃຫ້ ຫກປສ ກາຍເປັນອົງກອນແຫ່ງຊາດທີ່ສາມາດເຂົ້າຫາແຫຼ່ງທຶນສາກົນໂດຍກົງ ຂອງ ກອງທຶນ GCF ຊຶ່ງໄດ້ຈັດຕັ້ງປະຕິບັດໜ້າວຽກສຳຄັນ ເຊັ່ນ: (ກ) ສຳເລັດກອງປະຊຸມປຶກສາຫາລືລະດັບຊາດ ກ່ຽວກັບວຽກງານຈຸດສຸມສຳລັບ ກອງທຶນສິ່ງແວດລ້ອມໂລກ (GEF) ແລະ ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ (GCF) ຄັ້ງທຳອິດ ໃນເດືອນກຸມພາ 2019 ທີ່ລາວເປັນປະເທດທຳອິດທີ່ຈັດກອງປະຊຸມລັກສະນະດັ່ງກ່າວ ແລະ ເຂົ້າຮ່ວມກອງປະຊຸມຕິດຕາມ; (ຂ) ສຳເລັດກອງປະຊຸມແລກປ່ຽນບົດຮຽນໃນການສະໝັກເປັນອົງກອນທີ່ສາມາດເຂົ້າຫາແຫຼ່ງທຶນໄດ້ໂດຍກົງລະດັບພາກພື້ນສຳລັບກອງທຶນ GCF ໃນເດືອນສິງຫາ 2019; (ຄ) ໄດ້ປະສານງານ ແລະ ເຮັດວຽກຮ່ວມກັບອົງການ GIZ ເພື່ອສ້າງຄວາມເຂັ້ມແຂງໃຫ້ ຫກປສ ໃນການກະກຽມຄວາມພ້ອມ ເພື່ອກາຍເປັນອົງກອນທີ່ສາມາດເຂົ້າຫາແຫຼ່ງທຶນໄດ້ໂດຍກົງຂອງກອງທຶນ GCF ໂດຍໄດ້ຮັບທຶນຊ່ວຍເຫຼືອດ້ານວິຊາ

ການ (ໄລຍະ 1) ຜ່ານອົງການ GIZ. ນອກນັ້ນ ກປສ ກໍໄດ້ປະກອບສ່ວນເຂົ້າໃນການກະກຽມໂຄງການ "ສ້າງຄວາມເຂັ້ມແຂງໃນວຽກງານປ່າໄມ້, ຄຸ້ມຄອງປ່າໄມ້ແບບພູມມີທັດ ແລະ ສົ່ງເສີມຊີວິດການເປັນຢູ່ (I-GFLL)" ຊຶ່ງໂຄງການດັ່ງກ່າວໄດ້ມອບໃຫ້ ກປສ ເປັນຜູ້ຄຸ້ມຄອງດ້ານການເງິນ ແລະ ຈັດຊື້-ຈັດຈ້າງ; ໄດ້ຮ່ວມມືກັບອົງການ UNEP ເພື່ອຈັດຕັ້ງປະຕິບັດໂຄງການສ້າງຄວາມທົນທານຂອງປະຊາກອນໃນຕົວເມືອງ ເພື່ອປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໂດຍການຄຸ້ມຄອງ ແລະ ນຳໃຊ້ທ່າແຮງຂອງລະບົບນິເວດ ຊຶ່ງໂຄງການດັ່ງກ່າວໄດ້ມອບໃຫ້ ກປສ ເປັນຜູ້ຄຸ້ມຄອງດ້ານການເງິນ ແລະ ຈັດຊື້-ຈັດຈ້າງ.

ນອກຈາກນັ້ນ, ກປສ ໄດ້ຈັດກອງປະຊຸມແລກປ່ຽນປະສົບການ ແລະ ບົດຮຽນ ໃນການຈັດຕັ້ງປະຕິບັດໂຄງການ ຂອງ ຄສລ2 ໂດຍສະເພາະ ດ້ານການຮ່ວມມື ແລະ ການຫັນເປັນຄູ່ຮ່ວມງານ (C&P) ພ້ອມທັງ ເຜີຍແຜ່ວິໄສທັດ 2030, ແຜນດຳເນີນງານ 2021-2025 ຂອງ ກປສ ແລະ ຂໍ້ມູນກ່ຽວກັບໂຄງການໃໝ່ທີ່ມີທ່າແຮງ ແລະ ແຫຼ່ງທຶນ ຂອງ ກປສ ໂດຍໄດ້ເຊີນຜູ້ທີ່ໄດ້ຮັບຜົນປະໂຫຍດທີ່ສຳຄັນຂອງ ຄສລ2 ໃນຂັ້ນສູນກາງ ແລະ ທ້ອງຖິ່ນ ພ້ອມທັງພາກສ່ວນທີ່ສົນໃຈ ປະມານ 100 ຄົນ ເຂົ້າຮ່ວມ ຊຶ່ງຜູ້ເຂົ້າຮ່ວມປະຊຸມໄດ້ສະແດງຄວາມເຕັມໃຈ ທີ່ຈະເສີມຂະຫຍາຍການຮ່ວມມື ແລະ ການຫັນເປັນຄູ່ຮ່ວມງານ ກັບ ກປສ.

ເພື່ອຍົກສູງປະສິດທິຜົນໃນການຮ່ວມມື ແລະ ການເປັນຄູ່ຮ່ວມງານກັບຜູ້ມີສ່ວນຮ່ວມທີ່ສຳຄັນ, ກປສ ໄດ້ສະໜັບສະໜູນການຈັດຕັ້ງຜັນຂະຫຍາຍບົດບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງ ກຊສ ແລະ ມຊ ໂດຍໄດ້ສະໜອງທຶນ ຜ່ານ ຄສລ 2 ໃຫ້ບັນດາ ກົມກອງພາຍໃນ ກຊສ ແລະ ຄະນະພາກວິຊາ ຂອງ ມຊ ເພື່ອຈັດຕັ້ງປະຕິບັດວຽກງານການສຶກສາ, ຄົ້ນຄ້ວາ ແລະ ສ້າງຄວາມເຂັ້ມແຂງໃຫ້ສະຖາບັນການສຶກສາກ່ຽວກັບວຽກງານຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

### 1.3.7 ດ້ານການສື່ສານ

ໃນ 5 ປີ ຜ່ານມາ (2016- 2020) ກປສ ໄດ້ດຳເນີນວຽກງານດ້ານການສື່ສານຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ໃນການປຸກຈິດສຳນຶກ ແລະ ໂຄສະນາເຜີຍແຜ່ບັນດານິຕິກຳ ແລະ ເອກະສານທີ່ກ່ຽວຂ້ອງກັບ ວຽກງານຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃຫ້ທົ່ວສັງຄົມມີຄວາມຮັບຮູ້, ເຂົ້າໃຈ ແລະ ມີສ່ວນຮ່ວມໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ແນໃສ່ປະກອບສ່ວນເຂົ້າໃສ່ການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໃຫ້ໄປຕາມທິດສີຂຽວ ແລະ ຍືນຍົງ ໂດຍຜ່ານສື່ຕ່າງໆເປັນຕົ້ນ: ໜັງສືພິມ, ວິທະຍຸ, ໂທລະພາບ, ເວັບໄຊ ແລະ ສື່ສັງຄົມອອນລາຍ.

ໄດ້ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ຈັດກິດຈະກຳປຸກຈິດສຳນຶກ ກ່ຽວກັບ ການປົກປັກຮັກສາສິ່ງແວດລ້ອມ ໃຫ້ນ້ອງນັກຮຽນ, ເຂົ້າຮ່ວມງານວາງສະແດງຜົນງານ ຂອງ ກປສ ແລະ ດຳເນີນການໂຄສະນາເຜີຍແຜ່ເນື່ອງໃນວັນສຳຄັນຕ່າງໆເຊັ່ນ: ວັນສິ່ງແວດລ້ອມໂລກ, ວັນສັດປ່າ, ວັນນ້ຳໂລກ ແລະ ອື່ນໆ, ຊຶ່ງໄດ້ຈັດຕັ້ງປະຕິບັດດັ່ງນີ້:

- ປັບປຸງ ແລະ ສ້າງສື່ສິ່ງພິມຕ່າງໆ ເພື່ອເຜີຍແຜ່ຜົນງານຂອງ ກປສ ແລະ ຂໍ້ມູນຂ່າວສານກ່ຽວກັບການປົກປັກຮັກສາສິ່ງແວດລ້ອມໃນວັນສຳຄັນຕ່າງໆ ເຊັ່ນ: ສ້າງໂປສເຕີ້, ຜະລິດຖົງຜ້າ ແລະ ປ້າຍຫ້ອຍທາງ ເພື່ອໂຄສະນາເຜີຍແຜ່ ວັນປູກຕົ້ນໄມ້ແຫ່ງຊາດ, ວັນສິ່ງແວດລ້ອມແຫ່ງຊາດ ແລະ ວັນສິ່ງແວດລ້ອມໂລກ. ສາຍວີດີໂອສັ້ນ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ຜ່ານ ຈໍແອວອີດີ ທີ່ປະຕູໄຊ 90 ຄັ້ງ (ແຕ່ເດືອນ

ມັງກອນ ຫາ ມີນາ ປີ 2020), ລົງໂຄສະນາຜ່ານ ວິທະຍຸ 3 ຄື້ນ ຈຳນວນ 2,338 ຄັ້ງ ໃນການປູກຈິດສຳນຶກກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ພ້ອມນັ້ນ ຍັງໄດ້ເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບການຈັດຕັ້ງປະຕິບັດວຽກງານ ຂອງ ກປສ ແລະ ໂຄສະນາວັນສຳຄັນຕ່າງໆກ່ຽວກັບວຽກງານສິ່ງແວດລ້ອມ ຜ່ານວາລະສານ 4 ສະບັບ, ໜັງສືພິມ ຈຳນວນ 180 ຄັ້ງ, ໂທລະພາບ 120 ຄັ້ງ, ເວັບໄຊ ຈຳນວນ 213 ຄັ້ງ ແລະ ເຟດບຸກ ຈຳນວນ 246 ຄັ້ງ;

- ຈັດກິດຈະກຳໂຄສະນາເຜີຍແຜ່ ແລະ ປຸກຈິດສຳນຶກ ກ່ຽວກັບການປົກປັກຮັກສາສິ່ງແວດແລດລ້ອມຮ່ວມກັບພາກສ່ວນກ່ຽວຂ້ອງ ທັງໝົດ 14 ຄັ້ງ ຄື:

  (1) ຈັດງານວາງສະແດງຜົນງານຂອງ ກປສ ໃນກອງປະຊຸມຜູ້ມີສ່ວນຮ່ວມ ຄັ້ງວັນທີ 19 ຕຸລາ 2016;

  (2) ກິດຈະກຳສິ່ງເສີມການອະນຸລັດສັດປ່າ ເພື່ອສະເຫຼີມສະຫຼອງວັນສັດປ່າໂລກທີ່ ໂຮງຮຽນປະຖົມສົມບູນ ຈອມເພັດ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ ວັນທີ 03 ມີນາ 2017;

  (3) ວາງສະແດງຜົນງານຂອງ ກປສ ໃນງານສະເຫຼີມສະຫຼອງວັນສິ່ງແວດລ້ອມໂລກ ຮ່ວມກັບຄະນະວິທະຍາສາດທຳມະຊາດ, ມະຫາວິທະຍາໄລ ແຫ່ງຊາດ, ນະຄອນຫຼວງວຽງຈັນ ວັນທີ 05 ມິຖຸນາ 2017;

  (4) ວາງສະແດງຜົນງານຂອງ ກປສ ເພື່ອໂຄສະນາວຽກງານ ແລະ ກິດຈະກຳ ຂອງ ກປສ ເນື່ອງໃນວັນສິ່ງງແວດລ້ອມໂລກ ແລະ ແຫ່ງຊາດໂດຍຜ່ານເຄື່ອງມືໂຄສະນາຕ່າງໆຄື: ໂປດສເຕີ້, ແຜ່ນພັບ ວາລະສານ, ປື້ມບົດລາຍງານ, ປື້ມຄູ່ມື, ແລະ ອື່ນໆ ຄັ້ງວັນທີ 2 ມິຖຸນາ 2018;

  (5) ຈັດວາງງານສະແດງຜົນງານ ຂອງ ກປສ ທີ່ຄະນະວິທະຍາສາດ ສິ່ງແວດລ້ອມ, ມະຫາວິທະຍາໄລ ແຫ່ງຊາດ ຄັ້ງວັນທີ 5 ມິຖຸນາ 2018;

  (6) ຈັດກິດຈະກຳປູກຈິດສຳນຶກໃນການປົກປັກຮັກສາສິ່ງແວດລ້ອມ ທີ່ໂຮງຮຽນປະຖົມສົມບູນ ຮ່ອງໄກ່ແກ້ວ, ຄັ້ງວັນທີ 30 ພະຈິກ 2018;

  (7) ຈັດກິດຈະກຳປູກຈິດສຳນຶກໃນການປົກປັກຮັກສາສິ່ງແວດລ້ອມ ທີ່ໂຮງຮຽນປະຖົມສົມບູນ ແລະ ມັດທະຍົມຕອນຕົ້ນ ສິນໄຊ, ຄັ້ງວັນທີ 8 ກຸມພາ 2019;

  (8) ຈັດກິດຈະກຳເນື່ອງໃນວັນແມ່ຍິງ ທີ 8 ມີນາ 2019 ຂອງໜ່ວຍແມ່ຍິງ ຫ້ອງການກອງທຶນປົກປັກຮັກສາສິ່ງແລດລ້ອມ ທີ່ໂຮງຮຽນປະຖົມສົມບູນ ແລະ ມັດທະຍົມຕອນຕົ້ນ ສິນໄຊ, ຄັ້ງວັນທີ 21 ມີນາ 2019;

  (9) ງານວາງສະແດງຜົນງານ ກປສ ທີ່ກອງປະຊຸມສະຫຼຸບວຽກງານ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະຈຳປີ 2018 ແລະ ທິດທາງແຜນການ ປະຈຳປີ 2019 ຄັ້ງວັນທີ 4-6 ມີນາ 2019 ທີ່ສູນການຮ່ວມມືສາກົນ ແລະ ການອົບຮົມ (ICTC);

(10) ກິດຈະກຳການເກັບຂີ້ເຫຍື້ອເພື່ອຮັກສາຄວາມສະອາດ ຮ່ວມກັບ 3 ສະຖານີວິທະຍຸ ເພື່ອເປັນການສ້າງຂະບວນການປົກປັກຮັກສາສິ່ງແວດລ້ອມ ທີ່ເດີ່ນພະທາດຫຼວງວຽງຈັນ ຄັ້ງວັນທີ 27 ພຶດສະພາ 2019;

(11) ຈັດກິດຈະກຳປຸກຈິດສຳນຶກການປົກປັກຮັກສາສິ່ງແວດລ້ອມ ໃຫ້ນ້ອງນັກຮຽນທີ່ໂຮງຮຽນມັດທະຍົມຕອນຕົ້ນດອນສະຫວ່າງ, ເມືອງຫາດຊາຍຟອງ, ນະຄອນຫຼວງວຽງຈັນ ຄັ້ງວັນທີ 28 ກຸມພາ 2020;

(12) ຮ່ວມຈັດງານວາງສະແດງຜົນງານຂອງ ກປສ ໃນງານພິທີປະກາດໄຂການຈັດຕັ້ງປະຕິບັດທົດລອງກ່ຽວກັບວຽກງານ ບ້ານຂຽວ ສະອາດ ງາມຕາ ຂອງໂຄງການ ສ້າງຄວາມເຂັ້ມແຂງໃຫ້ແນວລາວສ້າງຊາດ ໃນວັນທີ 21 ກຸມພາ 2020 ທີ່ສູນການຄ້າພາກຊັນ;

(13) ຮ່ວມມືກັບສະຫະພັນແມ່ຍິງ ກຊສ ຈັດກອງປະຊຸມວິທະຍາສາດ ໃນຫົວຂໍ້ "ການສົ່ງເສີມບົດບາດຍິງ-ຊາຍ ໃນວຽກງານປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ" ພ້ອມທັງການໄປທັດສະນະ ປ່າສະຫງວນ, ສວນຜັກປອດສານພິດ ແລະ ທັດຖະກຳ ທີ່ເມືອງປາກງື່ມ, ນະຄອນຫຼວງວຽງຈັນ ໃນວັນທີ 12 ແລະ 14 ພະຈິກ 2020;

(14) ຮ່ວມມືກັບກົມກົມສິ່ງແວດລ້ອມ, ກຊສ ຈັດກິດຈະກຳປຸກຈິດສຳນຶກການປົກປັກຮັກສາສິ່ງແວດລ້ອມ ໃນຫົວຂໍ້: "ການຈັດການຂີ້ເຫຍື້ອ" ທີ່ໂຮງຮຽນປະຖົມສົມບູນອາກາດ ແລະ ໂຮງຮຽນປະຖົມສົມບູນໂພນພະເນົາ, ນະຄອນຫຼວງວຽງຈັນ, ໃນວັນທີ 7-8 ທັນວາ 2020.

- ໄດ້ເຊັນສັນຍາຮ່ວມມືກັບ 2 ພາກສ່ວນ ຄື: (1) ເຊັນບົດບັນທຶກຄວາມເຂົ້າໃຈໃນການຮ່ວມມືການຈັດຕັ້ງປະຕິບັດວຽກງານ ສົ່ງເສີມບົດບາດຍິງ-ຊາຍ ໃນການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລະຫວ່າງ ຫກປສ ແລະ ສະຫະພັນແມ່ຍິງ ກຊສ ຄັ້ງວັນທີ 29 ຕຸລາ 2020; (2) ເຊັນບົດບັນທຶກຄວາມເຂົ້າໃຈການຮ່ວມມື ໃນການສົ່ງເສີມປຸກຈິດສຳນຶກ ແລະ ສ້າງເຄືອຂ່າຍກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ການເຕີບໂຕສີຂຽວ ລະຫວ່າງ ຫກປສ ແລະ ກົມສິ່ງແວດລ້ອມ, ກຊສ ຄັ້ງວັນທີ 11 ພະຈິກ 2020.

## 1.4 ຈຸດດີ, ຈຸດອ່ອນ, ຂໍ້ຄົງຄ້າງ, ສິ່ງທ້າທາຍ, ບົດຮຽນທີ່ຖອດຖອນໄດ້ ແລະ ມາດຕະການແກ້ໄຂ

### 1.4.1 ຈຸດດີ ແລະ ສາຍເຫດທີ່ພາໃຫ້ມີຈຸດດີ

ຜ່ານການຈັດຕັ້ງປະຕິບັດວຽກງານໃນ 5 ປີ ຜ່ານມາ ສາມາດສັງລວມ ຈຸດດີທີ່ພົ້ນເດັ່ນ ດັ່ງນີ້:

1. ກປສ ໄດ້ສ້າງ ແລະ ປັບປຸງນະໂຍບາຍ ແລະ ນິຕິກຳ ທີ່ຈະແຈ້ງ ເຊັ່ນ: ໄດ້ປັບປຸງດຳລັດ ວ່າດ້ວຍກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ລະບຽບຄຸ້ມຄອງ ກປສ ເພື່ອໃຫ້ສອດຄ່ອງກັບນະໂຍບາຍການເຕີບໂຕສີຂຽວ ພ້ອມທັງ ສ້າງບັນດາຄູ່ມືການຄຸ້ມຄອງບໍລິຫານໂຄງການທີ່ໄດ້ປັບປຸງໃຫ້ແທດເໝາະກັບສະພາບຕົວຈິງ ແລະ ຄວາມຕ້ອງການ ເພື່ອຮັບປະກັນປະສິດທິພາບໃນການດຳເນີນງານ ແລະ

ເພີ່ມທະວີຄວາມໂປ່ງໃສໃນການປະຕິບັດວຽກງານ ຂອງ ກປສ ພ້ອມນັ້ນ ກໍ່ໄດ້ປັບໂຄງສ້າງສະພາບໍລິຫານ ແລະ ຄະນະວິຊາການ ກປສ ເພື່ອຮັບປະກັນການຕັດສິນບັນຫາທີ່ມີປະສິດທິຜົນໃນລະດັບສູງ ແລະ ສອດຄ່ອງກັບນະໂຍບາຍຂອງລັດຖະບານ;

2. ໄດ້ປະສານສົມທົບກັບຫຼາຍພາກສ່ວນ ລວມທັງ ຜູ້ໃຫ້ທຶນພາຍໃນ ແລະ ສາກົນ ເພື່ອຮັບປະ ກັນການສະໜັບສະໜູນດ້ານທຶນຮອນ ພ້ອມນັ້ນ ກໍໄດ້ຮຽນຮູ້ ແລະ ສ້າງປະສົບການໃນການເຮັດວຽກກັບສາກົນໃຫ້ສາມາດຕອບສະໜອງເງື່ອນໄຂຂອງສາກົນ ເພື່ອປະກອບສ່ວນໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ໃຫ້ບັນລຸຕາມຄາດໝາຍ ແລະ ຍືນຍົງ;
3. ໄດ້ສ້າງສາຍພົວພັນ ແລະ ຮ່ວມມືກັບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ລວມທັງ ມະຫາວິທະຍາໄລແຫ່ງຊາດ, ສູນກາງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາ ຊົນອື່ນໆ ໃນໄລຍະການວາງແຜນ ແລະ ການຈັດຕັ້ງປະຕິບັດໂຄງການ ຊຶ່ງເຮັດໃຫ້ການເຄື່ອນໄຫວວຽກງານກ່ຽວກັບການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ ມີຄວາມກົມກຽວ ແລະ ສາມາດຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ;
4. ໄດ້ປະກອບພະນັກງານທີ່ມີຄຸນວຸດທິໃນດ້ານການຄຸ້ມຄອງບໍລິຫານ ແລະ ປະສານງານໂຄງການ ເປັນຕົ້ນ ດ້ານການເງິນ, ການຈັດຊື້-ຈັດຈ້າງ ແລະ ການຕິດຕາມປະເມີນຜົນໂຄງການ ເພື່ອໃຫ້ຄຳແນະນຳບັນດາໂຄງການຍ່ອຍໃນການວາງແຜນໂຄງການ, ຕິດຕາມກວດກາ ແລະ ລາຍງານການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການ ພ້ອມທັງຝຶກອົບຮົມສ້າງຄວາມເຂັ້ມແຂງເປັນແຕ່ລະໄລຍະ.

ສາຍເຫດທີ່ພາໃຫ້ມີຈຸດດີ ມີດັ່ງນີ້: (i) ມີການນຳພາ-ຊີ້ນຳ ຢ່າງໃກ້ຊິດຈາກສະພາບໍລິຫານ ໃນການກຳນົດທິດທາງ ແລະ ວິໄສທັດ ການເຄື່ອນໄຫວວຽກງານ ຂອງ ກປສ ພ້ອມນັ້ນ ກໍໄດ້ຮັບການຮ່ວມມື ແລະ ສະໜັບສະໜູນເປັນຢ່າງດີຈາກຄະນະວິຊາການ; (ii) ມີການປະສານງານ ແລະ ການຮ່ວມມືທີ່ດີ ຈາກບັນດາກະຊວງ, ອົງການກ່ຽວຂ້ອງ ແລະ ພາກສ່ວນຈັດຕັ້ງປະຕິບັດໂຄງການ; (iii) ມີການປະສານງານ ແລະ ການຮ່ວມມືທີ່ດີ ຈາກອົງການຈັດຕັ້ງສາກົນ (ໂດຍສະເພາະ ທະນາຄານໂລກ) ທີ່ໄດ້ໃຫ້ການສະໜັບສະໜູນດ້ານການເງິນ ໃນວຽກງານການເຕີບໂຕສີຂຽວ ແລະ ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ຂອງ ສປປ ລາວ; (iv) ມີການປັບປຸງລະບົບການຄຸ້ມຄອງການເງິນ, ການຈັດຊື້ຈັດຈ້າງ, ການຕິດຕາມປະເມີນຜົນ ແລະ ກວດສອບການເງິນພາຍໃນ ແລະ ພາຍນອກ ໃຫ້ມີຄວາມໂປ່ງໃສ ແລະ ມີປະສິດທິພາບ; (v) ມີພະນັກງານທີ່ມີປະສົບການ ແລະ ຕັ້ງໜ້າປະຕິບັດວຽກງານຂອງຕົນ ດ້ວຍຄວາມຮັບຜິດຊອບສູງ ແລະ ມີຄຸນນະພາບ.

### 1.4.2 ຈຸດອ່ອນ, ຂໍ້ຄົງຄ້າງ ແລະ ສາຍເຫດທີ່ພາໃຫ້ມີຈຸດອ່ອນ

ໄປຄຽງຄູ່ກັບຜົນສຳເລັດຂ້າງເທິງນັ້ນ ກໍ່ຍັງມີບາງບັນຫາຂໍ້ຄົງຄ້າງທີ່ເຮັດໃຫ້ມີຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດຄາດໝາຍທີ່ກຳນົດໄວ້ໃນແຜນດຳເນີນງານ ປີ 2018-2020 ຊຶ່ງບັນຫາສ່ວນໃຫຍ່ກໍໄດ້ຮັບການແກ້ໄຂສຳເລັດກ່ອນທ້າຍປີ 2020 ແລະ ບາງບັນຫາຕ້ອງໄດ້ສືບຕໍ່ແກ້ໄຂ ດັ່ງມີລາຍລະອຽດລຸ່ມນີ້:

- ການຕີຄວາມໝາຍສະຖານະພາບ ຂອງ ກປສ ທີ່ໄດ້ກຳນົດໄວ້ໃນດຳລັດ ວ່າດ້ວຍ ກອງທຶນປົກປັກຮັກສາສິ່ງແວດລ້ອມ ປີ 2017 ຊຶ່ງເຫັນວ່າຍັງບໍ່ທັນຈະແຈ້ງນັ້ນ ໄດ້ມີການຜັນຂະຫຍາຍ ແລະ ກຳນົດໃຫ້ຈະແຈ້ງຢູ່ໃນລະບຽບການຄຸ້ມຄອງ ກປສ ທີ່ໄດ້ຖືກຮັບຮອງໃນປີ 2019;

- ປະເດັນທີ່ກ່ຽວກັບການຂາດແຜນພັດທະນາທາງດ້ານການຈັດຕັ້ງ ຊຶ່ງເປັນສາຍເຫດເຮັດໃຫ້ມີຄວາມຫຍຸ້ງຍາກໃນການຮັກສາພະນັກງານທີ່ມີຄຸນວຸດທິນັ້ນ ໄດ້ຮັບການແກ້ໄຂ ໂດຍໄດ້ສ້າງຄູ່ມືການຄຸ້ມຄອງພະນັກງານ ທີ່ໄດ້ກຳນົດລາຍລະອຽດ ກ່ຽວກັບ ວິທີການສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງ ແລະ ນະໂຍບາຍຕໍ່ພະນັກງານ ຊຶ່ງຄູ່ມືດັ່ງກ່າວໄດ້ຮັບອະນຸມັດ ໃນປີ 2018 ຈາກສະພາບໍລິຫານ. ແຕ່ເຖິງຢ່າງ ໃດກໍ່ຕາມ, ການປະກອບພະນັກງານ ເຂົ້າເປັນພະນັກງານຖາວອນ ແລະ ພະນັກງານໂຄງການທີ່ສອດຄ່ອງກັບຄູ່ມືຄຸ້ມຄອງພະນັກງານແມ່ນປະສົບຄວາມຫຍຸ້ງຍາກ ແລະ ຫລ້າຊ້າ ເນື່ອງຈາກການເຂົ້າ-ອອກ ຂອງພະນັກງານມີຈຳນວນຫຼາຍ ພ້ອມທັງ ຄວາມບໍ່ແນ່ນອນຂອງການສືບຕໍ່ໂຄງການ ຄສລ 2 ແລະ ການມີໂຄງການໃໝ່;

- ການຈັດຕັ້ງປະຕິບັດບາງໂຄງການຍັງຊັກຊ້າ, ລະບົບການຄຸ້ມຄອງດ້ານການເງິນ ຍັງບໍ່ທັນໄດ້ດີ ໂດຍສະເພາະ ໂປແກຼມບັນຊີຍັງບໍ່ທັນສາມາດຮອງຮັບການລົງບັນຊີຈາກຫຼາຍແຫລ່ງທຶນ ແລະ ບໍ່ສາມາດສ້າງບົດລາຍງານການເງິນໂດຍອັດຕະໂນມັດຕາມຄວາມຕ້ອງການຂອງລັດຖະບານ ແລະ ອົງການຜູ້ໃຫ້ທຶນ, ການອະນຸມັດແຜນງົບປະມານປະຈຳປີ ແລະ ແຜນນຳໃຊ້ງົບປະມານແຕ່ລະກິດຈະກຳ ຍັງມີຄວາມຊັກຊ້າ, ການຈັດຊື້-ຈັດຈ້າງ ມີຫຼາຍຂັ້ນຕອນ ເຮັດໃຫ້ການຈັດຕັ້ງປະຕິບັດໂຄງການບໍ່ໄປຕາມແຜນການທີ່ກຳນົດໄວ້ ພ້ອມນັ້ນ ການຕິດຕາມປະເມີນຜົນ ແລະ ການຊຸກຍູ້ການຈັດຕັ້ງປະຕິບັດໂຄງການ ຍັງບໍ່ທັນຕໍ່ເນື່ອງ;

- ການອະນຸມັດໂຄງການທີ່ສະເໜີຂໍນຳໃຊ້ທຶນ ກປສ ແມ່ນຍັງມີຄວາມຊັກຊ້າເນື່ອງຈາກມີຫຼາຍຂັ້ນຕອນ ເຊັ່ນ: ໂຄງການທີ່ສະເໜີຂໍທຶນຕ້ອງໄດ້ຮັບການຢັ້ງຢືນຈາກກົມແຜນການ ແລະ ການເງິນຂອງຂະແໜງການທີ່ຕົນຂຶ້ນກັບ, ມີການຢັ້ງຢືນຈາກກົມກ່ຽວຂ້ອງກັບຮ່ວງທຶນ ແລະ ມີການຢັ້ງຢືນຈາກ ກົມແຜນການ ແລະ ການເງິນຂອງ ກຊສ ຈຶ່ງສາມາດສະເໜີຜ່ານກອງປະຊຸມຄະນະວິຊາການ ແລະ ສາພາບໍລິຫານ. ນອກນັ້ນ, ບັນດາພາກສ່ວນທີ່ສະເໜີໂຄງການສ່ວນຫຼາຍ ຍັງບໍ່ທັນມີປະສົບການໃນການຂຽນບົດສະເໜີໂຄງການ ເຮັດໃຫ້ເວລານຳສະເໜີຜ່ານກອງປະຊຸມຄະນະວິຊາການ ໄດ້ມີຂໍ້ສັກຖາມຫຼາຍ ແລະ ມີການປັບປຸງຫຼາຍຄັ້ງ ເພື່ອນຳມາສະເໜີຜ່ານກອງປະຊຸມຄືນໃໝ່;

- ການເກັບລາຍຮັບຈາກການປະກອບສ່ວນຂອງໂຄງການລົງທຶນ ໄດ້ຖືກຈັດຕັ້ງປະຕິບັດຢ່າງເປັນລະບົບ, ເຖິງຢ່າງໃດກໍ່ຕາມ ການເກັບລາຍຮັບ ເຂົ້າງົບປະມານຕົວຈິງ ຕໍ່າກ່ວາຄາດໝາຍ ຍ້ອນວ່າບາງໂຄງການລົງທຶນ ຈ່າຍເງິນການປະກອບສ່ວນຊັກຊ້າ ແລະ ບາງໂຄງການລົງທຶນປະສົບຄວາມຫຍຸ້ງຍາກທາງດ້ານເສດຖະກິດ;

- ການເກັບລາຍຮັບຈາກແຫຼ່ງທຶນໃໝ່ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ປີ 2013 ແລະ ດຳລັດ ວ່າດ້ວຍ ກອງທຶນປົກປັກຮັກສາສິ່ງແວດລ້ອມ ປີ 2017 ຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້ຢ່າງເຕັມສ່ວນ ເນື່ອງຈາກຂາດລະບຽບການສະເພາະຈາກພາກສ່ວນທີ່ກ່ຽວຂ້ອງ. ຜ່ານມາ ກປສ ໄດ້ໃຫ້ການສະໜັບສະໜູນທຶນແກ່ ມະຫາວິທະຍາໄລແຫ່ງຊາດ ເພື່ອສຶກສາຄົ້ນຄ້ວາຄວາມເປັນໄປໄດ້ກ່ຽວກັບການເກັບລາຍຮັບຈາກແຫລ່ງທຶນໃໝ່

ເຊັ່ນ: ຄ່າບໍລິການ ຈາກການນຳໃຊ້ລະບົບບິເວດ. ແຕ່ເຖິງຢ່າງໃດກໍ່ຕາມ ການນຳເອົາຜົນການຄົ້ນຄ້ວາມາສ້າງເປັນລະບຽບການ ຍັງເປັນສິ່ງທີ່ທ້າທາຍ;

- ສຳລັບບັນຫາໂຄງການເງິນກູ້, ຜ່ານມາ ຫກປສ ໄດ້ຕິດຕາມກວດກາ ແລະ ປະສານຫາຜູ້ກູ້ຢືມເພື່ອເກັບຕົ້ນທຶນ ແລະ ດອກເບ້ຍ. ເຖິງຢ່າງໃດກໍ່ຕາມ ການເກັບກູ້ຕົ້ນທຶນ ແລະ ດອກເບ້ຍຍັງຊັກຊ້າ ຍ້ອນພະນັກງານ ຫກປສ ຍັງຂາດປະສົບການດ້ານການປ່ອຍ ແລະ ເກັບກູ້ສິນເຊື່ອ, ການຄຸ້ມຄອງຄວາມສ່ຽງ ແລະ ການນຳໃຊ້ມາດຕະການຕໍ່ໜີ້ທວງຍາກ;
- ການສັງລວມຂໍ້ມູນ ຈາກບັນດາໂຄງການທີ່ໄດ້ຮັບທຶນຈາກ ກປສ ກ່ຽວກັບການຈັດຕັ້ງປະຕິບັດແຜນການຍັງຊັກຊ້າ ເຮັດໃຫ້ການສ້າງບົດລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການເພື່ອສົ່ງໃຫ້ຜູ້ໃຫ້ທຶນບໍ່ທັນຕາມກຳນົດເວລາ ແລະ ບໍ່ມີຄຸນນະພາບເທົ່າທີ່ຄວນ. ນອກນັ້ນ, ການສະຫຼຸບລາຍງານດ້ານການເງິນຍັງມີຄວາມສັບສົນໃນໄລຍະຜ່ານມາເນື່ອງຈາກ ມີການປ່ຽນແປງຂອງອັດຕາແລກປ່ຽນ ຊຶ່ງອີງການສະໜອງທຶນສາກົນໄດ້ສະໜອງທຶນ ໂດຍນຳໃຊ້ສະກຸນເງິນທີ່ແຕກຕ່າງກັນອີງຕາມຕະຫຼາດການເງິນສາກົນ ພ້ອມນັ້ນ ພາກສ່ວນຈັດຕັ້ງປະຕິບັດໂຄງການກໍມີການປັບປຸງການຈັດຕັ້ງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ໂດຍສະເພາະ ການປ່ຽນພະນັກງານຄຸ້ມຄອງບໍລິຫານໂຄງການຍ່ອຍ ຊຶ່ງຜູ້ມາຮັບໜ້າທີ່ປ່ຽນແທນ ຍັງບໍ່ທັນເຂົ້າໃຈກ່ຽວກັບລະບົບ ແລະ ບໍ່ມີປະສົບການໃນການຈັດຕັ້ງປະຕິບັດໂຄງການທີ່ນຳໃຊ້ທຶນໂຄງການຈາກສາກົນ ຈຶ່ງເຮັດໃຫ້ມີການຊັກຊ້າໃນຈັດຕັ້ງປະຕິບັດໂຄງການ.

**ສາຍເຫດທີ່ພາໃຫ້ມີຈຸດອ່ອນມີດັ່ງນີ້:**

- ການສ້າງລະບຽບການສະເພາະ ເພື່ອເປັນບ່ອນອີງໃນການເກັບລາຍຮັບຈາກແຫລ່ງທຶນໃໝ່ ແມ່ນຍັງຫລ້າຊ້າ ເນື່ອງຈາກຕິດພັນກັບຫຼາຍຂະແໜງການ;
- ການຮັກສາພະນັກງານທີ່ມີຄຸນວຸດທິ ແລະ ປະສົບປະການ ແມ່ນມີຂໍ້ຈຳກັດເນື່ອງຈາກຕ້ອງໄດ້ວ່າຈ້າງໃນອັດຕາເງິນເດືອນສູງກ່ວາແຜດານທີ່ ຫກປສ ໄດ້ກຳນົດໄວ້;
- ໂຄງການທີ່ໄດ້ຮັບທຶນ ຈາກ ກປສ ຈຳນວນໜຶ່ງ ຍັງຂາດພະນັກງານທີ່ມີຄຸນວຸດທິ ພ້ອມນັ້ນງົບປະມານທີ່ຈະນຳໃຊ້ໃນການຝຶກອົບຮົມ ຍັງມີຈຳກັດ;
- ມີການປັບປຸງທາງດ້ານການຈັດຕັ້ງ ແລະ ນິຕິກຳທີ່ກ່ຽວຂ້ອງ ຂອງບັນດາພາກສ່ວນທີ່ຈັດຕັ້ງປະຕິບັດໂຄງການ ຊຶ່ງນອກເໜືອຄວາມຮັບຜິດຊອບຂອງ ຫກປສ;
- ການປະສານງານ ແລະ ການຮ່ວມມື ລະຫວ່າງ ຫກປສ ແລະ ພາກສ່ວນຈັດຕັ້ງປະຕິບັດໂຄງການ ແມ່ນຍັງບໍ່ໄດ້ດີເທົ່າທີ່ຄວນ.

### 1.4.3 ບົດຮຽນທີ່ຖອດຖອນໄດ້

ຜ່ານການຈັດຕັ້ງປະຕິບັດ ແລະ ການປະເມີນຜົນການຈັດຕັ້ງປະຕິບັດ ແຜນການ ປີ 2018-2020 ສາມາດຖອດຖອນໄດ້ບົດຮຽນສຳຄັນ ດັ່ງນີ້:

- ກປສ ໄດ້ສ້າງຜົນປະໂຫຍດສຳຄັນໃຫ້ແກ່ປະເທດຊາດ ໃນຖານະທີ່ເປັນອີງການຈັດຕັ້ງກອງທຶນແຫ່ງຊາດທີ່ສາມາດຮອງຮັບແຫຼ່ງທຶນຈາກຫຼາຍແຫຼ່ງ ເພື່ອນຳໃຊ້ເຂົ້າໃນວຽກງານຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ. ສິ່ງທີ່ຄວນເອົາໃຈໃສ່ ແມ່ນຕ້ອງຮັບປະກັນວ່າ ຫກປສ ມີນະໂຍບາຍ ແລະ ຂັ້ນຕອນທີ່ຈະແຈ້ງ ກ່ຽວກັບ ການປົກປ້ອງສິ່ງແວດລ້ອມ ແລະ

ສັງຄົມ, ການສົ່ງເສີມບົດບາດຍິງ-ຊາຍ ເພື່ອໃຫ້ສອດຄ່ອງກັບເງື່ອນໄຂຂອງອົງການສະໜອງທຶນສາກົນ;

- ແຫຼ່ງທຶນແຕ່ລະແຫຼ່ງມີລັກສະນະ, ເງື່ອນໄຂ ແລະ ຂະໜາດຂອງທຶນທີ່ແຕກຕ່າງກັນ, ກປສ ຈຳເປັນຕ້ອງຍົກລະດັບຄວາມສາມາດຢ່າງຕໍ່ເນື່ອງໃນການຄຸ້ມຄອງດ້ານການເງິນ, ການຈັດຊື້-ຈັດຈ້າງ ແລະ ການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ ລວມທັງ ການວາງແຜນ, ການລະດົມທຶນ, ການຕິດຕາມປະເມີນຜົນ, ການຮ່ວມມື ແລະ ກາຍເປັນຄູ່ຮ່ວມງານທີ່ມີປະສິດທິຜົນ ກັບບັນດາຄູ່ຮ່ວມພັດທະນາ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ ເພື່ອໃຫ້ສອດຄ່ອງກົດໝາຍ, ລະບຽບການ ແລະ ມາດຖານເງື່ອນໄຂຂອງຜູ້ໃຫ້ທຶນ;

- ການສ້າງຄວາມເຂັ້ມແຂງ ໃຫ້ພາກສ່ວນທີ່ໄດ້ຮັບທຶນໃນຂັ້ນສູນກາງ, ທ້ອງຖິ່ນ ແລະ ຊຸມຊົນແມ່ນມີຄວາມຈຳເປັນຕ້ອງດຳເນີນຢ່າງຕໍ່ເນື່ອງເພື່ອຮັບປະກັນປະສິດທິຜົນ ໃນການຈັດຕັ້ງປະຕິບັດໂຄງການ. ໂດຍອີງໃສ່ສະພາບຄວາມສາມາດ ແລະ ຊັບພະຍາກອນທີ່ມີຈຳກັດຂອງພາກສ່ວນທີ່ໄດ້ຮັບທຶນ, ຈຶ່ງມີຄວາມຈຳເປັນຕ້ອງ ຝຶກອົບຮົມ ແບບການປະຕິບັດຕົວຈິງ ແລະ ທັງຮຽນທັງເຮັດ ຊຶ່ງຕ້ອງໃຊ້ເວລາ ແລະ ຄວາມພາຍາຍາມພໍສົມຄວນ;

- ການຕອບສະໜອງເງື່ອນໄຂ ແລະ ຄວາມຕ້ອງການ ຂອງຜູ້ໃຫ້ທຶນ ຕ້ອງຄຳນຶງເຖິງຄວາມສາມາດ ແລະ ສະພາບຄວາມເປັນຈິງຂອງພາກສ່ວນຮັບທຶນ ເພື່ອໃຫ້ມີຄວາມສົມດູນກັນ. ຄາດວ່າການປັບປຸງເຄືອຂ່າຍການຮ່ວມມື ແລະ ຫັນເປັນຄູ່ຮ່ວມງານ ຂອງ ກປສ ແລະ ການນຳໃຊ້ ຄູ່ມືດຳເນີນງານຂອງ ກປສ ຈະສາມາດຊ່ວຍອຳນວຍຄວາມສະດວກ ໃນການກະກຽມ ແລະ ຈັດຕັ້ງປະຕິບັດໂຄງການໃຫ້ມີປະສິດທິຜົນຫຼາຍກ່ວາເກົ່າ;

- ການນຳໃຊ້ກົນໄກຮູບແບບການສະໜອງທຶນໃຫ້ໂຄງການທີ່ສາມາດເຂົ້າເຖິງຊຸມຊົນໂດຍກົງ ເຫັນວ່າ ມີປະສິດທິຜົນ ແຕ່ວ່າງົບປະມານທີ່ນຳໃຊ້ເຂົ້າໃນການບໍລິຫານໂຄງການ ແລະ ການເຄື່ອນໄຫວກິດຈະກຳສູງ ເນື່ອງຈາກເປັນໂຄງການຂະໜາດນ້ອຍ ຊຶ່ງຜົນໄດ້ຮັບຈາກໂຄງການຕໍ່ພາບລວມຂອງການຄຸ້ມຄອງສິ່ງແວດລ້ອມ ແມ່ນມີໜ້ອຍ ສະນັ້ນ ຕ້ອງຫັນເປັນແຜນງານ ແລະ ໂຄງການຂະໜາດໃຫຍ່;

- ໃນໄລຍະຜ່ານມາ ການສະໜັບສະໜູນທຶນເຂົ້າໃນວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ ເຫັນວ່າສຸມໃສ່ສ້າງຄວາມເຂັ້ມແຂງໃນຂັ້ນສູນກາງເພື່ອຄຸ້ມຄອງມະຫາພາກ ເປັນຕົ້ນ ການສ້າງນະໂຍບາຍ ແລະ ນິຕິກຳຕ່າງໆ. ແຕ່ການຈັດຕັ້ງປະຕິບັດຕົວຈິງແມ່ນ ດຳເນີນຢູ່ໃນຂັ້ນທ້ອງຖິ່ນ. ສະນັ້ນ ໃນຕໍ່ໜ້າ ການຈັດສັນງົບປະມານຄວນຈະສຸມໃສ່ສ້າງຄວາມເຂັ້ມແຂງໃນຂັ້ນທ້ອງຖິ່ນ ໄປຕາມທິດສາມສ້າງ ຂອງລັດຖະບານ;

- ໃນໄລຍະ 5 ປີຜ່ານມາ ກປສ ໄດ້ສະໜອງທຶນເງິນກູ້ໃຫ້ແກ່ ບຸກຄົນ ແລະ ນິຕິບຸກ ຊຶ່ງເຫັນວ່າການຈັດຕັ້ງປະຕິບັດແມ່ນຍັງບໍ່ທັນມີປະສິດທິຜົນເທົ່າທີ່ຄວນ ຍ້ອນວ່າ ຫກປສ ຍັງຂາດພະນັກງານສິນເຊື່ອ, ນັກກົດໝາຍໃນການຄຸ້ມຄອງໂຄງການເງິນກູ້. ສະນັ້ນ, ໃນອະນາຄົດ ການໃຫ້ທຶນໂຄງການເງິນກູ້ ຕ້ອງໄດ້ພິຈາລະນາຢ່າງຮອບຄອບ ກ່ຽວກັບເງື່ອນໄຂ ແລະ ສັກກະຍະພາບຂອງຜູ້ກູ້ຢືມພ້ອມກັນນັ້ນ ຕ້ອງວາງລະບຽບການທີ່ຮັດກຸມ ແລະ ມີກົນໄກການຕິດຕາມກວດກາ ເພື່ອຮັບປະກັນກາຈັດຕັ້ງປະຕິບັດ ແລະ ບັງຄັບໃຊ້ກົດໝາຍຕໍ່ຜູ້ກູ້ຢືມທີ່ທວງຍາກ.

### 1.4.4 ມາດຕະການຈັດຕັ້ງປະຕິບັດ ແລະ ທິດທາງໃນຕໍ່ໜ້າ

- **ມາດຕະການແກ້ໄຂຕໍ່ບັນຫາຂໍ້ຄົງຄ້າງ ມີລາຍລະອຽດລຸ່ມນີ້:**
  - ຫກປສ ຈະສຸມໃສ່ການສ້າງຄວາມເຂັ້ມແຂງ ເພື່ອຍົກລະດັບການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງບໍລິຫານໃຫ້ມີຄຸນນະພາບ ແລະ ປະສິດທິພາບ ພ້ອມນັ້ນ ກໍດໍາເນີນການສຶກສາ ແລະ ສໍາຫຼວດອັດຕາເງິນເດືອນ ແລະ ນະໂຍບາຍຕ່າງໆຕໍ່ພະນັກງານທຽບໃສ່ກົນໄກຕະຫຼາດ ພ້ອມທັງມີຂໍ້ສະເໜີ ກ່ຽວກັບ ໂຄງປະກອບ ແລະ ນະໂຍບາຍທີ່ເໝາະສົມ ຂອງ ຫກປສ ເພື່ອນໍາສະເໜີຫາສະພາບໍລິຫານ ພິຈະລະນາ;
  - ຫກປສ ຍັງມີຄວາມຕ້ອງການພະນັກງານສະເພາະດ້ານທີ່ມີຄຸນວຸດທິສູງ ເພື່ອຊ່ວຍປັບປຸງລະບົບການຄຸ້ມຄອງການເງິນ, ການຈັດຊື້-ຈັດຈ້າງ, ການປ້ອງກັນສິ່ງແວດລ້ອມ ແລະ ສັງຄົມ ແລະ ວິຊາການສະເພາະດ້ານ ເພື່ອໃຫ້ສອດຄ່ອງກັບນະໂຍບາຍ ແລະ ຂັ້ນຕອນຂອງລັດຖະບານ ແລະ ອົງການຜູ້ໃຫ້ທຶນຕ່າງໆ ໃນການສ້າງເງື່ອນໄຂກາຍເປັນອົງການທີ່ສາມາດເຂົ້າຫາແຫຼ່ງທຶນຈາກສາກົນໂດຍກົງ;
  - ສືບຕໍ່ສຸມໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ພາກສ່ວນຈັດຕັ້ງປະຕິບັດໂຄງການ ໂດຍຜ່ານການຝຶກອົບຮົມແບບປະຕິບັດຕົວຈິງ (ທັງຮຽນ ທັງເຮັດ) ກ່ຽວກັບ ການລາຍງານ, ການຕິດຕາມກວດກາ ແລະ ຊ່ວຍຊຸກຍູ້ການຈັດຕັ້ງປະຕິບັດໂຄງການ ໂດຍສະເພາະ ໂຄງການທີ່ມີບັນຫາດັ່ງກ່າວ;
  - ສືບຕໍ່ສຸມໃສ່ຄົ້ນຄ້ວາຊອກຫາຊ່ອງທາງ ເພື່ອສາມາດຮັບທຶນຈາກ 8 ແຫຼ່ງທຶນຕາມທີ່ກໍານົດໄວ້ຢູ່ໃນ ດໍາລັດວ່າດ້ວຍກອງທຶນປົກປັກຮັກສາສິ່ງແວດລ້ອມ (ມາດຕາ 5) ພ້ອມທັງ ລະດົມທຶນຈາກແຫຼ່ງທຶນພາຍໃນ ແລະ ຕ່າງປະເທດ ໂດຍຈະນໍາໃຊ້ ງົບປະມານ ຄສລ 2 ທີ່ຍັງເຫຼືອ ເພື່ອສະໜັບສະໜູນການຄົ້ນຄ້ວາຮູບແບບການເກັບລາຍຮັບຈາກແຫຼ່ງທຶນໃໝ່ ແລະ ປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງໃນການສ້າງລະບຽບການ ກ່ຽວກັບ ການເກັບພັນທະດັ່ງກ່າວໃຫ້ສໍາເລັດ ພ້ອມນັ້ນ ກໍ່ເກັບກໍາຂໍ້ມູນ ແລະ ກະກຽມບົດສະເໜີໂຄງການໃໝ່ເພື່ອສະເໜີຂໍທຶນຈາກ GCF ແລະ ຜູ້ໃຫ້ທຶນອື່ນໆ;
  - ສືບຕໍ່ສຸມໃສ່ຕິດຕາມການເກັບລາຍຮັບຈາກການປະກອບສ່ວນຂອງບັນດາໂຄງການລົງທຶນ ພ້ອມນັ້ນ ກໍເພີ່ມທະວີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອຊ່ວຍຊຸກຍູ້ຕິດຕາມການເກັບພັນທະ ແລະ ນໍາໃຊ້ມາດຕະການຕໍ່ບັນດາໂຄງການທີ່ຄ້າງມອບພັນທະ;
  - ເນື່ອງຈາກມີການລະບາດ ຂອງພະຍາດ Covid 19, ໃນປີ 2020 ມີຫຼາຍໂຄງການຊັກຊ້າໃນການຈັດຕັ້ງປະຕິບັດ ຈຶ່ງໄດ້ສະເໜີ ຕໍ່ອາຍຸໂຄງການ ຄສລ2 ຈາກທ້າຍເດືອນ ມິຖຸນາ 2021 ຫາທ້າຍເດືອນມິຖຸນາ 2022 ແລະ ໃນປີ 2021 ຫກປສ ຈະສືບຕໍ່ໃຫ້ການສະໜັບສະໜູນພາກສ່ວນຈັດຕັ້ງປະຕິບັດໂຄງການ ໃນການຈັດຕັ້ງປະຕິບັດ ຄສລ2 ແລະ ສຸມໃສ່ການສ້າງຄວາມເຂັ້ມແຂງກ່ຽວກັບການກະກຽມປິດໂຄງການໃຫ້ບັນດາໂຄງການທີ່ໄດ້ຮັບທຶນ ພ້ອມທັງຊຸກຍູ້ຕິດຕາມໃຫ້ມີການສົ່ງບົດລາຍງານສຸດທ້າຍໃຫ້ຕົງຕາມກໍານົດເວລາ;
  - ປັບປຸງກົນໄກການອະນຸມັດໂຄງການ ໄປຕາມລະບຽບຄຸ້ມຄອງ ກປສ (ສະບັບປັບປຸງ ປີ 2021) ເພື່ອເຮັດໃຫ້ຂັ້ນຕອນການອະນຸມັດໂຄງການງ່າຍຂຶ້ນ, ພ້ອມທັງເຜີຍແຜ່ ລະບຽບຄຸ້ມຄອງ ກປສ ໃຫ້ແກ່ພາກສ່ວນຕ່າງໆຮັບຊາບ ກ່ຽວກັບ ສິດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນທີ່ກ່ຽວຂ້ອງກັບການພິຈາລະນາອານຸມັດໂຄງການ ພ້ອມນັ້ນ ກໍຈະໄດ້ຝຶກອົບຮົມສ້າງຄວາມ

ເຂັ້ມແຂງໃຫ້ພາກສ່ວນຕ່າງໆໃນການຂຽນບົດສະເໜີໂຄງການ ແລະ ຕິດຕາມການຈັດຕັ້ງປະຕິບັດໂຄງການ;

- **ທິດທາງໃນຕໍ່ໜ້າ**

ເພື່ອຈັດຕັ້ງປະຕິບັດວຽກງານໃຫ້ສອດຄ່ອງກັບວິໄສທັດ 2030, ຍຸດທະສາດ 2025, ລະບຽບການຄຸ້ມຄອງ ກປສ ແລະ ຄູ່ມືຄຸ້ມຄອງບໍລິຫານໂຄງການ, ກປສ ໄດ້ວາງທິດທາງແຜນການ ສໍາລັບ ປີ 2021-2025 ໂດຍສຸມໃສ່ ແຜນບູລິມະສິດ ດັ່ງນີ້:

(ກ) ສືບຕໍ່ສ້າງຄວາມເຂັ້ມແຂງ ໃຫ້ ຫກປສ ໃນການຄຸ້ມຄອງບໍລິຫານອົງກອນ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ໃຫ້ທຶນຕ່າງໆ ແລະ ກາຍເປັນອົງກອນທີ່ສາມາດເຂົ້າຫາແຫຼ່ງທຶນສາກົນໂດຍກົງ (GCF);

(ຂ) ເພີ່ມຂີດຄວາມສາມາດໃຫ້ພະນັກງານ ເພື່ອສ້າງຜົນງານໃຫ້ມີຄຸນນະພາບ ແລະ ທັນກັບເວລາ;

(ຄ) ເພີ່ມປະສິດທິພາບ ຂອງກົນໄກການລະດົມທຶນ ແລະ ການຈັດສັນທຶນ

(ງ) ເພີ່ມປະສິດທິພາບໃນການສື່ສານ, ການຮ່ວມມື ແລະ ທັນເປັນຄູ່ຮ່ວມງານກັບຂະແໜງການທີ່ກ່ຽວຂ້ອງ ແລະ ຄູ່ຮ່ວມພັດທະນາ ລວມທັງ ສະຖາບັນການສຶກສາ ແລະ ອົງການຈັດຕັ້ງສັງຄົມຕ່າງໆ .

## ພາກທີ II

## ແຜນການ 5 ປີ  (2021-2025)

ແຜນການ 5 ປີ (2021-2025) ຂອງ ກປສ ແມ່ນແຜນສືບຕໍ່ຈັດຕັ້ງຜັນຂະຫຍາຍ  ວິໄສທັດ ຂອງ ກປສ ຮອດປີ 2030, ເປົ້າໝາຍສະເພາະປີ 2025 ແລະ ຍຸດທະສາດ 2025 ໃຫ້ສຳເລັດຕາມຈຸດປະສົງຄາດໝາຍ ໂດຍໄດ້ທົບທວນຄືນຄວາມຄືບໜ້າການຈັດຕັ້ງປະຕິບັດແຜນດຳເນີນງານ  3 ປີ ຜ່ານມາ (2018-2020) ດັ່ງທີ່ໄດ້ລະບຸໃນພາກທີ I ພ້ອມທັງກຳນົດທິດທາງ, ຄາດໝາຍສູ້ຊົນ ແລະ ແຜນວຽກຈຸດສຸມທີ່ຈະຈັດຕັ້ງປະຕິບັດໃນຊຸມປີຕໍ່ໜ້າ (2021-2025) ພ້ອມທັງກຳນົດແຜນດຳເນີນງານໃນແຕ່ລະປີ (2021-2025) ແນໃສ່ເຮັດໃຫ້ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມມີປະສິດທິພາບ ແລະ ປະສິດທິຜົນ ໂດຍສະໜອງທຶນໃຫ້ສອດຄ່ອງກັບທິດທາງ, ນະໂຍບາຍການຈັດຕັ້ງປະຕິບັດວຽກງານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຫ່ງຊາດ ປະກອບສ່ວນໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ຕາມທິດສີຂຽວ ແລະ ຍືນຍົງ ໃຫ້ປະກົດຜົນເປັນຈິງ.

ແຜນ 5 ປີ ຄັ້ງນີ້ ຈະສູ້ຊົນ ສ້າງຄວາມເຂັ້ມແຂງໃຫ້ ກປສ ໃນວຽກງານການຈັດຕັ້ງ, ບຸກຄະລາກອນ ແລະ ກົນໄກການເງິນທີ່ມີຄຸນນະພາບ  ເພື່ອຈັດຕັ້ງປະຕິບັດວຽກງານການລະດົມທຶນ  ແລະ  ສະໜອງທຶນຢ່າງມີປະສິດທິພາບ ແລະ ປະສິດທິຜົນ ພ້ອມທັງ ສ້າງຄວາມເຊື່ອຖື ແລະ ສ້າງເງື່ອນໄຂໃຫ້ກາຍເປັນອົງການແຫ່ງຊາດທີ່ສາມາດເຂົ້າຫາແຫຼ່ງທຶນສາກົນໂດຍກົງ  ແລະ  ກາຍເປັນກອງທຶນທີ່ມີກົນໄກການເງິນຍືນຍົງ.  ຂໍ້ທີ  2.1  ໄດ້ກຳນົດທິດທາງລວມ ແລະ ເປົ້າໝາຍ ໂດຍອີງໃສ່ວິໄສທັດ ຮອດປີ 2030 ແລະ ຍຸດທະສາດຮອດປີ 2025 ຂອງ ກປສ; ຂໍ້ທີ 2.2 ກຳນົດຄາດໝາຍສູ້ຊົນທີ່ຈະຈັດຕັ້ງປະຕິບັດໃນ 5 ປີ (2021-2025) ແລະ ຂໍ້ທີ 2.3 ລະບຸແຜນວຽກຈຸດສຸດແຕ່ລະດ້ານທີ່ຈະດຳເນີນໃນໄລຍະ 2021–2025. ສຳລັບແຜນດຳເນີນງານໃນແຕ່ລະປີແມ່ນລະບຸໄວ້ໃນເອກະສານຊ້ອນທ້າຍ 2.

**ສະພາບແວດລ້ອມ ທີ່ ຕ້ອງເອົາໃຈໃສ່**

ໃນການສ້າງແຜນການເຄື່ອນໄຫວ 5 ປີ (2021-2025) ແມ່ນໄດ້ຄຳນຶງເຖິງບັນດາປັດໄຈດັ່ງນີ້:

- ການເຕີບໂຕຂອງເສດຖະກິດໂລກ  ແລະ ເສດຖະກິດຂອງບັນດາປະເທດກຳລັງພັດທະນາທີ່ຍັງພົບຂໍ້ຫຍຸ້ງຍາກຫຼາຍຢ່າງ  ເນື່ອງຈາກການສະລໍຕົວຂອງການລົງທຶນ  ຊຶ່ງອາດສົ່ງຜົນກະທົບຕໍ່ການລະດົມທຶນຂອງ ກປສ ຈາກອົງການຈັດຕັ້ງສາກົນ ແລະ ຜູ້ໃຫ້ທຶນຕ່າງໆ;
- ການລະບາດຂອງພະຍາດອັກເສບປອດຈຸລະໂລກສາຍພັນໃໝ່ COVID19ໃນຈັງຫວະທີ່ໄວ ແລະ ລັດສະໝີກວ້າງໃນໄລຍະຜ່ານມາ ແລະ ມີແນວໂນ້ມແກ່ຍາວ ເຖິງວ່າຈະມີວັກຊີນປ້ອງກັນ ແຕ່ກໍ່ຍັງບໍ່ທັນມີການນຳໃຊ້ຢ່າງກ້ວາງຂວາງ ແລະ ທົ່ວເຖິງໃນທົ່ວໂລກ ຊຶ່ງເຮັດໃຫ້ຍັງມີການນຳໃຊ້ມາດຕະການໃນການປ້ອງກັນການແຜ່ລະບາດ  ອາດສົ່ງຜົນໃຫ້ການຈັດຕັ້ງປະຕິບັດໂຄງການຕ່າງໆ  ບໍ່ເປັນໄປຕາມແຜນທີ່ກຳນົດໄວ້;
- ບັນຫາສິ່ງແວດລ້ອມທີ່ເກີດຂຶ້ນໃນປະຈຸບັນຂອງ ສປປ ລາວ ພາກພື້ນ ແລະ ສາກົນ ລວມທັງສະພາບການປ່ຽນແປງດິນຟ້າອາກາດ ຍັງຢູ່ໃນສະພາບທີ່ຕ້ອງສືບຕໍ່ເອົາໃຈໃສ່ ແລະ ຮ່ວມກັນແກ້ໄຂ;
- ຄວາມສາມາດ ແລະ ບົດບາດໜ້າທີ່ຂອງທຸກຂະແໜງການທີ່ກ່ຽວຂ້ອງ ໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ;

- ຄວາມຈຳເປັນໃນການຈັດລຽງບູລິມະສິດການສະໜອງທຶນຢ່າງມີຈຸດສຸມ ເພື່ອປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ໃນສະພາບທຶນທີ່ມີຈຳກັດ ແລະ ປະກອບສ່ວນຕໍ່ການຟື້ນຕົວຂອງເສດຖະກິດ;
- ເດັດຂາດໂຈະການສະໜອງທຶນທີ່ບໍ່ມີປະສິດທິພາບ, ບໍ່ໄດ້ຮັບໝາກຜົນ ແລະ ບໍ່ສາມາດເຫັນຜົນເປັນຮູບປະທຳ.

## 2.1 ທິດທາງລວມ ແລະ ເປົ້າໝາຍ

ໃນ 5 ປີຕໍ່ໜ້າ, ກປສ ຍັງຕ້ອງສືບຕໍ່ຈັດຕັ້ງປະຕິບັດວຽກງານຕາມທິດທາງ ແລະ ເປົ້າໝາຍທີ່ກຳນົດໄວ້ໃນວິໄສທັດ ກປສ ຮອດປີ 2030 ໃຫ້ບັນລຸຜົນສຳເລັດ ໂດຍຮັບປະກັນການຈັດຕັ້ງປະຕິບັດໃຫ້ສຳເລັດ ຍຸດທະສາດ 2025 ແລະ ຜົນໄດ້ຮັບທີ່ວາງໄວ້ຢ່າງມີປະສິດທິຜົນ ແລະ ສອດຄ່ອງກັບຈຸດໝາຍ ແລະ ທິດທາງລວມ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX.

ຈຸດໝາຍຂອງ ວິໄສທັດຮອດປີ 2030, ເປົ້າໝາຍສະເພາະ ປີ 2025, ຍຸດທະສາດ ຮອດປີ 2025 ຂອງ ກປສ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ໄດ້ສັງລວມດັ່ງລຸ່ມນີ້ :

- ***ວິໄສທັດ ກປສ :*** ພາຍໃນປີ 2030, « ກປສ ຈະກາຍເປັນສະຖາບັນການເງິນທີ່ໝັ້ນຄົງ, ເປັນອົງກອນທີ່ເຂັ້ມແຂງ ແລະ ຍືນຍົງ, ມີບຸກຄະລາກອນທີ່ໄດ້ມາດຕະຖານສາກົນ, ມີປະສິດທິພາບໃນການຄຸ້ມຄອງການເງິນ, ໂຄງການ, ຈັດຊື້-ຈັດຈ້າງ, ການລະດົມ ແລະ ການຄຸ້ມຄອງທຶນ ເພື່ອສະໜັບສະໜູນກິດຈະກຳການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ ເພື່ອປະກອບສ່ວນເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄປຕາມທິດສີຂຽວ ແລະ ຍືນຍົງ».
- ***ເປົ້າໝາຍສະເພາະປີ 2025:*** ໃນວິໄສທັດ ຂອງ ກປສ ໄດ້ກຳນົດທິດທາງລວມຂອງປີ 2025 ເພື່ອສ້າງຄວາມເຂັ້ມແຂງໃຫ້ ຫກປສ ໃນວຽກງານການຈັດຕັ້ງ, ບຸກຄະລາກອນ ແລະ ກົນໄກການເງິນທີ່ມີຄວາມຍືນຍົງ ທີ່ສາມາດປະຕິບັດພາລະບົດບາດການລະດົມທຶນ ແລະ ສະໜອງທຶນຢ່າງມີປະສິດທິພາບ ເຂົ້າໃນວຽກງານຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ ເພື່ອປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄປຕາມທິດສີຂຽວ ແລະ ຍືນຍົງ. ເປົ້າໝາຍສະເພາະ ຂອງ ກປສ ຮອດປີ 2025 ມີດັ່ງຕໍ່ໄປນີ້ :
  1. ຫກປສ ກາຍເປັນອົງກອນທີ່ໜ້າເຊື່ອຖື ທັງພາຍໃນ ແລະ ສາກົນ ໂດຍມີບຸກຄະລາກອນທີ່ພຽງພໍທັງດ້ານປະລິມານ ແລະ ຄຸນນະພາບ;
  2. ກົນໄກການເງິນຂອງ ກປສ ຈະໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ແລະ ສາມາດເຂົ້າຫາແຫຼ່ງທຶນຈາກຫຼາຍແຫຼ່ງ;
  3. ຫກປສ ຈະປະກອບສ່ວນຢ່າງຕັ້ງໜ້າ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ເພື່ອປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄປຕາມທິດສີຂຽວ ແລະ ຍືນຍົງ.

- **ຍຸດທະສາດ ຮອດປີ 2025 ຂອງ ກປສ :**

ກປສ ໄດ້ວາງຍຸດທະສາດ ຮອດ ປີ 2025 ເຊິ່ງປະກອບມີ 4 ຍຸດທະສາດ ແລະ ໄດ້ຄາດຄະເນຜົນໄດ້ຮັບສໍາລັບ ແຕ່ລະຍຸດທະສາດ ດັ່ງນີ້:




- **ທົບທວນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ IX:**

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ IX ກໍໄດ້ກໍານົດຈຸດໝາຍລວມ ແລະ ທິດທາງໜ້າທີ່ລວມ ທີ່ຕິດພັນກັບ ການຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຄື: ໃນຈຸດໝາຍລວມທີ 1 ໄດ້ກໍານົດ "ການປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ 2030 ແລະ ຜັນຂະຫຍາຍຍຸດທະສາດການເຕີບໂຕສີຂຽວແຫ່ງຊາດໃຫ້ມີປະສິດທິຜົນ"; ໃນທິດທາງລວມທີ 4 ກໍໄດ້ລະບຸວ່າ: "ພັດທະນາເສດຖະກິດທີ່ສະອາດ ແລະ ເປັນມິດຕໍ່ສິ່ງແວດລ້ອມ, ປົກປັກຮັກສາ ແລະ ນໍາໃຊ້ຊັບພະຍາກອນທໍາມະຊາດຢ່າງສົມເຫດສົມຜົນ, ຍືນຍົງ, ປະຢັດ ແລະ ມີປະສິດທິຜົນ" ແລະ ເປົ້າໝາຍໃຫຍ່ ທີ 4 ກໍໄດ້ລະບຸວ່າ "ປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມສົມດູນ ແລະ ກຽມພ້ອມຮັບມື ແລະ ຕອບໂຕ້ຄວາມສ່ຽງຈາກໄພພິບັດທໍາມະຊາດ".

## 2.2 ຄາດໝາຍສູ້ຊົນ

ເພື່ອຈັດຕັ້ງປະຕິບັດ ທິດທາງລວມ ແລະ ເປົ້າໝາຍ ທີ່ກໍານົດໄວ້ໃນວິໄສທັດ ກປສ ຮອດປີ 2030 ແລະ ຍຸດທະສາດ ຮອດປີ 2025 ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ IX, ກປສ ໄດ້ກໍານົດຄາດໝາຍສູ້ຊົນໃນ 5 ປີ ຕໍ່ໜ້າ (2021-2025) ດັ່ງລຸ່ມນີ້:

### 2.2.1 ດ້ານການຈັດຕັ້ງ

ສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງ, ພະນັກງານ ແລະ ການຄຸ້ມຄອງ-ບໍລິຫານ ຢ່າງເປັນລະບົບ ເພື່ອໃຫ້ກາຍເປັນອົງກອນທີ່ໜ້າເຊື່ອຖື ທັງພາຍໃນ ແລະ ສາກົນ, ມີບຸກຄະລາກອນທີ່ພຽງພໍ ທັງດ້ານຄຸນນະພາບ ແລະ ປະລິມານ, ມີລະບຽບການ ແລະ ຄູ່ມືການຄຸ້ມຄອງບໍລິຫານ ທີ່ຄົບຊຸດ ແລະ ແລະ ມີລະບົບການຄຸ້ມຄອງບໍລິຫານການເງິນທີ່ມີປະສິດທິພາບ ແລະ ໜ້າເຊື່ອຖື.

### 2.2.2 ດ້ານການຄຸ້ມຄອງ ບໍລິຫານ

ຫກປສ ມີລະບົບຄຸ້ມຄອງບໍລິຫານທີ່ເຂັ້ມແຂງ ແລະ ສາມາດວັດແທກປະສິດທິພາບການຈັດຕັ້ງປະຕິບັດວຽກງານ ຕາມແຜນການທີ່ລະບຸໄວ້ໃນວິໃສທັດ, ຍຸດທະສາດ, ແຜນການລະດົມທຶນ ແລະ ການສະໜອງທຶນ ແລະ ຄູ່ມືການຄຸ້ມຄອງ-ບໍລິຫານ ຂອງ ກປສ ໂດຍນໍາໃຊ້ດັດສະນີຄວາມສາມາດ (FCI) ໃຫ້ບັນລຸໄດ້ 80 ເປີເຊັນຂອງດັດສະນີແຕ່ລະດ້ານ ຊຶ່ງມີການທົບທວນ ແລະ ປັບປຸງໃຫ້ສອດຄ່ອງກັບສະພາບໃນແຕ່ລະໄລຍະ.

### 2.2.3 ດ້ານບຸກຄະລາກອນ

ປະກອບ ແລະ ຄັດຈ້ອນພະນັກງານໃຫ້ພຽງພໍທັງດ້ານ ປະລິມານ ແລະ ຄຸນນະພາບ ໂດຍປະເມີນຄວາມຕ້ອງການ ຂອງອົງກອນທາງດ້ານພະນັກງານ (staff need assesment) ໃຫ້ສອດຄ່ອງຕາມແຫຼ່ງລາຍຮັບ ແລະ ໜ້າວຽກ ພ້ອມທັງ ສ້າງຄວາມເຂັ້ມແຂງໃຫ້ພະນັກງານ ໂດຍ 80 ເປີເຊັນ ຂອງພະນັກງານໄດ້ຮັບການຝຶກອົບຮົມ ແລະ 30 ເປີເຊັນ ຂອງພະນັກງານທັງໝົດ ກາຍເປັນຊ່ຽວຊານສະເພາະດ້ານ ແລະ ສາມາດເປັນຄູຝຶກ ພ້ອມນັ້ນກໍປັບປຸງຄຸນນະພາບໃນການປະຕິບັດວຽກງານຂອງພະນັກງານ ຫກປສ ໂດຍຜ່ານການນໍາໃຊ້ ຕົວຊີ້ວັດຜົນງານ (KPI) ຊຶ່ງຢ່າງໜ້ອຍໃຫ້ບັນລຸ 85% ຂອງການກໍານົດ ຕົວຊີ້ວັດໃນການປະຕິບັດວຽກງານ ພ້ອມທັງ ມີແຜນພັດທະນາຊັບພະຍາກອນມະນຸດ ແລະ ມີນະໂຍບາຍດ້ານບຸກ ຄະລະກອນທີ່ເໝາະສົມ ແລະ ຊັດເຈນ.

### 2.2.4 ດ້ານການລະດົມທຶນ

ສ້າງ ແລະ ຈັດຕັ້ງປະຕິບັດ ແຜນການເກັບລາຍຮັບ ແລະ ການລະດົມທຶນ (2021-2025) ຊຶ່ງຄາດວ່າຈະສາມາດ ສ້າງລາຍຮັບໄດ້ປະມານ 62.47 ລ້ານ (ຫົກສິບສອງລ້ານສີ່ແສນເຈັດສິບພັນ) ໂດລາສະຫະລັດ ໃນນີ້ 6,65 ລ້ານ (ຫົກລ້ານຫົກແສນຫ້າສິບພັນ) ໂດລາສະຫະລັດ ມາຈາກທຶນພາຍໃນ ແລະ 55.82 ລ້ານ (ຫ້າສິບຫ້າລ້ານແປດແສນຊາວພັນ) ໂດລາສະຫະລັດ ມາຈາກແຫຼ່ງທຶນສາກົນ ໂດຍສືບຕໍ່ເກັບລາຍຮັບຈາກ 4 ແຫຼ່ງທຶນທີ່ເກັບໄດ້ໃນປະຈຸບັນ ແລະ ເພີ່ມການເກັບລາຍຮັບຈາກແຫຼ່ງທຶນໃໝ່ ພ້ອມທັງ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອຄົ້ນຄ້ວາສ້າງນິຕິກໍາໃນການເຂົ້າຫາແຫຼ່ງທຶນໃໝ່ຕາມດໍາລັດ ຂອງ ກປສ ແລະ ປະສານສົມທົບກັບ ຄູ່ຮ່ວມພັດທະນາເພື່ອກະກຽມໂຄງການໃໝ່.

### 2.2.5 ດ້ານການສະໜອງທຶນ

ສ້າງແຜນສະໜອງທຶນ 2021-2025 ໄປຕາມ 6 ຮ່ວງທຶນ ແລະ ຮັບປະກັນການສະໜອງທຶນ ໄປຕາມທິດທາງແຜນການທີ່ວາງໄວ້ ລວມທັງສ້າງຄວາມເຂັ້ມແຂງໃນການບໍລິຫານຄຸ້ມຄອງທຶນ ໃຫ້ບັນລຸຄາດໝາຍ 62.47 ລ້ານໂດລາ ສະຫະລັດ, ໃນນີ້ ທຶນພາຍໃນ 6.65 ລ້ານໂດລາສະຫະລັດ ແລະ ທຶນສາກົນ 55.82 ລ້ານໂດລາສະຫະລັດ.

### 2.2.6 ດ້ານການຮ່ວມມື

ເພີ່ມທະວີການຮ່ວມມື ແລະ ຫັນເປັນຄູ່ຮ່ວມງານ ກັບ ພາກສ່ວນຕ່າງໆໃຫ້ກວ້າງຂວາງເຊັ່ນ: ມະຫາວິທະຍາໄລແຫ່ງຊາດ ແລະ ປະຈຳພາກ, ບັນດາກະຊວງກ່ຽວຂ້ອງ, ອົງການຈັດຕັ້ງມະຫາຊົນ, ຊຸມຊົນ ທ້ອງຖິ່ນ ແລະ ສືບຕໍ່ເປັນຄູ່ ຮ່ວມງານ ກັບອົງການຈັດຕັ້ງສາກົນຕ່າງໆໃຫ້ຍືນຍົງເຊັ່ນ: *WB, UNDP, GIZ, UNEP* ແລະ *GGGI* ພ້ອມນັ້ນ ກໍເພີ່ມທະວີສາຍພົວພັນກັບ ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ (*GCF)* ເພື່ອສ້າງຄວາມເຂັ້ມແຂງໃຫ້ ກປສ ກາຍເປັນອົງກອນທີ່ສາມາດເຂົ້າຫາແຫຼ່ງທຶນໄດ້ໂດຍກົງ ແລະ ສຶກສາເງື່ອນໄຂ, ມາດຖານ ແລະ ຄວາມເປັນໄປໄດ້ ຂອງອົງການສະໜອງທຶນໃນອະນຸພາກພື້ນ, ພາກພື້ນ ແລະ ລະດັບສາກົນ ເພື່ອຊອກຫາແຫຼ່ງທຶນໃໝ່.

### 2.2.7 ດ້ານການສື່ສານ

ສ້າງ ແລະ ຈັດຕັ້ງປະຕິບັດ ແຜນດຳເນີນງານການລະດົມທຶນ ແລະ ການສື່ສານ 2021-2025, ເພີ່ມທະວີການເຜີຍແຜ່ລະບຽບການຄຸ້ມຄອງ ກປສ ແລະ ຄູ່ມືການຄຸ້ມຄອງໂຄງການໃຫ້ແກ່ພະນັກງານ ກປສ ແລະ ໂຄງການຍ່ອຍ, ໂຄສະນາເຜີຍແຜ່ ກ່ຽວກັບຜົນງານການຈັດຕັ້ງປະຕິບັດວຽກງານ ກປສ ໃນການປະກອບສ່ວນເຂົ້າໃນການປົກປັກຮັກສາສິ່ງແວດລ້ອມຢ່າງເປັນປົກກະຕິ ໂດຍຜ່ານສື່ຕ່າງໆເຊັ່ນ: ແຜ່ນພັບ, ໂປສເຕີ້, ໜັງສືພິມ, ວາລະສານ, ວິທະຍຸ, ໂທລະພາບ, ວິດີໂອສັ້ນ, ເວບໄຊ ແລະ ເຟສບຸກ.

ຕາຕະລາງ 2.1 ຕາຕະລາງສັງລວມຄາດໝາຍສູ້ຊົນ ໃນປີ 2021-2025 ເພື່ອໃຫ້ບັນລຸຕາມຍຸດທະສາດຮອດປີ 2025

| *ຍຸດທະສາດ ແລະ ຜົນໄດ້ຮັບ ທີ່ກຳນົດໄວ້ຮອດປີ 2025* | *ຄາດໝາຍສູ້ຊົນ ໃນປີ 2021-2025* | *ໝາຍເຫດ* |
|---|---|---|
| *<u>ຍຸດທະສາດ 1:</u> ປັບປຸງດ້ານການຈັດຕັ້ງ ແລະ ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງ-ບໍລິຫານ.* | | |
| ຜົນໄດ້ຮັບ 1.1 ມີໂຄງປະກອບການຈັດຕັ້ງ ແລະ ພາລະບົດບາດທີ່ຈະແຈ້ງ ແລະ ເໝາະສົມ. | ສືບຕໍ່ປັບປຸງໂຄງປະກອບການຈັດຕັ້ງ ແລະ ພາລະບົດບາດໃຫ້ສຳເລັດ | |
| ຜົນໄດ້ຮັບ 1.2 ມີລະບຽບການຄຸ້ມຄອງ-ບໍລິຫານ ທີ່ມີປະສິດທິຜົນຕາມ 8 ດັດສະນີຄວາມສາມາດ (FCI) ທີ່ກຳນົດໃນປີ 2015. | ສືບຕໍ່ປັບປຸງ ດັດສະນີຄວາມສາມາດໃຫ້ສຳເລັດ ແລະ ມີການທົບທວນເປັນແຕ່ລະໄລຍະ. | |
| ຜົນໄດ້ຮັບ 1.3 ປັບປຸງລະບຽບການຄຸ້ມຄອງ ກປສ ແລະ ຄູ່ມືຄຸ້ມຄອງ-ບໍລິຫານໂຄງການ ໃຫ້ສຳເລັດ ແລະ ຖືກຮັບຮອງເພື່ອຈັດຕັ້ງປະຕິບັດ | ປັບປຸງລະບຽບການຄຸ້ມຄອງ ກປສ ແລະ ຄູ່ມືຄຸ້ມຄອງ-ບໍລິຫານໂຄງການທຸກເຫລັ້ມໃຫ້ສຳເລັດໃນປີ 2021 ພ້ອມທັງຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ. | |
| ຜົນໄດ້ຮັບ 1.4 ມີລະບົບການບໍລິການດ້ານການເງິນທີ່ | ປັບປຸງລະບົບໂປຣແກມບັນຊີ ໃຫ້ເປັນລະບົບດຽວ ທີ່ມີການຍອມຮັບຈາກກະ | |

| | | |
|---|---|---|
| ມີປະສິດທິຜົນ. | ຊວງການເງິນ ແລະ ຮັບປະກັນການສະຫຼຸບລາຍງານການເງິນຖືກຕ້ອງ ແລະ ທັນເວລາ | |
| *<u>ຍຸດທະສາດ 2:</u> ສ້າງຄວາມເຂັ້ມແຂງດ້ານບຸກຄະລາກອນ* | | |
| ຜົນໄດ້ຮັບ 2.1 ມີຄວາມພ້ອມທັງດ້ານປະລິມານ ແລະ ຄຸນນະພາບ. | ປະເມີນຄວາມຕ້ອງການພະນັກງານຕາມແຫຼ່ງທຶນ ແລະ ໜ້າວຽກ, ໂອນຖ່າຍພະນັກງານໂຄງການທີ່ມີຄວາມຮູ້ຄວາມສາມາດໃຫ້ມາເປັນພະນັກງານຖາວອນຂອງ ຫກປສ ໃຫ້ຄົບຕາມຕຳແໜ່ງງານພ້ອມທັງຍົກສູງຄຸນນະພາບ (ຢ່າງໜ້ອຍ KPI ຈະຕ້ອງບັນລຸ 85%) | |
| ຜົນໄດ້ຮັບ 2.2 ມີນະໂຍບາຍດ້ານບຸກຄະລາກອນທີ່ເໝາະສົມ. | - ປັບປຸງຄູ່ມືບຸກຄະລາກອນທີ່ມີການກຳນົດນະໂຍບາຍຊັດເຈນ ແລະ ເໝາະສົມ;<br>- ສືບຕໍ່ຝຶກອົບຮົມໃຫ້ພະນັກງານ ເພື່ອບັນລຸ 80% ຂອງຈຳນວນພະນັກງານທັງໝົດ;<br>- 30% ຂອງຈຳນວນພະນັກງານທັງໝົດກາຍເປັນຊ່ຽວຊານສະເພາະດ້ານ ແລະ ສາມາດເປັນຄູຝຶກ | |
| ຜົນໄດ້ຮັບ 2.3 ຈັດຕັ້ງປະຕິບັດແຜນພັດທະນາຊັບພະຍາກອນມະນຸດ | ສ້າງແຜນພັດທະນາຊັບພະຍາກອນມະນຸດ ຂອງ ກປສ ສຳລັບປີ 2021 - 2025 ແລະ ຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ | |
| *<u>ຍຸດທະສາດ 3:</u> ປັບປຸງກົນໄກລະດົມທຶນ ແລະ ການສະໜອງທຶນແບບຍືນຍົງ* | | |
| ຜົນໄດ້ຮັບ 3.1 ມີແຜນ 5 ປີສຳລັບການລະດົມທຶນ ແລະ ການສື່ສານ | ສ້າງ ແລະ ຈັດຕັ້ງປະຕິບັດແຜນການເກັບລາຍຮັບ ແລະ ການລະດົມທຶນ (2021-2025) ຊຶ່ງຄາດວ່າຈະສາມາດສ້າງລາຍຮັບໄດ້ປະມານ 62.47 ລ້ານໂດລາສະຫະລັດ (6,65 ລ້ານໂດລາສະຫະລັດ ມາຈາກທຶນພາຍໃນ ແລະ 55.82 ລ້ານໂດລາສະຫະລັດ ມາຈາກແຫຼ່ງທຶນສາກົນ (ລາຍລະອຽດໃນຕາຕະລາງລະດົມທຶນ). ພ້ອມນັ້ນ, ກໍປະສານ | |

| | | |
|---|---|---|
| | ສົມທົບກັບພາກ ສ່ວນທີ່ກ່ຽວຂ້ອງເພື່ອຄົ້ນຄ້ວາສ້າງນິຕິກຳໃນການເຂົ້າຫາແຫຼ່ງທຶນໃໝ່ ຕາມດຳລັດ ຂອງ ກປສ ແລະ ປະສານສົມທົບກັບຄູ່ຮ່ວມພັດທະນາເພື່ອກະກຽມໂຄງການໃໝ່. | |
| ຜົນໄດ້ຮັບ 3.2 ມີແຜນ 5 ປີ ສຳລັບການສະໜອງທຶນຕາມ 6 ຮ່ວງທຶນ | ສ້າງແຜນສະໜອງທຶນ ໄປຕາມ 6 ຮ່ວງທຶນ ແລະ ຮັບປະກັນການສະໜອງທຶນໄປຕາມທິດທາງແຜນການທີ່ວາງໄວ້ ລວມທັງສ້າງຄວາມເຂັ້ມແຂງໃນການບໍລິຫານຄຸ້ມຄອງທຶນ ໃຫ້ບັນລຸຄາດໝາຍ 62.47 ລ້ານ ໂດລາສະຫະລັດ, ໃນນີ້ ທຶນພາຍໃນ 6.65 ລ້ານໂດລາສະຫະລັດ ແລະ ທຶນສາກົນ 55.82 ລ້ານໂດລາສະຫະລັດ. | |
| ຜົນໄດ້ຮັບ 3.3 ມີທຶນເພີ່ມຈາກແຫຼ່ງທຶນຕ່າງໆ ຕາມມາດຕາ 5 ຂອງດຳລັດ ກປສ ປີ 2017. | ສືບຕໍ່ເກັບລາຍຮັບຈາກ 4 ແຫຼ່ງທຶນທີ່ເກັບໄດ້ໃນປະຈຸບັນ ແລະ ເພີ່ມການເກັບກຳຈາກແຫຼ່ງທຶນ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອຄົ້ນຄ້ວາສ້າງນິຕິກຳໃນການເຂົ້າຫາແຫຼ່ງທຶນໃໝ່ ຕາມດຳລັດ ຂອງ ກປສ ແລະ ປະສານສົມທົບກັບຄູ່ຮ່ວມພັດທະນາເພື່ອກະກຽມໂຄງການໃໝ່. | |
| *ຍຸດທະສາດ 4: ເພີ່ມທະວີການຮ່ວມມື ແລະ ການຫັນເປັນຄູ່ຮ່ວມງານ* | | |
| ຜົນໄດ້ຮັບ 4.1 ມີເຄືອຂ່າຍການຮ່ວມມື ແລະ ເຊື່ອມໂຍງພາຍໃນກັບຂະແໜງການທີ່ກ່ຽວຂ້ອງພາກລັດ, ເອກະຊົນ ແລະ ຄູ່ຮ່ວມພັດທະນາ ທັງໃນສູນກາງ ແລະ ທ້ອງຖິ່ນ | ເພີ່ມທະວີການຮ່ວມມື ແລະ ຫັນເປັນຄູ່ຮ່ວມງານກັບພາກສ່ວນຕ່າງໆໃຫ້ກວ້າງຂວາງ ເຊັ່ນ: ມະຫາວິທະຍາໄລແຫ່ງຊາດ ແລະ ປະຈຳພາກ, ບັນດາກະຊວງທີ່ກ່ຽວຂ້ອງ, ອົງການຈັດຕັ້ງມະຫາຊົນ, ຊຸມຊົນທ້ອງຖິ່ນ ແລະ ສືບຕໍ່ເປັນຄູ່ຮ່ວມງານກັບ WB, UNDP, GIZ, UNEP, GGGI ແລະ ອື່ນໆ. | |
| ຜົນໄດ້ຮັບ 4.2 ມີເຄືອຂ່າຍການຮ່ວມມື ແລະ ເຊື່ອມໂຍງກັບຄູ່ຮ່ວມພັດທະນາໃນອະນຸພາກພື້ນ, ພາກພື້ນ ແລະ ລະດັບສາກົນ | ເສີມສ້າງສາຍພົວພັນກັບກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ (GCF) ເພື່ອສ້າງຄວາມເຂັ້ມແຂງ ໃຫ້ ກປສ ກາຍເປັນອົງກອນທີ່ສາມາດເຂົ້າ | |

| | | |
|---|---|---|
| | ຫາແຫຼ່ງທຶນໄດ້ໂດຍກົງ ແລະ ສຶກສາເງື່ອນໄຂ, ມາດຖານ ແລະ ຄວາມເປັນໄປໄດ້ຂອງອີງການສະໜອງທຶນໃນອະນຸພາກພື້ນ, ພາກພື້ນ ແລະ ລະດັບສາກົນເພື່ອຊອກຫາແຫຼ່ງທຶນໃໝ່. | |
| ຜົນໄດ້ຮັບ 4.3 ມີເຄື່ອງມືໂຄສະນາ ແລະ ສື່ສິ່ງພິມເພື່ອເຜີຍແຜ່ກ່ຽວກັບຜົນສຳເລັດ ການເຄື່ອນໄຫວການຈັດຕັ້ງປະຕິບັດຂອງ ກປສ. | ສ້າງ ແລະ ຈັດຕັ້ງປະຕິບັດ ແຜນດຳເນີນງານການລະດົມທຶນ ແລະ ການສື່ສານ 2021-2025, ເພີ່ມທະວີການເຜີຍແຜ່ລະບຽບການຄຸ້ມຄອງ ກປສ ແລະ ຄູ່ມືການຄຸ້ມຄອງໂຄງການໃຫ້ແກ່ພະນັກງານ ກປສ ແລະ ໂຄງການຍ່ອຍ, ໂຄສະນາເຜີຍແຜ່ກ່ຽວກັບຜົນງານ ການຈັດຕັ້ງປະຕິບັດວຽກງານ ກປສ ໃນການປະກອບສ່ວນເຂົ້າໃນການປົກປັກຮັກສາສິ່ງແວດລ້ອມ ຢ່າງເປັນປົກກະຕິ ໂດຍຜ່ານສື່ຕ່າງໆ ເຊັ່ນ: ແຜ່ນພັບ, ໂປສເຕີ້, ໜັງສືພິມ, ວາລະສານ, ວິທະຍຸ, ໂທລະພາບ, ວິດີໂອສັ້ນ, ເວບໄຊ ແລະ ເຟສບຸກ. | |

## 2.3 ແຜນວຽກຈຸດສຸມ (2021-2025)

ແຜນການ 5 ປີ (2021-2025) ຂອງ ກປສ ແມ່ນຈະສຸມໃສ່ການຈັດຕັ້ງປະຕິບັດຍຸດທະສາດທັງ 4 ດ້ານ 13 ຜົນໄດ້ຮັບ ແລະ ຄາດໝາຍສູ້ຊົນທີ່ໄດ້ລະບຸໄວ້ໃນຕາຕະລາງ 2.1 ຂ້າງເທິງໃຫ້ສຳເລັດ ໂດຍຈະຈັດຕັ້ງປະຕິບັດໜ້າວຽກຈຸດສຸມລຸ່ມນີ້:

### *2.3.1 ຈັດຕັ້ງປະຕິບັດຍຸດທະສາດ 1: ສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງ, ພະນັກງານ ແລະ ການຄຸ້ມຄອງ-ບໍລິຫານ ໃຫ້ເປັນທີ່ເຊື່ອຖື ແລະ ຍອມຮັບໄດ້ທັງພາຍໃນ ແລະ ສາກົນ* ຊຶ່ງມີໜ້າວຽກຈຸດສຸມດັ່ງນີ້:

(1) ປັບປຸງນິຕິກຳ (ລະບຽບການຄຸ້ມຄອງ ກປສ ແລະ ຄູ່ມືຄຸ້ມຄອງບໍລິຫານຕ່າງໆ) ເພື່ອຮັບປະກັນຜົນສຳເລັດຂອງ ກປສ ໃຫ້ກາຍເປັນອົງກອນທີ່ມີບົດບາດໃນການປະຕິບັດໜ້າທີ່ເປັນກົນໄກການເງິນທີ່ຍືນຍົງ ພ້ອມທັງປັບປຸງຄູ່ມືຄຸ້ມຄອງ-ບໍລິຫານ ຂອງ ກປສ ໃຫ້ສອດຄ່ອງກັບສະພາບຕົວຈິງ ແລະ ສາມາດຄຸ້ມຄອງໂຄງການຈາກຫຼາຍແຫຼ່ງທຶນຢ່າງມີປະສິດທິຜົນ;

(2) ພັດທະນາດ້ານບຸກຄະລາກອນ ໂດຍສ້າງແຜນພັດທະນາບຸກຄະລາກອນ ປີ 2021-2025 ແລະ ປັບປຸງນະໂຍບາຍພະນັກງານໃຫ້ເໝາະສົມ ພ້ອມທັງແກ້ໄຂອັດຕາການເຂົ້າ-ອອກຂອງພະນັກງານ

ເຊັ່ນ: (ກ) ແບ່ງຄວາມຮັບຜິດຊອບໃຫ້ພະນັກງານ ແລະ ທີມງານໃນການປະຕິບັດວຽກງານຢ່າງຈະແຈ້ງ ລວມທັງການປະຕິບັດນະໂຍບາຍໃຫ້ສອດຄ່ອງກັບຄູ່ມືຄຸ້ມຄອງພະນັກງານ ກປສ, (ຂ) ຝຶກອົບຮົມທັງໄລຍະສັ້ນ ແລະ ໄລຍະຍາວໃຫ້ປະສິດທິພາບ ແລະ (ຄ) ຮັບພະນັກງານໜຸ່ມນ້ອຍທີ່ມີຄວາມຮູ້ຄວາມສາມາດ;

(3) ປັບປຸງລະບົບການຄຸ້ມຄອງ-ບໍລິຫານຂອງ ຫກປສ ທີ່ສາມາດວັດແທກປະສິດທິພາບໃນການຈັດຕັ້ງປະຕິບັດວຽກງານ ຂອງ ຫກປສ ຕາມແຜນການທີ່ລະບຸໄວ້ໃນ ວິໄສທັດ, ຍຸດທະສາດ, ແຜນການລະດົມທຶນ ແລະ ການສະໜອງທຶນ ແລະ ຄູ່ມືຄຸ້ມຄອງ-ບໍລິຫານ ຂອງ ກປສ ໂດຍນໍາໃຊ້ດັດສະນີຄວາມອາດສາມາດ (FCI);

(4) ປັບປຸງລະບົບການເງິນ ໃຫ້ມີປະສິດທະຜົນໂດຍການນໍາໃຊ້ລະບົບບັນຊີດຽວ ເພື່ອຮັບປະກັນການລາຍງານ ທີ່ຖືກຕ້ອງຊັດເຈນ ແລະ ທັນເວລາ ຊຶ່ງລະບົບບັນຊີດັ່ງກ່າວມີການຢັ້ງຢືນຈາກກະຊວງການເງິນ.

ເພື່ອປະຕິບັດກິດຈະກໍາດັ່ງກ່າວຈະໄດ້ດໍາເນີນຫຼັກການດັ່ງລຸ່ມນີ້:

- ການຄຸ້ມຄອງບໍລິຫານ ຂອງ ກປສ ແມ່ນອີງໃສ່ດໍາລັດ ກປສ ປີ 2017, ລະບຽບການຄຸ້ມຄອງ ກປສ ປີ 2021, ຄູ່ມືຄຸ້ມຄອງ-ບໍລິຫານໂຄງການ, ກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ມາດຖານເງື່ອນໄຂຂອງຜູ້ໃຫ້ທຶນ;
- ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດນະໂຍບາຍຂອງລັດຖະບານກ່ຽວກັບການເຕີບໂຕສີຂຽວ ແລະ ແຜນງານບູລິມະສິດໃນການຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ລວມທັງວຽກງານຄຸ້ມຄອງ ແລະ ການປັບໂຕເຂົ້າກັບການປ່ຽນແປງດິນຟ້າອາກາດ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ອົງກອນ ແລະ ຊຸມຊົນດ້ວຍວິທີການທີ່ປະຢັດ ແລະ ມີປະສິດທິພາບ ໂດຍນໍາໃຊ້ວິທີການ: “ການຮຽນຮູ້ຜ່ານການປະຕິບັດຕົວຈິງ”, “ການຝຶກທັກສະໃນລະຫວ່າງການເຮັດວຽກຕົວຈິງ” ແລະ ເສີມສ້າງ “ການຮ່ວມມື ແລະ ທັນເປັນຄູ່ຮ່ວມງານ”;
- ຈັດຈ້າງພະນັກງານທີ່ມີຄຸນວຸດທິສູງສະເພາະດ້ານເພື່ອຊ່ວຍໃນການຈັດຕັ້ງປະຕິບັດກິດຈະກໍາ ຂອງໂຄງການທີ່ມີຄວາມສະຫຼັບຊັບຊ້ອນ ຫຼື ມີຄວາມຈໍາເປັນອັນຮີບດ່ວນ ແລະ ຕ້ອງການບຸກຄະລາກອນເພີ່ມເຕີມ; ແລະ
- ປັບປຸງການຈັດຕັ້ງໃຫ້ກາຍເປັນອົງກອນແຫ່ງຊາດທີ່ສາມາດເຂົ້າຫາແຫຼ່ງທຶນສາກົນໄດ້ໂດຍກົງ ແລະ ເສີມສ້າງຄູ່ຮ່ວມງານກັບອົງການຈັດຕັ້ງທີ່ກ່ຽວຂ້ອງ.

### *2.3.2 ຈັດຕັ້ງປະຕິບັດຍຸດທະສາດ 2: ສ້າງຄວາມເຂັ້ມແຂງດ້ານບຸກຄະລາກອນໃຫ້ ກປສ ຊຶ່ງມີໜ້າວຽກຈຸດສຸມດັ່ງນີ້:*

(1) ປະກອບບຸກຄະລາກອນໃຫ້ພຽງພໍທັງດ້ານປະລິມານ ແລະ ຄຸນນະພາບ ໂດຍການສ້າງພະນັກງານຖາວອນທີ່ມີຄວາມຮູ້ຄວາມສາມາດໃຫ້ສອດຄ່ອງຕາມແຫຼ່ງລາຍຮັບ ແລະ ໜ້າວຽກ ພ້ອມທັງ ປັບປຸງຄຸນນະພາບຂອງພະນັກງານທີ່ມີຢູ່ໃນປະຈຸບັນ (ຢ່າງໜ້ອຍໃຫ້ບັນລຸ 85% ຂອງ ການກໍານົດຕົວຊີ້ວັດໃນການປະຕິບັດວຽກງານ);

(2) ຈັດຕັ້ງປະຕິບັດນະໂຍບາຍບຸກຄະລາກອນທີ່ເໝາະສົມ ໂດຍການສືບຕໍ່ຝຶກອົບຮົບໃຫ້ພະນັກງານ ດ້ວຍວິທີການຕ່າງໆເຊັ່ນ: ການຮຽນຮູ້ຜ່ານການປະຕິບັດຕົວຈິງ, ການຝຶກອົບຮົມສະເພາະດ້ານ ແລະ ການຝຶກອົບເພື່ອກາຍເປັນຄູຝຶກ ຊຶ່ງຄາດໝາຍຢ່າງນ້ອຍ 80% ຂອງຈຳນວນພະນັກງານທັງໝົດໃຫ້ໄດ້ຮັບການຝຶກອົບຮົມ ແລະ 30% ຂອງຈຳນວນພະນັກງານທັງໝົດໃຫ້ກາຍເປັນພະນັກງານຊ່ຽວຊານສະເພາະດ້ານ ແລະ ກາຍເປັນຄູຝຶກ;

(3) ສ້າງ ແລະ ຈັດຕັ້ງປະຕິບັດແຜນພັດທະນາບຸກຄະລາກອນ 2021-2025 ຂອງ ກປສ ເພື່ອສ້າງຄວາມເຂັ້ມແຂງໃຫ້ພະນັກງານ ໂດຍການຝຶກອົບຮົມ ໄລຍະສັ້ນ ແລະ ໄລຍະຍາວ, ການຝຶກອົບຮົມສະເພາະດ້ານ, ການຝຶກອົບຮົມກັບທີ່, ການຝຶກອົບເພື່ອກາຍເປັນຄູຝຶກ ພ້ອມທັງ ສົ່ງເສີມໃຫ້ພະນັກງານຮຽນຮູ້ດ້ວຍຕົນເອງ. ການຝຶກອົບຮົມແມ່ນແນໃສ່ການສ້າງຂີດຄວາມສາມາດໃຫ້ ທກປສ ເພື່ອປະຕິບັດຕາມພາລະບົດບາດຂອງຕົນ.

### *2.3.3 ຈັດຕັ້ງປະຕິບັດຍຸດທະສາດ 3: ປັບປຸງກົນໄກການລະດົມທຶນ ແລະ ການສະໜອງທຶນທີ່ຍືນຍົງ ຊຶ່ງມີໜ້າວຽກຈຸດສຸມດັ່ງນີ້:*

**ກ. ການລະດົມທຶນ**

ການລະດົມທຶນ ຂອງ ກປສ ແມ່ນແນໃສ່ນຳມາຮັບໃຊ້ໃຫ້ແກ່ວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ໄປຕາມທິດສີຂຽວ ແລະ ຍືນຍົງ ຊຶ່ງປະຈຸບັນ ບັນຫາການທຳລາຍຊັບພະຍາກອນທຳມະຊາດ, ການເພີ່ມຂຶ້ນຂອງມົນລະພິດ ແລະ ຜົນກະທົບຂອງການປ່ຽນແປງດິນຟ້າອາກາດ ນັບມື້ນັບຫຼາຍຂຶ້ນ ສະນັ້ນ ການລະດົມທຶນ ເພື່ອມາຮັບໃຊ້ວຽກງານດັ່ງກ່າວ ເປັນໜ້າວຽກທີ່ທ້າທາຍ ເນື່ອງຈາກມີການແຂ່ງຂັນສູງໃນການເຂົ້າເຖິງແຫຼ່ງທຶນ ທັງໃນລະດັບຊາດ, ລະດັບພາກພື້ນ ແລະ ທົ່ວໂລກ. ເຖິງຢ່າງໃດກໍ່ຕາມ ກປສ ມີຄວາມຕັ້ງໃຈທີ່ຈະປັບປຸງຂີດຄວາມສາມາດຂອງຕົນໃນທຸກໆດ້ານ ໃນການເຂົ້າເຖິງແຫຼ່ງທຶນທັງພາຍໃນ ແລະ ສາກົນ ໂດຍຈັດຕັ້ງຜັນຂະຫຍາຍຍຸດທະສາດໃນການລະດົມທຶນ ສຳລັບປີ 2021-2025 ຊຶ່ງຄາດວ່າຈະສາມາດສ້າງລາຍຮັບໄດ້ປະມານ 62.47 ລ້ານໂດລາສະຫະລັດ (6.65 ລ້ານໂດລາສະຫະລັດ ມາຈາກທຶນພາຍໃນ ແລະ 55.82 ລ້ານໂດລາສະຫະລັດມາຈາກແຫຼ່ງທຶນສາກົນ).

➢ *ການຂົນຂວາຍລະດົມທຶນເພີ່ມຈາກແຫຼ່ງທຶນພາຍໃນ*

ໃນລະຫວ່າງປີ 2021-2025 ກປສ ຈະສືບຕໍ່ເກັບລາຍຮັບ (ທຶນພາຍໃນ) ຈາກດອກເບ້ຍເງິນຝາກຂອງ ກປສ ແລະ ການປະກອບສ່ວນພັນທະຈາກໂຄງການບໍ່ແຮ່ ແລະ ໄຟຟ້າທີ່ໄດ້ເຊັນສັນຍາສຳປະທານ (CA) ຊຶ່ງຄາດວ່າຈະສາມາດເກັບໄດ້ປະມານ 6.65 ລ້ານໂດລາສະຫະລັດ (ຫຼື ປະມານ 1.33 ລ້ານໂດລາສະຫະລັດຕໍ່ປີ). ນອກຈາກນັ້ນ ເພື່ອບັນລຸເປົ້າໝາຍ ການໂຄງການເຕີບໂຕສີຂຽວ GG-DPO (DPF3) ທີ່ກຳນົດໃຫ້ ກປສ ຕ້ອງມີແຫຼ່ງທຶນໃໝ່ຢ່າງໜ້ອຍ 2 ແຫຼ່ງທຶນໃນທ້າຍປີ 2021. ກປສ ໄດ້ກະກຽມຮ່າງເບື້ອງຕົ້ນ ລັດຖະດຳລັດປະທານປະເທດວ່າດ້ວຍການຈ່າຍຄ່ານ້ຳເປື້ອນ ຈາກນັ້ນ ໄດ້ມອບໃຫ້ ກົມຊັບພະຍາກອນນ້ຳ, ກຊສ ສືບຕໍ່ປັບປຸງ. ກປສ ຈະສືບຕໍ່ເຮັດວຽກຢ່າງໃກ້ຊິດກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຊອກຫາວິທີການຕ່າງໆເພື່ອເກັບລາຍຮັບຈາກແຫຼ່ງມົນລະ

ພິດ ໂດຍສະເພາະ ອຸດສາຫະກຳຂະໜາດໃຫຍ່ທີ່ສ້າງມົນລະພິດ ແລະ ສິ່ງຜົນກະທົບທາງລົບຕໍ່ສຸຂະພາບຂອງຄົນ ແລະ ລະບົບນິເວດ ໃນນີ້ ຈະສືບຕໍ່ຮ່ວມມືກັບ ມະຫາວິທະຍາໄລແຫ່ງຊາດ ໃນການສຶກສາ ກ່ຽວກັບ ກົນໄກການ ຮັບເອົາທຶນຈາກແຫຼ່ງໃໝ່ຕາມທີ່ກຳນົດໄວ້ໃນກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ (ເຊັ່ນ: ການ ເກັບຄ່າບໍລິການລະບົບນິເວດ, ການບູລະນະຟື້ນຟູດ້ານສິ່ງແວດລ້ອມ ແລະ ການປັບໃໝ) ເພື່ອນຳສະເໜີພາກສ່ວນ ກ່ຽວຂ້ອງ ກຳນົດເປັນນິຕິກຳລະອຽດ ໃຫ້ສາມາດນຳໄປສູ່ການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ.

**ຕາຕະລາງ 2.2 ຄາດຄະເນການເກັບລາຍຮັບຈາກການລົງທຶນຂອງ ກປສ ເອງ ແລະ ການເກັບລາຍຮັບຈາກແຫຼ່ງທຶນພາຍໃນ (ລ້ານໂດລາສະຫະລັດ) ໃນປີ 2021-2025**

| ແຫຼ່ງທຶນ | 2020 (ref) | 2021 | 2022 | 2023 | 2024 | 2025 | ທັງໝົດ (2021-2025) | ໝາຍເຫດ |
|---|---|---|---|---|---|---|---|---|
| (1) ທຶນພາຍໃນ (ດອກເບ້ຍເງິນຝາກຂອງ ກປສ ແລະດອກເບ້ຍຈາກໂຄງ ການເງິນກູ້) | 0.33 | 0.33 | 0.33 | 0.33 | 0.33 | 0.33 | 1.65 | ເພື່ອນຳໃຊ້ໃນວຽກບໍລິຫານຂອງ ກປສ |
| (2) ການປະກອບສ່ວນພັນທະຈາກໂຄງການບໍ່ແຮ່ | 0.4 | 0.45 | 0.45 | 0.45 | 0.45 | 0.45 | 2.25 | ຈະໄດ້ປະສານສົມທົບຢ່າງໃກ້ຊິດກັບກະຊວງພະລັງງານ ແລະ ບໍ່ແຮ່ |
| (3) ການປະກອບສ່ວນພັນທະຈາກໂຄງການພະລັງງານ | 1.1 | 0.55 | 0.55 | 0.55 | 0.55 | 0.55 | 2.75 | ຈະໄດ້ປະສານສົມທົບຢ່າງໃກ້ຊິດກັບກະຊວງພະລັງງານ ແລະ ບໍ່ແຮ່ ແລະ ກົມສິ່ງແວດລ້ອມ, ກຊສ |
| (4)ການປະກອບສ່ວນຈາກແຫຼ່ງອື່ນໆ (ຄ່ານ້ຳເສຍ,ອາກອນສິ່ງແວດລ້ອມ,ຄ່າບໍລິການລະບົບນິເວດ, ຄ່າບໍລະນະຟື້ນຟູສິ່ງແວດລ້ອມແລະ | 0 | 0.00 | 0.00 | 0.00 | 0.00 | 0.00 | 0.00 | ຈະໄດ້ປະສານສົມທົບຢ່າງໃກ້ຊິດກັບກະຊວງພະລັງງານ ແລະ ບໍ່ແຮ່ ແລະ ກຊສ |

| | | | | | | | | |
|---|---|---|---|---|---|---|---|---|
| ອື່ນໆ.) | | | | | | | | |
| (5) ລວມ (2) + (3) +(4) | 1.5 | 1.00 | 1.00 | 1.00 | 1.00 | 1.00 | 5.00 | |
| ລວມທັງໝົດ (1)+(5) | 1.8 | 1.33 | 1.33 | 1.33 | 1.33 | 1.33 | 6.65 | |

➢ *ການສະໜັບສະໜູນຈາກອົງການຜູ້ໃຫ້ທຶນສາກົນ (IFO)*

ໃນ ສປປ ລາວ, ມີຫຼາຍອົງການຜູ້ໃຫ້ທຶນສາກົນ (IFO) ທີ່ສະໜອງທຶນຊ່ວຍເຫຼືອລ້າ, ເງິນກູ້ຢືມ, ແລະ ການປະສົມປະສານລະຫວ່າງເງິນຊ່ວຍເຫຼືອລ້າ ແລະ ເງິນກູ້ຢືມ, ການຊ່ວຍເຫຼືອດ້ານວິຊາການ ແລະ ການສ້າງຂີດຄວາມສາມາດໃຫ້ກັບທຸກຂະແໜງການ. ສໍາລັບຂົງເຂດວຽກງານຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ກປສ ມີປະສົບການໃນການຈັດຕັ້ງປະຕິບັດໂຄງການຮ່ວມກັບທະນາຄານໂລກໃນໄລຍະ 10 ປີຜ່ານມາ ແລະ ປະຈຸບັນໄດ້ສ້າງສາຍພົວພັນໂດຍກົງກັບກອງທຶນ GEF, ກອງທຶນ GCF, ອົງການ GIZ, UNEP ແລະ UNDP. ໃນປີ 2021-2025 ຄາດວ່າຈະສາມາດລະດົມທຶນຈາກສາກົນໄດ້ປະມານ 55.82 ລ້ານໂດລາສະຫະລັດ, ຊຶ່ງທຶນດັ່ງກ່າວປະກອບມີ: ທຶນ ຄສລ2 ມູນຄ່າ 5.75 ລ້ານໂດລາສະຫະລັດ, ເງິນຊ່ວຍເຫຼືອລ້າ 23.49 ລ້ານໂດລາສະຫະລັດ ຈາກກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດສາກົນໃຫ້ລັດຖະບານ (ໂດຍຜ່ານອົງການ GIZ 13.49 ລ້ານໂດລາສະຫະລັດ ແລະ ຜ່ານອົງການ UNEP 10 ລ້ານໂດລາສະຫະລັດ), ໂຄງການພູມີທັດ ແລະ ປັບປຸງຊີວິດການເປັນຢູ່ (LLL) ມູນຄ່າ 2.72 ລ້ານໂດລາສະຫະລັດ, ເງິນກູ້ຢືມຈາກທະນາຄານໂລກ 23.46 ລ້ານໂດລາສະຫະລັດ ສໍາລັບໂຄງການໃໝ່ EWMP ແລະ ເງິນຊ່ວຍເຫຼືອ ຈາກ GCF ປະມານ 0.4 ໂດລາສະຫະລັດ ເພື່ອມາສ້າງຄວາມເຂັ້ມແຂງໃຫ້ ກປສ ດັ່ງມີລາຍລະອຽດລຸ່ມນີ້:

- **ງົບປະມານໂຄງການ ຄສລ 2:** ໂຄງການ ຄສລ2 ໄດ້ຮັບການຕໍ່ອາຍຸໂຄງການຮອດກາງປີ 2022 ແລະ -ບັນດາໂຄງການຍ່ອຍ (ກຸ່ມໂຄງການສ້າງຄວາມເຂັ້ມແຂງ, ການຄຸ້ມຄອງປ່າສະຫງວນ, ການຕ້ານການຄ້າຂາຍສັດປ່າ ແລະ ການຄຸ້ມຄອງສິ່ງແວດລ້ອມ) ກໍໄດ້ຮັບການຕໍ່ອາຍຸຮອດທ້າຍປີ 2021 ຊຶ່ງຄາດວ່າຈະມີງົບປະມານໃນການຈັດຕັ້ງປະຕິບັດໂຄງການ ທັງໝົດ 5.75 ລ້ານໂດລາສະຫະລັດ;

- **ການສະໜັບສະໜູນຈາກກອງທຶນ GCF:** ການເຂົ້າເຖິງແຫຼ່ງທຶນ GCF ແມ່ນຮຽກຮ້ອງໃຫ້ມີມາດຕະຖານສູງ ກ່ຽວກັບ ການຄຸ້ມຄອງການເງິນ, ການຈັດຊື້-ຈັດຈ້າງ, ວຽກງານສິ່ງແວດລ້ອມ ແລະ ນະໂຍບາຍປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ, ການເຊື່ອມໂຍງບົດບາດຍິງຊາຍ, ການຄຸ້ມຄອງບໍລິຫານ, ຄວາມໂປ່ງໃສ, ຄວາມສາມາດດ້ານວິຊາການ, ການຄຸ້ມຄອງທີ່ມີປະສິດທິພາບ, ການເປັນຄູ່ຮ່ວມງານ ຫຼື ຮ່ວມທຶນກັບອົງກອນຜູ້ໃຫ້ທຶນ. ນອກນັ້ນ, ບົດສະເໜີໂຄງການທີ່ຈະສະເໜີຂໍທຶນກໍຕ້ອງມີຄຸນນະພາບ ຊຶ່ງໃນການກະກຽມແມ່ນຕ້ອງໃຊ້ເວລາ, ຄວາມສາມາດສູງ ແລະ ຈໍາເປັນຕ້ອງມີຊ່ຽວຊານສາກົນມາຊ່ວຍ ເພາະຂັ້ນຕອນການທົບທວນ ແລະ ອະນຸມັດຂອງຜູ້ໃຫ້ທຶນ ແມ່ນມີການ

ແຂ່ງຂັນສູງ ແລະ ມີຫຼາຍປະເທດທີ່ກໍາລັງພັດທະນາໄດ້ຍື່ນບົດສະເໜີຂໍທຶນນໍາແຫຼ່ງດັ່ງກ່າວ. ຜ່ານມາ ຫກປສ ກໍໄດ້ຮັບການຊ່ວຍເຫຼືອ ຈາກ ອົງການ GIZ ເພື່ອປະເມີນຄວາມພ້ອມໃນການເຂົ້າຫາແຫຼ່ງທຶນໂດຍກົງ ຂອງ ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດສາກົນ (GCF) ຊຶ່ງເຫັນວ່າຍັງມີບາງດ້ານທີ່ຕ້ອງໄດ້ປັບປຸງແກ້ໄຂ ເປັນຕົ້ນ: ປັບປຸງຄູ່ມືຄຸ້ມຄອງ-ບໍລິຫານ ຫກປສ, ປະສິດທິພາບຂອງລະບົບໂປແກຼມບັນຊີ, ສ້າງລະບົບກວດກາພາຍໃນ ແລະ ການສົ່ງເສີມບົດບາດຍິງ-ຊາຍ ໃນວຽກງານປົກປັກຮັກສາສິ່ງແວດລ້ອມ. ພ້ອມກັນນີ້, ກປສ ກໍໄດ້ຍື່ນໃບສະໝັກເພື່ອເປັນອົງກອນທີ່ສາມາດເຂົ້າຫາແຫຼ່ງທຶນໄດ້ໂດຍກົງ (AE) ແລະ ກໍໄດ້ເລີ່ມກະກຽມບົດສະເໜີແນວຄວາມຄິດ ເພື່ອສະໝັກຂໍທຶນສໍາລັບໂຄງການຂະໜາດນ້ອຍໃນວົງເງິນບໍ່ເກີນ 10 ລ້ານໂດລາສະຫະລັດ ໂດຍຜ່ານຮ່ວງທຶນການປ່ຽນແປງດິນຟ້າອາກາດ. ເພື່ອສາມາດເຂົ້າເຖິງແຫຼ່ງທຶນ GCF, ຫກປສ ໄດ້ກໍານົດ 3 ວຽກງານຈຸດສຸມດັ່ງນີ້:

- ***ໂຄງການ I-GFLL (REDD+):*** ເພື່ອເປັນຜົນງານອ້າງອີງ ຂອງ ຫກປສ ໃນການເປັນອົງກອນແຫ່ງຊາດທີ່ສາມາດເຂົ້າເຖິງແຫຼ່ງທຶນໂດຍກົງ ຂອງ GCF, ຫກປສ ໄດ້ເຮັດວຽກຮ່ວມກັບອົງການ GIZ ຢ່າງໃກ້ຊິດໃນການກະກຽມ "ໂຄງການຈັດຕັ້ງປະຕິບັດແຜນງານສ້າງຄວາມເຂັ້ມແຂງໃນວຽກງານປ່າໄມ້, ຄຸ້ມຄອງປ່າໄມ້ແບບພູມມີທັດ ແລະ ສົ່ງເສີມຊີວິດການເປັນຢູ່ I-GFLL (REDD+)" ທີ່ໄດ້ຮັບທຶນຈາກກອງທຶນ GCF ໂດຍຜ່ານອົງການ GIZ[1] ຈໍານວນ 13.49 ລ້ານໂດລາສະຫະລັດ (ໄລຍະຈັດຕັ້ງປະຕິບັດ 2020-2024), ໃນນັ້ນ 447.326 ໂດລາສະຫະລັດ ແມ່ນ ກປສ ນໍາໃຊ້ ເຂົ້າໃນການຄຸ້ມຄອງບໍລິຫານການເງິນຂອງໂຄງການ, ຊຶ່ງບົດສະເໜີໂຄງການດັ່ງກ່າວໄດ້ຮັບອະນຸມັດ ແລະ ເຊັນສັນຍາ ໃນຕົ້ນປີ 2020 ແລະ ໄດ້ເລີ່ມຈັດຕັ້ງປະຕິບັດໃນໄຕມາດ 3 ຂອງປີ 2020.
- ***ໂຄງການ UNEP/GCF:*** ເພື່ອເປັນຜົນງານອ້າງອີງ ຂອງ ຫກປສ ໃນການເປັນອົງກອນທີ່ສາມາດເຂົ້າເຖິງແຫຼ່ງທຶນໂດຍກົງ ຂອງ GCF, ຫກປສ ໄດ້ເຮັດວຽກຮ່ວມກັບອົງການ UNEP ແລະ ກຊສ ຢ່າງໃກ້ຊິດໃນການກະກຽມ "ໂຄງການສ້າງຄວາມທົນທານຂອງປະຊາກອນໃນຕົວເມືອງ ເພື່ອປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໂດຍການຄຸ້ມຄອງ ແລະ ນໍາໃຊ້ທ່າແຮງຂອງລະບົບນິເວດ ຢູ່ ສປປ ລາວ" ໂດຍຜ່ານອົງການ UNEP ຈໍານວນ 10 ລ້ານໂດລາສະຫະລັດ (ໄລຍະຈັດຕັ້ງປະຕິບັດ 2020-2025), ໃນນັ້ນ 344,152 ໂດລາສະຫະລັດ ແມ່ນ ກປສ ນໍາໃຊ້ເຂົ້າໃນການຄຸ້ມຄອງບໍລິຫານການເງິນຂອງໂຄງການ, ຊຶ່ງບົດສະເໜີໂຄງການດັ່ງກ່າວໄດ້ຮັບອະນຸມັດ ແລະ ເຊັນສັນຍາ ໃນຕົ້ນປີ 2020 ແລະ ໄດ້ເລີ່ມຈັດຕັ້ງປະຕິບັດໃນໄຕມາດ 3 ຂອງປີ 2020;

- *ການເຂົ້າເຖິງແຫຼ່ງທຶນ GCF:* ຜ່ານມາ ທກປສ ໄດ້ຮັບການຊ່ວຍເຫຼືອ ຈາກ ອົງການ GIZ ເພື່ອສ້າງຄວາມເຂັ້ມແຂງໃຫ້ກາຍເປັນອົງກອນທີ່ສາມາດເຂົ້າເຖິງແຫຼ່ງທຶນໂດຍກົງ ຂອງ GCF. ນອກນັ້ນ ທກປສ ກໍໄດ້ສະເໜີຂໍທຶນ ຈາກ GCF ເພື່ອສ້າງຄວາມເຂັ້ມແຂງ ໃຫ້ ກປສ ຈຳນວນ 0.4 ລ້ານ ໂດລາສະຫະລັດ (ໄລຍະ 2) ຊຶ່ງໄດ້ຖືກຮັບຮອງໃນ ໄຕມາດ 1 ປີ 2021 ແລະ ຈະຈັດຕັ້ງປະຕິບັດ ຮອດທ້າຍປີ 2022. ນອກນັ້ນ ຍັງຈະໄດ້ປະສານສົມທົບກັບ ຈຸດປະສານງານແຫ່ງຊາດຂອງກອງທຶນສິ່ງແວດລ້ອມໂລກ (GEF) ແລະ ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດສາກົນ (GCF) ເພື່ອກະກຽມສ້າງບົດສະເໜີໂຄງການໃຫ້ສອດຄ່ອງກັບຄວາມຕ້ອງການ ຂອງ ສປປລາວ ແລະ ແຜນບູລິມະສິດຂອງກອງທຶນດັ່ງກ່າວ;

- **ໂຄງການພູມີທັດ ແລະ ປັບປຸງຊີວິດການເປັນຢູ່ (LLL)** : ທກປສ ໄດ້ເຂົ້າຮ່ວມຂະບວນການກະກຽມໂຄງການດັ່ງກ່າວ ຮ່ວມກັບ ທະນາຄານໂລກ, ກະຊວງກະສິກຳ ແລະ ປ່າໄມ້ ເພື່ອສົ່ງເສີມການຄຸ້ມຄອງປ່າໄມ້ໃຫ້ຍືນຍົງ, ປັບປຸງການຄຸ້ມຄອງເຂດປ່າສະຫງວນ ແລະ ປັບປຸງຊີວິດການເປັນຢູ່ໃນເຂດເປົ້າໝາຍໂຄງການທີ່ຖືກຄັດເລືອກມາ, ຄາດຄະເນງົບປະມານທັງໝົດຂອງໂຄງການ ຈຳນວນ 57 ລ້ານໂດລາສະຫະລັດ ຊຶ່ງເອົາມາຜ່ານ ກປສ ຈຳນວນ 3.94 ລ້ານໂດລາສະຫະລັດ, ໃນນີ້ ຈຳນວນ 0.36 ລ້ານໂດລາສະຫະລັດ ແມ່ນ ກປສ ນຳໃຊ້ ເຂົ້າໃນການຄຸ້ມຄອງບໍລິຫານການເງິນ ຂອງໂຄງການ, ຊຶ່ງບົດສະເໜີໂຄງການດັ່ງກ່າວໄດ້ຮັບອະນຸມັດ ແລະ ເຊັນສັນຍາ ໃນຕົ້ນປີ 2021, ໄລຍະຈັດຕັ້ງປະຕິບັດໂຄງການ 6 ປີ ( 2021-2026);

- *ໂຄງການຄຸ້ມຄອງສິ່ງແວດລ້ອມ ແລະ ສິ່ງເສດເຫຼືອ[2]: ທກປສ ໄດ້*ເຂົ້າຮ່ວມຂະບວນການກະກຽມໂຄງການດັ່ງກ່າວ ຮ່ວມກັບ ທະນາຄານໂລກ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ ເພື່ອແນໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງສິ່ງແວດລ້ອມ, ສິ່ງເສດເຫຼືອ ແລະ ມົນລະພິດໃນ ສປປ ລາວ ໂດຍ ທກປສ ຈະໄດ້ນຳໃຊ້ງົບປະມານ ຄສລ2 ຈຳນວນໜຶ່ງເພື່ອປະກອບສ່ວນເຂົ້າໃນການກະກຽມໂຄງການດັ່ງກ່າວ ຄາດວ່າຈະໃຫ້ສຳເລັດໃນກຽມກະກຽມເອກະສານໂຄງການໃນທ້າຍປີ 2021, ໄລຍະເວລາໃນການຈັດຕັ້ງປະຕິບັດໂຄງການ 7 ປີ (2023-2029) ຄາດຄະເນງົບປະມານທັງໝົດ 40 ລ້ານໂດລາສະຫະລັດ. ນອກນັ້ນ ຍັງຈະໄດ້

---

[2] ບົດບັນທຶກຊ່ວຍຈຳຂອງທະນາຄານໂລກໃນເດືອນພຶດສະພາ 2020 ໄດ້ລະບຸວ່າ ມີການປຶກສາຫາລືກັບ ກຊສ ແລະ ກປສ ສຳລັບໂຄງການໃໝ່ທີ່ມີຄວາມເປັນໄປໄດ້ ເພື່ອສະໜັບສະໜູນທຶນໃຫ້ ສປປ ລາວ ໃນການສ້າງຄວາມເຂັ້ມແຂງໃນວຽກງານສິ່ງແວດລ້ອມ, ມົນລະພິດ, ສິ່ງເສດເຫຼືອ ແລະ ການຄຸ້ມຄອງປຣາດຕິກ. ສປປ ລາວໄດ້ພິຈາລະນາທາງເລືອກສຳລັບການລົງທຶນໃນວຽກງານການຄຸ້ມຄອງປຣາດຕິກ ແລະ ສິ່ງເສດເຫຼືອ ແລະ ພິຈາລະນາແຫຼ່ງທຶນທີ່ມາຈາກທະນາຄານໂລກ ແລະ ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດສາກົນ. ໂຄງການ ຄສລ 2 ສາມາດສະໜັບສະໜູນທຶນໃນການປະເມີນສິ່ງທີ່ສຳຄັນ ແລະ ປຶກສາຫາລືເຖິງຄວາມເປັນໄປໄດ້ການລົງທຶນຂອງລັດຖະບານໃນການກະກຽມໂຄງການດັ່ງກ່າວຮ່ວມກັບ ກຊສ ແລະ ກຍທຂ. ທະນາຄານໂລກໄດ້ເລີ່ມເຮັດວຽກຮ່ວມກັບ ກຊສ ແລະ ກຍທຂ ເພື່ອວິເຄາະໄຈ້ແຍກ ການຈັດຕັ້ງປະຕິບັດໂຄງການ ພາຍໃຕ້ແຜນງານເຕີບໂຕສີຂຽວ. ທະນາຄານໂລກຍັງໄດ້ເຮັດວຽກຮ່ວມກັບອົງກອນຂອງລັດຖະບານ ແລະ ຄູ່ຮ່ວມງານ, ສ້າງຮູບແບບການຮ່ວມມືໃນວຽກງານການຄຸ້ມຄອງສິ່ງເສດເຫຼືອ ແລະ ປຣາດຕິກ ທີ່ລວມເອົາຫຼາຍຄູ່ຮ່ວມພັດທະນາໃນຂົງເຂດນີ້.

ປະສານສົມທົບກັບມະຫາວິທະຍາໄລແຫ່ງຊາດ ແລະ ທະນາຄານໂລກ ເພື່ອສຶກສາຂໍ້ມູນກ່ຽວກັບສະພາບການຄຸ້ມຄອງສິ່ງເສດເຫຼືອຕິດເຊື້ອ ແລະ ສິ່ງເສດເຫຼືອຊີວະພາບ ໃນ ສປປ ລາວ ແລະ ສ້າງເປັນກອບແນວຄວາມຄິດ ແລະ ຮ່າງບົດສະເໜີໂຄງການເພື່ອສະເໜີຂໍທຶນນໍາຜູ້ໃຫ້ທຶນຕ່າງໆ (ADB, JICA...);

### ຂ. ການສະໜອງທຶນ ແລະ ຈັດສັນງົບປະມານ

➤ **ແຜນການສະໜອງທຶນ**

ເພື່ອໃຫ້ສອດຄ່ອງກັບຍຸດທະສາດ ປີ 2025 ແລະ ແຜນການລະດົມທຶນ, ກປສ ຈະສ້າງແຜນສະໜອງທຶນ 2021-2025 ໄປຕາມ 6 ຮ່ອງທຶນ ແລະ ຮັບປະກັນການສະໜອງທຶນ ໄປຕາມທິດທາງແຜນການທີ່ວາງໄວ້ ລວມທັງສ້າງຄວາມເຂັ້ມແຂງໃນການບໍລິຫານຄຸ້ມຄອງທຶນ ໃຫ້ບັນລຸຄາດໝາຍ 62.47 ລ້ານໂດລາສະຫະລັດ, ໃນນີ້ ທຶນພາຍໃນ 6.65 ລ້ານໂດລາສະຫະລັດ ແລະ ທຶນສາກົນ 55.82 ລ້ານໂດລາສະຫະລັດໂດລາສະຫະລັດ ດັ່ງລາຍລະອຽດລຸ່ມນີ້:

(i) ສະໜອງທຶນພາຍໃນ ທີ່ໄດ້ຈາກການເກັບລາຍຮັບໃນການປະກອບສ່ວນພັນທະຂອງໂຄງການລົງທຶນຂະແໜງໄຟຟ້າ ແລະ ບໍ່ແຮ່, ດອກເບ້ຍເງິນຝາກ ແລະ ເງິນກູ້ຢືມ ລວມມູນຄ່າປະມານ 6.65 ລ້ານໂດລາສະຫະລັດ ໃນໄລຍະ 2021-2025;

(ii) ສືບຕໍ່ສະໜອງງົບປະມານໃນການຈັດຕັ້ງປະຕິບັດໂຄງການ ຄສລ 2 ຊຶ່ງໄດ້ຮັບການຕໍ່ອາຍຸໂຄງການຮອດກາງປີ 2022 ແລະ ບັນດາໂຄງການຍ່ອຍ (ກຸ່ມໂຄງການສ້າງຄວາມເຂັ້ມແຂງ, ການຄຸ້ມຄອງປ່າສະຫງວນ, ການຕ້ານການຄ້າຂາຍສັດປ່າ ແລະ ການຄຸ້ມຄອງສິ່ງແວດລ້ອມ) ທີ່ໄດ້ຮັບການຕໍ່ອາຍຸຮອດທ້າຍປີ 2021 ລວມມູນຄ່າທັງໝົດ 5.75 ລ້ານໂດລາສະຫະລັດ;

(iii) ສະໜອງງົບປະມານ ໃນການຈັດຕັ້ງປະຕິບັດ "ໂຄງການຈັດຕັ້ງປະຕິບັດແຜນງານສ້າງຄວາມເຂັ້ມແຂງໃນວຽກງານປ່າໄມ້, ຄຸ້ມຄອງປ່າໄມ້ແບບພູມມີທັດ ແລະ ສິ່ງເສີມຊີວິດການເປັນຢູ່ I-GFLL (REDD+)" ແລະ "ໂຄງການ ສ້າງຄວາມທົນທານຂອງປະຊາກອນໃນຕົວເມືອງ ເພື່ອປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໂດຍການຄຸ້ມຄອງ ແລະ ນໍາໃຊ້ທ່າແຮງຂອງລະບົບນິເວດ ຢູ່ ສປປ ລາວ" ໃນໄລະຍະ 2021-2025 ລວມມູນຄ່າທັງໝົດ 23.49 ລ້ານໂດລາສະຫະລັດ;

(iv) ນໍາໃຊ້ທຶນຊ່ວຍເຫຼືອລ້າໂດຍກົງຂອງ GCF ສໍາລັບການກະກຽມຄວາມພ້ອມ ເພື່ອສໍາເລັດການສະໝັກເຂົ້າເປັນອົງກອນທີສາມາດເຂົ້າເຖິງແຫຼ່ງທຶນໄດ້ໂດຍກົງ ຈໍານວນ 0.4 ລ້ານໂດລາສະຫະລັດ ໃນລະຫວ່າງປີ 2021-2022;

(v) ສະໜອງງົບປະມານໃຫ້ພາກສ່ວນຕ່າງໆໃນການຈັດຕັ້ງປະຕິບັດໂຄງການພູມິທັດ ແລະ ປັບປຸງຊີວິດການເປັນຢູ່ (LLL) ຈໍານວນ 2.72 ລ້ານໂດລາສະຫະລັດ ໃນລະຫວ່າງປີ 2021-2025;

(vi) ສະໜອງງົບປະມານໃຫ້ພາກສ່ວນຕ່າງໆໃນການຈັດຕັ້ງປະຕິບັດໂຄງການຄຸ້ມຄອງສິ່ງແວດລ້ອມ ແລະ ສິ່ງເສດເຫຼືອ ຈໍານວນ 23.46 ລ້ານໂດລາສະຫະລັດ ໃນລະຫວ່າງປີ 2023-2025;

ແຜນການສະໜອງທຶນດັ່ງກ່າວມີຈຸດປະສົງດັ່ງນີ້: ງົບປະມານສຳລັບແຜນ (i) ແມ່ນສືບຕໍ່ນຳໃຊ້ສຳລັບໂຄງການທີ່ໄດ້ຮັບທຶນ ຈາກ ກປສ ທີ່ກຳລັງຈັດຕັ້ງປະຕິບັດຢູ່ (ທຶນພາຍໃນ) ແລະສະໜອງທຶນໃຫ້ແກ່ໂຄງການໃໝ່ ຕາມແຜນບູລິມະສິດ ໂດຍການອະນຸມັດຈາກ ສະພາບໍຫານ ຂອງ ກປສ. ຈຸດປະສົງ ແລະ ງົບປະມານສຳລັບແຜນ (ii) ແລະ (iii) ແມ່ນໄດ້ຖືກກຳນົດໄວ້ຢ່າງຊັດເຈນໃນແຜນການເຄື່ອນໄຫວວຽກງານຂອງໂຄງການດັ່ງກ່າວ. ຈຸດປະສົງ ແລະ ງົບປະມານ ສຳລັບແຜນ (iv), (v) ແລະ (vi) ຈະໄດ້ກຳນົດລາຍລະອຽດໃນແຜນການຈັດຕັ້ງປະຕິບັດໂຄງການ 2021-2025.

ການສະໜອງທຶນແມ່ນອີງໃສ່ຜົນການຈັດຕັ້ງປະຕິບັດກິດຈະກຳ ແລະ ຜົນສຳເລັດຂອງແຜນການ 3 ປີ (2018-2020) ໂດຍສຸມໃສ່ການຈັດຕັ້ງປະຕິບັດກິດຈະກຳທີ່ຄົງຄ້າງ ແລະ ແຜນບູລິມະສິດ ຕາມການຕົກລົງເຫັນດີກັບອົງການຜູ້ໃຫ້ທຶນສາກົນ ແລະ ໄດ້ຮັບການອະນຸມັດຈາກສະພາບໍລິຫານຂອງ ກປສ. ທຶນດັ່ງກ່າວແມ່ນຈະຈັດຕັ້ງປະຕິບັດຜ່ານ 6 ຮ່ອງທຶນ, ແຕ່ສຳລັບໂຄງການ ຄສລ 2 ແມ່ນໃຫ້ການສະໜັບສະໜູນທຶນ ຜ່ານຮ່ອງທຶນນະໂຍບາຍ (PFW, ຊຶ່ງເກົ່າເອີ້ນວ່າ PICE) ແລະ ຮ່ອງທຶນ ຊີວະນາໆພັນ (BFW, ຊຶ່ງເກົ່າ ເອີ້ນວ່າ CBI) ໃນຂະນະດຽວກັນ ທຶນຈາກ GCF ກໍຈະໄປຜ່ານຮ່ອງທຶນໃໝ່ "ຮ່ອງທຶນການປ່ຽນແປງດິນຟ້າອາກາດ", ຊຶ່ງການຈັດສັນທຶນ ແມ່ນໄດ້ສະຫຼຸບໃນຕາຕະລາງດັ່ງລຸ່ມນີ້:

| ຕາຕະລາງ 2.3 ການຈັດສັນງົບປະມານ ສຳລັບປີ 2021- 2025 (ຫົວໜ່ວຍໂດລາສະຫະລັດ) | | | |
|---|---|---|---|
| ຮ່ອງທຶນ | ແຫຼ່ງທຶນ (ຫົວໜ່ວຍໂດລາສະຫະລັດ) | | ໝາຍເຫດ |
| | ທຶນພາຍໃນ (ໂດລາສະຫະລັດ) | ທຶນສາກົນ (ໂດລາສະຫະລັດ) | |
| ນະໂຍບາຍ | 1.33 (20% ຂອງ 6.65 ລ້ານ ໂດລາ ສະຫະລັດ) | 9.01 ລ້ານໂດລາສະຫະລັດ | • 3.84 ລ້ານໂດລາສະຫະລັດ ງົບປະມານ ຄສລ2 ໃນປີ 2021-2022.<br>• 5.17 ລ້ານໂດລາສະຫະລັດ (ໂຄງການ ESMP) ຊຶ່ງເປັນເງິນກູ້ຢືມຈາກທະນາຄານໂລກ (23.46 ລ້ານໂດລາສະຫະລັດ) |
| ຊີວະນາໆພັນ | 1.00 (15% ຂອງ 6.65 ລ້ານ ໂດລາ ສະຫະລັດ) | 4.63 ລ້ານໂດລາສະຫະລັດ | • 1.91 ລ້ານໂດລາສະຫະລັດ ງົບປະມານ ຄສລ2 ໃນປີ 2021-2022.<br>• 2.72 ລ້ານໂດລາສະຫະລັດ ງົບປະມານ ໂຄງການ LLL. |
| ຄຸ້ມຄອງມົນລະພິດ | 1.66 (25% ຂອງ | 18.29 ລ້ານໂດລາສະຫະລັດ | • 18.29 ລ້ານໂດລາສະຫະລັດ (ໂຄງການ |

| | | | |
|---|---|---|---|
| | 6.65 ລ້ານໂດລາ ສະຫະລັດ) | | ESMP) ຊຶ່ງເປັນເງິນກູ້ຢືມຈາກທະນາຄານ ໂລກ (23.46 ລ້ານໂດລາສະຫະລັດ) |
| ຄຸ້ມຄອງທີ່ດິນ | 1.00 (15% ຂອງ 6.65 ລ້ານໂດລາ ສະຫະລັດ) | 0 | |
| ຄຸ້ມຄອງຊັບພະ ຍາກອນນ້ຳ | 1.00 (15% ຂອງ 6.65 ລ້ານໂດລາ ສະຫະລັດ) | 0 | |
| ການປ່ຽນແປງ ດິນຟ້າອາກາດ | 0.66 (10% ຂອງ 6.65 ລ້ານໂດລາ ສະຫະລັດ) | 23.49 ລ້ານໂດລາສະຫະລັດ | ງົບປະມານທັງໝົດ 23.49 ລ້ານໂດລາສະຫະລັດ ໃນນີ້ 13.49 ລ້ານໂດລາສະຫະລັດ ຈາກ GIZ/ GCF (ເງິນຊ່ວຍເຫຼືອລ້າ) ແລະ 10 ລ້ານໂດລາ ສະຫະລັດຈາກ UNEP / GCF (ເງິນຊ່ວຍເຫຼືອ ລ້າ). |
| EPF/GCF ກະກຽມຄວາມ ພ້ອມ ແລະ ຊ່ວຍດ້ານວິຊາ ການ | | 0.40 ລ້ານ ໂດລາສະຫະລັດ | |
| ລວມ | **6.65 ລ້ານໂດລາ ສະຫະລັດ** | **55.82 ລ້ານ ໂດລາສະຫະລັດ** | |
| **ລວມທັງໝົດ** | **62.47 ລ້ານໂດລາສະຫະລັດ** | | |

ກອບຂອງການສະໜອງທຶນແມ່ນອີງຕາມຈຸດປະສົງ ແລະ ເງື່ອນໄຂຂອງຜູ້ໃຫ້ທຶນ ໂດຍສອດຄ່ອງກັບແຜນບຸລິມະສິດ ຂອງ ກປສ ແລະ ພາລະບົດບາດຂອງຜູ້ຮັບທຶນ ໃນການປະກອບສ່ວນເຂົ້າໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ, ຊຶ່ງກົນໄກການສະໜອງທຶນໄດ້ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ກປສ (ປີ 2021) ໂດຍແບ່ງເປັນ 6 ຮ່ວງທຶນດັ່ງລຸ່ມນີ້:

*(1) ການສະໜອງທຶນຜ່ານຮ່ວງທຶນນະໂຍບາຍ (PFW)*

ຈຸດປະສົງຫຼັກຂອງການສະໜອງທຶນຜ່ານຮ່ວງທຶນນະໂຍບາຍ ແລະ ສ້າງຂີດຄວາມສາມາດ ຫຼື PFW ໂດຍອີງຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ກປສ (ປີ 2021) ແມ່ນເພື່ອສະໜັບສະໜູນການຈັດຕັ້ງປະຕິບັດວຽກ

ງານຄື: (1) ການສ້າງຄວາມເຂັ້ມແຂງໃຫ້ອົງກອນ ແລະ ບຸກຄະລາກອນເພື່ອຮັບປະກັນການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ ແລະ ການຄຸ້ມຄອງສິ່ງແວດລ້ອມຂັ້ນສູນກາງ, ແຂວງ ແລະ ເມືອງ; (2) ສະໜັບສະໜູນການຈັດຕັ້ງປະຕິບັດຂອງຄະນະກຳມະການລວມທັງ ສະພາບໍລິຫານ ແລະ ຄະນະວິຊາການ ກປສ; (3) ພັດທະນາ, ປັບປຸງ, ເຜີຍແຜ່ຂໍ້ມູນຂ່າວສານ ແລະ ຕິດຕາມກິດຈະກຳທີ່ກ່ຽວຂ້ອງກັບນະໂຍບາຍ, ຍຸດທະສາດ ແລະ ນິຕິກຳໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; ແລະ (4) ສ້າງຖານຂໍ້ມູນ ແລະ ລະບົບການລົງທະບຽນ, ລະຫັດຂອງຂໍ້ມູນກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ການຄົ້ນຄວ້າ ແລະ ເຜີຍແຜ່ກ່ຽວກັບຊັບພະຍາກອນທຳມະຊາດ ລວມທັງມາດຕະການແກ້ໄຂບັນຫາສຸກເສີນກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ໃນແຜນປີ 2021-2025, ກປສ ຈະສືບຕໍ່ສະໜັບສະໜູນງົບປະມານສຳລັບຮ່ອງທຶນນະໂຍບາຍດັ່ງນີ້:

1) ສືບຕໍ່ຈັດຕັ້ງປະຕິບັດໂຄງການ ຄສລ 2 ທຸກກິດຈະກຳທີ່ຢູ່ພາຍໃຕ້ ຮ່ອງທຶນນີ້ (PFW) ທີ່ກຳລັງຈັດຕັ້ງປະຕິບັດ ຢູ່ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນ 7 ແຂວງ (ຫົວພັນ, ຊຽງຂວາງ, ຫຼວງພະບາງ, ວຽງຈັນ, ບໍລິຄຳໄຊ, ຄຳມ່ວນ ແລະ ສະຫວັນນະເຂດ) ຮອດທ້າຍປີ 2021;
2) ສະໜັບສະໜູນໂຄງການຂະໜາດນ້ອຍ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ທ້ອງຖິ່ນ (ພຊສ, ຫຊສ ແລະ ພະແນກການທີ່ກ່ຽວຂ້ອງ) ໃນການປະຕິບັດພາລະບົດບາດການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ;
3) ສະໜັບສະໜູນການຈັດຕັ້ງປະຕິບັດຂອງຄະນະກຳມະການຕ່າງໆ ໃນກົງຈັກ ຂອງ ກປສ ເຊັ່ນ: ສະພາບໍລິຫານ, ຄະນະວິຊາການ ກປສ, ຄະນະກວດກາພາຍໃນ ແລະ ຫກປສ;
4) ສະໜັບສະໜູນການພັດທະນາ, ປັບປຸງ, ເຜີຍແຜ່ຂໍ້ມູນຂ່າວສານ ແລະ ຕິດຕາມກິດຈະກຳທີ່ກ່ຽວຂ້ອງກັບນະໂຍບາຍ, ຍຸດທະສາດ ແລະ ນິຕິກຳໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
5) ສະໜັບສະໜູນການສ້າງຖານຂໍ້ມູນ ແລະ ລະບົບການລົງທະບຽນ, ລະຫັດຂອງຂໍ້ມູນກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ການຄົ້ນຄວ້າ, ເຄືອຄ່າຍເຜີຍແຜ່, ມາດຕະການແກ້ໄຂບັນຫາສຸກເສີນກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
6) ກິດຈະກຳອື່ນໆ ທີ່ໄດ້ຮັບການພິຈາລະນາອະນຸມັດຈາກ ສະພາບໍລິຫານ ກປສ.

ຄາດຄະເນຜົນໄດ້ຮັບໃນການສະໜອງທຶນຮ່ອງທຶນນະໂຍບາຍ ສຳລັບ 2021-2025 ມີ: (1) ນະໂຍບາຍ ແລະ ນິຕິກຳ ກ່ຽວກັບການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ ທີ່ຄົບຖ້ວນ, ຊັດເຈນ ແລະ ມີປະສິດທິຜົນ; (2) ຂະແໜງການທີ່ກ່ຽວຂ້ອງຂັ້ນທ້ອງຖິ່ນມີຄວາມເຂັ້ມແຂງໃນການຈັດຕັ້ງປະຕິບັດບັນດາ ນະໂຍບາຍ ແລະ ລະບຽບການທີ່ວາງອອກ (3) ມວນຊົນຮັບຮູ້ ແລະ ເຂົ້າໃຈກ່ຽວກັບນະໂຍບາຍ ແລະ ນິຕິກຳທີ່ວາງອອກ ພ້ອມທັງມີສ່ວນຮ່ວມໃນວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ; (4) ພາກສ່ວນກ່ຽວຂ້ອງມີລະບົບຖານຂໍ້ມູນ ແລະ ບັນຊີ ກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; ແລະ (5) ຄະນະກຳມະການຕ່າງໆໄດ້ມີການເຄື່ອນໄຫວຕາມພາລະບົດບາດ ຢ່າງມີປະສິດທິຜົນ.

*(2) ການສະໜອງທຶນຜ່ານຮ່ວງທຶນຊີວະນາໆພັນ (BFW)*

ຈຸດປະສົງຫຼັກຂອງການສະໜອງທຶນຜ່ານຮ່ວງທຶນ ຊີວະນາໆພັນ ໂດຍອີງຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ກປສ (ປີ 2021) ແມ່ນເພື່ອສະໜັບສະໜູນການຈັດຕັ້ງປະຕິບັດວຽກງານຄື: (1) ການພັດທະນາຊຸມຊົນ ແລະ ການຈັດຕັ້ງກິດຈະກຳອານຸລັກ ແລະ ແຜນການຄຸ້ມຄອງປົກປັກຮັກສາປ່າໄມ້ໃນຂັ້ນສູນກາງ ແລະ ຂັ້ນແຂວງ ໂດຍເນັ້ນໜັກໃສ່ແຜນການນຳໃຊ້ທີ່ດິນ ແລະ ການວາງແຜນສິ່ງແວດລ້ອມແບບຮອບດ້ານໃນວຽກງານປ່າໄມ້ ແລະ ສິ່ງແວດລ້ອມເພື່ອໄປສູ່ທິດທາງແບບຍືນຍົງ ໂດຍການມີສ່ວນຮ່ວມຂອງຊຸມຊົນ ໃນການເຊື່ອມໂຍງເຂົ້າກັບບູລິມະສິດແຫ່ງຊາດ ໃນການຄຸ້ມຄອງຊັບພະຍາກອນນ້ຳເພື່ອການພັດທະນາເຂື່ອນໄຟຟ້ານ້ຳຕົກແບບຍືນຍົງ; (2) ພັດທະນາ ແລະ ສະເໜີໃຫ້ຜູ້ຕັດສິນໃຈສຳລັບການຈັດສັນເຂດອານຸລັກລະດັບຊາດ ແລະ ລະດັບແຂວງ ແລະ ພື້ນທີ່ປ່າປ້ອງກັນໃນເຂດທີ່ເໝາະສົມເພື່ອເປັນສວນອຸທະຍານແຫ່ງຊາດ ແລະ ປະກາດເປັນປ່າສະຫງວນແຫ່ງຊາດ; (3) ສຶກສາ ແລະ ຄົ້ນຄວ້າລາຍການ ແລະ ການຈົດສິດທິບັດທຸກປະເພດຂອງສັດປ່າ, ສັດນ້ຳ ແລະ ມູນຄ່າຂອງລະບົບນິເວດທີ່ມີມູນຄ່າສູງທາງສິ່ງແວດລ້ອມ ແລະ ເສດຖະກິດ ແລະ ສ້າງສວນສາທາລະນະໃນຕົວເມືອງບູລິມະສິດ.

ໃນແຜນປີ 2021-2025, ກປສ ຈະສືບຕໍ່ສະໜັບສະໜູນງົບປະມານສຳລັບຮ່ວງທຶນຊີວະນາໆພັນດັ່ງນີ້:

1) ສືບຕໍ່ສະໜອງງົບປະມານໃຫ້ແກ່ໂຄງການຂະໜາດນ້ອຍ ແລະ ຂະໜາດກາງ ທີ່ກຳລັງຈັດຕັ້ງປະຕິບັດ ແລະ ໂຄງການໃໝ່ ຕາມບູລິມະສິດທີ່ໄດ້ຮັບການອານຸມັດຈາກສະພາບໍລິຫານ ກປສ ຈົນສິ້ນສຸດອາຍຸສັນຍາ;
2) ສືບຕໍ່ຈັດຕັ້ງປະຕິບັດ ໂຄງການ UNDP ໂດຍຜ່ານຮ່ວງທຶນ BFW ຢູ່ແຂວງສະຫວັນນະເຂດ ຮອດທ້າຍປີ 2021;
3) ສືບຕໍ່ຈັດຕັ້ງປະຕິບັດໂຄງການ ຄສລ 2 ພາຍໃຕ້ຮ່ວງທຶນ BFW ສຳລັບໂຄງການທີ່ກຳຈັດຕັ້ງປະຕິບັດຂອງ ພະແນກກະສິກຳ ແລະ ປ່າໄມ້ ໃນ 7 ແຂວງ (ຫົວພັນ, ຊຽງຂວາງ, ຫຼວງພະບາງ, ວຽງຈັນ, ບໍລິຄຳໄຊ, ຄຳມ່ວນ ແລະ ສະຫວັນນະເຂດ) ແລະ 3 ໂຄງການຍ່ອຍຂອງກອງກວດກາປ່າໄມ້ແຂວງ (ຄຳມ່ວນ, ບໍລິຄຳໄຊ ແລະ ຫົວພັນ) ແລະ ໂຄງການຂອງນາກາຍນ້ຳເທີນ ແລະ ນ້ຳແອັດພູເລີຍ ຈົນຮອດທ້າຍປີ 2021;
4) ສ້າງ ແລະ ຈັດຕັ້ງປະຕິບັດແຜນການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ຂອງຂະແໜງການທີ່ກ່ຽວຂ້ອງຂັ້ນສູງກາງ ແລະ ທ້ອງຖິ່ນ;
5) ສຳຫຼວດ, ຈັດແບ່ງ, ໝາຍເຂດປ່າ ແລະ ປະເພດປ່າ ພ້ອມທັງມີການຕິດຕາມກວດກາການຄຸ້ມຄອງ ແລະ ນຳໃຊ້ປ່າແຕ່ລະປະເພດ;
6) ສົ່ງເສີມການເກັບກຳຂໍ້ມູນ, ການຂຶ້ນບັນຊີ ແລະ ການຄາດຄະເນມູນຄ່າຊັບພະຍາກອນທຳມະຊາດ;
7) ສົ່ງເສີມການອະນຸລັກພັນພືດ, ພັນສັດ ທີ່ຫາຍາກ ແລະ ໃກ້ຈະສູນພັນ ລວມທັງການປົກປັກຮັກສາທີ່ຢູ່ອາໃສຂອງພືດ ແລະ ສັດດັ່ງກ່າວ;
8) ສົ່ງເສີມການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ປ່າແບບຍືນຍົງຂອງຊຸມຊົນ ເພື່ອປົກປັກຮັກສາປ່າຍອດນ້ຳ ແລະ ເຮັດໃຫ້ເນື້ອທີ່ປົກຫຸ້ມປ່າໄມ້ເພີ່ມຂຶ້ນໃຫ້ໄດ້ 70% ຂອງເນື້ອທີ່ດິນທົ່ວປະເທດ ແລະ ຊຸກຍູ້ການຂະຫຍາຍຕົວເສດຖະກິດແຫ່ງຊາດ ແລະ ການເຕີບໂຕສີຂຽວ;

9) ສົ່ງເສີມການປູກປ່າ ແລະ ຟື້ນຟູປ່າ ໃສ່ດິນປອກໂຫລ້ນ ແລະ ດິນເຊື່ອມໂຊມ ເພື່ອຂະຫຍາຍເນື້ອທີ່ປົກຫຸ້ມຂອງປ່າ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ;
10) ກິດຈະກຳອື່ນໆ ທີ່ໄດ້ຮັບການພິຈາລະນາອະນຸມັດຈາກ ສະພາບໍລິຫານ ກປສ.

*(3) ການສະໜອງທຶນຜ່ານຮ່ວງທຶນສິ່ງແວດລ້ອມ (EWF)*

ຈຸດປະສົງຫຼັກຂອງການສະໜອງທຶນຜ່ານຮ່ວງທຶນສິ່ງແວດລ້ອມ ລວມທັງການຄວບຄຸມມົນລະພິດ ຫຼື EPC ໂດຍອີງຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ກປສ (ປີ 2021) ແມ່ນເພື່ອສະໜັບສະໜູນການຈັດຕັ້ງປະຕິບັດວຽກງານຄື: (1) ສ້າງເຄືອຄ່າຍລະດັບຊາດຕາມແນວທາງ “ຂຽວ, ສະອາດ ແລະ ງາມຕາ (GCB)” ເພື່ອເຮັດກິດຈະກຳຢູ່ໃນຕົວເມືອງໃຫຍ່ ແລະ ຢູ່ຕາມເສັ້ນທາງຫຼວງແຫ່ງຊາດເລກທີ 13 ແລະ ຕາມແຄມແມ່ນ້ຳແຕ່ເໜືອເຖິງໃຕ້; (2) ການພັດທະນາສະໜາມຂີ້ເຫຍື້ອ ແລະ ການຄຸ້ມຄອງສິ່ງເສດເຫຼືອ, ການຄວບຄຸມຢາຂ້າຫຍ້າ ແລະ ການບຳບັດສິ່ງເສດເຫຼືອຈາກໂຮງໝໍ; (3) ປັບປຸງ ແລະ ຈັດຕັ້ງປະຕິບັດຫຼັກສູດການຮຽນການສອນແຫ່ງຊາດສຳລັບສິ່ງແວດລ້ອມ ແຕ່ຊັ້ນອານຸບານຈົນຮອດມະຫາວິທະຍາໄລ ປີທີ 3; (4) ການປຸກຈິດສຳນຶກດ້ານສິ່ງແວດລ້ອມຜ່ານສື່ຕ່າງໆ, ການແຂ່ງຂັນ ແລະ ການໃຫ້ລາງວັນຊົມເຊີຍ; (5) ການຮ່ວມມື ແລະ ການຈັດຕັ້ງປະຕິບັດແຜນການຈັດສັນທີ່ດິນ, ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານໃນຂັ້ນສູນກາງ ແລະ ຂັ້ນແຂວງ; (6) ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງສິ່ງແວດລ້ອມຂອງໂຄງການລົງທຶນ, ການປະເມີນສິ່ງແວດລ້ອມແບບຍຸດທະສາດ ແລະ ການຄຸ້ມຄອງທຸລະກິດລະດັບຄົວເຮືອນ; (7) ສ້າງຄວາມເຂັ້ມແຂງໃນການກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ສ້າງເຄືອຄ່າຍໃນການຄວບຄຸມມົນລະພິດຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ; ແລະ (8) ສ້າງເຄືອຄ່າຍ ແລະ ຍົກຂີດຄວາມສາມາດການວິເຄາະໃນຫ້ອງທົດລອງ ແລະ ການວິເຄາະລະດັບຊາດ, ພາກພື້ນ, ແຂວງ ແລະ ເມືອງ ດ້ວຍການສະໜັບສະໜູນອຸປະກອນ ແລະ ກິດຈະກຳຄົ້ນຄວ້າທີ່ກ່ຽວຂ້ອງກັບການປ່ຽນແປງດິນຟ້າອາກາດ ທີ່ເຊື່ອມໂຍງກັບອຸທົກກະສາດ ແລະ ສະພາບແຫ້ງແລ້ງຂອງດິນ ແລະ ອື່ນໆຕາມຄວາມຈຳເປັນ.

ໃນແຜນປີ 2021-2025, ກປສ ຈະສືບຕໍ່ສະໜັບສະໜູນງົບປະມານສຳລັບຮ່ວງທຶນສິ່ງແວດລ້ອມດັ່ງນີ້:

1) ສືບຕໍ່ສະໜອງງົບປະມານໃຫ້ແກ່ໂຄງການຂະໜາດນ້ອຍ ແລະ ຂະໜາດກາງ ທີ່ກຳລັງຈັດຕັ້ງປະຕິບັດ ແລະ ໂຄງການໃໝ່ ຕາມບູລິມະສິດທີ່ໄດ້ຮັບການອານຸມັດຈາກສະພາບໍລິຫານ ກປສ ຈົນສິ້ນສຸດອາຍຸສັນຍາ;
2) ຈັດຕັ້ງປະຕິບັດກົນໄກການສົ່ງເສີມ ການນຳໃຊ້ຊັບພະຍາກອນທຳມະຊາດທີ່ມີປະສິດທິຜົນ, ການນຳໃຊ້ເຕັກໂນໂລຊີທີ່ເປັນມິດຕໍ່ສິ່ງແວດລ້ອມ ແລະ ການຜະລິດທີ່ສະອາດ;
3) ສືບຕໍ່ຍົກສູງຂະບວນການສຶກສາ ແລະ ສ້າງຈິດສຳນຶກກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ;
4) ຈັດຕັ້ງປະຕິບັດນິຕິກຳ, ມາດຕະຖານຄຸນນະພາບສິ່ງແວດລ້ອມແຫ່ງຊາດ, ຄູ່ມືແນະນຳ ແລະ ກົນໄກສຳລັບການປ້ອງກັນ, ຄວບຄຸມ ແລະ ຕິດຕາມກວດກາມົນລະພິດ (ດິນ, ນ້ຳ, ອາກາດ ແລະ ສຽງ) ໃຫ້ມີປະສິດທິພາບ ແລະ ປະສິດທິຜົນໃນຂອບເຂດທົ່ວປະເທດ;

5) ຄຸ້ມຄອງ, ຕິດຕາມກວດກາດ້ານສິ່ງແວດລ້ອມເຊັ່ນ: ສິ່ງເສດເຫຼືອ, ສານເຄມີທີ່ເປັນພິດອັນຕະລາຍ, ມົນລະພິດທາງອາກາດ, ມົນລະພິດທາງສຽງ ແລະ ການປ່ອຍນ້ຳເສຍຈາກຊຸມຊົນ ແລະ ໂຮງງານອຸດສາຫະກຳຕ່າງໆ;
6) ຜັນຂະຫຍາຍການຈັດຕັ້ງປະຕິບັດແນວຄວາມຄິດ 3Rs (ຫຼຸດຜ່ອນ, ນຳໃຊ້ຄືນ, ໝູນໃຊ້ຄືນ) ໃນຄົວເຮືອນ ພ້ອມທັງ ປັບປຸງລະບົບການຄຸ້ມຄອງ ແລະ ກຳຈັດສິ່ງເສດເຫຼືອໃນເຂດຕົວເມືອງໃຫຍ່ ແລະ ເຂດຊົນນະບົດ;
7) ສົ່ງເສີມອຸດສາຫະກຳປຸງແຕ່ງຂະໜາດນ້ອຍ ແລະ ກາງຕາມທິດສີຂຽວ ແລະ ຍືນຍົງ ໂດຍສະເພາະກະສິກຳສະອາດ ແລະ ກະສິກຳປອດສານພິດ;
8) ຊຸກຍູ້ການທ່ອງທ່ຽວແບບອະນຸລັກ ແລະ ປະຊາຊົນມີສ່ວນຮ່ວມໃນການປົກປັກຮັກສາທຳມະຊາດ, ນຳໃຊ້ພະລັງງານແບບປະຢັດ, ເປັນມິດກັບສິ່ງແວດລ້ອມ, ຫຼຸດຜ່ອນສິ່ງເສດເຫຼືອ ແລະ ອື່ນໆ.
9) ດຳເນີນການຕິດຕາມກວດກາຄຸນນະພາບສິ່ງແວດລ້ອມ ໂດຍສະເພາະຄຸນນະພາບອາກາດ (PM 2,5) ແລະ ຊຸກຍູ້ດຳເນີນມາດຕະການຫຼຸດຜ່ອນ ແລະ ສະກັດກັ້ນໄຟປ່າໃນເຂດທີ່ມີຄວາມສ່ຽງ ໃນຂອບເຂດທົ່ວປະເທດ;
10) ກິດຈະກຳອື່ນໆ ທີ່ໄດ້ຮັບການພິຈາລະນາອະນຸມັດຈາກ ສະພາບໍລິຫານ ກປສ.

*(4) ການສະໜອງທຶນຜ່ານຮ່ວງທຶນຊັບພະຍາກອນນ້ຳ*

ຈຸດປະສົງຫຼັກຂອງການສະໜອງທຶນຜ່ານຮ່ວງທຶນ ຊັບພະຍາກອນນ້ຳ ໂດຍອີງຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ກປສ (ປີ 2021) ແມ່ນເພື່ອສະໜັບສະໜູນການຈັດຕັ້ງປະຕິບັດວຽກງານຄື: (1) ການພັດທະນາ ແລະ ການຈັດຕັ້ງປະຕິບັດແຜນຄຸ້ມຄອງຊັບພະຍາກອນນ້ຳສຳລັບ 62 ອ່າງ ໃນລະດັບຊາດ, ແຂວງ ແລະ ທ້ອງຖິ່ນ; (2) ສ້າງຄວາມເຂັ້ມແຂງດ້ານເຕັກນິກວິຊາການ ແລະ ອຳນວຍຄວາມສະດວກໃຫ້ແກ່ເຄືອຄ່າຍກ່ຽວກັບການຄຸ້ມຄອງ, ການຕິດຕາມປະລິມານ ແລະ ຄຸນນະພາບນ້ຳໃນແມ່ນ້ຳສາຍຫຼັກ; (3) ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການຄຸ້ມຄອງ ແລະ ຕິດຕາມກ່ຽວກັບໄພນ້ຳຖ້ວມ, ໄພແຫ້ງແລ້ງ, ດິນທາມ ແລະ ນ້ຳໃຕ້ດິນ; ແລະ (4) ພັດທະນາ ແລະ ປັບປຸງຫຼັກສູດການສຶກສາສາມັນກ່ຽວກັບຊັບພະຍາກອນນ້ຳ ແລະ ການປຸກຈິດສຳນຶກໃຫ້ແກ່ຂະແໜງການລັດ ແລະ ເອກະຊົນ ເພື່ອປະກອບສ່ວນເຂົ້າໃນການຄຸ້ມຄອງຊັບພະຍາກອນນ້ຳ.

ໃນປີ 2021-2025, ກປສ ຄາດວ່າ ຈະໃຫ້ການສະໜັບສະໜູນທາງດ້ານທຶນຮອນສຳລັບກິດຈະກຳດັ່ງນີ້:

1) ສືບຕໍ່ສ້າງ, ປັບປຸງ ແລະ ຈັດຕັ້ງປະຕິບັດລະບຽບກົດໝາຍຕ່າງໆທີ່ກ່ຽວຂ້ອງໃຫ້ມີປະສິດທິພາບ, ມີປະສິດທິຜົນ ແລະ ຮັດກຸມ;
2) ຄຸ້ມຄອງ ແລະ ຮັກສາແຫຼ່ງນ້ຳ ດ້ວຍການຊຸກຍູ້ສົ່ງເສີມການສ້າງກົນໄກປະສານງານໃນການຄຸ້ມຄອງ, ຈັດສັນ ແລະ ນຳໃຊ້ນ້ຳແບບມີສ່ວນຮ່ວມຂອງຫຼາຍຂະແໜງການ ແລະ ທ້ອງຖິ່ນລວມທັງປະຊາຊົນ
3) ປົກປັກຮັກສາ ແລະ ປັບປຸງຄຸນນະພາບຂອງປ່າຍອດນ້ຳ/ແຫຼ່ງນ້ຳ ທີ່ຕິດພັນກັບອ່າງຮັບນ້ຳ ໂດຍຈັດຕັ້ງຜັນຂະຫຍາຍຍຸດທະສາດນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ແລະ ແຜນການຄຸ້ມຄອງອ່າງຮັບນ້ຳ;

4) ປົກປັກຮັກສາ, ປັບປຸງ ແລະ ຂະຫຍາຍອ່າງເກັບນ້ຳທຳມະຊາດ (ຫ້ວຍ, ໜອງ, ຄອງ, ບຶງ) ໃຫ້ມີປະສິດທິພາບສູງຂຶ້ນ ແລະ ມີຄວາມຍືນຍົງ;
5) ປົກປັກຮັກສາຄຸນນະພາບນ້ຳ ແລະ ສ້າງແຜນຄຸ້ມຄອງ, ຈັດສັນ ແລະ ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ຍືນຍົງ;
6) ຕິດຕາມກວດກາຄຸນນະພາບນ້ຳໜ້າດິນ ແລະ ນ້ຳໃຕ້ດິນ ພ້ອມທັງລາຍງານສະພາບຄຸນນະພາບນ້ຳ;
7) ກິດຈະກຳອື່ນໆ ທີ່ໄດ້ຮັບການພິຈາລະນາອະນຸມັດຈາກ ສະພາບໍລິຫານ ກປສ.

### *(5) ການລົງທຶນຜ່ານຮ່ວງທຶນການຄຸ້ມຄອງທີ່ດິນ*

ຈຸດປະສົງຫຼັກຂອງການສະໜອງທຶນຜ່ານຮ່ວງທຶນ ການຄຸ້ມຄອງທີ່ດິນ ໂດຍອີງຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ກປສ (ປີ 2021) ແມ່ນເພື່ອສະໜັບສະໜູນການຈັດຕັ້ງປະຕິບັດວຽກງານຄື: (1) ພັດທະນາ, ປຸກຈິດສຳນຶກ ແລະ ຈັດຕັ້ງປະຕິບັດແຜນແມ່ບົດການຄຸ້ມຄອງທີ່ດິນແຫ່ງຊາດ; (2) ອອກໃບຕາດິນທົ່ວປະເທດ; ແລະ (3) ພັດທະນາການປະເມີນທີ່ດິນໃນທົ່ວປະເທດ. ໃນປີ 2020 ທະນາຄານໂລກ ໄດ້ຮ່ວມກັບ ກຊສ ກະກຽມບົດສະເໜີໂຄງການ ກ່ຽວກັບ ການຄຸ້ມຄອງທີ່ດິນ ທີ່ຈະຈັດຕັ້ງປະຕິບັດໂດຍ ກຊສ ແລະ ກະຊວງກະສິກຳ ແລະ ປ່າໄມ້, ຊຶ່ງຄາດວ່າຈະເລີ່ມຕົ້ນປະຕິບັດໃນ ປີ 2021 (ໄລຍະເວລາໂຄງການ 5 ປີ). ສະນັ້ນ, ການລົງທຶນຜ່ານຮ່ວງທຶນນີ້ ໃນລະຫວ່າງປີ 2021-2025 ກໍ່ຈະຖືກຈຳກັດລົງ.

ໃນປີ 2021-2025, ກປສ ຄາດວ່າ ຈະໃຫ້ການສະໜັບສະໜູນທາງດ້ານທຶນຮອນຜ່ານຮ່ວງທຶນການຄຸ້ມຄອງທີ່ດິນ ສຳລັບກິດຈະກຳ ດັ່ງນີ້:

*1)* ສ້າງນິຕິກຳ ແລະ ຄູ່ມືວິຊາການ ເພື່ອຈັດຕັ້ງປະຕິບັດກົດໝາຍທີ່ດິນ ແລະ ແຜນຈັດສັນແມ່ບົດທີ່ດິນ ພ້ອມທັງ ປະເມີນການຈັດຕັ້ງປະຕິບັດກົດໝາຍທີ່ດິນ;
*2)* ສົ່ງເສີມລະບົບການຄຸ້ມຄອງບໍລິຫານທີ່ດິນແບບທັນສະໄໝ;
*3)* ສ້າງ ແລະ ຈັດຕັ້ງປະຕິບັດ ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ;
*4)* ສຳຫຼວດ ແລະ ເກັບຂໍ້ມູນ ການນຳໃຊ້ທີ່ດິນໃນເຂດປ່າສະຫງວນ ແລະ ປ່າປ້ອງກັນ ພ້ອມທັງກຳນົດມາດຕະການໃນການແກ້ໄຂ;
*5)* ການປະເມີນລາຄາທີ່ດິນ, ການຂຶ້ນສຳມະໂນຄົວຕອນດິນ ແລະ ການອອກໃບຕາດິນ ໃຫ້ສຳເລັດໃນຂອບເຂດທົ່ວປະເທດ;
*6)* ການຕິດຕາມກວດກາ ແລະ ວັດແທກຄືນ ກ່ຽວກັບຂອບເຂດ ການເຊົ່າສຳປະທານດິນໃຫ້ມີປະສິດທິຜົນ ພ້ອມທັງບັນທຶກຂໍ້ມູນເຂົ້າໃນລະບົບແຜນທີ່;
*7)* ກິດຈະກຳອື່ນໆ ທີ່ໄດ້ຮັບການພິຈາລະນາອະນຸມັດຈາກ ສະພາບໍລິຫານ ກປສ.

### (ສ) ການສະໜອງທຶນຜ່ານຮ່ວງທຶນການປ່ຽນແປງດິນຟ້າອາກາດ

ຮ່ວງທຶນການປ່ຽນແປງດິນຟ້າອາການ ເປັນຮ່ວງທຶນໃໝ່ ທີ່ຖືກສ້າງຕັ້ງຂຶ້ນໃນປີ 2019 ໂດຍມີຈຸດປະສົງເພື່ອລະດົມທຶນ ແລະ ຈັດສັນງົບປະມານໃນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ລວມທັງແຜນການຄຸ້ມ

ຄອງໄພພິບັດທາງທຳມະຊາດ ແລະ ການສ້າງຂີດຄວາມສາມາດໃຫ້ສອດຄ່ອງກັບບູລິມະສິດແຫ່ງຊາດ. ຮ່ວງທຶນດັ່ງກ່າວ ຍັງມີຄວາມສຳຄັນ ເພື່ອເຮັດໃຫ້ ກປສ ສຳເລັດຂັ້ນຕອນການຮັບຮອງໃຫ້ກາຍເປັນອົງກອນແຫ່ງຊາດທີ່ສາມາດເຂົ້າຫາແຫຼ່ງທຶນໄດ້ໂດຍກົງສຳລັບກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດສາກົນ (GCF) (ໂຄງການຂະໜາດນ້ອຍ) ແລະ ກອງທຶນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດສາກົນ (CCAF), ຊຶ່ງຄາດວ່າ ກປສ ຈະສຳເລັດການກະກຽມບົດສະເໜີໂຄງການຂະໜາດນ້ອຍ (ບໍ່ເກີນ 10 ລ້ານໂດລາສະຫະລັດ) ໃນປີ 2021 ແລະ ຖ້າໄດ້ຮັບການອະນຸມັດຈະໄດ້ເລີ່ມຈັດຕັ້ງປະຕິບັດໃນປີ 2022. ໃນໄລຍະກະກຽມໂຄງການດັ່ງກ່າວ, ບູລິມະສິດຂອງລັດຖະບານກ່ຽວກັບວຽກງານການປ່ຽນແປງດິນຟ້າອາກາດ ແລະ ການຄຸ້ມຄອງຄວາມສ່ຽງໄພພິບັດ ພ້ອມທັງການເຊື່ອມໂຍງບົດບາດຍິງ-ຊາຍ ແລະ ໂຄງການທີ່ມີຢູ່ຂອງທະນາຄານໂລກ ກ່ຽວກັບການຄຸ້ມຄອງການຫຼຸດຜ່ອນໄພພິບັດທາງທຳມະຊາດ (DRM) ກໍ່ຈະຖືກພິຈາລະນາ.

ໃນກາງປີ 2020, ສປປ ລາວ ໄດ້ຮັບທຶນຊ່ວຍເຫຼືອລ້າຈາກ *GCF* ໂດຍຜ່ານການຈັດຕັ້ງປະຕິບັດໂຄງການ *GIZ/GCF* ແລະ ໂຄງການ *UNEP/GCF* ໃນງົບປະມານປະມານ 23.49 ລ້ານໂດລາສະຫະລັດ ຊຶ່ງ ກປສ ຈະເຮັດ ໜ້າທີ່ໃນການຄຸ້ມຄອງດ້ານການເງິນ ແລະ ຈັດຊື້ຈັດຈ້າງສຳລັບໂຄງການດັ່ງກ່າວ. ໃນປີ 2021-2025, ຄາດວ່າ ການສະໜັບສະໜູນທາງດ້ານທຶນຮອນພາຍໃຕ້ ຮ່ວງທຶນການປ່ຽນແປງດິນຟ້າອາກາດ ມີກິດຈະກຳດັ່ງນີ້:

*1)* ສືບຕໍ່ຂະຫຍາຍການຈັດຕັ້ງປະຕິບັດຄາດໝາຍການຫຼຸດຜ່ອນອາຍເຮືອນແກ້ວ (*NDC*) ແລະ ກົນໄກການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວເປັນຕົ້ນໂຄງການ *REDD+* ເພື່ອປະກອບສ່ວນເຂົ້າໃນການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວສາກົນ ສົ່ງເສີມທຸລະກິດທີ່ປ່ອຍທາດອາຍເຮືອນແກ້ວຕ່ຳ ເຂົ້າໃນການບັນເທົາການປ່ຽນແປງສະພາບດິນຟ້າອາກາດ; ການນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝ ທີ່ສ້າງສິ່ງເສດເຫຼືອໜ້ອຍ, ປະຢັດພະລັງງານ ແລະ ນຳໃຊ້ພະລັງງານທີ່ສະອາດ ເປັນມິດກັບສິ່ງແວດລ້ອມ;

*2)* ເຊື່ອມສານການປັບຕົວກັບສະພາບການປ່ຽນແປງດິນຟ້າອາກາດ ແລະ ຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທຳມະຊາດ ເຂົ້າໃນແຜນພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງຢ່າງເປັນລະບົບ; ຈັດຕັ້ງປະຕິບັດແຜນການຄຸ້ມຄອງ, ມາດຕະການປ້ອງກັນ ແລະ ສະກັດກັ້ນຕ້ານຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທຳມະຊາດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ (ລະບົບເຕືອນໄພ, ປ້ອງກັນ, ການຊ່ວຍເຫຼືອສຸກເສີນ);

*3)* ຈັດຕັ້ງປະຕິບັດແຜນງານຄົ້ນຄວ້າ ແລະ ເກັບກຳຂໍ້ມູນຄວາມສ່ຽງໄພພິບັດຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນເພື່ອປະເມີນຄວາມສ່ຽງ, ສ້າງແຜນທີ່ຄວາມສ່ຽງໄພພິບັດ, ສ້າງແຜນດຳເນີນງານແກ້ໄຂບັນຫາຄວາມສ່ຽງ ແລະ ຄວາມບອບບາງ ເພື່ອໃຊ້ເຂົ້າໃນການວາງແຜນຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

*4)* ສ້າງ ແລະ ຈັດຕັ້ງປະຕິບັດກິດຈະກຳປຸກຈິດສຳນຶກ ກ່ຽວກັບຜົນກະທົບຈາກການປ່ຽນແປງດິນຟ້າອາກາດ, ການປັບຕົວກັບການປ່ຽນແປງດິນຟ້າອາກາດ, ການຄຸ້ມຄອງ ແລະ ສະກັດກັ້ນໄພພິບັດທຳມະຊາດເພື່ອຮັບປະກັນການນຳໃຊ້ຊັບພະຍາກອນທ້ອງຖິ່ນຢ່າງມີປະສິດທິພາບ;

5) ຈັດຕັ້ງປະຕິບັດແຜນການຄຸ້ມຄອງ, ມາດຕະການປ້ອງກັນ ແລະ ສະກັດກັ້ນຕ້ານຜົນກະທົບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທຳມະຊາດທີ່ມີປະສິດທິພາບ ແລະ ປະສິດທິຜົນ, ສ້າງຄວາມເຂັ້ມແຂງໃນການພະຍາກອນນ້ຳຖ້ວມ, ໄພແຫ້ງແລ້ງ ແລະ ແຜ່ນດິນໄຫວ, ສືບຕໍ່ປັບປຸງລະບົບຕາໜ່າງສະຖານີອຸຕຸນິຍົມ ແລະ ອຸທົກກະສາດໃນຂອບເຂດທົ່ວປະເທດ, ປັບປຸງ ແລະ ຂະຫຍາຍລະບົບເຕືອນໄພລ່ວງໜ້າໃຫ້ຫຼາຍຂຶ້ນ.

- **ແຜນຈັດສັນງົບປະມານ**

ແຜນຈັດສັນງົບປະມານ ສຳລັບການລົງທຶນໃນໂຄງການ, ໂຄງການຍ່ອຍ ແລະ ກິດຈະກຳ ສຳລັບປີ 2021-2025 ປະກອບມີ 3 ແຜນຍ່ອຍຄື: (1) ໂຄງການທີ່ນຳໃຊ້ທຶນພາຍໃນຂອງ ກປສ (ຕາຕະລາງ 2.4); (2) ໂຄງການຍ່ອຍພາຍໃຕ້ການຈັດຕັ້ງປະຕິບັດ ຄສລ 2 ແລະ ໂຄງການໃໝ່ພາຍໃຕ້ທຶນສະໜັບສະໜູນຂອງທະນາຄານໂລກ (ຕາຕະລາງ 2.5.1, 2.5.2 ແລະ 2.5.3); ແລະ (3) ໂຄງການພາຍໃຕ້ທຶນອົງການຈັດຕັ້ງສາກົນອື່ນ ເຊັ່ນ: ໂຄງການຂອງອົງການ UNDP, ການສະໜັບສະໜູນຂອງກອງທຶນ GCF, ໂຄງການຊ່ວຍເຫຼືອຈາກ GCF ຜ່ານ ອົງການ UNEP, GIZ ແລະ ອົງການຈັດຕັ້ງສາກົນອື່ນໆ (ຕາຕະລາງ 2.6). ການສັງລວມການຄາດຄະເນການຈັດສັນງົບປະມານທັງໝົດໃນລະຫວ່າງປີ 2021-2025 ລະບຸໃນ ຕາຕະລາງ 2.7.

*(1) ການຈັດສັນງົບປະມານໂຄງການທີ່ນຳໃຊ້ທຶນພາຍໃນ ຂອງ ກປສ.*

ທຶນພາຍໃນ ຂອງ ກປສ ສຳລັບ ປີ 2021-2025 ຄາດວ່າຈະມີປະມານ 6.65 ລ້ານໂດລາສະຫະລັດ ຊຶ່ງງົບປະມານດັ່ງກ່າວຈະຈັດສັນເພື່ອສະໜອງໃຫ້ແກ່ພາກສ່ວນຕ່າງໆ (ຂະແໜງການກ່ຽວຂ້ອງຂອງພາກລັດ, ມະຫາວິທະຍາໄລ, ອົງການຈັດຕັ້ງມະຫາຊົນ ແລະ ຊຸມຊົນ) ໃນການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ ຕາມແຜນບູລິມະສິດຂອງລັດຖະບານ ແລະ ສອດຄ່ອງກັບນະໂຍບາຍການໃຫ້ທຶນຂອງ ກປສ ໃນແຕ່ລະປີ ຕາມ 6 ຮ່ອງທຶນ ໂດຍຜູ້ທີ່ຕ້ອງການໃຊ້ທຶນຈະຕ້ອງໄດ້ຂຽນບົດສະເໜີໂຄງການ ສົ່ງໃຫ້ ກປສ ແລະ ນຳເຂົ້າສູ່ຂະບວນການພິຈາລະນາອະນຸມັດ ຕາມລະບຽບຂັ້ນຕອນ ທີ່ກຳນົດໄວ້ໃນຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງກອງທຶນປົກປັກຮັກສາສິ່ງແວດລ້ອມ (ປີ 2021). ນອກນັ້ນ, ກໍລວມເອົາການຈັດສັນງົບປະມານສຳລັບ ເຫດການສຸກເສີນ, ບັນຫາຮີບດ່ວນກ່ຽວກັບຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ. ຕາຕະລາງລຸ່ມນີ້ແມ່ນການຈັດສັນງົບປະມານສຳລັບໂຄງການ ແລະ ກິດຈະກຳຂອງ ກປສ ທີ່ນຳໃຊ້ງົບພາຍໃນ ຂອງ ກປສ ລະຫວ່າງປີ 2021-2025.

ຕາຕະລາງ 2.4 ການຈັດສັນງົບປະມານ (ລ້ານໂດລາສະຫະລັດ) ສຳລັບບ້ວງທຶນພາຍໃນ ຂອງ ກປສ

| ຮ່ອງທຶນ | ຈຳນວນໂຄງການຍ່ອຍ | 2021 | 2022 | 2023 | 2024 | 2025 | ລວມທັງໝົດ (ໂດລາສະຫະລັດ) |
|---|---|---|---|---|---|---|---|
| ນະໂຍບາຍ | 4 | 0.18 | 0.18 | 0.19 | 0.19 | 0.19 | 0.93 |
| ຊີວະນາໆພັນ | 3 | 0.14 | 0.14 | 0.14 | 0.14 | 0.14 | 0.70 |
| ຄວບຄຸມມົນລະ | 5 | 0.24 | 0.23 | 0.23 | 0.23 | 0.23 | 1.16 |

| | | | | | | | |
|---|---|---|---|---|---|---|---|
| ພິດ | | | | | | | |
| ການຄຸ້ມຄອງຊັບພະຍາກອນນ້ຳ | 3 | 0.14 | 0.14 | 0.14 | 0.14 | 0.14 | 0.70 |
| ການຄຸ້ມຄອງການນຳໃຊ້ທີ່ດິນ | 3 | 0.14 | 0.14 | 0.14 | 0.14 | 0.14 | 0.70 |
| ການປ່ຽນແປງດິນຟ້າອາກາດ | 2 | 0.10 | 0.10 | 0.09 | 0.09 | 0.09 | 0.47 |
| ຄ່າບໍລິຫານ | | 0.39 | 0.40 | 0.40 | 0.40 | 0.40 | 1.99 |
| **ທັງໝົດ** | **20** | **1.33** | **1.33** | **1.33** | **1.33** | **1.33** | **6.65** |
| **ລວມທັງໝົດ : 6.65 ລ້ານ (ຫົກລ້ານຫົກແສນຫ້າສິບພັນ) ໂດລາສະຫະລັດ** | | | | | | | |

*(2) ການຈັດສັນງົບປະມານສຳລັບການຈັດຕັ້ງປະຕິບັດໂຄງການ ຄສລ 2 ແລະ ໂຄງການໃໝ່ຂອງທະນາຄານໂລກ*

ເນື່ອງຈາກສະພາບການລະບາດຂອງພະຍາດໂຄວິດ 19 ໃນປີ 2020 ເຮັດໃຫ້ມີຫຼາຍໂຄງການບໍ່ສຳເລັດກິດຈະກຳຕາມແຜນການທີ່ກຳນົດໄວ້ ຍ້ອນມີຄວາມຫຍຸ້ງຍາກໃນການເດີນທາງ, ການປະຊຸມໜ້າຕໍ່ໜ້າ ແລະ ການລົງເຄື່ອນໄຫວພາກສະໜາມ, ສະນັ້ນ ໂຄງການ ຄສລ 2 ຈຶ່ງໄດ້ຕໍ່ອາຍຸໂຄງການອອກໄປຕື່ມ 1 ປີ ຊຶ່ງວັນທີປິດໂຄງການ ແມ່ນຕໍ່ອາຍຸເວລາໄປຮອດເດືອນມິຖຸນາ ປີ 2022. ພ້ອມດຽວກັນນັ້ນ, ຍ້ອນເຫດຜົນດຽວກັນ ການກະກຽມໂຄງການໃໝ່ ຮ່ວມກັບທະນາຄານໂລກ, ກຊສ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ ສຳລັບ ໂຄງການຄຸ້ມຄອງສິ່ງແວດລ້ອມ ແລະ ສິ່ງເສດເຫຼືອ (EWMP) ທີ່ຈະຂໍທຶນກູ້ຢືມຈາກທະນາຄານໂລກ ກໍ່ມີຄວາມຊັກຊ້າເຊັ່ນກັນເຮັດໃຫ້ການຄາດຄະເນງົບປະມານ ແລະ ການຈັດສັນງົບໃນແຕ່ລະອົງປະກອບໂຄງການຍັງບໍ່ທັນມີຄວາມຊັດເຈນ ນອກນັ້ນ, ຍັງໄດ້ກະກຽມໂຄງການຄຸ້ມຄອງພູມສັນຖານ ແລະ ພັດທະນາຊີວິດການເປັນຢູ່ມີຈຸດປະສົງເພື່ອສົ່ງເສີມການຄຸ້ມຄອງປ່າໄມ້ແບບຍືນຍົງ, ປັບປຸງການຄຸ້ມຄອງປ່າສະຫງວນ, ແລະ ສົ່ງເສີມໂອກາດໃນການປັບປຸງຊີວິດການເປັນຢູ່ ໃນບັນດາເຂດພູມີທັດທີ່ຖືກຄັດເລືອກໃນ ສປປ ລາວ (LLL) ໄລຍະໂຄງການ 06 ປີ (2021-2026) ແລະ ມີງົບປະມານທັງໝົດ 57 ລ້ານ ໂດລາສະຫະລັດ, ງົບປະມານ ໂຄງການ LLL ສ່ວນໃຫຍ່ແມ່ນກົມປ່າໄມ້ເປັນຜູ້ຄຸ້ມຄອງ ໃນນັ້ນ, ກປສ ແມ່ນໄດ້ຄຸ້ມຄອງແຕ່ສ່ວນງົບປະມານກິດຈະກຳຂອງ ພາກສ່ວນບັງຄັບໃຊ້ກົດໝາຍ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈຳນວນ ງົບປະມານ 3,58 ລ້ານໂດລາສະຫະລັດ ພ້ອມນັ້ນ ກປສ ກໍໄດ້ງົບປະມານເພື່ອບໍລິຫານໂຄງການ ຈຳນວນ 0.36 ລ້ານໂດລາສະຫະລັດ ຊຶ່ງໂຄງການຈະເລີ້ມຈັດຕັ້ງປະຕິບັດ ນັບແຕ່ເດືອນ 7/2021 ເປັນຕົ້ນໄປ. ຕາຕະລາງ 2.5.1, 2.5.2 ແລະ 2.5.3 ຂ້າງລຸ່ມນີ້ ໄດ້ສັງລວມການຈັດສັນທຶນ ຄສລ 2, EWMP ແລະ LLL ຕາມລຳດັບ. ຈຳນວນງົບປະມານເຫຼົ່ານີ້ຈະໄດ້ມີການປັບປຸງໃນທ້າຍປີ 2021 ເມື່ອຄວາມຄືບໜ້າຂອງການກະກຽມໂຄງການຊັດເຈນຂຶ້ນ.

| ຕາຕະລາງ 2.5.1 ການຈັດສັນງົບປະມານ (ລ້ານໂດລາສະຫະລັດ) ສໍາລັບໂຄງການ ຄສລ 2 ໃນປີ 2021-2022 | | | | | | | | |
|---|---|---|---|---|---|---|---|---|
| ຮ່ວງທຶນ | No sub-projects | 2014-2017 | 2018 | 2019 | 2020 | 2021 | 2022 | Total |
| ອົງປະກອບ 1 (PICE) | 28 | 5.72 | 3.69 | 3.80 | 3.28 | 2.62 | | 19.11 |
| ອົງປະກອບ 2 (BCD) | 20 | 2.09 | 2.11 | 4.32 | 2.94 | 0.69 | | 12.15 |
| ອົງປະກອບ 3 (ຫກປສ) | | 1.66 | 0.45 | 0.56 | 0.40 | 1.59 | 0.48 | 5.14 |
| ງົບປະມານເລີ່ມຕົ້ນໂຄງການ | | 0.75 | | | | | | 0.75 |
| ຂາດດຸນອັດຕາແລກປ່ຽນ | | | | | 1.31 | 0.31 | 0.06 | 1.68 |
| ທັງໝົດ | | 10.22 | 6.25 | 8.67 | 7.93 | 5.21 | 0.54 | 38.83 |
| ລວມທັງໝົດ ປີ (2021-2022) : 5.75 ລ້ານ (ຫ້າລ້ານເຈັດແສນຫ້າສິບພັນ) ໂດລາສະຫະລັດ | | | | | | | | |

| ຕາຕະລາງ 2.5.2 ການຈັດສັນງົບປະມານ (ລ້ານໂດລາສະຫະລັດ) ສໍາລັບໂຄງການ EWMP (ປະມານ 40 ລ້ານໂດລາສະຫະລັດ, ໄລຍະເວລາ 7 ປີ) | | | | | | | | |
|---|---|---|---|---|---|---|---|---|
| ຮ່ວງທຶນ | ໂຄງການຍ່ອຍ | 2021 | 2022 | 2023 | 2024 | 2025 | 2026-2028 | ທັງໝົດ |
| ອົງປະກອບ 1 (PICE) | | - | | 0.63 | 1.80 | 1.80 | 2.98 | 7.21 |
| ອົງປະກອບ 2 (EPC) | | - | | 2.49 | 7.20 | 7.20 | 11.91 | 28.80 |
| ອົງປະກອບ 3 (ຫກປສ) | | - | | 0.34 | 1.00 | 1.00 | 1.65 | 3.99 |
| ທັງໝົດ | | - | | 3.46 | 10.00 | 10.00 | 16.54 | 40.00 |
| ລວມທັງໝົດ ປີ (2023-2025) : 23.46 ລ້ານ (ຊາວສາມລ້ານສີ່ແສນຫົກສິບພັນ) ໂດລາສະຫະລັດ | | | | | | | | |

| ຕາຕະລາງ 2.5.3 ການຈັດສັນງົບປະມານ (ລ້ານໂດລາສະຫະລັດ) ສຳລັບໂຄງການ LLL (ປະມານ 3.94 ລ້ານໂດລາສະຫະລັດ, ໄລຍະເວລາ 6 ປີ) | | | | | | | | |
|---|---|---|---|---|---|---|---|---|
| ຮ່ອງທຶນ | ໂຄງການຍ່ອຍ | 2021 | 2022 | 2023 | 2024 | 2025 | 2026-2028 | ທັງໝົດ |
| ອົງປະກອບ 1 (BFW) | | 0.25 | 0.55 | 0.55 | 0.55 | 0.55 | 1.13 | 3.58 |
| ອົງປະກອບ 2 (ຫກປສ) | | 0.03 | 0.06 | 0.06 | 0.06 | 0.06 | 0.09 | 0.36 |
| **ຍອດລວມ** | | **0.28** | **0.61** | **0.61** | **0.61** | **0.61** | **1.22** | **3.94** |
| ລວມທັງໝົດ ປີ (2021-2025) : 2.72 ລ້ານ (ສອງລ້ານເຈັດແສນຊາວພັນ) ໂດລາສະຫະລັດ | | | | | | | | |

*(3) ສັງລວມການຈັດສັນງົບປະມານທັງໝົດ*

ຕາຕະລາງ 2.6 ຂ້າງລຸ່ມນີ້ແມ່ນສັງລວມການຈັດສັນງົບປະມານທີ່ຄາດວ່າຈະໄດ້ຈາກກອງທຶນ GCF ທີ່ໄດ້ສະໜັບສະໜູນຜ່ານອົງການ GIZ ແລະ UNEP ຊຶ່ງ ທຶນທັງໝົດຈະມາຜ່ານຮ່ອງທຶນການປ່ຽນແປງດິນຟ້າອາກາດ ແລະ ຕາຕະລາງ 2.7 ໄດ້ສັງລວມຄາດຄະເນການຈັດສັນງົບປະມານທັງໝົດ ສຳລັບປີ 2021-2025.

| ຕາຕະລາງ 2.6 ການຈັດສັນງົບປະມານຈາກກອງທຶນ GCF ແລະ ກອງທຶນອື່ນໆ (ລ້ານໂດລາສະຫະລັດ) | | | | | | | |
|---|---|---|---|---|---|---|---|
| ແຫຼ່ງທຶນ | 2021 | 2022 | 2023 | 2024 | 2025 | Total | ໝາຍເຫດ |
| ອົງການ GCF/GIZ ສຳລັບໂຄງການ I-GFLL (ເງິນຊ່ວຍເຫຼືອລ້າ, 13.49 ລ້ານໂດລາສະຫະລັດ ໃນລະຫວ່າງປີ 2020 ຫາ 2024) | 3.00 | 5.27 | 5.19 | 0.03 | | 13.49 | |
| ອົງການ UNEP/GCF (ເງິນຊ່ວຍເຫຼືອລ້າ 10ລ້ານໂດລາສະຫະລັດ 2020 ຫາ 2025) | 2.54 | 2.18 | 2.11 | 1.49 | 1.68 | 10.00 | |
| ອົງການ GCF- ໂຄງການກະກຽມຄວາມພ້ອມໃຫ້ ກປສ ເພື່ອສຳເລັດການສະໝັກເຂົ້າເປັນອົງກອນທີສາມາດເຂົ້າເຖິງແຫຼ່ງທຶນໄດ້ | 0.2 | 0.2 | | | | 0.40 | |

| | | | | | | | |
|---|---|---|---|---|---|---|---|
| ໂດຍກົງ 2021-2022 | | | | | | | |
| **ທັງໝົດ** | 5.74 | 7.65 | 7.30 | 1.52 | 1.68 | 23.89 | |
| **ລວມທັງໝົດ (ປີ 2021-2025): 23.89 ລ້ານ (ຊາວສາມລ້ານແປດແສນເກົ້າສິບພັນ) ໂດລາສະຫະລັດ** | | | | | | | |
| ໝາຍເຫດ (1) ທັງໝົດ 13.49 ລ້ານໂດລາສະຫະລັດແມ່ນໄດ້ຮັບການຢັ້ງຢືນແລ້ວ. ໂຄງການດັ່ງກ່າວແມ່ນໄດ້ຖືກອະນຸມັດຈາກກອງທຶນ GCF ໃນປີ 2019, ອົງການ GIZ ແມ່ນອົງກອນທີ່ຖືກຮັບຮອງຈາກກອງທຶນດັ່ງກ່າວ ແລະ ກົມປ່າໄມ້ແມ່ນເປັນຜູ້ຈັດຕັ້ງປະຕິບັດ ແລະ ງົບປະມານແມ່ນເອົາມາຜ່ານ ກປສ. ຈະໄດ້ມີການເປີດບັນຊີສະເພາະ ແລະ ການເບີກງົບປະມານໃຊ້ຈ່າຍເລີ່ມຕົ້ນໃນໄຕມາດ 3 ຂອງປີ 2020.<br>ໝາຍເຫດ (2) ໂຄງການທີ່ຂໍງົບປະມານມາຈາກກອງທຶນ GCF "ໂຄງການສ້າງຄວາມທົນທານຂອງປະຊາກອນໃນຕົວເມືອງ ເພື່ອປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດໂດຍການຄຸ້ມຄອງ ແລະ ນຳໃຊ້ທ່າແຮງຂອງລະບົບນິເວດ ຢູ່ ສປປ ລາວ" ໂດຍຜ່ານອົງການ UNEP ທີ່ໄດ້ຮັບອະນຸມັດງົບປະມານຈາກກອງທຶນ GCF (10 ລ້ານໂດລາສະຫະລັດໃນລະຫວ່າງປີ 2020-2025). ສັນຍາສະໜອງທຶນໄດ້ລົງລາຍເຊັນແລ້ວ. ໄດ້ມີການເປີດບັນຊີສະເພາະ ແລະ ເລີ່ມການເບີກງົບປະມານໃຊ້ຈ່າຍໃນໄຕມາດ 4 ຂອງປີ 2020. | | | | | | | |

| ຕາຕະລາງ 2.7 ງົບປະມານຈັດສັນທັງໝົດລະຫວ່າງປີ 2021-2025 (ສຳລັບທຸກແຫຼ່ງທຶນ) | | | | | | | |
|---|---|---|---|---|---|---|---|
| ແຫຼ່ງທຶນ | ທັງໝົດ (ລ້ານໂດລາສະຫະລັດ) | ການເບີກຈ່າຍປະຈຳປີ (ລ້ານໂດລາສະຫະລັດ) | | | | | |
| | | 2021 | 2022 | 2023 | 2024 | 2025 | Total |
| ກປສ (ງົບປະມານປະກອບສ່ວນປະຈຳປີ) | 6.65 ລ້ານໂດລາສະຫະລັດ | 1.33 | 1.33 | 1.33 | 1.33 | 1.33 | 6.65 |
| ທະນາຄານໂລກ- ຄສລ2 (2014-2021, 8 ປີ) | 38.83 ລ້ານໂດລາສະຫະລັດ | 5.21 | 0.54 | - | - | - | 5.75 |
| ທະນາຄານໂລກ-ໂຄງການ LLL (2021-2026, 6ປີ) | 3.94 ລ້ານໂດລາສະຫະລັດ | 0.28 | 0.61 | 0.61 | 0.61 | 0.61 | 2.72 |
| ທະນາຄານໂລກ-ໂຄງການ EWMP (2023-2029, 7ປີ) | 40 ລ້ານໂດລາສະຫະລັດ, | | | 3.46 | 10.00 | 10.00 | 23.46 |
| ອົງການGIZ / GCF ໂຄງການ I-GFLL (ທຶນຊ່ວຍເຫຼືອລ້າ) | 13.49 ລ້ານໂດລາສະຫະລັດ | 3.00 | 5.27 | 5.19 | 0.03 | | 13.49 |
| ອົງການ UNEP/GCF (ທຶນຊ່ວຍເຫຼືອລ້າ) | 10 ລ້ານໂດລາສະຫະລັດ | 2.54 | 2.18 | 2.11 | 1.49 | 1.68 | 10.00 |
| ອົງການ GCF- ໂຄງການກະກຽມຄວາມພ້ອມໃຫ້ ກປສ ເພື່ອສຳເລັດການສະໝັກເຂົ້າເປັນອົງກອນທີ່ສາມາດເຂົ້າເຖິງແຫຼ່ງທຶນໄດ້ໂດຍກົງ 2021-2022 | 0.4 ລ້ານໂດລາສະຫະລັດ | 0.20 | 0.20 | | | | 0.40 |
| ລວມທັງໝົດ | | 12.56 | 10.13 | 12.70 | 13.46 | 13.62 | 62.47 |
| ລວມທັງໝົດ: 62.47 ລ້ານ (ຫົກສິບສອງລ້ານສີ່ແສນເຈັດສິບພັນ) ໂດລາສະຫະລັດ | | | | | | | |

### 2.3.3 ຈັດຕັ້ງປະຕິບັດຍຸດທະສາດ 4: ປັບປຸງຂອດການຮ່ວມມື ແລະ ການຫັນເປັນຄູ່ຮ່ວມງານ

ກປສ ຈະເພີ່ມທະວີການຮ່ວມມືກັບອົງການຕ່າງໆ ແລະ ຫັນເປັນຄູ່ຮ່ວມງານ ເພື່ອເພີ່ມປະສິດທິພາບໃນການລະດົມທຶນ ແລະ ສະໜອງທຶນ ພ້ອມທັງ ອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດບັນດາໂຄງການລົງທຶນ ແລະ ກິດຈະກຳໃໝ່ ທີ່ໄດ້ຕົກລົງເຫັນດີກັບອົງການສະໜອງທຶນສາກົນ ແລະ ໂຄງການໄດ້ຖືກຮັບຮອງໂດຍສະພາບໍລິຫານ ຂອງ ກປສ ຊຶ່ງຄາດຄະເນຜົນໄດ້ຮັບສຳລັບຍຸດທະສາດດັ່ງກ່າວມີຄື: (ກ) ມີເຄືອຂ່າຍການຮ່ວມມື ແລະ ເຊື່ອມໂຍງພາຍໃນກັບຂະແໜງການທີ່ກ່ຽວຂ້ອງພາກລັດ, ເອກກະຊົນ ແລະ ຜູ້ພັດທະນາທັງໃນສູນກາງ ແລະ ທ້ອງຖິ່ນ, (ຂ) ມີເຄືອຂ່າຍການຮ່ວມມື ແລະ ເຊື່ອມໂຍງກັບຄູ່ຮ່ວມພັດທະນາໃນອະນຸພາກພື້ນ, ພາກພື້ນ ແລະ ລະດັບສາກົນ; ແລະ (ຄ) ມີເຄື່ອງມືໂຄສະນາ ແລະ ສື່ສິ່ງພິມ ເພື່ອເຜີຍແຜ່ກ່ຽວກັບຜົນສຳເລັດ ການເຄື່ອນໄຫວການຈັດຕັ້ງປະຕິບັດຂອງ ກປສ ດັ່ງມີລາຍລະອຽດລຸ່ມນີ້:

(1) ເພີ່ມທະວີການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຊຸກຍູ້ສົ່ງເສີມການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດໃຫ້ມີປະສິດທິຜົນ ເຊັ່ນ: ຮ່ວມມືກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອຮັບປະກັນໃຫ້ການສະໜອງທຶນ ໃນວຽກງານຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ສອດຄ່ອງຕາມນະໂຍບາຍ ແລະ ແຜນບູລິມະສິດ ຂອງລັດຖະບານ; ຮ່ວມມືກັບ ກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອດຳເນີນການປະເມີນສິ່ງແວດລ້ອມແບບຍຸດທະສາດ ສຳລັບຂະແໜງພະລັງງານ ແລະ ບໍ່ແຮ່; ຮ່ວມມືກັບກະຊວງແຜນການ ແລະ ການລົງທຶນ ເພື່ອຈັດຕັ້ງປະຕິບັດແຜນຍຸດທະສາດການເຕີບໂຕສີຂຽວ; ຮ່ວມມືກັບກະຊວງກະສິກຳ ແລະ ປ່າໄມ້ ເພື່ອສົ່ງເສີມການຄຸ້ມຄອງປ່າສະຫງວນໃຫ້ກາຍເປັນສວນອຸດທະຍານ ແລະ ເປັນແຫຼ່ງທ່ອງທ່ຽວທຳມະຊາດ; ຮ່ວມມືກັບອົງການແນວລາວສ້າງຊາດ ເພື່ອສົ່ງເສີມປຸກຈິດສຳນຶກໃນການຄຸ້ມຄອງສິ່ງເສດເຫຼືອ ແລະ ສ້າງບ້ານຂຽວສະອາດງາມຕາ; ຮ່ວມມືກັບມະຫາວິທະຍາໄລແຫ່ງຊາດໃນການຄົ້ນຄ້ວາ ກ່ຽວກັບຄ່າບໍລິການລະບົບນິເວດ (PES), ການຄິດໄລ່ມູນຄ່າ ແລະ ຂຶ້ນບັນຊີຊັບພະຍາກອນທຳມະຊາດແບບຍຸດທະສາດ ແລະ ຮ່ວມມືກັບພາກສ່ວນອື່ນໆ;

(2) ເສີມຂະຫຍາຍການຮ່ວມມື ແລະ ການຫັນເປັນຄູ່ຮ່ວມງານກັບຄູ່ຮ່ວມພັດທະນາທັງໃນພາກພື້ນ ແລະ ສາກົນ ດັ່ງນີ້ :

- ເສີມສ້າງສາຍພົວພັນກັບກອງທຶນ GEF ແລະ ກອງທຶນ GCF ເພື່ອສາມາດເຂົ້າເຖິງແຫລ່ງທຶນໄດ້ໂດຍກົງ;
- ຮ່ວມມື ກັບ ອົງການ GIZ ແລະ ກະຊວງກະສິກຳ ແລະ ປ່າໄມ້ ເພື່ອຈັດຕັ້ງປະຕິບັດ “ໂຄງການຈັດຕັ້ງປະຕິບັດແຜນງານສ້າງຄວາມເຂັ້ມແຂງໃນວຽກງານປ່າໄມ້, ການຄຸ້ມຄອງປ່າໄມ້ແບບພູມີທັດ ແລະ ສົ່ງເສີມຊີວິດການເປັນຢູ່ ( I-GFLL)”;
- ຮ່ວມມື ກັບ ອົງການ UNEP ແລະ ກົມຄຸ້ມຄອງການປ່ຽນແປງດິນຟ້າອາກາດ, ກຊສ ເພື່ອຈັດຕັ້ງປະຕິບັດໂຄງການສ້າງຄວາມທົນທານຂອງປະຊາກອນໃນຕົວເມືອງເພື່ອປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດໂດຍການຄຸ້ມຄອງ ແລະນຳໃຊ້ທ່າແຮງລະບົບນິເວດຢູ່ ສປປ ລາວ(Urban EBS);
- ສືບຕໍ່ເຮັດວຽກຢ່າງໃກ້ຊິດກັບທະນາຄານໂລກ ເພື່ອສຳເລັດການຈັດຕັ້ງປະຕິບັດໂຄງການ ຄສລ 2, ຮ່ວມມືກັບທະນາຄານໂລກ ແລະ ກະຊວງກະສິກຳ ແລະ ປ່າໄມ້ ເພື່ອຈັດຕັ້ງປະຕິບັດໂຄງການ LLL ແລະ ປະສານສົມທົບກັບ ທະນາຄານໂລກ, ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ແລະ ກະຊວງ ໂຍທາທິການ ແລະ ຂົນສົ່ງ ເພື່ອກະກຽມໂຄງການໃໝ່ ( ໂຄງການຄຸ້ມຄອງສິ່ງແວດລ້ອມ ແລະ ສິ່ງເສດເຫຼືອ-EWMP) ໃຫ້ສໍາເລັດ;

- ເສີມສ້າງສາຍພົວພັນກັບອົງການຈັດຕັ້ງສາກົນອື່ນໆ ເພື່ອສ້າງໂອກາດໃນການຊອກຫາແຫລ່ງທຶນໃໝ່ ເພື່ອມາຈັດຕັ້ງປະຕິບັດວຽກງານຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2015) ເຊັ່ນ: ທະນາຄານພັດທະນາອາຊີ (ADB), GGGI, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດ ແລະ ອົງການຈັດຕັ້ງສາກົນອື່ນໆ.

(3) ເພີ່ມທະວີການໂຄສະນາ ແລະ ເຜີຍແຜ່:

- ໂຄສະນາ ແລະ ເຜີຍແຜ່ ກ່ຽວກັບ ການຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ ໃຫ້ແກ່ສັງຄົມ ຜ່ານສື່ຕ່າງໆຢ່າງເປັນປົກກະຕິ ເຊັ່ນ: ແຜ່ນພັບ, ໂປສເຕີ, ໜັງສືພິມ, ວາລະສານ, ວິທະຍຸ, ໂທລະພາບ, ວິດີໂອສັ້ນ, ເວບໄຊ ແລະ ເຟສບຸກ ເພື່ອສ້າງຄວາມເຂົ້າໃຈ ແລະ ສ້າງຈິດສໍານຶກໃຫ້ທຸກຊັ້ນຄົນໃນສັງຄົມ ເຫັນໄດ້ຄວາມສໍາຄັນ ແລະ ຄວາມຈໍາເປັນໃນການຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ ແລະ ມີສ່ວນຮ່ວມເຂົ້າໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວຢ່າງກວ້າງຂວາງ;
- ໂຄສະນາ ແລະ ເຜີຍແຜ່ ກ່ຽວກັບຜົນງານການຈັດຕັ້ງປະຕິບັດວຽກງານ ກປສ ລວມທັງ ຜົນການ ຈັດຕັ້ງປະຕິບັດໂຄງການທີ່ໄດ້ຮັບທຶນຈາກ ກປສ ໃນການປະກອບສ່ວນເຂົ້າໃນການຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ຜ່ານສື່ສິ່ງພິມຕ່າງໆ;
- ຈັດຕັ້ງເຊື່ອມຊຶມ ແລະ ເຜີຍແຜ່ ບັນດານິຕິກໍາ ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານຂອງ ກປສ ເປັນຕົ້ນ ລະບຽບການຄຸ້ມຄອງ ກປສ, ຄູ່ມືການຄຸ້ມຄອງໂຄງການ ໃຫ້ແກ່ພະນັກງານ ກປສ, ພາກສ່ວນທີ່ໄດ້ຮັບທຶນຈາກ ກປສ ແລະ ພາກສ່ວນຕ່າງໆທີ່ມີຄວາມສົນໃຈສະເໜີຂໍນໍາໃຊ້ທຶນຈາກ ກປສ;
- ສ້າງແຜນດໍາເນີນງານ ການລະດົມທຶນ ແລະ ການສື່ສານ 2021-2025 ເພື່ອເປັນເຄື່ອງມືໃນການໂຄສະນາລະດົມທຶນ ພ້ອມທັງ ເຂົ້າຮ່ວມກອງປະຊຸມ, ສໍາມະນາ, ຝຶກອົບຮົມ ແລະ ພົບປະກັບຄູ່ຮ່ວມພັດທະນາ ແລະ ຜູ້ໃຫ້ທຶນຕ່າງໆ;
- ສ້າງເຄື່ອງມືໃນການໂຄສະນາເຜີຍແຜ່ ເຊັ່ນ: ແຜ່ນພັບ, ວາລະສານ, ວິດີໂອ ແລະ ສື່ສິ່ງພິມຕ່າງໆ ເພື່ອແຈກຢາຍໃຫ້ຂະແໜງການທີ່ກ່ຽວຂ້ອງ ແລະ ສັງຄົມ ຢ່າງເປັນປົກກະຕິ ແລະ ເນື່ອງໃນວັນສໍາຄັນຕ່າງໆ ເຊັ່ນ: ວັນສິ່ງແວດລ້ອມໂລກ, ວັນປູກຕົ້ນໄມ້ ແລະ ວັນອື່ນໆ;
- ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຈັດກິດຈະກໍາໂຄສະນາເຜີຍແຜ່ ແລະ ປຸກຈິດສໍານຶກ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ໃນໂຮງຮຽນ ແລະ ສັງຄົມ.

# ພາກທີ III

## ມາດຕະການ ແລະ ກົນໄກການຈັດຕັ້ງປະຕິບັດ

### 3.1 ມາດຕະການ

ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນການ 5 ປີ (2021-2025) ໃຫ້ບັນລຸຜົນສຳເລັດຕາມເປົ້າໝາຍລວມ, ຄາດໝາຍສູ້ຊົນ ແລະ ວຽກງານຈຸດສຸມທີ່ກຳນົດໄວ້, ກປສ ຈະໄດ້ດຳເນີນມາດຕະການດັ່ງນີ້:

1) ຄະນະນຳ ຫກປສ ຈັດຕັ້ງເຊື່ອມຊຶມແຜນການ 5 ປີ (2021-2025) ໃຫ້ ພະນັກງານ ຫກປສ ເພື່ອຮັບປະກັນຄວາມເປັນເອກະພາບ ໃນການຈັດຕັ້ງຜັນຂະຫຍາຍແຜນການດັ່ງກ່າວໃຫ້ປະສົບຜົນສຳເລັດ;

2) ຮັບປະກັນການປະສານງານໃຫ້ມີປະສິດທິພາບ ລະຫວ່າງ ຫກປສ, ຜູ້ໃຫ້ທຶນ, ຂະແໜງການທີ່ກ່ຽວຂ້ອງ ແລະ ທ້ອງຖິ່ນ ເພື່ອຮັບປະກັນການຈັດຕັ້ງປະຕິບັດໂຄງການໄປຕາມຈຸດປະສົງ ແລະ ແຜນການ;

3) ມອບໃຫ້ບັນດາພະແນກການ ພາຍໃນ ຫກປສ ຜັນຂະຫຍາຍເປັນແຜນດຳເນີນງານ ທີ່ມີກອບໜ້າວຽກ ແລະ ຕົວຊີ້ວັດຈະແຈ້ງ ແລະ ຈັດລຽງບູລິມະສິດວຽກຈຸດສຸມ ພ້ອມທັງດຳເນີນການສຳມະນາວິທະຍາສາດ ກັບບັນດາພາກສ່ວນກ່ຽວຂ້ອງ ເພື່ອກຳນົດໜ້າວຽກບູລິມະສິດ ແລະ ຕົວຊີ້ວັດ ໃຫ້ຈະແຈ້ງ;

4) ປະເມີນຄືນພາລະບົດບາດ ແລະ ໜ້າທີ່ ຂອງ ຫກປສ ເປັນແຕ່ລະໄລຍະ ເພື່ອໃຫ້ສອດຄ່ອງກັບການຈັດຕັ້ງປະຕິບັດຄາດໝາຍສູ້ຊົນຂອງແຜນການ ພ້ອມທັງຈັດວາງບຸກຄະລາກອນ ແລະ ກຳນົດໜ້າວຽກຕາມຄວາມຕ້ອງການຂອງວຽກງານ; ຂຸດຄົ້ນການນຳໃຊ້ທ່າແຮງທາງດ້ານບຸກຄະລາກອນ ໃນການດຳເນີນງານທາງດ້ານວິຊາການ ໂດຍການກຳນົດນະໂຍບາຍຕໍ່ພະນັກງານໃນການເຮັດວຽກວິຊາສະເພາະ ແລະ ສ້າງເງື່ອນໄຂໃຫ້ມີການສະເໜີຄວາມຄິດສ້າງສັນ;

5) ສ້າງແຜນການການສະໜອງທຶນ ຂອງ ຫກປສ ໂດຍອີງຕາມຈຸດສຸມຂອງວຽກງານບູລິມະສິດ, ເດັດຂາດບໍ່ໃຫ້ມີການຈັດສັນງົບປະມານແບບສະເລ່ຍ ພ້ອມທັງສ້າງແຜນການລະດົມທຶນ ໂດຍປະສານສົມທົບກັບຄູ່ຮ່ວມພັດທະນາ ໃນການລະດົມທຶນເຂົ້າໃນການຈັດຕັ້ງປະຕິບັດວຽກງານບູລິມະສິດ;

6) ດຳເນີນການຕິດຕາມ, ກວດກາ ແລະ ປະເມີນຜົນ ການເຄື່ອນໄຫວວຽກງານໃຫ້ມີລັກສະນະລົງເລິກ ແລະ ຢ່າງເປັນປົກກະຕິ ອີງຕາມຕົວຊີ້ວັດໃນແຜນດຳເນີນງານແຕ່ລະໜ້າວຽກ ແລະ ອື່ນໆ;

7.) ຫັນເປັນທັນສະໄໝ ໂດຍມີການນຳໃຊ້ເຕັກນິກວິທະຍາສາດ ແລະ ຫົວຄິດປະດິດສ້າງ ໃນການຄຸ້ມຄອງ ແລະ ປະເມີນການຈັດຕັ້ງປະຕິບັດໂຄງການຢ່າງມີປະສິດທິຜົນ.

### 3.2 ກົນໄກການຈັດຕັ້ງປະຕິບັດແຜນ 5 ປີ (2021-2025)

#### 3.2.1 ການຊີ້ນຳດ້ານນະໂຍບາຍ ແລະ ວິຊາການ

ສະພາບໍລິຫານ ກປສ ຮັບຜິດຊອບ ກຳນົດແນວທາງນະໂຍບາຍ ແລະ ຊີ້ນຳການຈັດຕັ້ງປະຕິບັດແຜນການ 5 ປີ (2021-2025) ພ້ອມທັງ ຕິດຕາມ ແລະ ຮັບຊາບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຕ່ລະ

ໄລຍະ, ຜົນສຳເລັດ, ບັນຫາ ແລະ ຂໍ້ສະເໜີ ກ່ຽວກັບ ການຈັດຕັ້ງປະຕິບັດ ຜ່ານລະບົບລາຍງານປົກກະຕິ (6 ເດືອນ ແລະ ປະຈຳປີ) ແລະ ວິທີການອື່ນໆຕາມຄວາມຕ້ອງການ.

ຄະນະວິຊາການ ກປສ (ຄກປສ) ຮັບຜິດຊອບໃນການທົບທວນ ແລະ ຮັບຮອງທຸກບົດສະເໜີໂຄງການທີ່ສະເໜີຂໍທຶນໜູນສະໜູນຈາກ ກປສ ພ້ອມທັງໃຫ້ຄຳແນະນຳດ້ານວິຊາການທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິ ບັດວຽກງານຂອງ ກປສ. ຄະນະວິຊາການຈະຕິດຕາມ ແລະ ຮັບຊາບເປັນແຕ່ລະໄລຍະ ກ່ຽວກັບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ, ຜົນສຳເລັດ, ບັນຫາ ແລະ ຂໍ້ສະເໜີ ກ່ຽວກັບການຈັດຕັ້ງປະຕິບັດໂຄງການ ຜ່ານກອງປະຊຸມຄະນະກຳມະການປະຈຳໄຕມາດ ແລະ ວິທີການອື່ນໆຕາມຄວາມເໝາະສົມ.

### 3.2.2 ໜ້າທີ່ຮັບຜິດຊອບ ຫກປສ

ຄະນະ ຫ້ອງການ ແລະ ພະນັກງານ ຫກປສ ລວມທັງ ທີ່ປຶກສາທັງໝົດ ຮັບຜິດຊອບຕໍ່ການຈັດຕັ້ງປະຕິບັດແຜນການ 5 ປີ ຂອງ ກປສ ໃຫ້ບັນລຸຕາມຄາດໝາຍສູ້ຊົນ ແລະ ໜ້າວຽກຈຸດສຸມທັງໝົດ. ເພື່ອໃຫ້ມີຄວາມຈະແຈ້ງ ແລະ ຮັບປະກັນການຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ຄະນະນຳຫ້ອງການ ກປສ (ຫົວໜ້າ ແລະ ຮອງຫົວໜ້າຫ້ອງການ) ຈະເປັນ ຜູ້ນຳພາ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດວຽກງານ ຂອງ ຫກປສ ຕາມພາລະບົດບາດ ພ້ອມນັ້ນ ຕ້ອງໄດ້ຈັດແບ່ງງານໃຫ້ບັນດາພະແນກ ພາຍໃນ ຫກປສ ແລະ ພະນັກງານທັງໝົດ ໂດຍມີການກຳນົດກອບໜ້າວຽກຢ່າງຈະແຈ້ງ ແລະ ມີການປະເມີນຜົນການຈັດຕັ້ງປະຕິບັດຕາມໂຕຊີ້ວັດເປັນແຕ່ລະໄລຍະ.

### 3.2.3 ປັບປຸງການຈັດຕັ້ງປະຕິບັດ ຫກປສ ແລະ ດັດສະນີຄວາມອາດສາມາດ ຫກປສ

ເພື່ອໃຫ້ບັນລຸວິໄສທັດ 2030, ເປົ້າໝາຍຍຸດທະສາດ 2025 ແລະ ໃຫ້ສອດຄ່ອງກັບດຳລັດ ກປສ ປີ 2017, ຫກສ ມີພາລະບົດບາດໃນການລະດົມຂົນຂວາຍທຶນ, ການວາງແຜນຄຸ້ມຄອງ, ປະເມີນຜົນ ແລະ ເສີມສ້າງການຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງ ຊຶ່ງຈະໄດ້ປັບປຸງໂຄງປະກອບການຈັດຕັ້ງຂອງ ຫກປສ ໃຫ້ມີການເຄື່ອນໄຫວຢ່າງມີປະສິດທິຜົນ ແລະ ສອດຄ່ອງກັບສະພາບຕົວຈິງເປັນແຕ່ລະໄລຍະ. ໃນປີ 2020 ໄດ້ມີການທົດລອງປັບປຸງໂຄງປະກອບການຈັດຕັ້ງຂອງ ຫກປສ ໃຫ້ກະທັດຮັດ ແລະ ຮັບປະກັນການປະສານງານພາຍໃນ ໂດຍໄດ້ປັບປຸງກົງຈັກ ຈາກ 4 ພະແນກ ມາເປັນ 3 ພະແນກ (ພະແນກບໍລິຫານ ແລະ ຈັດຊື້-ຈັດຈ້າງ, ພະແນກການເງິນ ແລະ ພະແນກຄຸ້ມຄອງໂຄງການ). ຜ່ານການທົດລອງຈັດຕັ້ງປະຕິບັດໄລຍະໜຶ່ງ ເຫັນວ່າ ໂຄງປະກອບກົງຈັກດັ່ງກ່າວມີຄວາມສອດຄ່ອງກັບການດຳເນີນງານ ຂອງ ຫກປສ. ສະນັ້ນ, ໃນຕົ້ນປີ 2021 ຈຶ່ງໄດ້ກຳນົດສິດ ແລະ ໜ້າທີ່ ຂອງ ຫກປສ ພ້ອມທັງ ຄວາມຮັບຜິດຊອບຂອງແຕ່ລະພະແນກຢ່າງຈະແຈ້ງ ເຂົ້າໃນຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງກອງທຶນປົກປັກຮັກສາສິ່ງແວດລ້ອມ (2021). ດັ່ງນັ້ນ, ໃນຕໍ່ໜ້າຈະໄດ້ສືບຕໍ່ຈັດຕັ້ງຜັນຂະຫຍາຍບົດບາດໜ້າທີ່ດັ່ງກ່າວໃຫ້ມີປະສິດທິຜົນ ແລະ ມີການຕິດຕາມປະເມີນຜົນການຈັດຕັ້ງປະຕິບັດວຽກງານເປັນແຕ່ລະໄລຍະ ໂດຍນຳໃຊ້ໂຕຊີ້ວັດຫຼັກໃນການປະຕິບັດງານ (KPI) ສຳລັບແຕ່ລະພະແນກເພື່ອວັດແທກຄຸນນະພາບຂອງຜົນໄດ້ຮັບ ແລະ ການຈັດຕັ້ງປະຕິບັດ. ພ້ອມກັນນັ້ນ, ກໍປັບປຸງການປະສານງານພາຍໃນ, ການຮ່ວມມື ແລະ ການເຮັດວຽກເປັນທີມ. ຫົວໜ້າພະແນກຈະມີບົດບາດສຳຄັນ ໃນການຄຸ້ມຄອງພະນັກງານຂອງພະແນກ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ແລະ ສ້າງຂີດຄວາມສາມາດ ເພື່ອໃຫ້ມີຄວາມໂປ່ງໃສ ແລະ ເປັນລະບົບ.

### 3.2.4 ການກະກຽມການຈັດຕັ້ງປະຕິບັດ

ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນການ 5 ປີ (2021-2025) ຢ່າງມີປະສິດທິຜົນ, ຄະນະນໍາ ຫກປສ ເປັນຜູ້ນໍາພາ-ຊີ້ນໍາໃນການວາງແຜນລະອຽດ ແລະ ຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ ພ້ອມທັງ ຕິດຕາມປະເມີນຜົນ ແລະ ລາຍງານຄວາມຄືບໜ້າ, ຜົນສໍາເລັດ, ບັນຫາ ແລະ ຂໍ້ສະເໜີ ເປັນແຕ່ລະໄລຍະ. ຄະນະພະແນກ ແລະ ພະນັກງານທຸກຄົນ ຮັບຜິດຊອບຈັດຕັ້ງປະຕິບັດວຽກງານຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ພ້ອມນັ້ນ ກໍປະກອບສ່ວນຢ່າງຕັ້ງໜ້າໃນການຈັດຕັ້ງປະຕິບັດວຽກງານລວມຂອງອົງກອນ ແລະ ສະເໜີຫົວຄິດປະດິດສ້າງເພື່ອໃຫ້ການເຄື່ອນໄຫວວຽກງານມີປະສິດທິພາບ ແລະ ປະສິດທິຜົນ. ໜ້າວຽກບູລິມະສິດໃນການຈັດຕັ້ງປະຕິບັດມີລາຍລະອຽດດັ່ງນີ້:

- **ໜ້າວຽກ 1: ປັບປຸງໂຄງຮ່າງການຈັດຕັ້ງ ຫກປສ, ສ້າງຄວາມເຂັ້ມແຂງໃຫ້ ພະນັກງານ ແລະ ປັບປຸງກົນໄກການບໍລິຫານຄຸ້ມຄອງ.** ໜ້າວຽກນີ້ລວມເອົາ ກິດຈະກໍາສ້າງຄວາມເຂັ້ມແຂງໃຫ້ ຫກປສ, ການອໍານວຍຄວາມສະດວກໃນການຈັດປະຊຸມ ແລະ ການສະໜັບສະໜູນວຽກຫ້ອງການທົ່ວໄປ ລວມທັງການບໍລິການດ້ານໄອທີ ແລະ ອໍານວຍຄວາມສະດວກ ເພື່ອຮັບປະກັນຜົນສໍາເລັດ "ໜຶ່ງ ກປສ ໜຶ່ງລະບົບ". ສິ່ງສໍາຄັນ ກໍເພື່ອຮັບປະການການບໍລິຫານ ແລະ ການຄຸ້ມຄອງ ກປສ ໃຫ້ມີປະສິດທິຜົນ. ພະແນກບໍລິຫານ ແລະ ຈັດຊື້-ຈັດຈ້າງ ຈະເປັນຜູ້ຈັດຕັ້ງປະຕິບັດໜ້າວຽກນີ້ ໂດຍປະສານງານ ແລະ ຮ່ວມມືຢ່າງໃກ້ຊິດກັບພະແນກຕ່າງໆພາຍໃນ ຫກປສ ແລະ ສອດຄ່ອງກັບແນວທາງການຄຸ້ມຄອງບໍລິຫານຂອງຄະນະນໍາ ຫກປສ. ປັບປຸງ ແລະ ອັບເດດ ດັດສະນີໂຕຊີ້ວັດ ຂອງ ຫກປສ FCI #1 (ການຄຸ້ມຄອງ - ການຕັດສິນໃຈ) ແລະ FCI #4 (ການບໍລິຫານທົ່ວໄປ) ເປັນແຕ່ລະໄລຍະ ເພື່ອນໍາໃຊ້ໃນການວັດແທກຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ແລະ ຜົນສໍາເລັດຂອງໜ້າວຽກນີ້.
- **ໜ້າວຽກທີ 2: ການຝຶກອົບຮົມພະນັກງານ ແລະ ການຄຸ້ມຄອງບຸກຄະລາກອນ.** ໜ້າວຽກນີ້ປະກອບມີກິດຈະກໍາຕ່າງໆ ກ່ຽວກັບ ການຝຶກອົບຮົບພະນັກງານ ແລະ ການຄຸ້ມຄອງບຸກຄະລາກອນ. ພະແນກບໍລິຫານ ແລະ ຈັດຊື້-ຈັດຈ້າງ ຈະເປັນຜູ້ຮັບຜິດຊອບໃນການວາງແຜນຈັດຕັ້ງປະຕິບັດໜ້າວຽກນີ້ ແລະ ຕິດຕາມປະເມີນຜົນ ແລະ ອີງໃສ່ທິດຊີ້ນໍາຈາກຄະນະນໍາ ຫກປສ. ເຖິງຢ່າງໃດກໍ່ຕາມ, ຫົວໜ້າພະແນກທຸກພະແນກແມ່ນມີໜ້າທີ່ຮັບຜິດຊອບ ເພື່ອຮັບປະກັນວ່າພະນັກງານຂອງຕົນມີຄວາມສາມາດ, ມີປະສິດທິພາບພຽງພໍ ແລະ ມີຜົນໄດ້ຮັບທັນເວລາ. ປັບປຸງ ແລະ ອັບເດດ ດັດຊະນີຕົວຊີ້ວັດ ຂອງ ຫກປສ FCI #5 (ການຄຸ້ມຄອງບຸກຄະລາກອນ) ເປັນແຕ່ລະໄລຍະ ເພື່ອນໍາໃຊ້ເຂົ້າໃນການວັດແທກຄວາມຄືບໜ້າການຈັດຕັ້ງປະຕິບັດ ແລະ ຜົນສໍາເລັດຂອງໜ້າວຽກນີ້.
- **ໜ້າວຽກ 3: ປັບປຸງການຄຸ້ມຄອງການເງິນ ແລະ ການບໍລິການດ້ານຈັດຊື້-ຈັດຈ້າງໃຫ້ມີປະສິດທິພາບ.** ກົນໄກທີ່ມີປະສິດທິພາບ (ຄູ່ມືການຈັດຕັ້ງປະຕິບັດຂອງ ກປສ) ເຊັ່ນ: ຄູ່ມືຄຸ້ມຄອງການເງິນ, ຄູ່ມືຈັດຊື້-ຈັດຈ້າງ, ລະບົບບັນຊີທີ່ມີປະສິດທິພາບ ແລະ ຂັ້ນຕອນຂອງການຄຸ້ມຄອງການເງິນ ແລະ ການຈັດຊື້-ຈັດຈ້າງ ຈະຖືກນໍາໃຊ້ ເພື່ອຍົກສູງຄຸນນະພາບ ແລະ ປະສິດທິຜົນຂອງການບໍລິຫານດ້ານການຄຸ້ມຄອງການເງິນ ແລະ ຈັດຊື້-ຈັດຈ້າງ. ພະແນກການເງິນ ແລະ ພະແນກບໍລິຫານ ແລະ ຈັດຊື້-ຈັດຈ້າງ ຮັບຜິດຊອບໃນການຈັດຕັ້ງປະຕິບັດໜ້າວຽກນີ້ ໂດຍປະສານສົມທົບ ແລະ ຮ່ວມມືກັບພະແນກອື່ນໆ ແລະ ອີງໃສ່ຄໍາແນະນໍາຂອງຄະນະນໍາ ຫກປສ. ປັບປຸງ ແລະ ອັບເດດ ດັດຊະນີຄວາມອາດສາມາດຂອງ ຫກປສ FCI #7 ແລະ #8 (ການຄຸ້ມຄອງການເງິນ ແລະ ການຈັດຊື້-ຈັດຈ້າງ) ເປັນແຕ່ລະຍະໄລຍະ

ເພື່ອນຳໃຊ້ເຂົ້າໃນການວັດແທກຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ແລະ ຜົນສຳເລັດຂອງໜ້າວຽກນີ້.

- **ໜ້າວຽກ 4: ການປັບປຸງການວາງແຜນ, ການລະດົມທຶນ ແລະ ການຮ່ວມມື.** ໜ້າວຽກນີ້ ປະກອບມີ ການວາງແຜນ, ການເກັບລາຍຮັບ, ການຕິດຕາມ ແລະ ປະເມີນຜົນ, ການລາຍງານ ແລະ ການປະສານງານຮ່ວມມືກັບບັນດາຄູ່ຮ່ວມພັດທະນາ ແລະ ຜູ້ມີສ່ວນຮ່ວມ ລວມທັງການພັດທະນາ ແລະ ປັບປຸງວິໄສທັດ, ຍຸດທະສາດ ແລະ ແຜນດຳເນີນງານຂອງ ຫກປສ. ນອກຈາກນີ້, ຍັງລວມມີ ການຄົ້ນຄວ້າ ລະບຽບ ແລະ ແນວທາງທີ່ຈຳເປັນເພື່ອອຳນວຍຄວາມສະດວກສຳລັບການລະດົມຂົນຂວາຍແຫຼ່ງທຶນເພີ່ມ 2-3 ແຫຼ່ງທຶນ ສຳລັບ ກປສ ອີງຕາມຂໍ້ກຳນົດໃນດຳລັດ ກປສ ປີ 2017 ລວມທັງການອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດນະໂຍບາຍເຕີບໂຕສີຂຽວຢ່າງມີປະສິດທິພາບ ແລະ ຮັບປະກັນ ຜົນສຳເລັດຂອງການບັນລຸພັນທະອື່ນໆຂອງ ກປສ ໂດຍສະເພາະແມ່ນພັນທະທີ່ກ່ຽວຂ້ອງກັບໂຄງການ GG-DPO. ກິດຈະກຳສຳຄັນອີກອັນໜຶ່ງແມ່ນການພັດທະນາ ແລະ ອຳນວຍຄວາມສະດວກໃນ ການຫັນເປັນຄູ່ຮ່ວມງານ (ບົດບັນທຶກຄວາມເຂົ້າໃຈ, ຂໍ້ຕົກລົງ ແລະ ອື່ນໆ) ແລະ ການສ້າງເຄືອຂ່າຍ. ພະແນກຄຸ້ມຄອງໂຄງການ ຮັບຜິດຊອບໃນການຈັດຕັ້ງປະຕິບັດໜ້າວຽກນີ້ ໂດຍປະສານງານ ແລະ ຮ່ວມມືກັບພະແນກອື່ນໆ ແລະ ອີງໃສ່ທິດຊີ້ນຳຈາກຄະນະນຳ ຫກປສ. ປັບປຸງ ແລະ ອັບເດດ ດັດຊະນີຄວາມອາດສາມາດ FCI #2 ຂອງ ຫກປສ (ວິໄສທັດ, ຍຸດທະສາດ, ແຜນດຳເນີນທຸລະກິດ) ແລະ ດັດຊະນີຄວາມອາດສາມາດ FCI #6 (ການລະດົມທຶນ) ເປັນແຕ່ລະໄລຍະ ເພື່ອນຳໃຊ້ໃນການວັດ ແທກຄວາມຄືບໜ້າການຈັດຕັ້ງປະຕິບັດຜົນສຳເລັດຂອງໜ້າວຽກນີ້.
- **ໜ້າວຽກ 5: ການອຳນວຍຄວາມສະດວກ ແລະ ການຊຸກຍູ້ການຈັດຕັ້ງປະຕິບັດທີ່ມີປະສິດທິພາບຂອງໂຄງການລົງທຶນ ແລະ ໂຄງການຍ່ອຍ.** ກິດຈະກຳນີ້ແມ່ນສຸມໃສ່ການສະໜັບສະໜູນການຈັດຕັ້ງປະຕິບັດໂຄງການ ຫຼື ໂຄງການຍອ່ຍ ແລະ ຮັບປະກັນຜົນສຳເລັດຂອງເປົ້າໝາຍ ແລະ ຂໍ້ຕົກລົງອື່ນໆກັບອົງການທີ່ໃຫ້ທຶນ ລວມທັງການປະເມີນໂຄງການ ແລະ ໂຄງການຍ່ອຍ, ເພີ່ມທະວີການປະສານງານ, ການຮ່ວມມືກັບທຸກໆພາກສ່ວນ, ການຕິດຕາມ ແລະ ປະເມີນຜົນຂອງໂຄງການ, ໂຄງການຍ່ອຍ. ການຈັດຕັ້ງປະຕິບັດໂຄງການ, ໂຄງການຍ່ອຍ ແມ່ນ ຈະດຳເນີນຜ່ານ 6 ຮ່ອງທຶນ ລວມທັງ ຮ່ອງທຶນໃໝ່ (ການປ່ຽນແປງດິນຟ້າອາກາດ). ງົບປະມານສະໜັບສະໜູນແມ່ນຄາດວ່າມາຈາກທຶນຂອງ ກປສ ເອງ, ທະນາຄານໂລກ, ກອງທຶນ GCF/CCAF ແລະ ອື່ນໆ. ພະແນກຄຸ້ມຄອງໂຄງການ ຮັບຜິດຊອບໃນການຈັດຕັ້ງປະຕິບັດໜ້າວຽກນີ້ ໂດຍປະສານງານ ແລະ ຮ່ວມມືກັບພະແນກອື່ນໆ ແລະ ອີງໃສ່ທິດຊີ້ນຳຈາກຄະນະນຳ ຫກປສ. ປັບປຸງ ແລະ ອັບເດດ ດັດຊະນີຄວາມອາດສາມາດ FCI #3 ຂອງ ຫກປສ (ການດຳເນີນງານ ລວມທັງການວາງແຜນ, ການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ປະເມີນຜົນຂອງໂຄງການ) ເປັນແຕ່ລະໄລຍະ ເພື່ອນຳໃຊ້ເຂົ້າໃນການວັດແທກຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ແລະ ຜົນສຳເລັດຂອງໜ້າວຽກນີ້.

### 3.2.5 ການຕອບໂຕ້ພະຍາດລະບາດໂຄວິດ 19 ຂອງ ຫກປສ

ການລະບາດຂອງພະຍາດໂຄວິດ 19 ໃນປີ 2020 ແລະ ຄາດວ່າຍັງຈະສືບຕໍ່ມີຜົນກະທົບໃນປີ 2021 ແລະ 2022 ຊຶ່ງເຮັດມີຂໍ້ຈຳກັດໃນການເດີນທາງ, ການປະຊຸມໜ້າຕໍ່ໜ້າ ແລະ ການລົງເຄື່ອນໄຫວ

ພາກສະໜາມ, ສະນັ້ນ ຫກປສ ຈະສືບຕໍ່ປະຕິບັດຢ່າງຕັ້ງໜ້າ ເພື່ອສ້າງຂີດຄວາມສາມາດໃນການຫຼີກລ່ຽງການຊັກຊ້າໃນການຈັດຕັ້ງປະຕິບັດແຜນການ ແລະ ຜົນກະທົບອື່ນໆ ດັ່ງຕໍ່ໄປນີ້:

(i) ປັບປຸງສິ່ງອຳນວຍຄວາມສະດວກໃຫ້ ຫກປສ ເພື່ອດຳເນີນການສື່ສານແບບອອນລາຍ ລະຫວ່າງບັນດາພະນັກງານ, ຄູ່ຮ່ວມພັດທະນາ ແລະ ຜູ້ມີສ່ວນຮ່ວມອື່ນໆ ພ້ອມທັງໃຫ້ການສະໜັບສະໜູນແກ່ບັນດາອົງການຈັດຕັ້ງທີ່ສຳຄັນ ແລະ ສ້າງຂີດຄວາມສາມາດຂັ້ນແຂວງໃນດ້ານດັ່ງກ່າວ. ປະສານສົມທົບຢ່າງໃກ້ຊິດກັບຄູ່ຮ່ວມພັດທະນາ ເພື່ອຄົ້ນຄວ້າມາດຕະການທີ່ເໝາະສົມ ໃນການລິເລີ່ມນຳໃຊ້ການສື່ສານທີ່ມີປະສິດທິພາບ ແລະ ທັນເວລາ ໂດຍຜ່ານເຕັກໂນໂລຊີທີ່ມີຢູ່ ພ້ອມທັງ ນຳໃຊ້ວິທີການຕ່າງໆ ເພື່ອໃຫ້ຄຳແນະນຳ ແລະ ສະໜັບການຈັດຕັ້ງປະຕິບັດແຜນການ;

(ii) ຮັກສາຄວາມສະອາດ ແລະ ສຸຂະອະນາໄມ ສຳລັບ ຫກປສ ແລະ ຫ້ອງການຂອງບັນດາໂຄງການທີ່ໄດ້ຮັບທຶນຈາກ ກປສ ພ້ອມທັງ ໃຫ້ການຝຶກອົບຮົມໃຫ້ແຕ່ລະໂຄງການຢ່າງເປັນປົກກະຕິ, ສະໜອງງົບປະມານສຳລັບວຽກກໍ່ສ້າງ-ສ້ອມແປງຂະໜາດນ້ອຍ ແລະ ອຸປະກອນຈຳເປັນ (ລວມທັງ ເຕັກນິກວິຊາການ ແລະ ສິນຄ້າ) ເພື່ອປັບປຸງສິ່ງແວດລ້ອມຂອງສະຖານທີເຮັດວຽກ (ຫ້ອງການສີຂຽວ ແລະ ສະອາດ);

(iii) ສະໜັບສະໜູນວຽກບູລິມະສິດຂອງປະເທດ ໂດຍສະເພາະ ບັນຫາກ່ຽວກັບ COVID 19 ເປັນຕົ້ນການຄຸ້ມຄອງສິ່ງເສດເຫລືອ ແລະ ການປ້ອງກັນໂລກລະບາດ ທີ່ຕິດພັນກັບການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ເພີ່ມໂອກາດໃຫ້ແກ່ການຈ້າງງານໄວໜຸ່ມ ແລະ ປະຊາຊົນທ້ອງຖິ່ນ (ຖ້າເປັນໄປໄດ້);

(iv) ດຳເນີນການປ້ອງກັນ ແລະ ແກ້ໄຂບັນຫາການລະບາດຂອງພະຍາດໂຄວິດ 19 ໂດຍນຳໃຊ້ “ການຈັດຕັ້ງປະຕິບັດວຽກງານປົກກະຕິໃນຮູບແບບໃໝ່” ຊຶ່ງຮຽກຮ້ອງໃຫ້ຍົກສູງຄວາມຮັບຜິດຊອບເພື່ອຫຼີກລ້ຽງ, ຫຼຸດຜ່ອນ ແລະ ຄຸ້ມຄອງຄວາມສ່ຽງຕ່າງໆທີ່ຈະກໍ່ໃຫ້ເກີດການແຜ່ລະບາດຂອງເຊື້ອພະຍາດດັ່ງກ່າວ. ກຳນົດບູລິມະສິດສຳລັບການລົງທຶນ ແລະ ຄວາມຕ້ອງການທີ່ຈະປ່ຽນແປງການຈັດຕັ້ງປະຕິບັດ (ການສະໜອງອຸປະກອນຮັບໃຊ້ ແລະ ການໃຫ້ຄຳແນະນຳ) ລວມທັງ ການປັບປຸງການຈັດຕັ້ງປະຕິບັດວຽກງານໃນແຕ່ລະມື້, ການເຮັດຄວາມສະອາດ ແລະ ການຮັກສາໄລຍະຫ່າງພາຍໃນຫ້ອງການ ແລະ ສະຖານທີ່ສາທາລະນະ ເພື່ອສ້າງເປັນຂໍ້ກຳນົດສຳລັບການລົງທຶນໃນອານາຄົດ.

(v) ໂຄງການຍ່ອຍ ຄສລ 2 ໄດ້ສະໜອງທຶນໃນການປັບປຸງການຄຸ້ມຄອງສິ່ງແວດລ້ອມ ໂດຍສະເພາະແມ່ນຄຸນນະພາບອາກາດ ຍ້ອນເຫັນໄດ້ວ່າສິ່ງແວດລ້ອມແມ່ນມີຄວາມສຳຄັນຕໍ່ສຸຂະພາບ ແລະ ກ່ຽວພັນກັບການແຜ່ລະບາດພະຍາດໂຄວິດ 19. ມົນລະພິດທາງອາກາດເຮັດໃຫ້ອັດຕາເສຍຊີວິດຫຼາຍຂຶ້ນຍ້ອນພະຍາດລະບາດໂຄວິດ 19. ໂຄງການ ຄສລ 2 ໄດ້ສະໜອງງົບປະມານເພື່ອສ້າງເຄືອຂ່າຍການຕິດຕາມຄຸນນະພາບອາກາດແຫ່ງຊາດ, ສ້າງສະຖານີຕິດຕາມອາກາດ 5 ແຫ່ງ ຢ່າງເປັນລະບົບ ແລະ ມີການເຜີຍແຜ່ຂໍ້ມູນຜົນການວັດແທກຄຸນນະພາບອາກາດໃຫ້ສັງຄົມຮັບຊາບເປັນປົກກະຕິ. ໜ້າວຽກນີ້ຄວນຈະໄດ້ຮັບການເສີມຂະຫຍາຍຢ່າງກ້ວາງຂວາງ ໄປຄຽງຄູ່ກັບການສະໜັບສະໜູນທາງດ້ານການເງິນຂອງລັດຖະບານ.

### 3.2.6 ການລະດົມທຶນ ແລະ ການຈັດຕັ້ງປະຕິບັດໂຄງການຕ່າງໆ

ດັ່ງທີ່ໄດ້ ກຳນົດໄວ້ໃນພາກທີ II ຂໍ້ທີ 2.5, ການຈັດຕັ້ງປະຕິບັດແຜນການລະດົມທຶນ ໃນປີ 2021-2025 ມີດັ່ງລຸ່ມນີ້:

- **ທຶນພາຍໃນ ຂອງ ກປສ**: ກປສ ຈະສຸມໃສ່ເກັບກຳລາຍຮັບຈາກການປະກອບສ່ວນພັນທະດ້ານສິ່ງແວດລ້ອມຕາມສັນຍາສຳປະທານຂອງບັນດາໂຄງການລົງທຶນໃນຂະແໜງພະລັງງານ ແລະ ບໍ່ແຮ່ ໂດຍສ້າງບັນຊີລາຍຮັບ ແລະ ປະສານສົມທົບກັບຂະແໜງການກ່ຽວຂ້ອງ ເພື່ອຊ່ວຍເລັ່ງທວງໃຫ້ມີການປະກອບພັນທະຢ່າງເປັນປົກກະຕິ. ພ້ອມນັ້ນ, ກໍຄົ້ນຄ້ວາ ມາດຖານໃນການຄິດໄລ່ການເກັບທຶນພັນທະດັ່ງກ່າວໃຫ້ເໝາະສົມ ແລະ ເຂົ້າຮ່ວມໃນຂະບວນການພິຈາລະນາອະນຸມັດຕາມການສະເໜີຂອງພາກສ່ວນກ່ຽວຂ້ອງ. ນອກນັ້ນ, ກໍປະສານສົມທົບກັບ ມຊ ແລະ ພາກສ່ວນກ່ຽວຂ້ອງ ເພື່ອສຶກສາຄົ້ນຄວ້າ ວິທີການເກັບລາຍຮັບ ແລະ ສ້າງລະບຽບການສະເພາະ ໃນການເກັບລາຍຮັບຈາກແຫຼ່ງທຶນຕາມທີ່ກຳນົດໄວ້ໃນດຳລັດ ກປສ ປີ 2017. ການສະໜອງທຶນພາຍໃນໃຫ້ໂຄງການຕ່າງໆ ແມ່ນຈັດຕັ້ງປະຕິບັດໄປຕາມແຜນການທີ່ໄດ້ຮັບອະນຸມັດຈາກ ສະພາບໍລິຫານ ຂອງ ກປສ ແລະ ຕາມແຜນງົບປະມານປະຈຳປີທີ່ຖືກຮັບຮອງຈາກສະພາແຫ່ງຊາດ. ນອກຈາກນັ້ນ, ຫກປສ ຍັງຈະສືບຕໍ່ສະໜັບສະໜູນທຶນໃຫ້ແກ່ໂຄງການໃໝ່ ຕາມ 6 ຮ່ອງທຶນ ໂດຍສອດຄ່ອງກັບແຜນບູລິມະສິດຂອງ ລັດຖະບານ ແລະ ນະໂຍບາຍການສະໜອງທຶນຂອງ ກປສ ກ່ຽວກັບ ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ;
- **ໂຄງການ ຄສລ 2 ແລະ ໂຄງການໃໝ່ ທີ່ມີທ່າແຮງ ຂອງ ທະນາຄານໂລກ.** ທຸກໆໂຄງການຂອງ ຄສລ2 ແມ່ນ ກຳລັງຈັດຕັ້ງປະຕິບັດໄປຕາມແຜນການທີ່ໄດ້ຮັບອະນຸມັດ ຊຶ່ງ ໂຄງການ ຄສລ2 ຈະມີການຕໍ່ອາຍຸໄປຮອດກາງປີ 2022. ໂຄງການຍ່ອຍທຸກໂຄງການ ແມ່ນໄດ້ຮັບອະມັດໃຫ້ຕໍ່ອາຍຸໄປຮອດທ້າຍປີ 2021 ຊຶ່ງປະຈຸບັນ ທຸກໂຄງການໄດ້ສຳເລັດການຕໍ່ອາຍຸ (ໄລຍະການຕໍ່ອາຍຸໂຄງການຕ່າງໆ ມີຕັ້ງແຕ່ 3 ເດືອນຮອດ 12 ເດືອນ). ນອກຈາກ ການຈັດຕັ້ງປະຕິບັດ ໂຄງການ ຄສລ2 ແລ້ວ ຫກປສ ຈະສ້າງຄວາມເຂັ້ມແຂງໃນການຮ່ວມມື ແລະ ທັນເປັນຄູ່ຮ່ວມງານ ກັບ ມະຫາວິທະຍາໄລແຫ່ງຊາດ ແລະ ຄູ່ຮ່ວມພັດທະນາທີ່ສຳຄັນ ສຳລັບການ ກຳນົດ ແລະ ການກະກຽມໂຄງການໃໝ່ (ໂຄງການຄຸ້ມຄອງສິ່ງແວດລ້ອມ ແລະ ສິ່ງເສດເຫຼືອ - WEMP);
- **ທຶນຊ່ວຍເຫຼືອລ້າ ຈາກ ກອງທຶນ GCF ໂດຍຜ່ານ ອົງການ GIZ ແລະ UNEP.** ກປສ ໄດ້ຕົກລົງຮ່ວມມື ແລະ ລິເລີ່ມຈັດຕັ້ງປະຕິບັດໂຄງການ GIZ ແລະ UNEP ທີ່ໄດ້ຮັບທຶນ ຈາກ GCF ໃນເດືອນພຶດສະພາ ຫາ ເດືອນມິຖຸນາປີ 2020 ຊຶ່ງ ຫກປສ ຮັບຜິດຊອບກ່ຽວກັບການເບີກຈ່າຍງົບປະມານໄປຕາມແຜນການທີ່ໄດ້ຮັບການອະນຸມັດ, ວຽກງານການຈັດຊື້-ຈັດຈ້າງ ແລະ ວຽກງານການຕິດຕາມປະເມີນຜົນ ໂດຍອີງຕາມຂໍ້ຕົກລົງກັບ GIZ ແລະ UNEP ຕາມການອະນຸມັດຂອງປະທານສະພາບໍລິຫານ ຂອງ ກປສ. ການຈັດຕັ້ງປະຕິບັດກິດຈະກຳ ຂອງໂຄການ GIZ ແມ່ນຮອດປີ 2024 ແລະ ໂຄງການ UNEP ແມ່ນຮອດປີ 2025;
- **ທຶນຊ່ວຍເຫຼືອລ້າໂດຍກົງຂອງ GCF.** ຫກປສ ສະໝັກເປັນອົງກອນແຫ່ງຊາດທີ່ສາມາດເຂົ້າຫາແຫຼ່ງທຶນໄດ້ໂດຍກົງ (National Accreditted Entity) ສຳລັບໂຄງການຂະໜາດນ້ອຍ ຂອງ GCF, ຫກປສ ຈະສືບຕໍ່ເຮັດວຽກຢ່າງໃກ້ຊິດກັບ GIZ ເພື່ອສືບຕໍ່ຈັດຕັ້ງຕິບັດໂຄງການກະກຽມຄວາມພ້ອມທີ່ໄດ້ຮັບທຶນການຊ່ວຍເຫຼືອດ້ານວິຊາການຈາກ GCF (ປະມານ 0,4 ລ້ານໂດລາສະຫະລັດ) ໄລຍະເວລາໃນການຈັດຕັ້ງປະຕິບັດໂຄງການດັ່ງກ່າວ ແມ່ນ 2021-2022. ພ້ອມດຽວກັນນັ້ນ ເພື່ອເລັ່ງຂະບວນການ

ກະກຽມບົດສະເໜີໂຄງການ, ຫກປສ ຍັງຈະສືບຕໍ່ເຮັດວຽກຢ່າງໃກ້ຊິດກັບ ມະຫາວິທະຍາໄລແຫ່ງຊາດ, ອົງການປົກຄອງທ້ອງຖິ່ນ ແລະ ຊຸມຊົນທ້ອງຖິ່ນ ເພື່ອກຳນົດໂຄງການ ແລະ ກິດຈະກຳທີ່ມີທ່າແຮງທີ່ມີແນວໂນ້ມທີ່ຈະມີສິດໄດ້ຮັບການສະໜັບສະໜູນທຶນໂຄງການຂະໜາດນ້ອຍ ຈາກ GCF ກ່ຽວກັບ ການປ່ຽນແປງດິນຟ້າອາກາດແລະການປັບຕົວເຂົ້າກັບດິນຟ້າອາກາດ.

# ເອກະສານຄັດຕິດ 1.

## ສັງລວມວິໄສທັດ ປີ2030 ແລະ ຍຸດທະສາດປີ 2025 ຂອງ ກປສ

ເອກກະສານຊ້ອນທ້າຍນີ້ໄດ້ສັງລວມຫຍໍ້ ວິໄສທັດປີ 2030 ແລະ ຍຸດທະສາດປີ 2025 ທີ່ໄດ້ລະບຸໄວ້ໃນແຜນດຳເນີນງານປີ 2025 ທີ່ໄດ້ຮັບການອະນຸມັດຈາກສະພາບໍລິຫານໃນທ້າຍປີ 2018. ຂໍ້ມູນເຫຼົ່ານີ້ຈະໄດ້ຖືກນຳໃຊ້ເພື່ອເປັນແນວທາງກະກຽມແຜນຂອງ ກປສ ສຳລັບປີ 2021-2025.

| ຕາຕະລາງ A1.1 ວິໄສທັດປີ 2030, ໜ້າທີ່, ແລະ ເປົ້າໝາຍສະເພາະ, ແລະ ຫຼັກການພື້ນຖານທີ່ກຳນົດໄວ້ໃນແຜນປີ 2018-2020 |
|---|
| *ວິໄສທັດ ແລະ ໜ້າທີ່ ປີ 2030*<br><br>*ວິໄສທັດ:* ພາຍໃນປີ 2030, ກປສ ຈະກາຍເປັນອົງກອນທີ່ໝັ້ນຄົງ, ການຈັດຕັ້ງທີ່ເຂັ້ມແຂງ ແລະ ມີບຸກຄະລາກອນທີ່ມີຄຸນນະພາບ ທີ່ໄດ້ມາດຕະຖານສາກົນ, ມີກົນໄກທີ່ມີປະສິດທິຜົນ, ແລະ ຍືນຍົງ ໃນການບໍລິຫານ ແລະ ຄຸ້ມຄອງຫ້ອງການ ກປສ, ການເງິນ, ການຄຸ້ມຄອງໂຄງການ, ຈັດຊື້-ຈັດຈ້າງ, ລະດົມທຶນ ແລະ ຈັດສັນງົບປະມານ ສຳລັບວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ ທີ່ຈະຊ່ວຍສະໜັບສະໜູນແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ອີງຕາມທິດສີຂຽວ ແລະ ຍືນຍົງ.<br><br>*ໜ້າທີ່:*<br>• ພາຍໃນປີ 2020: ສຳເລັດການຈັດຕັ້ງປະຕິບັດໂຄງການ ຄສລ 2 ອີງຕາມຈຸດປະສົງຂອງໂຄງການ ລວມທັງການອະນຸມັດຂອງສະພາບໍລິຫານ "ໜຶ່ງ ກປສ ໜຶ່ງວາລະ" ແລະ ແຜນ 5 ປີສຳລັບ 2021-2025 ເຊັ່ນດຽວກັນກັບການກະກຽມໂຄງການ ຫຼື ແຜນງານໃໝ່.<br>• ພາຍໃນປີ 2025: ສຳເລັດການຈັດຕັ້ງປະຕິບັດແຜນ 2021-2025 (ໂຄງການໃໝ່) ທີ່ໄດ້ຮັບຜົນດີ ແລະ ກະກຽມແຜນ 5 ປີ ສຳລັບ 2026-2030.<br>• ພາຍໃນປີ 2030: ທົບທວນ/ສ້າງ ວິໄສທັດ ແລະ ຍຸດທະສາດ ກປສ ສຳລັບປີ 2031-2045 ແລະ ແຜນ 5 ປີ ສຳລັບ 2030-2035 ລວມທັງການກະກຽມໂຄງການໃໝ່ ແລະ ແຜນງານໃໝ່.<br>*ເປົ້າໝາຍ 2030:*<br>• ມີການຈັດຕັ້ງທີ່ເຂັ້ມແຂງ ທີ່ດຳເນີນງານໂດຍພະນັກງານ ທີ່ມີຄຸນນະພາບສູງ ເພື່ອຮັບປະກັນໃຫ້ບັນລຸຫຼັກການຂອງ ກປສ.<br>• ມີແຫຼ່ງທຶນທີ່ໝັ້ນຄົງໃນການເຊື່ອມໂຍງໃນລະດັບຊາດ, ພາກພື້ນ, ແລະ ສາກົນ, ແລະ<br>• ສະໜອງງົບປະມານຜ່ານຮ່ວງທຶນ ກປສ ໂດຍອີງຕາມຫຼັກການພື້ນຖານຂອງ ກປສ.<br><br>*ຫຼັກການພື້ນຖານ ກປສ:* |

| |
|---|
| ກປສ ຈະຈັດຕັ້ງປະຕິບັດ ໂດຍກົນໄກລະດົມທຶນຜ່ານຮ່ອງທຶນ ແລະ ຈະປະຕິບັດຕາມກົດໝາຍຂອງ ສປປ ລາວ, ດຳລັດ ກປສ, ລະບຽບການ ກປສ, ແລະ ສອດຄ່ອງກັບຫຼັກການດຳເນີນງານດັ່ງຕໍ່ໄປນີ້:<br>• *ຄວາມເປັນເຈົ້າການ.* ກປສ ເລັ່ງໃສ່ທີ່ຈະບັນລຸຜົນສຳເລັດດ້ວຍຄວາມຮູ້ ແລະ ຄວາມເຂົ້າໃຈໃນລາຍລະອຽດ, ດ້ວຍຄວາມຮັບຜິດຊອບ ແລະ ວິໃນ, ມີຈຸດສຸມ/ບູລິມະສິດ ໃນການປັບປຸງຜົນໄດ້ຮັບຂອງໂຄງການ.<br>• *ຄວາມຮັບຜິດຊອບ.* ກປສ ຈະສົ່ງເສີມຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດປະຈຳວັນ ໂດຍການສ້າງກົນໄກໃນການຍົກຍ້ອງຊົມເຊີຍ ແລະ ຄຳເຫັນ ແລະ ດຳເນີນການປະເມີນຜົນງານ ຕາມໜ້າທີ່ຮັບຜິດຊອບ.<br>• *ຄວາມໂປ່ງໃສ.* ກປສ ຈະດຳເນີນງານດ້ວຍຄວາມໂປ່ງໃສ, ໃຫ້ຂໍ້ມູນ ແລະ ຂໍ້ມູນຂ່າວສານໃນການຈັດຕັ້ງປະຕິບັດຂອງ ກປສ ຕາມຄວາມຈຳເປັນ.<br>• *ປະສິດທິຜົນ.* ກປສ ຈັດຕັ້ງປະຕິບັດຂອງ ກປສ ຕ້ອງບັນລຸເປົ້າໝາຍທີ່ວາງໄວ້ ແລະ ມີປະສິດທິຜົນ (ອັດຕາຜົນຕອບແທນສູງ ແລະ ຄຸ້ມຄ່າ). |

| ຕາຕະລາງ A1.2 ຍຸດທະສາດ 2018-2025 ແລະ ຜົນໄດ້ຮັບດັ່ງທີ່ລະບຸໄວ້ໃນແຜນ 2018-2020 | |
|---|---|
| ເປົ້າໝາຍຍຸດທະສາດ 2025 | ຍຸດທະສາດ ແລະ ຜົນໄດ້ຮັບ 2025 |
| ທິດທາງໂດຍທ່ວໄປໃນປີ 2025 ແມ່ນສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງ ແລະ ບຸກຄະລາກອນ ແລະ ກົນົກການເງິນແບບຍືນຍົງ ເພື່ອຊຸກຍູ້ການຈັດຕັ້ງປະຕິບັດຢ່າງມີປະສິດທິພາບ ບົດບາດການລະດົມທຶນ ແລະ ບົດບາດການຈັດສັນງົບປະມານ ໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມທີ່ສາມາດສະໜັບສະໜູນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຕາມທິດທາງສີຂຽວ ແລະ ຍືນຍົງ ຄຽງຄູ່ໄປກັບການເຊື່ອມໂຍງກັບຜູ້ມີສ່ວນຮ່ວມທັງໝົດ. | |
| (1) ກປສ ເປັນອົງການຈັດຕັ້ງທີ່ເຂັ້ມແຂງ ເປັນທີ່ຍອມຮັບທັງພາຍໃນ ແລະ ສາກົນ ລວມທັງມີຈຳນວນພະນັກງານທີ່ມີຄຸນນະພາບພຽງພໍ | *ຍຸດທະສາດ 1.*ປັບປຸງອົງການຈັດຕັ້ງ ແລະ ເສີມສ້າງຄວາມສາມາດໃນການຄຸ້ມຄອງ.<br>ຜົນໄດ້ຮັບມີ: 1) ມີໂຄງຮ່າງການຈັດຕັ້ງ ແລະ ພາລະບົດບາດທີ່ຈະແຈ້ງ ແລະ ເໝາະສົມ, 2) ມີຄວາມສາມາດໃນການບໍລິຫານ ແລະ ຄຸ້ມຄອງ ທີ່ມີປະສິດທິຜົນສອດຄ່ອງກັບ 8 ດັດຊະນີຄວາມອາດສາມາດ (FCI), 3) ມີລະບຽບການ ແລະ ຄູ່ມືການຈັດຕັ້ງທີ່ສຳເລັດ ແລະ ມີປະສິດທິຜົນ; ແລະ 4) ມີລະບົບການຄຸ້ມຄອງການເງິນທີ່ມີປະສິດທິຜົນເພື່ອໃຫ້ການບໍລິຫານ.<br>*ຍຸດທະສາດ 2:* ສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນ.<br>ຜົນໄດ້ຮັບມີ: 1) ມີພະນັກງານທີ່ພຽງພໍ ທັງດ້ານປະລິມານ ແລະ ຄຸນນະພາບ , 2) ມີນະໂຍບາຍທີ່ເໝາະສົມຕໍ່ບຸກຄະລາກອນ, ແລະ 3) ຈັດຕັ້ງປະຕິບັດ |

| | |
|---|---|
| | ຕາມແຜນພັດທະນາຊັບພະຍາກອນມະນຸດ. |
| (2) ພາລະບົດບາດ ແລະ ໜ້າທີ່ຂອງ ກປສ ແມ່ນເປັນກົນໄກການເງິນ ທີ່ມີການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ແລະ ສ່ວນຫຼາຍມີທຶນສະສົມເປັນຂອງຕົນເອງ; ແລະ | *ຍຸດທະສາດ 3:* ປັບປຸງກົນໄກການລະດົມທຶນ ແລະ ການສະໜອງທຶນຂອງ ກປສ ທີ່ຍືນຍົງ.<br>ຜົນໄດ້ຮັບມີ: 1) ມີແຜນ ແລະ ການຈັດຕັ້ງປະຕິບັດຕາມແຜນການລະດົມທຶນ ແລະ ການສື່ສານ, 2) ມີການຈັດຕັ້ງແຜນຈັດສັນທຶນ ອີງຕາມ 5 ຮ່ອງທຶນ, ແລະ 3) ມີທຶນເພີ່ມຈາກຫຼາຍແຫຼ່ງທຶນອີງຕາມມາດຕາທີ 5 ໃນດຳລັດ. |
| (3) ເສີມຂະຫຍາຍໂອກາດທີ່ເໝາະສົມເຂົ້າໃນການສະໜັບສະໜູນການຈັດຕັ້ງປະຕິບັດການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະປົກປັກຮັກສາສິ່ງແວດລ້ອມທີ່ສາມາດປະກອບສ່ວນເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ເປັນໄປຕາມທິດສີຂຽວ ແລະ ຍືນຍົງ. | *ຍຸດທະສາດ 4:* ປັບປຸງການຮ່ວມມື ແລະ ການຫັນເປັນຄູ່ຮ່ວມງານ.<br>ຜົນໄດ້ຮັບ: 1) ມີເຄືອຂ່າຍການຮ່ວມມື ແລະ ເຊື່ອມໂຍງກັບ ຂະແໜງການ/ອົງການ, ແລະ ອົງການຈັດຕັ້ງພາກລັດອື່ນໆ, ພາກເອກະຊົນ ແລະ ນັກລົງທຶນໃນລະດັບສູນກາງ ແລະ ທ້ອງຖິ່ນ; ແລະ 2) ມີສື່ໂຄສະນາ ແລະ ວາລະສານທີ່ສະເໜີຜົນສຳເລັດກ່ຽວກັບການຈັດຕັ້ງຂອງ ກປສ. |

## ເອກະສານຄັດຕິດ 2.
## ແຜນດຳເນີນງານຂອງ ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ໄລຍະ 5 ປີ (2021-2025)

## 1. ແຜນດຳເນີນງານລະອຽດ ປີ 2021

| ລ/ດ | ໜ້າວຽກຈຸດສຸມ | ຄາດໝາຍ ຜົນໄດ້ຮັບ | ຜູ້ຊີ້ນຳ ແລະ ພາກສ່ວນຈັດຕັ້ງປະຕິບັດ | ງົບປະມານ | ຄວາມຄືບໜ້າ/ຄາດໝາຍໃຫ້ສຳເລັດ | | | | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | | | | Jan | Feb | Mar | Apr | May | Jun | Jul | Aug | Sep | Oct | Nov | Dec | |
| I | ດ້ານການຈັດຕັ້ງ | | | | | | | | | | | | | | | | |
| 1.1 | ປັບປຸງນິຕິກຳ (ລະບຽບການຄຸ້ມຄອງ ກປສ ແລະ ຄູ່ມືຄຸ້ມຄອງບໍລິຫານຕ່າງໆ) ໃຫ້ສຳເລັດ ເພື່ອຮັບປະກັນ ການເຄື່ອນໄຫວວຽກງານໃຫ້ຖືກຕ້ອງຕາມພາລະບົດບາດ, ແຜນການ ແລະ ເປັນເງື່ອນໄຂສາມາດກາຍເປັນອົງກອນທີ່ເຂົ້າຫາແຫຼ່ງທຶນສາກົນໂດຍກົງ | ມີຂໍ້ຕົກລົງ (ປັບປຸງ), ມີຄູ່ມືຄຸ້ມຄອງບໍລິຫານ ກປສ ທີ່ຖືກ ຮັບຮອງ ຈາກ ສກປສ | ທ່ານ ນ ພັກກາວັນ ທ່ານ ນ ບຸນພາມາ ແລະ ທຸກພະແນກ ໃນ ຫກປສ | | | | | | | | | | | | | | |
| 1.2 | ປັບປຸງລະບົບບັນຊີ ແລະ ການລາຍງານ ໃຫ້ສະຖຽນ ແລະ ມີປະສິດທິຜົນ | ມີລະບົບໂປຣແກຣມບັນຊີທີ່ນຳໃຊ້ເປັນເອກະພາບກັນ ແລະ ມີປະສິດທິຜົນ | ທ່ານ ນ ພັກກາວັນ ທ່ານ ນ ບຸນພາມາ ແລະ ພະແນກການເງິນ | | | | | | | | | | | | | | |
| 1.3 | ປັບປຸງໂຄງຮ່າງກົງຈັກການຈັດຕັ້ງ ຈາກ 4 ພະແນກ ເປັນ 3 ພະແນກ ແລະ ປ່ຽນຊື່ພະແນກໃໝ່ ພ້ອມທັງກຳນົດສິດໜ້າທີ່ຄວາມຮັບຜິດຊອບແຕ່ລະພະແນກໃຫ້ສອດຄ່ອງກັບສະພາບການເຄື່ອນໄຫວວຽກງານ ຄື: 1.ພະແນກ ການເງິນ, 2. ພະແນກ ຄຸ້ມຄອງໂຄງການ, 3. ພະແນກ ບໍລິຫານ ແລະ ແຜນການ | ຂໍ້ຕົກລົງສະບັບປັບປຸງ ມີການກຳນົດໂຄງຮ່າງການຈັດຕັ້ງ 3 ພະແນກ ແລະ ລະບຸພາລະບົດບາດ ຂອງ 3 ພະແນກ | ທ່ານ ນ ພັກກາວັນ ທ່ານ ນ ບຸນພາມາ ແລະ ພະແນກບໍລິຫານ ແລະ ແຜນການ | | | | | | | | | | | | | | |
| 1.4 | ຈັດກອງປະຊຸມ ສະພາບໍລິຫານ ກປສ ສະໄໝສາມັນ ໃຫ້ໄດ້ຢ່າງໜ້ອຍ 2 ຄັ້ງ/ປີ ແລະ ກອງປະຊຸມ ຄະນະວິຊາການ ກປສ 4 ຄັ້ງ/ປີ ດັ່ງທີ່ກຳນົດໄວ້ໃນ ດຳລັດ ວ່າດ້ວຍ ກອງທຶນປົກປັກຮັກສາສິ່ງແວດລ້ອມ | ກອງປະຊຸມ ສກປສ 2ຄັ້ງ ແລະ ກອງປະຊຸມ ຄກປສ 4 ຄັ້ງ | ທ່ານ ນ ພັກກາວັນ, ທ່ານ ນ ບຸນພາມາ, ພະແນກບໍລິຫານ ແລະ ແຜນການ ແລະ ພະແນກຄຸ້ມຄອງໂຄງການ | | | | | | | | | | | | | | |
| 1.5 | ສ້າງຄວາມເຂັ້ມໃຫ້ພະນັກງານ ຫກປສ ໂດຍສ້າງແຜນພັດທະນາບຸກຄະລາກອນປະຈຳປີ ໃນການຈັດຝຶກອົບຮົມ ໄລຍະສັ້ນ/ໄລຍະຍາວ ທັງພາຍໃນ ແລະ ພາຍນອກ | ມີແຜນພັດທະນາບຸກຄະລາກອນປະຈຳປີ ແລະ ຈັດຕັ້ງປະຕິບັດ | ທ່ານ ນ ພັກກາວັນ ທ່ານ ນ ບຸນພາມາ ແລະ ພະແນກບໍລິຫານ ແລະ ແຜນການ | | | | | | | | | | | | | | |

| | | | | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| II | ດ້ານການຄຸ້ມຄອງ ບໍລິຫານ | | | | | | | | | | | | | | | | |
| 2.1 | ສືບຕໍ່ປັບປຸງໃຫ້ສຳເລັດ ຄູ່ມືຄຸ້ມຄອງ-ບໍລິຫານ ຂອງ ກປສ ໃຫ້ສອດຄ່ອງກັບສະພາບຕົວຈິງ ແລະ ສາມາດ ຄຸ້ມຄອງໂຄງການຈາກຫຼາຍແຫຼ່ງທຶນຢ່າງມີປະສິດທິຜົນ | ມີຄູ່ມືການຄຸ້ມຄອງ ບໍລິຫານ ກປສ ທີ່ ຖືກຮັບ ຮອງ (6 ເຫລັ້ມ) | ທ່ານ ນ ພັກກາວັນ ທ່ານ ນ ບຸນພາມາ ແລະ ທຸກພະແນກ ໃນ ຫກປສ | | | | | | | | | | | | | | |
| 2.2 | ປັບປຸງລະບົບການຄຸ້ມຄອງ ແລະ ບູລະນະຮັກສາສິ່ງ ອຳນວຍຄວາມສະດວກ ຂອງຫ້ອງການໃຫ້ມີ ປະສິດທິພາບ, ປະສິດຜົນຜົນ, ຖືກຕ້ອງຕາມຈຸດປະສົງ , ເປົ້າໝາຍ ແລະ ລະບຽບກົດໝາຍ ໂດຍຕ້ອງມີການ ກວດນັບຊັບສິນ ຢ່າງນ້ອຍປີລະຄັ້ງ. | ມີບັນຊີກວດນັບຊັບ ສິນປະຈຳ 6 ເດືອນ ແລະ ປະຈຳປີ | ພະແນກບໍລິຫານ ແລະ ແຜນການ | | | | | | | | | | | | | | |
| 2.3 | ປັບປຸງການປະຕິບັດໜ້າທີ່ຂອງພະນັກງານ ເພື່ອ ສາມາດຕອບສະໜອງວຽກປະຈຳວັນ ດ້ວຍຄວາມ ວ່ອງໄວ (ໃຫ້ຄຳເຫັນ ຫຼື ຕອບກັບເອກະສານຕ່າງໆທີ່ ເຂົ້າມາ ຫກປສ ໃຫ້ທັນຕາມກຳນົດເວລາ ໂດຍສ້າງ ລະບົບຕິດຕາມກວດກາເອກະສານ). | ມີຕາຕະລາງການຕິດ ກວດກາເອກະສານ | ທຸກພະແນກ ພາຍໃນ ຫກປສ | | | | | | | | | | | | | | |
| 2.4 | ປັບປຸງການບໍລິຫານຈັດການເພື່ອຕອບສະໜອງໃຫ້ ແກ່ການເຄື່ອນໄຫວວຽກງານໃຫ້ມີຄວາມສະດວກ ວ່ອງໄວ ແລະ ຮັບປະກັນຄວາມຖືກຕ້ອງ | | ພະແນກບໍລິຫານ ແລະ ແຜນການ | | | | | | | | | | | | | | |
| 2.5 | ການຄຸ້ມຄອງຄ່າບໍລິຫານ ຫກປສ ໃຫ້ຢູ່ໃນເກນຕ່ຳ ກວ່າ 20- 30% ຂອງງົບປະມານທີ່ເບີກຈ່າຍປະຈຳປີ. | ມີບັນຊີຕິດຕາມ ການນຳໃຊ້ ງົບປະມານບໍລິຫານ | ທ່ານ ນ ພັກກາວັນ ທ່ານ ນ ບຸນພາມາ ແລະ ທຸກພະແນກ ໃນ ຫກປສ | | | | | | | | | | | | | | |

| | | | | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| III | ດ້ານການແກ້ໄຂຜົນການກວດສອບ | | | | | | | | | | | | | | | | |
| 3.1 | ສ້າງແຜນດຳເນີນງານແກ້ໄຂຄຳແນະນຳຜົນການ ກວດສອບປະຈຳປີ | ມີແຜນດຳເນີນງານ | | | ■ | | | | | | | | | | | | |
| 3.2 | ເຜີຍແຜ່ບົດລາຍງານ ຜົນການກວດສອບ ປະຈຳປີ ໃຫ້ແກ່ ບັນດາໂຄງການທີ່ໄດ້ຮັບທຶນຈາກ ກປສ ພ້ອມທັງ ແນະນຳ ແລະ ຕິດຕາມການແກ້ໄຂ ບັນຫາ ຜົນການກວດສອບທີ່ຕິດພັນກັບ ໂຄງການຂອງຕົນ | ຈັດປະຊຸມເຜີຍແຜ່/ ນຳສົ່ງຜົນກວດສອບ ໃຫ້ໂຄງການ | | | | | | | ■ | | | | | | ■ | | |
| 3.3 | ລົງຕິດຕາມຊຸກຍູ້ໂຄງການທີ່ພົບຄວາມຫຍຸ້ງຍາກ ໃນການສະຫຼຸບສະສາງດ້ານການເງິນ ແລະ ໂຄງການ ທີ່ພົບເຫັນບັນຫາໃນການກວດສອບແຕ່ລະປີ ເພື່ອຊ່ວຍແກ້ໄຂບັນຫາ | ບົດລາຍງານການ ຕິດ ຕາມຊຸກຍູ້ | ທ່ານ ນ ພັກກາວັນ, ທ່ານ ນ ບຸນພາມາ ແລະ ພະແນກການເງິນ | | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | |
| 3.4 | ສ້າງກົນໄກກວດສອບພາຍໃນ ທກປສ ເພື່ອຮັບປະ ກັນຄວາມຖືກຕ້ອງໃນການຄຸ້ມຄອງບໍລິ ຫານ ແລະ ສາມາດສະໜອງຂໍ້ມູນໃຫ້ອົງການກວດສອບແຫ່ງ ລັດ ແລະ ພາກສ່ວນກວດສອບພາຍນອກ | ມີການກຳນົດນົດ ກອບໜ້າວຽກໃຫ້ ພງ ເຮັດໜ້າທີ່ ກວດສອບພາຍໃນ | | | | | | | ■ | | | | | | ■ | | |
| 3.5 | ແຕ່ງຕັ້ງຄະນະຮັບຜິດຊອບກະກຽມການກວດສອບ ພາຍໃນກ່ອນຈະມີການກວດສອບປະຈຳປີເພື່ອຮັບ ປະກັນທາງດ້ານເອກະສານໃຫ້ແກ່ອົງການກວດ ສອບແຫ່ງລັດ ແລະ ພາກສ່ວນກວດສອບພາຍນອກ | ຄະນະຮັບຜິດຊອບ ວຽກກວດສອບ ພາຍ ໃນ | | | | ■ | | | | | | | | | | | |

| IV | ດ້ານບຸກຄະລາກອນ | | | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| 4.1 | ປະກອບພະນັກງານໃຫ້ເຕັມຕາມຕຳແໜ່ງງານ ແລະ ປ່ຽນແທນ ກໍລະນີມີພະນັກງານລາອອກ ຫລື ບໍ່ສືບຕໍ່ສັນຍາ ລວມທັງຊ່ຽວຊານຕ່າງປະເທດທີ່ເຮັດວຽກ ໄລຍະສັ້ນ | ດຳເນີນການປະກອບພະນັກງານ ຕາມແຜນ ການ | | | | | | | | | | | | | | | |
| 4.2 | ດຳເນີນການປະເມີນຄວາມຕ້ອງການຂອງອີງກອນທາງດ້ານພະນັກງານ (Staff need assess- ment) ໃຫ້ສອດຄ່ອງກັບແຫຼ່ງລາຍຮັບ ເຊັ່ນ: ທຶນພາຍໃນ, ທຶນທະນາຄານໂລກ, ທຶນຈີໄອແຊັດ, ທຶນຂອງ ຢູເນັບ ແລະ ທຶນອື່ນໆທີ່ ຫກປສ ຄຸ້ມຄອງ-ບໍລິຫາ | ບົດປະເມີນຄວາມຕ້ອງການພະນັກງານ | | | | | | | | | | | | | | | |
| 4.3 | ປັບປຸງຄຸນນະພາບໃນການປະຕິບັດວຽກງານຂອງພະນັກງານ ໂດຍການກຳນົດຄາດໝາຍສູ້ຊົນ ແລະ ແຜນວຽກຈຸດສຸມຂອງແຕ່ລະຄົນ ເປັນອັນລະອຽດລົງໃນແບບຟອມ KPI ແລະ ແຜນວຽກລວມຂອງແຕ່ລະພະແນກ | ມີແບບຟອມ KPI ແລະ ມີການປະເມີນ | | | | | | | | | | | | | | | |
| 4.4 | ຝຶກອົບຮົມ ທັງໄລຍະສັ້ນ ແລະ ໄລຍະຍາວໃຫ້ພະນັກງານ ກ່ຽວກັບຫລັກສູດວິຊາສະເພາະ ທີ່ຕິດພັນກັບວຽກງານຕົວຈິງ | ມີແຜນການຝຶກອົບຮົບປະຈຳປີ ແລະ ຈັດຕັ້ງ ປະ ຕິບັດຕາມແຜນ | ທ່ານ ນ ພັກກາວັນ ທ່ານ ນ ບຸນພາມາ ແລະ ພະແນກບໍລິຫານ ແລະ ແຜນການ | | | | | | | | | | | | | | |
| 4.5 | ພະນັກງານທີ່ໄດ້ຮັບການຝຶກອົບຮົມຈະຕ້ອງໄດ້ເຮັດບົດລາຍງານ ແລະ ແນະນຳບົດຮຽນໃຫ້ພະນັກງານດ້ວຍກັນເພື່ອແຜ່ຂໍ້ມູນ ແລະ ຄວາມຮູ້ທີ່ໄດ້ຝຶກມາ ຢ່າງໜ້ອຍ 1 ຄັ້ງຕໍ່ປີ | ຈັດສຳມະນາແລກປ່ຽນບົດຮຽນປະຈຳປີ | | | | | | | | | | | | | | | V |
| 4.6 | ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານຂອງພະນັກງານໄລຍະທົດລອງງານ ແລະ ປະຈຳປີ ຂອງ ຫກປສ ຕາມແບບຟອມ ກຊສ 1 ຄັ້ງ/ປີ | ມີບົດລາຍງານການປະເມີນພະນັກງານປະຈຳປີ | | | | | | | | | | | | | | | |
| 4.7 | ຄວບຄຸມອັດຕາເຂົ້າອອກພະນັກງານບໍ່ເກີນ 8% ໂດຍການສຶກສາສາເຫດ ແລະ ສຳຫຼວດຄ່າຕອບແທນ ແລະ ນະໂຍບາຍອື່ນໆ ຂອງພະນັກງານພາຍໃນອົງກອນທຽບໃສ່ກົນໄກຕະຫຼາດ ພ້ອມທັງໃຫ້ຄຳແນະ ນຳໃນການປັບປຸງແກ້ໄຂ | ມີບົດສຶກສາ ອັດຕາການເຂົ້າ-ອອກຂອງ ພະນັກງານ | | | | | | | | | | | | | | | |
| 4.8 | ຊຸກຍູ້ໃຫ້ພະນັກງານຮຽນຮູ້ ແລະ ກຳແໜ້ນກ່ຽວກັບນິຕິກຳ ຂອງ ກປສ ດ້ວຍຕົນເອງ ເພື່ອເປັນບ່ອນອີງໃນການເຄື່ອນໄຫວວຽກງານ | ຈຳນວນພະນັກງານ ສຶກສາອ່ານຮຽນດ້ວຍຕົນເອງ (ອີງຕາມ ສະພາບ ຕົວຈິງ) | ທ່ານ ນ ພັກກາວັນ, ທ່ານ ນ ບຸນພາມາ ແລະ ທຸກພະແນກ | | | | | | | | | | | | | | |

| | | | | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| V | ດ້ານການລະດົມທຶນ | | | | | | | | | | | | | | | | |
| 5.1 | ສືບຕໍ່ຕິດຕາມການເກັບດອກເບ້ຍເງິນຝາກຢ່າງເປັນປົກກະຕິ ພ້ອມນັ້ນ ສະເໜີເພີ່ມຕົ້ນທຶນເງິນຝາກ ຈຳນວນ 1 ລ້ານໂດລາສະຫະລັດ | ສູ້ຊົນສ້າງແຫຼ່ງລາຍຮັບທີ່ມີທ່າແຮງ ຈາກ ພາຍໃນ ແລະ ຕ່າງປະເທດ ໃຫ້ບັນລຸມູນຄ່າ 12.56 ລ້ານໂດລາສະຫາລັດ | ທ່ານ ນ ພັກກາວັນ , ທ່ານ ນ ບຸນພາມາ,ພະແນກ ຄຸ້ມຄອງໂຄງການ ແລະ ພະແນກການເງິນ | | | | | | | | | | | | | | |
| 5.2 | ຕິດຕາມທວງໜີ້ຕາມສັນຍາ ພ້ອມທັງ ກວດກາ ແລະ ປະເມີນຄືນຄວາມສາມາດ ໃນການຊຳລະໜີ້ ຂອງແຕ່ລະ ຜູ້ກູ້ຢືມ ເພື່ອສ້າງແຜນຊຳລະໜີ້ຄືນໃໝ່ | | | | | | | | | | | | | | | | |
| 5.3 | ສູ້ຊົນເກັບລາຍຮັບຈາກການປະກອບສ່ວນທາງດ້ານສິ່ງແວດລ້ອມ ຈາກໂຄງການພັດທະນາຂະແໜງ ໄຟຟ້າ ແລະ ບໍ່ແຮ່ ຕາມແຜນການທີ່ກຳນົດໄວ້ | | | | | | | | | | | | | | | | |
| 5.4 | ປະຕິບັດການເບີກຈ່າຍ ແລະ ຕິດຕາມການສະຫຼຸບສະສາງດ້ານການເງິນຂອງໂຄງການຕ່າງໆໃຫ້ຖືກຕ້ອງຕາມລະບຽບ ເພື່ອສາມາດຄ່ຽນເງິນໄດ້ຕາມແຜນການທີ່ກຳນົດໄວ້ | | | | | | | | | | | | | | | | |
| 5.5 | ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ທະນາຄານໂລກ ເພື່ອກະກຽມໂຄງການໃໝ່ (EWMP), (LLL) ແລະ ການກະກຽມການເຂົ້າເຖິງກອງ ທຶນ GCF | | | | | | | | | | | | | | | | |
| 5.6 | ສືບຕໍ່ສຶກສາຄົ້ນຄວ້າລາຍຮັບຈາກແຫຼ່ງທຶນໃໝ່ເຊັ່ນ: ປະສານສົມທົບ ແລະ ຕິດຕາມ ກັບພາກສ່ວນ ທີ່ກ່ຽວຂ້ອງ ໃນການປັບປຸງ ດຳລັດປະທານປະເທດ ກ່ຽວກັບການຈ່າຍຄ່ານ້ຳເປື້ອນ (ແຫຼ່ງທຶນພາຍໃນ) | | | | | | | | | | | | | | | | |

| | | | | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| VI | ດ້ານການສະໜອງທຶນ | | | | | | | | | | | | | | | | |
| 6.1 | ທຶນພາຍໃນ | ໃນປີ 2021 ກປສ ຄາດວ່າຈະສາມາດ ລະດົມທຶນໄດ້ 12.56 ລ້ານໂດລາ ສະຫະລັດ (ທຶນພາຍ ໃນ 1.33 ລ້ານໂດ ລາສະຫະລັດ ແລະ ທຶນສາກົນ 11.23 ລ້ານໂດລາສະ ຫະ ລັດ). | ທ່ານ ນ ພັກກາວັນ, ທ່ານ ນ ບຸນພາມາ, ພະ ແນກ ການເງິນ ແລະ ພະ ແນກ ຄຸ້ມຄອງໂຄງການ | | | | | | | | | | | | | | |
| 1.) | ການສະໜອງທຶນຜ່ານຮ່ວງທຶນນະໂຍບາຍ (PICE) ສະເພາະທຶນພາຍໃນ ຈຳນວນ 2.46 ຕື້ ກີບ | | | | | | | | | | | | | | | | |
| 2.) | ການສະໜອງທຶນຜ່ານຮ່ວງທຶນຊີວະນາໆພັນ ຈຳນວນ 1.32 ຕື້ ກີບ | | | | | | | | | | | | | | | | |
| 3.) | ການສະໜອງທຶນຜ່ານຮ່ວງທຶນສິ່ງແວດລ້ອມ ຈຳນວນ 400 ລ້ານກີບ | | | | | | | | | | | | | | | | |
| 4.) | ການສະໜອງທຶນໃນຮ່ວງທຶນຊັບພະຍາກອນນ້ຳ ຈຳນວນ 1.16 ຕື້ກີບ | | | | | | | | | | | | | | | | |
| 5.) | ການສະໜອງທຶນຜ່ານຮ່ວງທຶນການຄຸ້ມຄອງທີ່ດິນ ຈຳນວນ 530 ລ້ານກີບ | | | | | | | | | | | | | | | | |
| 6.) | ການລົງທຶນຜ່ານຮ່ວງທຶນການປ່ຽນແປງດິນຟ້າອາກາດ ຈຳນວນ 106 ລ້ານກີບ | | | | | | | | | | | | | | | | |
| 6.2 | ທຶນສາກົນ | | | | | | | | | | | | | | | | |
| 1.) | ທຶນ ຄສລ2 ມູນຄ່າ 5.21 ລ້ານໂດລາສະຫະລັດ ຈະສຸມໃສ່ສືບຕໍ່ຈັດຕັ້ງປະຕິບັດໂຄງການ ຄສລ 2 ທຸກກິດຈະກຳທີ່ຢູ່ພາຍໃຕ້ ຮ່ວງທຶນນີ້ PICE ແລະ CBI ທັງໝົດ ທີ່ກຳລັງຈັດຕັ້ງປະຕິບັດ | | | | | | | | | | | | | | | | |
| 2.) | ທຶນໂຄງການ GIZ ສຳລັບປີ 2021 ມູນຄ່າ 3,00 ລ້ານໂດລາສະຫະລັດ ຈະສຸມໃສ່ຈັດຕັ້ງ ປະຕິບັດໂຄງການ I-GFLL (REDD+) ໃນ 3 ແຂວງພາກເໜືອ (ແຂວງຫົວພັນ, ຫຼວງພະບາງ ແລະ ໄຊຍະບູລີ) | | | | | | | | | | | | | | | | |
| 3.) | ທຶນໂຄງການ UNEP ສຳລັບປີ 2021 ມູນຄ່າ 2,54 ລ້ານໂດລາສະຫະລັດ ຈະສຸມໃສ່ຈັດຕັ້ງປະຕິບັດ "ໂຄງ ການ ສ້າງຄວາມທົນ ທານຂອງ ປະຊາກອນໃນຕົວເມືອງ ເພື່ອປັບຕົວເຂົ້າກັບ ການປ່ຽນແປງດິນຟ້າອາ ກາດ ໂດຍການ ຄຸ້ມຄອງ ແລະ ນຳໃຊ້ທ່າແຮງຂອງລະບົບ ນິ ເວດ" ໃນ ນະຄອນຫຼວງວຽງຈັນ ແລະ 3 ແຂວງ (ບໍລິຄຳໄຊ, ສະຫວັນນະເຂດ ແລະ ຈຳປາສັກ) | | | | | | | | | | | | | | | | |
| 4.) | ທຶນຊ່ວຍເຫຼືອລ້າໂດຍກົງຂອງ GCF ສຳລັບການກະກຽມຄວາມພ້ອມ ເພື່ອສຳເລັດການສະໝັກເຂົ້າເປັນອົງກອນທີ່ສາມາດເຂົ້າເຖິງແຫຼ່ງທຶນໄດ້ໂດຍກົງ ຈຳນວນ 0.2 ລ້ານໂດລາສະຫະລັດ | | | | | | | | | | | | | | | | |
| 5.) | ສະໜອງງົບປະມານ ສຳລັບປີ 2021 ໃຫ້ພາກສ່ວນຕ່າງໆໃນການຈັດຕັ້ງປະຕິບັດໂຄງການຄຸ້ມຄອງໂຄງການພູມີທັດ ແລະ ປັບປຸງຊີວິດການເປັນຢູ່ (LLL) ຈຳນວນ 0.28 ລ້ານໂດລາສະຫະລັດ | | | | | | | | | | | | | | | | |

| VII. | ດ້ານການຮ່ວມມື | | | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| 7.1 | ເປັນເຈົ້າການ ປະສານສົມທົບ ກັບກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເອງ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງອື່ນໆ ເພື່ອຊຸກຍູ້ ການຈັດຕັ້ງປະຕິບັດໂຄງການທີ່ຕິດພັນກັບ ພາກສ່ວນດັ່ງກ່າວໃຫ້ມີປະສິດທິຜົນດີ | ມີການປະສານງານ ປົກກະຕິ | | | | | | | | | | | | | | | |
| 7.2 | ສ້າງເປັນຄູ່ຮ່ວມງານກັບ ມະຫາວິທະຍາໄລແຫ່ງຊາດ ໃນການເກັບກຳຂໍ້ມູນເພື່ອກະກຽມໂຄງການໃໝ່ | ມີບົດບັນທຶກຮ່ວມ ກັນ | | | | | | | | | | | | | | | |
| 7.3 | ສ້າງສາຍສຳພັນກັບພາກລັດ, ເອກະຊົນ,ອົງການ ຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ. ໃນນັ້ນ ຢ່າງ ນ້ອຍໃຫ້ມີ ສັນຍາຮ່ວມມື/ສັນຍາສະໜອງທຶນ 2 ສະບັບ | ມີສັນຍາຮ່ວມມື 2 ສັນຍາ | ທ່ານ ນ ພົກກາວັນ, ທ່ານ ນ ບຸນພານາ ແລະ ພະແນກ ຄຸ້ມຄອງ ໂຄງການ | | | | | | | | | | | | | | |
| 7.4 | ສືບສານ ແລະ ຕໍ່ຍອດ ສາຍສຳພັນ ກັບທະນາຄານ ໂລກ (WB) ເພື່ອຈັດຕັ້ງປະຕິບັດສັນຍາທີ່ມີຢູ່ ແລະ ກະກຽມໂຄງການໃໝ່ ເພື່ອໃຫ້ໄດ້ 1 ສັນຍາ ຫຼັງ ຈາກສຳເລັດການກະກຽມ | ສືບຕໍ່ປະສານງານ | | | | | | | | | | | | | | | |
| 7.5 | ສືບຕໍ່ສ້າງສາຍສຳພັນກັບທະນາຄານພັດທະນາອາຊີ (ADB), Global Environment Facility (GEF), ກອງທຶນສີຂຽວ ດ້ານການປ່ຽນແປງດິນ ຟ້າອາກາດ (GCF) ແລະ ອົງການຈັດຕັ້ງອື່ນໆ ເພື່ອຊອກຫາແຫຼ່ງທຶນໃໝ່ | ສືບຕໍ່ປະສານງານ | | | | | | | | | | | | | | | |
| 7.6 | ເຂົ້າຮ່ວມກອງປະຊຸມແລກປ່ຽນບົດຮຽນກັບສາກົນ ຢ່າງນ້ອຍ 2 ຄັ້ງ ເພື່ອເສີມຂະຫຍາຍການລະດົມທຶນ | ເຂົ້າຮ່ວມກອງ ປະຊຸມ 2 ຄັ້ງ | | | | | | | | | | | | | | | |

| | | | | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| VIII | ດ້ານການສື່ສານ | | | | | | | | | | | | | | | | |
| 8.1 | ສ້າງວາລະສານ ຫຼື ລົງໂຄສະນາຜ່ານສື່ອື່ນໆ ຊຶ່ງລວມເອົາຜົນງານການເຄື່ອນໄຫວຂອງ ກປສ ແລະ ໂຄງການຕ່າງໆທີ່ໄດ້ຮັບທຶນຈາກ ກປສ | ອອກວາລະສານ 2 ຄັ້ງ | ທ່ານ ນ ພັກກາວັນ, ທ່ານ ນ ບຸນພາມາ, ພະແນກ ຄຸ້ມຄອງໂຄງການ ແລະ ພະແນກ ບໍລິຫານ ແລະ ແຜນການ | | | | | | | | | | | | | | |
| 8.2 | ສ້າງວິດີໂອສັ້ນ ເພື່ອໂຄສະນາການຈັດຕັ້ງປະຕິບັດວຽກງານ ຂອງ ກປສ ແລະ ຄສລ2 | ມີວິດີໂອສັ້ນ 2 ຄັ້ງ | | | | | | | | | | | | | | | |
| 8.3 | ປັບປຸງ ແລະ ສ້າງສື່ສິ່ງພິມຕ່າງໆເຊັ່ນ: ໂປຼຊົວ ຫຼື ແຜ່ນພັບ ເພື່ອເປັນການເຜີຍແຜ່ຜົນງານຂອງ ກປສ ແລະ ຂໍ້ມູນຂ່າວສານກ່ຽວກັບການປົກປັກຮັກສາສິ່ງແວດ ລ້ອມ | ມີແຜ່ນພັບ | | | | | | | | | | | | | | | |
| 8.4 | ດໍາເນີນກິດຈະກໍາການໂຄສະນາເຜີຍແຜ່ກ່ຽວກັບວຽກງານການປົກປັກຮັກສາສິ່ງແວດລ້ອມຮ່ວມກັບພາກສ່ວນກ່ຽວຂ້ອງ | ຈັດກິດຈະກໍາສ້າງຈິດສໍານຶກ 2 ຄັ້ງ | | | | | | | | | | | | | | | |
| 8.5 | ຈັດກອງປະຊຸມຜູ້ມີສ່ວນຮ່ວມ ເພື່ອເຜີຍແຜ່ຜົນງານ ແລະ ແລກປ່ຽນບົດຮຽນກັບ ພາກສ່ວນທີ່ກ່ຽວຂ້ອງ | ຈັດປະຊຸມຜູ້ມີສ່ວນຮ່ວມ 1 ຄັ້ງ | | | | | | | | | | | | | | | |
| 8.6 | ສ້າງແຜນດໍາເນີນງານການລະດົມທຶນ ແລະ ການສື່ສານ 2021-2025 | ມີແຜນດັ່ງກ່າວ | | | | | | | | | | | | | | | |
| 8.7 | ເຜີຍແຜ່ນະໂຍບາຍ, ຍຸດທະສາດ, ລະບຽບການຄຸ້ມຄອງ ແລະ ຄູ່ມືຕ່າງໆ ຜ່ານການເຜີຍແຜ່, ແຈກຢາຍ, ວາງສະແດງ ແລະ ຝຶກອົບຮົມ | ຈັດສໍາມະນາສະແດງຜົນງານ/ເຜີຍແຜ່ຢ່າງນ້ອຍ 1 ຄັ້ງ | | | | | | | | | | | | | | | |

## 2. ແຜນດຳເນີນງານລະອຽດ ປີ 2022

| ລ/ດ | ໜ້າວຽກຈຸດສຸມ | ຄາດໝາຍ ຜົນໄດ້ຮັບ | ຜູ້ຊີ້ນຳ ແລະ ພາກສ່ວນຈັດຕັ້ງປະຕິບັດ | ງົບປະມານ | ຄວາມຄືບໜ້າ/ຄາດໝາຍໃຫ້ສຳເລັດ | | | | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | | | | Jan | Feb | Mar | Apr | May | Jun | Jul | Aug | Sep | Oct | Nov | Dec | |
| I | ດ້ານການຈັດຕັ້ງ | | | | | | | | | | | | | | | | |
| 1.1 | ຈັດຕັ້ງເຜີຍແຜ່ຂະຫຍາຍ ດຳລັດ ກປສ ແລະ ຂໍ້ຕົກລົງ ກປສ (ສະບັບປັບປຸງ 2021) ພ້ອມທັງ ຄູ່ມືຄຸ້ມຄອງບໍລິຫານ ກປສ | ນິຕິກຳດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດ | ທ່ານ ນ ພັກກາວັນ ທ່ານ ນ ບຸນພາມາ ແລະ ທຸກພະແນກ ໃນ ຫກປສ | | | | | | | | | | | | | | |
| 1.2 | ສຳເລັດ ການສະໝັກເປັນອົງກອນແຫ່ງຊາດ ທີ່ສາມາດ ເຂົ້າຫາແຫຼ່ງທຶນສາກົນໄດ້ໂດຍກົງ ແລະ ເສີມສ້າງຄູ່ຮ່ວມງານກັບອົງການຈັດຕັ້ງທີ່ກ່ຽວຂ້ອງ | ສຳເລັດການສະໝັກເປັນ NAC | ທ່ານ ນ ພັກກາວັນ ທ່ານ ນ ບຸນພາມາ ແລະ ທຸກພະແນກ ໃນ ຫກປສ | | | | | | | | | | | | | | |
| 1.3 | ພັດທະນາດ້ານບຸກຄະລາກອນ ໂດຍສ້າງແຜນພັດທະນາບຸກຄະລາກອນ ປີ 2021-2025 | ມີແຜນພັດທະນາ ບຸກຄະລາກອນ 5 ປີ | ທ່ານ ນ ພັກກາວັນ ທ່ານ ນ ບຸນພາມາ ແລະ ທຸກພະແນກ ໃນ ຫກປສ | | | | | | | | | | | | | | |
| 1.4 | ດຳເນີນການທົດລອງນຳໃຊ້ລະບົບໂປຣແກຣມບັນຊີ ໃໝ່ສຳລັບທຸກໂຄງການໃໝ່ (ACPAC) | ທຸກໂຄງການໃໝ່ນຳໃຊ້ໂປຣແກຣມ (ACPAC) | ພະແນກການເງິນ | | | | | | | | | | | | | | |
| 1.5 | ຈັດກອງປະຊຸມ ສະພາບໍລິຫານ ກປສ ສະໄໝສາມັນ ໃຫ້ໄດ້ຢ່າງໜ້ອຍ 2 ຄັ້ງ/ປີ ແລະ ກອງປະຊຸມ ຄະນະວິຊາການ ກປສ 4 ຄັ້ງ/ປີ ດັ່ງທີ່ກຳນົດໄວ້ໃນ ດຳລັດ ວ່າດ້ວຍ ກອງທຶນປົກປັກຮັກສາສິ່ງແວດລ້ອມ; | ກອງປະຊຸມ ສກປສ 2 ຄັ້ງ ແລະ ກອງປະຊຸມ ຄກປສ 4 ຄັ້ງ | ທ່ານ ນ ພັກກາວັນ, ທ່ານ ນ ບຸນພາມາ, ພະແນກບໍລິຫານ ແລະ ແຜນການ ແລະ ພະແນກ ຄຸ້ມຄອງໂຄງການ | | | | | | | | | | | | | | |
| 1.6 | ສ້າງຄວາມເຂັ້ມແຂງໃຫ້ພະນັກງານ ຫກປສ ໂດຍສ້າງແຜນຝຶກອົບຮົມປະຈຳປີ | ມີແຜນຝຶກອົບຮົມປະຈຳປີ | ທ່ານ ນ ພັກກາວັນ ທ່ານ ນ ບຸນພາມາ ແລະ ພະແນກບໍລິຫານ ແລະ ແຜນການ | | | | | | | | | | | | | | |

| | | | | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| II | ດ້ານການຄຸ້ມຄອງ ບໍລິຫານ | | | | | | | | | | | | | | | | |
| 2.1 | ຈັດຕັ້ງປະຕິບັດ ຄູ່ມືຄຸ້ມຄອງ-ບໍລິຫານ ຂອງ ກປສ ພ້ອມທັງ ຈັດພິມ, ແຈກຢາຍ ແລະ ຝຶກອົບຮົມໃຫ້ ພະນັກງານ ແລະ ພາກສ່ວນກ່ຽວຂ້ອງ ຄຸ້ມຄອງ ໂຄງການຈາກຫຼາຍແຫຼ່ງທຶນຢ່າງມີປະສິດທິຜົນ | ມີການຈັດພິມ,ແຈກ ຢາຍ ແລະ ເຜີຍແຜ່ ຄູ່ ມືການຄຸ້ມຄອງບໍລິຫານ ກປສ ທີ່ຖືກຮັບ ຮອງ (6 ເຫລັ້ມ) | ທ່ານ ນ ພັກກາວັນ ທ່ານ ນ ບຸນພາມາ ແລະ ທຸກພະແນກ ໃນ ຫກປສ | | | | | | | | | | | | | | |
| 2.2 | ປັບປຸງລະບົບການຄຸ້ມຄອງ ແລະ ບູລະນະຮັກສາສິ່ງ ອໍານວຍຄວາມສະດວກ ຂອງຫ້ອງການໃຫ້ມີ ປະສິດທິພາບ, ປະສິດຜົນຜົນ, ຖືກຕ້ອງຕາມ ຈຸດປະສົງ, ເປົ້າໝາຍ ແລະ ລະບຽບກົດໝາຍ ໂດຍ ຕ້ອງມີການກວດນັບຊັບສິນ ຢ່າງນ້ອຍປີລະຄັ້ງ | ມີບັນຊີກວດນັບຊັບ ສິນປະຈໍາ 6 ເດືອນ ແລະ ປະຈໍາປີ | ພະແນກບໍລິຫານ ແລະ ແຜນການ | | | | | | | | | | | | | | |
| 2.3 | ປັບປຸງການປະຕິບັດໜ້າທີ່ຂອງພະນັກງານ ເພື່ອ ສາມາດຕອບສະໜອງວຽກປະຈໍາວັນ ດ້ວຍຄວາມ ວ່ອງໄວ (ໃຫ້ຄໍາເຫັນ ຫຼື ຕອບກັບເອກະສານ ຕ່າງໆທີ່ເຂົ້າມາ ຫກປສ ໃຫ້ທັນຕາມກໍານົດເວລາ ໂດຍສ້າງລະບົບຕິດຕາມກວດກາເອກະສານ) | ມີຕາຕະລາງການ ຕິດຕາມກວດກາການ ແກ້ໄຂເອກະສານ ປະຈໍາ ວັນ | ທຸກພະແນກ ພາຍໃນ ຫກປສ | | | | | | | | | | | | | | |
| 2.4 | ປັບປຸງການບໍລິຫານຈັດການເພື່ອຕອບສະໜອງ ໃຫ້ແກ່ການເຄື່ອນໄຫວວຽກງານໃຫ້ມີຄວາມ ສະດວກ ວ່ອງໄວ ແລະ ຮັບປະກັນຄວາມຖືກຕ້ອງ | | ພະແນກບໍລິຫານ ແລະ ແຜນການ | | | | | | | | | | | | | | |
| 2.5 | ການຄຸ້ມຄອງຄ່າບໍລິຫານ ຫກປສ ໃຫ້ຢູ່ໃນ ເກນຕໍ່າກວ່າ 20- 30% ຂອງງົບປະມານທີ່ເບີກ ຈ່າຍປະຈໍາປີ. | ມີບັນຊີຕິດຕາມການນໍາ ໃຊ້ງົບປະມານບໍລິຫານ | ທ່ານ ນ ພັກກາວັນ ທ່ານ ນ ບຸນພາມາ ແລະ ທຸກພະແນກ ໃນ ຫກປສ | | | | | | | | | | | | | | |

| | | | | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| III | ດ້ານການແກ້ໄຂຜົນການກວດສອບ | | | | | | | | | | | | | | | | |
| 3.1 | ສ້າງແຜນດຳເນີນງານແກ້ໄຂຄຳແນະນຳຜົນການກວດສອບປະຈຳປີ | ມີແຜນດຳເນີນງານ | ທ່ານ ນ ພັກກາວັນ, ທ່ານ ນ ບຸນພາມາ ແລະ ພະແນກການເງິນ | | ■ | | | | | | | | | | | | |
| 3.2 | ເຜີຍແຜ່ບົດລາຍງານ ຜົນການກວດສອບ ປະຈຳປີ ໃຫ້ແກ່ ບັນດາໂຄງການທີ່ໄດ້ຮັບທຶນຈາກ ກປສ ພ້ອມທັງ ແນະນຳ ແລະ ຕິດຕາມການແກ້ໄຂ ບັນຫາ ຜົນການກວດສອບທີ່ຕິດພັນກັບ ໂຄງການຂອງຕົນ | ຈັດປະຊຸມເຜີຍແຜ່/ນຳສົ່ງຜົນກວດສອບ ໃຫ້ໂຄງການ | | | | | | | | ■ | | | | | | ■ | |
| 3.3 | ລົງຕິດຕາມຊຸກຍູ້ໂຄງການທີ່ພົບຄວາມຫຍຸ້ງຍາກໃນການສະຫຼຸບສະສາງດ້ານການເງິນ ແລະ ໂຄງການທີ່ພົບເຫັນບັນຫາໃນການກວດສອບແຕ່ລະປີ ເພື່ອຊ່ວຍແກ້ໄຂບັນຫາ | ບົດລາຍງານການຕິດຕາມຊຸກຍູ້ | | | | | ■ | | | ■ | | | ■ | | | ■ | |
| 3.4 | ຈັດຕັ້ງປະຕິບັດກົນໄກກວດສອບພາຍໃນ ຫກປສ ເພື່ອຮັບປະ ກັນຄວາມຖືກຕ້ອງໃນການຄຸ້ມຄອງບໍລິຫານ ແລະ ສາມາດສະໜອງຂໍ້ມູນ ໃຫ້ອົງການກວດສອບແຫ່ງ ລັດ ແລະ ພາກສ່ວນກວດສອບພາຍນອກ | ມີບົດລາຍງານຜົນການ ກວດສອບພາຍໃນຂອງ ຫກປສ ປະຈຳປີ | | | | | | | ■ | | | | | | ■ | | |
| 3.5 | ແຕ່ງຕັ້ງຄະນະຮັບຜິດຊອບກະກຽມການກວດສອບພາຍໃນກ່ອນຈະມີການກວດສອບປະຈຳປີເພື່ອຮັບປະກັນທາງດ້ານເອກະສານໃຫ້ແກ່ອົງການກວດສອບແຫ່ງລັດ ແລະ ພາກສ່ວນກວດສອບພາຍນອກ | ຄະນະຮັບຜິດຊອບວຽກກວດສອບພາຍໃນ | | | | ■ | | | | | | | | | | | |

| IV | ດ້ານບຸກຄະລາກອນ | | | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| 4.1 | ປະກອບພະນັກງານໃຫ້ເຕັມຕາມຕຳແໜ່ງງານ ແລະ ປ່ຽນແທນ ກໍລະນີມີພະນັກງານລາອອກ ຫລື ບໍ່ສືບຕໍ່ສັນຍາ ລວມທັງຊ່ຽວຊານຕ່າງປະເທດ ທີ່ເຮັດວຽກ ໄລຍະສັ້ນ; | ດຳເນີນການປະກອບ ພະນັກງານ ຕາມແຜນ ການ | | | | | | | | | | | | | | | |
| 4.2 | ຈັດຕັ້ງປະຕິບັດນະໂຍບາຍບຸກຄະລາກອນທີ່ເໝາະ ສົມ ໂດຍການສືບຕໍ່ຝຶກອົບຮົບໃຫ້ພະນັກງານ ດ້ວຍວິທີການຕ່າງໆເຊັ່ນ: ການຮຽນຮູ້ຜ່ານການ ປະຕິບັດຕົວຈິງ, ການຝຶກອົບຮົມສະເພາະດ້ານ ແລະ ການຝຶກອົບເພື່ອກາຍເປັນຄູຝຶກ | ຄາດໝາຍຢ່າງນ້ອຍ 30% ຂອງ ຈຳນວນ ພະນັກງານ ທັງໝົດ ໃຫ້ ໄດ້ຮັບການ ຝຶກອົບຮົມ , 15% ຂອງ ພງ ໃຫ້ ກາຍ ເປັນຊ່ຽວຊານ ສະເພາະດ້ານ ແລະ ກາຍ ເປັນຄູຝຶກ | | | | | | | | | | | | | | | |
| 4.3 | ປັບປຸງຄຸນນະພາບໃນການປະຕິບັດວຽກງານຂອງ ພະນັກງານ ໂດຍການກຳນົດຄາດໝາຍສູ້ຊົນ ແລະ ແຜນວຽກຈຸດສຸມຂອງແຕ່ລະຄົນ ເປັນອັນລະອຽດ ລົງໃນແບບຟອມ KPI ແລະ ແຜນວຽກລວມຂອງ ແຕ່ລະພະແນກ ພ້ອມທັງຕິດຕາມວັດແທກ | ຄ່າຕົວຊີ້ວັດຜົນງານ (KPI) ຢ່າງໜ້ອຍ ໃຫ້ ບັນລຸ 75% ຂອງ ການກຳນົດຕົວຊີ້ວັດ ໃນການປະຕິບັດວຽກ ງານ | ທ່ານ ນ ພັກກາວັນ ທ່ານ ນ ບຸນພາມາ ແລະ ພະແນກບໍລິຫານ ແລະ ແຜນການ | | | | | | | | | | | | | | V |
| 4.4 | ຝຶກອົບຮົມ ທັງໄລຍະສັ້ນ ແລະ ໄລຍະຍາວໃຫ້ ພະນັກງານ ກ່ຽວກັບຫລັກສູດວິຊາສະເພາະ ທີ່ຕິດ ພັນກັບວຽກງານຕົວຈິງ | ມີແຜນການຝຶກອົບຮົບ ປະຈຳປີ ແລະ ຈັດຕັ້ງ ປະຕິບັດຕາມແຜນ | | | | | | | | | | | | | | | |
| 4.5 | ພະນັກງານທີ່ໄດ້ຮັບການຝຶກອົບຮົມຈະຕ້ອງໄດ້ ເຮັດບົດລາຍງານ ແລະ ແນະນຳບົດຮຽນໃຫ້ ພະນັກງານດ້ວຍກັນເພື່ອແຜ່ຂໍ້ມູນ ແລະ ຄວາມຮູ້ທີ່ ໄດ້ຝຶກມາ ຢ່າງໜ້ອຍ 1 ຄັ້ງຕໍ່ປີ | ຈັດສຳມະນາແລກ ປ່ຽນບົດຮຽນ ປະຈຳປີ | | | | | | | | | | | | | | | |
| 4.6 | ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກ ງານຂອງພະນັກງານ ປະຈຳປີ ຂອງ ທກປສ ຕາມ ແບບຟອມ ກຊສ 1 ຄັ້ງ/ປີ | ມີບົດລາຍງານການປະ ເມີນພະນັກງານປະຈຳປີ | | | | | | | | | | | | | | | |

| V | ດ້ານການລະດົມທຶນ | | | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| 5.1 | ສືບຕໍ່ຕິດຕາມການເກັບດອກເບ້ຍເງິນຝາກຢ່າງເປັນປົກກະຕິ | ສູ້ຊົນສ້າງແຫຼ່ງລາຍຮັບທີ່ມີທ່າແຮງ ຈາກ ພາຍໃນ ແລະ ຕ່າງປະເທດ ໃຫ້ບັນລຸມູນຄ່າ 10.13 ລ້ານໂດລາສະຫາລັດ | ທ່ານ ນ ພັກກາວັນ , ທ່ານ ນ ບຸນພາມາ,ພະແນກ ຄຸ້ມຄອງໂຄງການ ແລະ ພະແນກການເງິນ | | | | | | | | | | | | | | |
| 5.2 | ຕິດຕາມທວງໜີ້ຕາມສັນຍາ ພ້ອມທັງ ກວດກາ ແລະ ປະເມີນຄືນຄວາມສາມາດ ໃນການຊໍາລະໜີ້ ຂອງແຕ່ລະ ຜູ້ກູ້ຢືມ ເພື່ອສ້າງແຜນຊໍາລະໜີ້ຄືນໃໝ່ | | | | | | | | | | | | | | | | |
| 5.3 | ສູ້ຊົນເກັບລາຍຮັບຈາກການປະກອບສ່ວນທາງດ້ານ ສິ່ງແວດລ້ອມ ຈາກໂຄງການພັດທະນາ ຂະແໜງ ໄຟຟ້າ ແລະ ບໍ່ແຮ່ ຕາມແຜນການທີ່ກໍານົດໄວ້ | | | | | | | | | | | | | | | | |
| 5.4 | ປະຕິບັດການເບີກຈ່າຍ ແລະ ຕິດຕາມການສະຫຼຸບສະສາງດ້ານການເງິນຂອງໂຄງການຕ່າງໆ ໃຫ້ຖືກຕ້ອງຕາມລະບຽບ ເພື່ອສາມາດຄ່ຽນເງິນໄດ້ຕາມແຜນການທີ່ກໍານົດໄວ້ | | | | | | | | | | | | | | | | |
| 5.5 | ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ທະນາຄານໂລກ ເພື່ອກະກຽມຈັດຕັ້ງປະຕິບັດໂຄງການໃໝ່ (EWMP), (LLL) ແລະ ການກະກຽມການເຂົ້າເຖິງກອງທຶນ GCF | | | | | | | | | | | | | | | | |
| 5.6 | ສືບຕໍ່ສຶກສາຄົ້ນຄວ້າລາຍຮັບຈາກແຫຼ່ງທຶນໃໝ່ ເຊັ່ນ: ປະສານສົມທົບ ແລະ ຕິດຕາມ ກັບ ພາກສ່ວນ ທີ່ກ່ຽວຂ້ອງ ໃນການປັບປຸງດໍາລັດປະທານປະເທດ ກ່ຽວກັບການຈ່າຍຄ່າບໍລິການລະບົບນິເວດ | | | | | | | | | | | | | | | | |

| | | | | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| VI | ດ້ານການສະໜອງທຶນ | | | | | | | | | | | | | | | | |
| 6.1 | ທຶນພາຍໃນ ສືບຕໍ່ສະໜອງທຶນໃຫ້ໂຄງການ ທີ່ກຳລັງຈັດຕັ້ງປະຕິບັດ ແລະ ສະໜອງງົບໃຫ້ໂຄງການໃໝ່ ໄປຕາມ 6 ຮ່ອງທຶນ ມູນຄ່າ 1.33 ລ້ານໂດລາສະຫະລັດ | ໃນປີ 2022 ກປສ ຄາດວ່າຈະສາມາດລະດົມທຶນໄດ້ 10.13 ລ້ານໂດລາສະຫະລັດ (ທຶນພາຍໃນ 1.33 ລ້ານໂດລາສະຫະລັດ ແລະ ທຶນສາກົນ 8.80 ລ້ານໂດລາສະ ຫະລັດ). | ທ່ານ ນ ພັກກາວັນ, ທ່ານ ນ ບຸນພານາ, ພະແນກ ການເງິນ ແລະ ພະແນກ ຄຸ້ມຄອງໂຄງການ | | | | | | | | | | | | | | |
| 6.2 | ທຶນສາກົນ | | | | | | | | | | | | | | | | |
| 1.) | ທຶນ ຄສລ2 ມູນຄ່າ 0.54 ລ້ານໂດລາສະຫະລັດ ຈະສຸມໃສ່ສືບຕໍ່ຈັດຕັ້ງປະຕິບັດໂຄງການ ຄສລ 2 ທຸກກິດຈະກຳທີ່ຢູ່ພາຍໃຕ້ ຮ່ອງທຶນນີ້ PICE ແລະ CBI ທັງໝົດ ທີ່ກຳລັງຈັດຕັ້ງປະຕິບັດ | | | | | | | | | | | | | | | | |
| 2.) | ທຶນໂຄງການ GIZ ສຳລັບປີ 2022 ມູນຄ່າ 5,27 ລ້ານໂດລາສະຫະລັດ ຈະສຸມໃສ່ຈັດຕັ້ງ ປະຕິບັດໂຄງການ I-GFLL (REDD+) ໃນ 3 ແຂວງພາກເໜືອ (ແຂວງ ຫົວພັນ, ຫຼວງພະບາງ ແລະ ໄຊຍະບູລີ) | | | | | | | | | | | | | | | | |
| 3.) | ທຶນໂຄງການ UNEP ສຳລັບປີ 2022 ມູນຄ່າ 2,18 ລ້ານໂດລາສະຫະລັດ ຈະສຸມໃສ່ຈັດຕັ້ງປະຕິບັດ "ໂຄງການ ສ້າງຄວາມທົນ ທານຂອງ ປະຊາຊົນໃນຕົວເມືອງ ເພື່ອປັບຕົວເຂົ້າກັບ ການປ່ຽນແປງດິນຟ້າອາກາດ ໂດຍການ ຄຸ້ມຄອງ ແລະ ນຳໃຊ້ທ່າແຮງຂອງລະບົບ ນິ ເວດ" ໃນນະຄອນຫຼວງວຽງຈັນ ແລະ 3 ແຂວງ (ບໍລິຄຳໄຊ, ສະຫວັນນະເຂດ ແລະ ຈຳປາສັກ) | | | | | | | | | | | | | | | | |
| 4.) | ທຶນຊ່ວຍເຫຼືອລ້າໂດຍກົງຂອງ GCF ສຳລັບການກະກຽມຄວາມພ້ອມ ເພື່ອສຳເລັດການສະໝັກເຂົ້າເປັນອົງກອນທີ່ສາມາດເຂົ້າເຖິງແຫຼ່ງທຶນໄດ້ໂດຍກົງ ຈຳນວນ 0.2 ລ້ານໂດລາສະຫະລັດ | | | | | | | | | | | | | | | | |
| 5.) | ສະໜອງງົບປະມານ ສຳລັບປີ 2022 ໃຫ້ພາກສ່ວນຕ່າງໆໃນການຈັດຕັ້ງປະຕິບັດໂຄງການຄຸ້ມຄອງໂຄງການພູມີທັດ ແລະ ປັບປຸງຊີວິດການເປັນຢູ່ (LLL) ຈຳນວນ 0.61 ລ້ານໂດລາສະຫະລັດ | | | | | | | | | | | | | | | | |

| VII | ດ້ານການຮ່ວມມື | | | |
|---|---|---|---|---|
| 7.1 | ເປັນເຈົ້າການ ປະສານສົມທົບ ກັບກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເອງ , ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງ ແຜນການ ແລະ ການລົງທຶນ ແລະ ກະຊວງອື່ນໆ ເພື່ອຊຸກຍູ້ການຈັດຕັ້ງປະຕິບັດໂຄງການທີ່ຕິດພັນ ກັບພາກສ່ວນດັ່ງກ່າວໃຫ້ມີປະສິດທິຜົນດີ; | ມີການປະສານງານ ປົກກະຕິ | | |
| 7.2 | ສ້າງເປັນຄູ່ຮ່ວມງານກັບ ມະຫາວິທະຍາໄລແຫ່ງ ຊາດ ໃນການເກັບກຳຂໍ້ມູນເພື່ອກະກຽມ ໂຄງການໃໝ່; | ມີບົດບັນທຶກຮ່ວມກັນ | | |
| 7.3 | ສ້າງສາຍສຳພັນກັບພາກລັດ, ເອກະຊົນ,ອົງການ ຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ. ໃນນັ້ນ ຢ່າງນ້ອຍໃຫ້ມີ ສັນຍາຮ່ວມມື/ສັນຍາສະໜອງ ທຶນ 2 ສະບັບ | ມີສັນຍາຮ່ວມມື 2 ສັນຍາ | ທ່ານ ນ ພົກກາວັນ, ທ່ານ ນ ບຸນພາມາ ແລະ ພະແນກ ຄຸ້ມຄອງ ໂຄງການ | |
| 7.4 | ສືບສານ ແລະ ຕໍ່ຍອດ ສາຍສຳພັນ ກັບທະນາຄານ ໂລກ (WB) ເພື່ອຈັດຕັ້ງປະຕິບັດສັນຍາທີ່ມີຢູ່ ແລະ ກະກຽມໂຄງການໃໝ່ | ສືບຕໍ່ປະສານງານ | | |
| 7.5 | ສືບຕໍ່ສ້າງສາຍສຳພັນກັບທະນາຄານພັດທະນາ ອາຊີ (ADB), Global Environment Facility (GEF), ກອງທຶນສີຂຽວ ດ້ານການ ປ່ຽນແປງດິນຟ້າອາກາດ (GCF) ແລະ ອົງ ການຈັດຕັ້ງອື່ນໆ ເພື່ອຊອກຫາແຫຼ່ງທຶນໃໝ່ | ສືບຕໍ່ປະສານງານ | | |
| 7.6 | ເຂົ້າຮ່ວມກອງປະຊຸມແລກປ່ຽນບົດຮຽນກັບ ສາກົນຢ່າງນ້ອຍ 2 ຄັ້ງ ເພື່ອເສີມຂະຫຍາຍການ ລະດົມທຶນ | ເຂົ້າຮ່ວມກອງປະຊຸມ 2 ຄັ້ງ | | |

| VIII | ດ້ານການສື່ສານ | | | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|
